ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

# ບົດລາຍງານການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທີ II ຂອງ ສປປ ລາວ

ຕຸລາ 2024

# ຄຳນຳ

ສປປ ລາວ ໃນຖານະສະມາຊິກຂອງກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນ, ລັດຖະບານແຫ່ງ ສປປ ລາວ ໄດ້ເຫັນເຖິງຄວາມສຳຄັນ ແລະ ເລັ່ງໃສ່ການດຳເນີນມາດຕະການ ສະກັດກັ້ນກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍໄດ້ສ້າງຕັ້ງ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ເປັນຄະນະຊີ້ນຳລະດັບຊາດ ດ້ານວຽກງານດັ່ງກ່າວໃຫ້ກວມເອົາທຸກຂົງເຂດ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນເປັນກອງເລຂາ ທັງເປັນຜູ້ປະສານງານກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ເຮັດໃຫ້ວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍມີການພັດທະນາໃນລະດັບທີ່ແນ່ນອນ ປະຕິບັດໄດ້ມາດຖານສາກົນ ແລະ ເພື່ອສືບຕໍ່ວຽກງານການປະຕິບັດຕາມ ຂໍ້ແນະນຳທີ 1 "ການປະເມີນຄວາມສ່ຽງ ແລະ ຂະບວນການບໍລິຫານຄວາມສ່ຽງ" ຂອງ 40 ຂໍ້ແນະນຳ ຂອງອົງການຕ້ານການຟອກເງິນສາກົນ ໃຫ້ໄດ້ຕາມມາດຕະຖານສາກົນ ແລະ ໄດ້ຮັບການຊ່ວຍເຫຼືອດ້ານວິຊາການຈາກ ທະນາຄານໂລກ.

ສປປ ລາວ ໄດ້ຈັດຕັ້ງປະຕິບັດການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທຳອິດ ໃນລະຫວ່າງປີ 2017-2018. ຜ່ານການຈັດຕັ້ງປະຕິບັດແຜນການແກ້ໄຂຄວາມສ່ຽງໃນແຕ່ລະຂົງເຂດນັບແຕ່ປີ 2018 ຮອດປະຈຸບັນ ເພື່ອເປັນການທົບທວນຄືນຜົນການຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາ ແລະ ປະເມີນຄວາມສ່ຽງໃໝ່ທີ່ເກີດຂຶ້ນໃນປະຈຸບັນ ໂດຍສະເພາະ ດ້ານໄພຂົ່ມຂູ່, ຄວາມບອບບາງ ແລະ ຂະແໜງທີ່ອາດຈະຖືກສວຍໃຊ້ເຂົ້າໃນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ສະນັ້ນ, ສປປ ລາວ ຈຶ່ງຈັດຕັ້ງການດຳເນີນການປະເມີນຄວາມສ່ຽງແຫ່ງຊາດຄັ້ງນີ້ຂຶ້ນ ເພື່ອແນໃສ່ຍົກລະດັບຜົນສຳເລັດຂອງການແກ້ໄຂຄວາມສ່ຽງເປັນແຕ່ລະໄລຍະ ແລະ ກຳນົດໃຫ້ເຫັນໄດ້ຄວາມສ່ຽງຕາມສະພາບຕົວຈິງທີ່ເກີດຂຶ້ນໃນແຕ່ລະຂົງເຂດ. ຊຶ່ງໂຄງປະກອບຂອງບົດປະເມີນສະບັບນີ້ ແບ່ງອອກເປັນ XI ພາກ ຄື:

- ພາກທີ I ພາບລວມ;
- ພາກທີ II – X: ເປັນຜົນການປະເມີນຂອງແຕ່ລະດ້ານ ຄື: ການປະເມີນໄພຂົ່ມຂູ່, ຄວາມບອບບາງ,ອາຊະຍາກຳທາງດ້ານອາກອນ, ຊັບສະຫຼາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການທີ່ມີຄວາມສ່ຽງ, ນິຕິບຸກຄົນ, ການບໍລິການຊື້-ຂາຍຊັບສິນເໝືອນຈິງ, ອົງການບໍ່ຫວັງຜົນກຳໄລ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ພາກທີ XI ແຜນການຈັດຕັ້ງປະຕິບັດ

ຫວັງຢ່າງຍິ່ງວ່າບົດປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທີ II ຂອງ ສປປ ລາວ ສະບັບນີ້ ຈະເປັນເອກະສານອ້າງອີງສຳລັບໃຫ້ແຕ່ລະພາກສ່ວນໃນການຝັງຂະຫຍາຍເປັນແຜນວຽກລະອຽດຂອງຕົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ປະສິດທິຜົນສູງສຸດ.

ຂ້າພະເຈົ້າຕາງໜ້າໃຫ້ ຄຕຟງ ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ໄດ້ ຮັບຜິດຊອບ, ເອົາໃຈໃສ່ໃນການສະໜອງຂໍ້ມູນ, ສົມທົບຄົ້ນຄວ້າ ແລະ ຮ່ວມກັນດຳເນີນການປະເມີນຄວາມສ່ຽງ ພ້ອມທັງສ້າງແຜນແກ້ໄຂສະບັບນີ້ຂຶ້ນມາ ແລະ ມີຜົນສຳເລັດເປັນຢ່າງດີ.

ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ສະເໜີໄຊ ກິມມະສິດ

# ສາລະບານ


I. ພາບລວມ ..... 1
1.1. ຈຸດປະສົງ ..... 1
1.2. ການຈັດຕັ້ງປະຕິບັດການປະເມີນຄວາມສ່ຽງ ..... 2
1.2.1. ໄລຍະກະກຽມ ..... 2
1.2.2. ໄລຍະການປະເມີນ ..... 4
1.2.3. ໄລຍະການວິເຄາະ ແລະ ຮ່າງບົດລາຍງານ ..... 4
II. ການປະເມີນໄພຂົ່ມຂູ່ ແລະ ຄວາມສ່ຽງດ້ານການຟອກເງິນທີ່ອາດເກີດຂຶ້ນ ..... 6
2.1. ພາບລວມ ..... 6
2.2. ການດຳເນີນການປະເມີນຄວາມສ່ຽງ ..... 7
2.3. ຜົນການປະເມີນ ..... 7
2.3.1. ການຜະລິດ ແລະ ຄ້າຂາຍຢາເສບຕິດ ..... 7
2.3.2. ການສໍ້ລາດບັງຫຼວງ ..... 8
2.3.3. ການລັກຊັບຜົນລະເມືອງ ..... 8
2.3.4. ການສໍ້ໂກງຊັບຜົນລະເມືອງ ..... 8
2.3.5. ການຄ້າມະນຸດ ..... 8
2.3.6. ການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ຜັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ ..... 9
2.3.7. ການປອມແປງເງິນ ຫຼື ການນຳໃຊ້ເງິນປອມ ..... 9
2.3.8. ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ ..... 9
2.3.9. ການລະເມີດລະບຽບການກ່ຽວກັບລະບອບພາສີ ..... 9
2.3.10. ບັນດາການກະທຳຜິດທີ່ມີລັກສະນະຂ້າມຊາດ ..... 10
2.4. ການວິເຄາະລະດັບໄພຂົ່ມຂູ່ຈາກຕ່າງປະເທດອ້ອມຂ້າງ ສປປ ລາວ ..... 10
2.5. ສະຫຼຸບຜົນການປະເມີນ ..... 11
III. ການປະເມີນມາດຕະການເພື່ອປ້ອງກັນຄວາມສ່ຽງດ້ານການຟອກເງິນ ທີ່ອາດເກີດຂຶ້ນ ..... 11
3.1. ພາບລວມ ..... 11
3.2. ການດຳເນີນການປະເມີນຄວາມສ່ຽງ ..... 12
3.3. ຜົນການປະເມີນມາດຕະການເພື່ອປ້ອງກັນຄວາມສ່ຽງດ້ານການຟອກເງິນອາດເກີດຂຶ້ນ ..... 12
3.3.1. ຄວາມໜ້າເຊື່ອຖືຂອງຂໍ້ມູນ ຫຼື ບັນຊີການເງິນ ..... 12
3.3.2. ຄຸນນະພາບຂອງໂຄງສ້າງການຊອກຮູ້ລູກຄ້າ ..... 13
3.3.3. ຄວາມສາມາດໃນການເຂົ້າເຖິງ ຂໍ້ມູນຂ່າວສານ ແລະ ຫຼັກຖານທີ່ໜ້າເຊື່ອຖື ..... 14
3.3.4. ຄຸນນະພາບຂອງການ ກວດກາພາສີ ກ່ຽວກັບເງິນສົດ ແລະ ເຄື່ອງມື ທີ່ຄ້າຍຄືກັນ ..... 15
3.3.5. ຄຸນນະພາບຂອງການກວດກາຜ່ານແດນ ກ່ຽວກັບເງິນສົດ ແລະ ເຄື່ອງມືທີ່ຄ້າຍຄືກັນ ..... 15
3.3.6. ຄຸນນະພາບຂອງການ ສືບສວນ-ສອບສວນ ຄະດີອາຍາ ..... 15
3.3.7. ຄຸນນະພາບຂອງການ ຍື່ນຟ້ອງຄະດີອາຍາ ..... 18
3.3.8. ຄຸນນະພາບ ຂອງການຕັດສິນ ຫຼື ການພິຈາລະນາຄະດີ ..... 18
3.3.9. ຄຸນນະພາບຂອງ ນິຕິກຳການຮິບຊັບສິນ ..... 19
3.3.10. ຄວາມບອບບາງຂອງ ຂະແໜງການ ..... 20
3.3.11. ຄວາມສາມາດຕ້ານການຟອກເງິນໃນລະດັບຊາດ ..... 20
3.4. ສະຫຼຸບຜົນການປະເມີນ ..... 21
IV. ການປະເມີນຄວາມສ່ຽງ ອາຊະຍາກຳທາງດ້ານອາກອນ ..... 22

4.1. ພາບລວມ ..... 22
4.2. ການດຳເນີນການປະເມີນຄວາມສ່ຽງ ..... 23
4.3. ຜົນການປະເມີນ ..... 24
4.3.1. ການປະເມີນໄພຂົ່ມຂູ່ ອາຊະຍາກຳທາງດ້ານອາກອນ ..... 24
4.3.2. ການປະເມີນໄພຂົ່ມຂູ່ ການຟອກເງິນຜ່ານອາຊະຍາກຳທາງດ້ານອາກອນ ..... 26
4.3.3. ການປະເມີນຄວາມບອບບາງ ..... 26
4.3.4. ສະຫຼຸບການປະເມີນ ..... 27
V. ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ..... 28
5.1. ພາບລວມ ..... 28
5.2. ການດຳເນີນການປະເມີນ ..... 28
5.3. ຜົນການປະເມີນ ..... 29
5.3.1. ຜົນຂອງການປະເມີນໄພຂົ່ມຂູ່ ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 29
5.3.2. ຜົນຂອງການປະເມີນທາງດ້ານຄວາມບອບບາງຂອງປະເທດ ການກະທຳຜິດກ່ຽວກັບ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ..... 32
5.3.3. ສະຫຼຸບຜົນການປະເມີນ ..... 39
VI. ຂະແໜງການທີ່ມີຄວາມສ່ຽງ ..... 40
6.1. ຂະແໜງກາຊີໂນ ..... 40
6.1.1. ພາບລວມ ..... 40
6.1.2. ການດຳເນີນການປະເມີນຄວາມສ່ຽງ ..... 41
6.1.3. ຜົນການປະເມີນ ..... 41
6.2. ຂະແໜງການທະນາຄານ ..... 44
6.2.1. ພາບລວມ ..... 44
6.2.2. ການດຳເນີນການປະເມີນຄວາມສ່ຽງ ..... 45
6.2.3. ຜົນການປະເມີນ ..... 45
6.3. ທຸລະກິດຊື້-ຂາຍ ອະສັງຫາລິມະຊັບ ..... 50
6.3.1. ພາບລວມ ..... 50
6.3.2. ການດຳເນີນການປະເມີນຄວາມສ່ຽງ ..... 51
6.3.3. ຜົນການປະເມີນ ..... 52
VII. ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ..... 54
7.1. ພາບລວມ ..... 54
7.2. ການດຳເນີນການປະເມີນຄວາມສ່ຽງ ..... 54
7.3. ຜົນການປະເມີນຄວາມສ່ຽງ ..... 55
7.3.1. ການປະເມີນໄພຂົ່ມຂູ່ທາງດ້ານການຟອກເງິນ ທີ່ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນ ດ້ານກົດໝາຍ ..... 55
7.3.2. ຜົນການປະເມີນຄວາມສ່ຽງຂອງປະເພດວິສາຫະກິດທີ່ມີຖານະເປັນນິຕິບຸກຄົນ ຂອງ ສປປ ລາວ .... 56
7.3.3. ການປະເມີນຄວາມບອບບາງ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງ. ..... 57
VIII. ການບໍລິການຊື້-ຂາຍຊັບສິນເໝືອນຈິງ ..... 63
8.1. ພາບລວມ ..... 63
8.2. ການດຳເນີນການປະເມີນຄວາມສ່ຽງ ..... 64
8.3. ຜົນການປະເມີນ ..... 64
IX. ອົງການທີ່ບໍ່ຫວັງຜົນກຳໄລ ..... 69

9.1. ພາບລວມ ..... 69
9.2. ການດຳເນີນການປະເມີນຄວາມສ່ຽງ ..... 69
9.3. ຜົນການປະເມີນ ..... 70
X. ການປະເມີນ ຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ອາດເກີດຂຶ້ນ ..... 72
10.1. ພາບລວມ ..... 72
10.2. ການດຳເນີນການປະເມີນຄວາມສ່ຽງ ..... 73
10.3. ຜົນການປະເມີນ ..... 74
10.3.1. ສະພາບການກໍ່ການຮ້າຍ ..... 74
10.3.2. ສະພາບການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ..... 74
10.3.3. ດ້ານໄພຂົ່ມຂູ່ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ..... 75
10.3.4. ດ້ານຄວາມບອບບາງ ..... 76
10.3.5. ສະຫຼຸບຜົນການປະເມີນ ..... 79
XI. ແຜນການຈັດຕັ້ງປະຕິບັດ ..... 80

# I. ພາບລວມ

ສປປ ລາວ ເປັນໜຶ່ງໃນປະເທດທີ່ມີຍຸດທະສາດເປີດກວ້າງທາງດ້ານການເງິນ. ສະນັ້ນ, ຈຶ່ງໄດ້ສຸມໃສ່ຮັກສາຊື່ສຽງ ແລະ ຄວາມໝັ້ນຄົງຂອງປະເທດ. ນອກນີ້ ກໍ່ຍັງສືບຕໍ່ສ້າງກົນໄກ ໃນການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງບໍ່ພຽງແຕ່ປະຕິບັດຕາມມາດຕະຖານຂອງອົງການຕ້ານການຟອກເງິນສາກົນເທົ່ານັ້ນ, ແຕ່ຍັງເພື່ອຈຸດປະສົງສ້າງຄວາມໝັ້ນຄົງ ແລະ ຮັກສາສະຖຽນລະພາບດ້ານການເງິນ ຂອງໂລກ.

ພ້ອມນີ້, ເພື່ອຮັບປະກັນການປະເມີນຄວາມສ່ຽງດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (The National Risk Assessment on Money Laundering and Terrorist Financing: NRA) ຄະນະປະເມີນໄດ້ປະກອບມາຈາກຫຼາຍພາກສ່ວນ ຂອງລັດເປັນຕົ້ນ ທະນາຄານແຫ່ງ ສປປ ລາວ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການເງິນ ແລະ ພາກສ່ວນອື່ນໆ, ຊຶ່ງການປະເມີນນີ້ເປັນບາດກ້າວທີ່ສຳຄັນ ແລະ ສາມາດເປັນທ່າແຮງໃຫ້ແກ່ການພັດທະນາລະດັບຊາດ ແລະ ສາກົນ ເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄວາມເຂົ້າໃຈກ່ຽວກັບຄວາມສ່ຽງດ້ານການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນປະເທດ ແມ່ນມີຄວາມສຳຄັນຫຼາຍໃນການກຳນົດທິດທາງ, ນະໂຍບາຍ ແລະ ຍຸດທະສາດການຫຼຸດຜ່ອນຄວາມສ່ຽງ ເພື່ອຮັບປະກັນການປັບປຸງຢ່າງຕໍ່ເນື່ອງຄຽງຄູ່ ກັບການພັດທະນາໃຫ້ທັນກັບສະພາບການ ແລະ ຮູບແບບຂອງອາດຊະຍາກຳດ້ານການເງິນເກີດຂຶ້ນທັງໃນພາກພື້ນ ແລະ ທົ່ວໂລກ ທີ່ນັບມື້ນັບມີຄວາມສະຫຼັບຊັບຊ້ອນເພີ່ມຂຶ້ນ. ໃນການປະເມີນຄວາມສ່ຽງຄັ້ງນີ້ແມ່ນໄດ້ອີງໃສ່ບັນດາຂໍ້ຄົງຄ້າງ ທີ່ລະບຸໃນບົດລາຍງານການປະເມີນຮອບດ້ານວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໃນປີ 2023. ໃນການປະເມີນຄວາມສ່ຽງໃນປີ 2018 ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ໄດ້ສ້າງແຜນຍຸດທະສາດແຫ່ງຊາດ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄາດໝາຍຍຸດທະສາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ໂດຍສຸມໃສ່ 05 ຍຸດທະສາດຄື: 1.) ວຽກງານນິຕິກຳ 2.) ວຽກງານກົນໄກການຈັດຕັ້ງປະຕິບັດວຽກງານຕ້ານສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ 3.) ວຽກງານການຄຸ້ມຄອງ 4.) ວຽກງານດຳເນີນຄະດີການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ແລະ 5.) ວຽກງານການຮ່ວມມືຕ່າງປະເທດ.

## 1.1. ຈຸດປະສົງ

ຈຸດປະສົງຂອງການດຳເນີນການປະເມີນຄວາມສ່ຽງແຫ່ງຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຄັ້ງນີ້ ເພື່ອສືບຕໍ່ການປະຕິບັດຕາມມາດຖານສາກົນໃນ ຂໍ້ແນະນຳທີ 1 “ການປະເມີນຄວາມສ່ຽງ ແລະ ຂະບວນການບໍລິຫານຄວາມສ່ຽງ” ຂອງ 40 ຂໍ້ແນະນຳ ຂອງອົງການຕ້ານການຟອກເງິນສາກົນ ແລະ ໄດ້ຮັບການຊ່ວຍເຫຼືອດ້ານວິຊາການຈາກ ທະນາຄານໂລກ ຊຶ່ງການປະເມີນຄວາມສ່ຽງ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຄັ້ງນີ້ແມ່ນເພື່ອ ລະບຸ, ວິເຄາະ, ປະເມີນຄວາມສ່ຽງ ແລະ ທຳຄວາມເຂົ້າໃຈຜົນຄວາມສ່ຽງ 07 ໄພຂົ່ມຂູ່ບູລິມະສິດ, ທິບທວນຂະແໜງການທີ່ມີຄວາມສ່ຽງ, ໃນນັ້ນ ໄດ້ບູລິມະສິດທິບທວນຄືນກ່ອນ 03 ຂະ ແໜງການທີ່ເຫັນວ່າມີຄວາມສ່ຽງສູງຄື: ຂະແໜງການຊີໂນ, ທະນາຄານ, ອະສັງຫາລິມະຊັບ; ທິບທວນຄວາມບອບບາງດ້ານນິຕິກຳ ແລະ ຄວາມສ່ຽງດ້ານການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ລວມທັງ ການກະທຳຜິດທີ່ກຳນົດໃນບົດປະເມີນຜົນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໃນປີ 2023 ຊຶ່ງໄດ້ປະເມີນເພີ່ມເຕີມບາງຂົງເຂດທີ່ບໍ່ທັນໄດ້ຮັບການປະເມີນໃນຄັ້ງທີ່ຜ່ານມາ ເປັນຕົ້ນ: ນິຕິບຸກຄົນຜູ້ທີ່ມີການຕົກລົງກັນທາງກົດໝາຍ, ອາຊາຍະກຳດ້ານພາສີ-ອາກອນ, ອາຊະຍາກຳສິ່ງແວດລ້ອມ ແລະ ອາຊະຍາກຳຂ້າມຊາດ, ອົງການບໍ່ຫວັງຜົນກຳໄລ ແລະ ຜູ້ໃຫ້ບໍລິການຊື້-ຂາຍຊັບສິນເໝືອນຈິງ, ຊຶ່ງເປັນອົງປະກອບທີ່ສຳຄັນໃນການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງລວມທັງກົດໝາຍ, ລະບຽບການ, ການບັງຄັບໃຊ້ກົດໝາຍ ແລະ ມາດຕະການອື່ນໆ ທີ່ຈະຊ່ວຍໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານໄດ້ຢ່າງມີປະສິດທິພາບ ໃນການແກ້ໄຂ ແລະ ຫຼຸດຜ່ອນຄວາມສ່ຽງ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

### 1.2. ການຈັດຕັ້ງປະຕິບັດການປະເມີນຄວາມສ່ຽງ

ການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຄັ້ງນີ້, ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ໄດ້ແຕ່ຕັ້ງຄະນະຮັບຜິດຊອບ ການປະເມີນ ທີ່ປະກອບຈາກທຸກ ຂົງເຂດ ທັງທ້ອງຖິ່ນ ແລະ ສູນກາງ ຊຶ່ງປະກອບມີ 11 ຄະນະອານຸກຳມະການ ເພື່ອດຳເນີນການປະເມີນຄວາມສ່ຽງໃຫ້ ເປັນໄປຕາມ 3 ໄລຍະ ດັ່ງລາຍລະອຽດລຸ່ມນີ້:

#### 1.2.1. ໄລຍະກະກຽມ

- ຄົ້ນຄວ້າ ແລະ ຊອກຄູ່ຮ່ວມງານໃນການຊ່ວຍເຫຼືອທາງດ້ານວິຊາການ: ສປປ ລາວ ໄດ້ຊອກຮູ້ບັນດາຄູ່ຮ່ວມ ງານສາກົນກ່ຽວກັບວຽກງານການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ ການກໍ່ການຮ້າຍ ໂດຍສະເພາະ ທະນາຄານໂລກ ທີ່ມີປະສົບການໃຫ້ການຊ່ວຍເຫຼືອວຽກງານດັ່ງກ່າວກັບຫຼາຍປະເທດ ລວມທັງເຄີຍຊ່ວຍ ສປປ ລາວ ໃນການປະເມີນຄວາມສ່ຽງລະດັບຊາດຄັ້ງທຳອິດ ປີ 2017-2018, ຊຶ່ງກໍ່ໄດ້ຮັບການ ຕອບຮັບເປັນຢ່າງດີ, ມີການປຶກສາຫາລືກະກຽມ, ຕິດຕາມ ແລະ ຝຶກອົບຮົມເປັນແຕ່ລະໄລຍະຂອງການດຳເນີນການປະ ເມີນ;

- ຊອກຮູ້ກັບບັນດາປະເທດເພື່ອນຮ່ວມງານທີ່ພວມກະກຽມ ແລະ ດຳເນີນການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແລ້ວ ເຊັ່ນ: ປະເທດ ໄທ, ປະເທດ ກຳປູເຈຍ, ປະເທດ ອິນໂດເນເຊຍ, ປະເທດ ອົດສະຕຣາລີ ແລະ ປະເທດເພື່ອນບ້ານ. ຊຶ່ງໄດ້ເຮັດໃຫ້ ສປປ ລາວ ມີຄວາມເຂົ້າໃຈ ສະພາບການກະກຽມ, ຂອງແຕ່ລະປະເທດ ເພື່ອມາສ້າງແຜນວຽກໃນການຈັດຕັ້ງປະຕິບັດການປະເມີນຄວາມສ່ຽງດ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງມີປະສິດທິຜົນ.

- ລາຍງານ ແລະ ສະເໜີ ລັດຖະບານ ເພື່ອຂໍອະນຸມັດດ້ານຫຼັກການ ການຈັດຕັ້ງປະຕິບັດວຽກງານການ ປະເມີນ ຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

- ການຈັດຕັ້ງຄະນະສະເພາະກິດ ແລະ ແຕ່ງຕັ້ງບັນດາກົມວິຊາການທີ່ກ່ຽວຂ້ອງທຸກຂະແໜງການ ເພື່ອມີສ່ວນ ຮ່ວມໃນການປະຕິບັດຕົວຈິງ ທັງສູນກາງ ແລະ ທ້ອງຖິ່ນ.

# ໂຄງສ້າງຄະນະສະເພາະກິດ ເພື່ອປະເມີນຄວາມສ່ຽງລະດັບຊາດ
# ກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ

**ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

**ສຳນັກງານຂໍ້ມູນຕ້ານການຟອກເງິນ (ກອງເລຂາ)**

**ຄະນະທີ 01**

ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ປະເມີນຄວາມສ່ຽງ ຂະແໜງອະສັງຫາລິມະຊັບ

**ຄະນະທີ 02**

ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ປະເມີນຄວາມສ່ຽງ ຂະແໜງການຄວາມສ່ຽງ ຂອງນິຕິບຸກຄົນ ແລະ ບຸກຄົນທີ່ມີການພົວພັນກັບ ທາງກົດໝາຍ

**ຄະນະທີ 03**

ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ປະເມີນຄວາມສ່ຽງ ຂະແໜງການທຸລະກິດຊື້-ຂາຍ ຊັບສິນເໜືອນຈິງ

**ຄະນະທີ 04**

ຄົ້ນຄວ້າ, ເກັບກຳຂໍ້ມູນ, ທົບທວນຄືນ ແລະ ປະເມີນ ຄວາມສ່ຽງຂະແໜງການ ອົງການບໍ່ຫວັງຜົນກຳໄລ

**ຄະນະທີ 05**

ຄົ້ນຄວ້າ, ເກັບກຳຂໍ້ມູນ, ທົບທວນຄືນ ແລະ ປະເມີນຄວາມ ສ່ຽງດ້ານອາຊະຍາກຳທີ່ ກ່ຽວຂ້ອງກັບພາສີ-ອາກອນ ແລະ ການຟອກເງິນ

**ຄະນະທີ 06**

ຄົ້ນຄວ້າ, ເກັບກຳຂໍ້ມູນ, ທົບທວນຄືນ ແລະ ປະເມີນ ຄວາມສ່ຽງດ້ານອາຊະຍາກຳ ກ່ຽວກັບສິ່ງແວດລ້ອມ

**ຄະນະທີ 07**

ຄົ້ນຄວ້າ, ເກັບກຳຂໍ້ມູນ, ທົບທວນຄືນ ແລະ ປະເມີນ ຄວາມສ່ຽງດ້ານໄພຂົ່ມຂູ່

**ຄະນະທີ 08**

ຄົ້ນຄວ້າ, ເກັບກຳຂໍ້ມູນ, ທົບທວນຄືນ ແລະ ປະເມີນ ຄວາມສ່ຽງຂະແໜງການ ທະນາຄານທຸລະກິດ

**ຄະນະທີ 09**

ຄົ້ນຄວ້າ, ເກັບກຳຂໍ້ມູນ, ທົບທວນຄືນ ແລະ ປະເມີນ ຄວາມສ່ຽງຂະແໜງການ ການປ່ຽນ

**ຄະນະທີ 10**

ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ປະເມີນຄວາມສ່ຽງ ດ້ານການສະໜອງທຶນ ໃຫ້ການກໍ່ການຮ້າຍ

**ຄະນະທີ 11**

ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ປະເມີນຄວາມສ່ຽງ ກ່ຽວກັບຄວາມບອບບາງ ແຫ່ງຊາດດ້ານການຟອກ ເງິນຂອງປະເທດ

### 1.2.2. ໄລຍະການປະເມີນ

ໄດ້ມີການສ້າງຄວາມເຂົ້າໃຈໃຫ້ແກ່ພາກສ່ວນກ່ຽວຂ້ອງທັງໝົດ ດ້ວຍການຈັດປະຊຸມສຳມະນາຈາກຊ່ຽວຊານທະນາຄານໂລກ ໃນທ້າຍ ເດືອນພະຈິກ 2023 ເພື່ອສ້າງຄວາມເຂົ້າໃຈ ແລະ ຂັ້ນຕອນ ກ່ຽວກັບການປະເມີນຄວາມສ່ຽງ, ຊຶ່ງພາຍຫຼັງມີການແຕ່ງຕັ້ງຄະນະຮັບຜິດຊອບ ກໍ່ໄດ້ສືບຕໍ່ຈັດສຳມະນາ ແລະ ຝຶກອົບຮົມ ຮ່ວມກັບທະນາຄານໂລກ ເພື່ອທຳຄວາມເຂົ້າໃຈລະອຽດບັນດາຂັ້ນຕອນການປະເມີນ, ເນື້ອໃນການປະເມີນ ແລະ ເຄື່ອງມືໃນການປະເມີນ ເພື່ອກຳນົດ ແລະ ສ້າງແຜນວຽກດຳເນີນການປະເມີນ ພ້ອມກຳນົດເວລາປະຕິບັດ ແລະ ສຳເລັດ. ໃນນັ້ນ, ໄດ້ເນັ້ນບາງບັນຫາທີ່ຕ້ອງກຳໄດ້ ເຊັ່ນ:

- ທົບທວນ 7 ໄພຂົ່ມຂູ່ລິມະສິດ ລວມທັງປະເມີນຄວາມສ່ຽງ ດ້ານອາຊະຍາກຳພາສີ-ອາກອນ, ອາຊະຍາກຳສິ່ງແວດລ້ອມ ແລະ ອາຊະຍາກຳຂ້າມຊາດ ແລະ ຂະແໜງການບູລິມະສິດທີ່ມີຄວາມສ່ຽງ ເປັນຕົ້ນ ຂະແໜງກາຊິໂນ, ທະນາຄານ, ອະສັງຫາລິມະຊັບ, ຄວາມສ່ຽງຂອງນິຕິບຸກຄົນ, ອົງການບໍ່ຫວັງຜົນກຳໄລ ແລະ ການໃຫ້ບໍລິການຊື້-ຂາຍສະກຸນເງິນເໝືອນຈິງ;

- ກຳນົດຕົວປ່ຽນໃນການປ້ອນຂໍ້ມູນ ຊຶ່ງໄດ້ແຍກເປັນ ຕົວປ່ຽນຄວບຄຸມ ການຕ້ານການຟອກເງິນ ແລະ ຕົວປ່ຽນທີ່ມີຄວາມສ່ຽງໃນຕົວ, ນອກຈາກນີ້ ຍັງມີຕົວປ່ຽນກາງ;

- ກຳນົດເປົ້າໝາຍທັງພາກອົງການຈັດຕັ້ງລັດ ແລະ ຂະແໜງການເອກະຊົນ ໃນຂອບເຂດທົ່ວປະເທດທີ່ເຫັນວ່າມີຄວາມສ່ຽງຕໍ່ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອດຳເນີນການປະເມີນ;

- ສ້າງແບບສອບຖາມ ເພື່ອເກັບກຳຂໍ້ມູນທີ່ຕ້ອງການມາປະກອບໃສ່ບົດປະເມີນ;

- ຈັດກອງປະຊຸມເຜີຍແຜ່ກ່ຽວກັບວິທີການປະເມີນ ແລະ ສົ່ງແບບສອບຖາມໃຫ້ເປົ້າໝາຍທັງພາກອົງການຈັດຕັ້ງລັດ, ຂະແໜງການເອກະຊົນ ເພື່ອປະກອບຂໍ້ມູນ ແລະ ລົງເຮັດວຽກຕົວຈິງກັບເປົ້າໝາຍດັ່ງກ່າວ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ;

- ສັງລວມຂໍ້ມູນທີ່ໄດ້ຮັບຈາກແບບສອບຖາມ, ເກັບກຳຂໍ້ມູນຈາກແຫຼ່ງຂໍ້ມູນເປີດ (Open source) ແລ້ວປ້ອນເຂົ້າໃນເຄື່ອງມືການປະເມີນ Excel Template, ໂດຍອີງຕາມຜົນການເກັບກຳຂໍ້ມູນຕົວຈິງຈາກຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງບົດລາຍງານຜົນການປະເມີນ.

ນອກຈາກນີ້, ຍັງໄດ້ມີການສັງລວມແຫຼ່ງຂໍ້ມູນເປີດ ຕາມ ບົດຄວາມ, ບົດລາຍງານທີ່ກ່ຽວຂ້ອງ, ບົດລາຍງານຂອງອົງການຈັດຕັ້ງສາກົນ, ພ້ອມທັງປະສານຂໍຂໍ້ມູນຈາກບັນດາປະເທດໃກ້ຄຽງ ແລະ ເພື່ອນມິດຍຸດທະສາດ ແລະ ແຫຼ່ງຂໍ້ມູນເປີດອື່ນໆ ເພື່ອປະກອບໃນການປະເມີນຄວາມສ່ຽງດັ່ງກ່າວ.

### 1.2.3. ໄລຍະການວິເຄາະ ແລະ ຮ່າງບົດລາຍງານ

- ບັນດາອານຸກຳມະການພາຍຫຼັງສັງລວມຂໍ້ມູນທັງໝົດ ທັງຜ່ານແບບຟອມທີ່ໄດ້ຮັບ, ຂໍ້ມູນຈາກແຫຼ່ງເປີດ, ຂໍ້ມູນຈາກບົດລາຍງານສາກົນ ແລະ ປະເທດອ້ອມຂ້າງ ເພື່ອມາຄົ້ນຄວ້າທຳຄວາມເຂົ້າໃຈ ຂໍ້ມູນທີ່ໄດ້ຮັບ, ມີການວິເຄາະຂໍ້ມູນຢ່າງພາວະວິໄສ ເພື່ອກຳນົດລະດັບຄວາມຖືກຕ້ອງ ແລະ ແນ່ນອນຂອງຂໍ້ມູນ;

- ທົດລອງເອົາຂໍ້ມູນລົງໃນເຄື່ອງມື ປະເມີນຄວາມສ່ຽງ ເພື່ອເບິ່ງຜົນໄດ້ຮັບ, ປຽບທຽບກັບສະພາບຄວາມເປັນຈິງ;

- ຈັດກອງປະຊຸມສຳມະນາສະເພາະ ກັບຊ່ຽວຊານ ທະນາຄານໂລກ ກ່ຽວກັບຜົນການປະເມີນເບື້ອງຕົ້ນ ເພື່ອປຶກສາຫາລື ວິທີການວິເຄາະ ປຽບທຽບບັນດາຕົວປ່ຽນທີ່ເປັນມາດຖານ ແລະ ຕົວປ່ຽນທີ່ໄດ້ຈາກການປະເມີນຕົວຈິງ;

- ສັງລວມຂໍ້ມູນທັງໝົດລົງເຄື່ອງມື ປະເມີນຄວາມສ່ຽງ ເພື່ອເອົາຜົນໄດ້ຮັບ ເປັນບ່ອນອີງໃນການຂຽນບົດລາຍງານຜົນໄດ້ຮັບຈາກການປະເມີນ.

- **ດ້ານດີ ແລະ ຂໍ້ຈຳກັດ ໃນການດຳເນີນການປະເມີນ**

**ກ. ດ້ານດີ**

- ລັດຖະບານໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ວຽກງານການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍແຕ່ງຕັ້ງໃຫ້ຄະນະຮັບຜິດຊອບປະເມີນແຕ່ລະຂົງເຂດເອົາໃຈໃສ່ໃນການຕິດຕາມ, ມີທິດຊີ້ນຳຢ່າງໃກ້ຊິດຢ່າງເປັນປົກກະຕິ;

- ທະນາຄານແຫ່ງ ສປປ ລາວ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ອຳນວຍຄວາມສະດວກທາງດ້ານງົບປະມານກໍ່ຄືສິ່ງອຳນວຍຄວາມສະດວກອື່ນ ເຊັ່ນ: ການເດີນທາງ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ໃຫ້ແກ່ຄະນະຮັບຜິດຊອບປະເມີນທັນຕາມກຳນົດເວລາ, ນອກຈາກນີ້ ຍັງໄດ້ຮັບການຊ່ວຍເຫຼືອທາງດ້ານ ງົບປະມານຈຳນວນ ໜຶ່ງ ຈາກທະນາຄານໂລກ ເພື່ອຮັບໃຊ້ໃນການເຮັດວຽກ ແລະ ລົງເກັບກຳຂໍ້ມູນ ຂອງແຕ່ລະຄະນະຮັບຜິດຊອບ;

- ບັນດາພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ແລະ ອົງການ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ການຮ່ວມມືແກ່ຄະນະຮັບຜິດຊອບປະເມີນ ເຮັດໃຫ້ສາມາດເກັບກຳຂໍ້ມູນເປັນຢ່າງດີ;

- ບັນດາຄະນະຮັບຜິດຊອບປະເມີນມີຄວາມເອົາໃຈໃສ່, ເສຍສະຫຼະ ທັງທາງດ້ານເວລາກໍ່ຄືມີສ່ວນຮ່ວມໃນການຄົ້ນຄວ້າ ແລະ ປະກອບສ່ວນຕາມຂັ້ນຕອນການປະເມີນຄວາມສ່ຽງ.

**ຂ. ຂໍ້ຈຳກັດ**

- ເຖິງຈະເປັນການປະເມີນຄວາມສ່ຽງລະດັບຊາດຮອບທີ II, ແຕ່ຄວາມເຂົ້າໃຈກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງຄະນະຮັບຜິດຊອບປະເມີນ, ຜູ້ຄຸ້ມຄອງ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ບັນດາເປົ້າໝາຍທີ່ຖືກກຳນົດໃນການປະເມີນຄວາມສ່ຽງຍັງຈຳກັດ.

- ການປະສານງານກັບບັນດາພາກສ່ວນກ່ຽວຂ້ອງໃນການມີສ່ວນຮ່ວມຈັດຕັ້ງປະຕິບັດການປະເມີນຍັງບໍ່ເຕັມສ່ວນ, ນອກຈາກນີ້, ຄະນະຮັບຜິດຊອບປະເມີນບາງທ່ານ ໄດ້ມີການຊັບຊ້ອນ ປ່ຽນຍ້າຍຕຳແໜ່ງ ເຮັດໃຫ້ການປະສານງານ ມີຄວາມຫຍຸ້ງ ແລະ ບໍ່ຕໍ່ເນື່ອງ;

- ຄວາມເອົາໃຈໃສ່ໃນການສະໜອງຂໍ້ມູນຂອງບັນດາພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນສູງ ແລະ ບໍ່ໄດ້ຕາມກຳນົດເວລາ;

- ຂໍ້ມູນທີ່ເກັບກຳໄດ້ຍັງບໍ່ທັນຕອບສະໜອງໄດ້ຕາມມາດຖານຂອງສາກົນ ເຊັ່ນ: ໄລຍະເວລາ ແລະ ບາງຕົວປ່ຽນແມ່ນບໍ່ມີ.




## II. ການປະເມີນໄພຂົ່ມຂູ່ ແລະ ຄວາມສ່ຽງດ້ານການຟອກເງິນທີ່ອາດເກີດຂຶ້ນ

### 2.1. ພາບລວມ

ການຟອກເງິນແມ່ນການກະທຳຜິດທາງອາຍາ ຊຶ່ງໄດ້ສົ່ງຜົນກະທົບ, ກຳລັງສົ່ງຜົນກະທົບ ແລະ ຍັງຈະສືບຕໍ່ສົ່ງຜົນກະທົບຕໍ່ຄວາມສະຫງົບ, ການພັດທະນາທາງດ້ານເສດຖະກິດ-ສັງຄົມຂອງຫຼາຍປະເທດໃນພາກພື້ນ ແລະ ໃນໂລກ. ສປປ ລາວ ກໍ່ແມ່ນໜຶ່ງໃນບັນດາປະເທດທີ່ໄດ້ຮັບຜົນກະທົບຈາກການຟອກເງິນ ແລະ ກຳລັງເປັນໄພຂົ່ມຂູ່ຕໍ່ສະຖຽນລະພາບທາງດ້ານເສດຖະກິດຂອງປະເທດ ເພາະວ່າການກະທຳຜິດອາຍາ ທີ່ຕິດພັນກັບການຟອກເງິນ ຍັງເກີດຂຶ້ນຢ່າງຕໍ່ເນື່ອງ.

ການເກັບກຳສະພາບການເຄື່ອນໄຫວກ່ຽວຂ້ອງ ການກະທຳຜິດຕົ້ນ ທີ່ເປັນໄພຂົ່ມຂູ່ ມີຄວາມສ່ຽງສູງຕໍ່ການຟອກເງິນ ທີ່ເກີດຂຶ້ນໃນ ສປປ ລາວ ໄລຍະປີ 2018-2022 ແມ່ນມີຈຳນວນທັງໝົດ 17,225 ຄະດີ. ຜ່ານການສຶບສວນ-ສອບສວນ, ການດຳເນີນຄະດີ ເຫັນວ່າ ການກະທຳຜິດຕົ້ນທີ່ເປັນໄພຂົ່ມຂູ່ ສ່ວນໃຫຍ່ເປັນການກະທຳຜິດທາງດ້ານເສດຖະກິດ, ຂົງເຂດທະນາຄານທຸລະກິດ ແລະ ອື່ນໆ, ຊຶ່ງບັນດາຂົງເຂດດັ່ງກ່າວ ເຖິງແມ່ນວ່າມີການຈັດຕັ້ງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເຂັ້ມແຂງກວ່າຂະແໜງການອື່ນແລ້ວກໍ່ຕາມ ແຕ່ກໍ່ຍັງຖືກສວຍໃຊ້ຫຼາຍທີ່ສຸດ, ເນື່ອງຈາກການພັດທະນາລະບົບການບໍລິການໃຫ້ມີຫຼາຍຮູບແບບຜະລິດຕະພັນ ແລະ ທັນເປັນທັນສະໄໝຫຼາຍຂຶ້ນ. ຜ່ານການເກັບກຳ ແລະ ເກັບກູ້ຜົນເສຍຫາຍເກີດຈາກການກະທຳຜິດດັ່ງກ່າວ ຄິດເປັນຈຳນວນເງິນ ຫຼື ຊັບສິນ ທີ່ສາມາດເກັບກຳໄດ້ມາຈາກການກະທຳຜິດ ຫຼື ຮິບມາເປັນຂອງລັດ ທັງໝົດສະເລ່ຍ 395 ຕື້ກວ່າກີບ ຫຼື ທຽບເທົ່າ 22 ລ້ານກວ່າໂດລາສະຫະລັດ.

ຈຸດປະສົງ ຂອງການປະເມີນຄວາມສ່ຽງລະດັບຊາດ ດ້ານໄພຂົ່ມຂູ່ ທີ່ມີຄວາມສ່ຽງສູງຕໍ່ການຟອກເງິນ ແມ່ນ ເພື່ອວິເຄາະຄົ້ນລະດັບຄວາມສ່ຽງຂອງບັນດາພຶດຕິກຳ ຂອງການກະທຳຜິດຕົ້ນ ຫຼື ການກະທຳຜິດທາງອາຍາ ທີ່ມີຄວາມ ສ່ຽງສູງຕໍ່ການຟອກເງິນ ຕາມບົດລາຍງານການປະເມີນຄວາມສ່ຽງລະດັບຊາດກ່ຽວກັບການຟອກເງິນ ແລະ ການສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ສະບັບປີ 2018 ລວມທັງ ການກະທຳຜິດທີ່ກຳນົດໃນບົດປະເມີນ ຜົນຮອບດ້ານ ວຽກງານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໃນປີ 2023.

ນອກຈາກນີ້, ການປະເມີນຍັງສາມາດຊ່ວຍໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ສາມາດລະບຸໄດ້ບັນດາໄພຂົ່ມຂູ່ ທີ່ມີຄວາມສ່ຽງສູງຕໍ່ການຟອກເງິນ ແລະ ການນຳເງິນທີ່ບໍ່ຖືກຕ້ອງຕາມກົດໝາຍເຂົ້າໃນລະບົບເສດຖະກິດຂອງ ສປປ ລາວ.

### 2.2. ການດຳເນີນການປະເມີນຄວາມສ່ຽງ

ການປະເມີນຄວາມສ່ຽງໄພຂົ່ມຂູ່ ແລະ ຄວາມສ່ຽງດ້ານການຟອກເງິນຄັ້ງນີ້ ປະກອບມີ 1) ການຜະລິດ ແລະ ຄ້າຂາຍຢາເສບຕິດ, 2) ການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ; 3) ການລັກຊັບພົນລະເມືອງ, 4) ການປອມແປງເງິນ ຫຼື ການນຳໃຊ້ເງິນປອມ, 5) ການປອມແປງເອກະສານ ຫຼື ການນຳໃຊ້ ເອກະສານປອມ, 6) ການສໍ້ໂກງຊັບພົນລະເມືອງ, 7) ການສໍ້ລາດບັງຫຼວງ; 8) ການຄ້າມະນຸດ, 9) ການລະເມີດລະບຽບ ການກ່ຽວກັບລະບອບພາສີ, ພ້ອມທັງ ພິຈາລະນາວ່າການກະທຳຜິດດັ່ງກ່າວເປັນອາຊະຍາກຳທີ່ມີລັກສະນະຂ້າມຊາດ.

ອີງຕາມສະພາບຄວາມເປັນຈິງ, ເງື່ອນໄຂ ແລະ ການສັງລວມຂໍ້ມູນຕົວຈິງ ກ່ຽວກັບຕົວຊີ້ວັດໄພຂົ່ມຂູ່ ຈາກ ການກະທຳຜິດຕົ້ນ, ການກະທຳຜິດຕົ້ນ ທີ່ມີການຟອກເງິນ ແລະ ກະແສເງິນໄຫຼ ເຂົ້າ-ອອກ ສປປ ລາວ ໄດ້ກຳນົດເອົາຂໍ້ ມູນຍ້ອນຫຼັງ ໄລຍະແຕ່ປີ 2018-2022 ໂດຍກຳນົດເອົາໄພຂົ່ມຂູ່ ທີ່ມີຄວາມສ່ຽງສູງຕໍ່ການຟອກເງິນ ຊຶ່ງການດຳເນີນ ການເກັບກຳຂໍ້ມູນ ນອກຈາກຂັ້ນສູນກາງແລ້ວ ຍັງມີການເກັບກຳຂໍ້ມູນຢູ່ຂັ້ນທ້ອງຖິ່ນຈາກ 18 ແຂວງທົ່ວປະເທດ ຕາມ ແບບວິທີ ແລະ ເຄື່ອງມື ໃນການປະເມີນຂອງທະນາຄານໂລກ ໂດຍອີງໃສ່ຈຳນວນສະຖິຕິຄະດີຟອກເງິນ, ສະຖິຕິຄະດີ ຄວາມຜິດຕົ້ນ ແລະ ມູນຄ່າ ຊັບສິນ ທີ່ ຍຶດ, ອາຍັດ ແລະ ຮິບ ມາເປັນອົງປະກອບລະດັບຄວາມສ່ຽງ ຊຶ່ງມີ 05 ລະດັບ ຄື: ສູງ, ກາງ-ສູງ, ກາງ, ກາງ-ຕ່ຳ ແລະ ຕ່ຳ.

### 2.3. ຜົນການປະເມີນ

#### 2.3.1. ການຜະລິດ ແລະ ຄ້າຂາຍຢາເສບຕິດ

ການກະທຳຜິດ ຖານການຜະລິດ ແລະ ຄ້າຂາຍຢາເສບຕິດ ແມ່ນການກະທຳຜິດອາຍາ ລວມທັງການຜະລິດ, ການຄ້າຂາຍ, ຂົນສົ່ງ, ການຄອບຄອງ, ຈຳໜ່າຍ ແລະ ອື່ນໆ. ການກະທຳຜິດດັ່ງກ່າວ ເປັນໄພຂົ່ມຂູ່ທີ່ມີຄວາມສ່ຽງໃນ ລະດັບ ກາງ-ສູງ ຂອງການຟອກເງິນ ແລະ ໃນໄລຍະປີ 2018-2022 ມີສະຖິຕິການດຳເນີນຄະດີທັງໝົດ 12,867 ຄະດີ ກວມເອົາ 74.69% ຂອງການກະທຳຜິດຕົ້ນ ແລະ ມູນຄ່າຂອງຊັບສິນ ສະເລ່ຍຈຳນວນ 77 ຕື້ກວ່າກີບ ຫຼື ທຽບເທົ່າ 4.4 ລ້ານກວ່າ ໂດລາສະຫະລັດ, ໃນນັ້ນທີ່ເປັນຄະດີ*ຟອກເງິນມີ 21 ຄະດີ.

ຄະດີ ການຜະລິດ ແລະ ຄ້າຂາຍຢາເສບຕິດ ຢູ່ ສປປ ລາວ ສ່ວນໃຫຍ່ແມ່ນຖືກດຳເນີນໃນຂໍ້ຫາ ການຄ້າຂາຍ ແລະ ຂົນສົ່ງຢາເສບຕິດ ເນື່ອງຈາກວ່າ ຜູ້ກະທຳຜິດທີ່ຈັບໄດ້, ດຳເນີນຄະດີ, ໄຕ່ສວນ ແມ່ນພວກເຂົາຮັບຈ້າງຂົນສົ່ງຢາ ເສບຕິດ. ນອກຈາກນີ້, ປະເທດລາວຂອງພວກເຮົາບໍ່ແມ່ນແຫຼ່ງຜະລິດຢາເສບຕິດ ແຕ່ມີຊາຍແດນຕິດຈອດກັບ 05 ປະເທດເປັນຕົ້ນ ສປ. ຈີນ ທາງທິດເໜືອ, ສສ. ຫວຽດນາມ ໃນທາງທິດຕາເວັນອອກ, ທິດໃຕ້ຕິດກັບ ລາຊະ ອານາຈັກກຳປູເຈຍ, ທິດຕາເວັນອອກສຽງເໜືອຕິດກັບ ຣາຊະອານາຈັກໄທ ແລະ ທິດຕາເວັນຕົກສຽງເໜືອຕິດກັບ ປະເທດມຽນມາ. ພ້ອມດຽວກັນນັ້ນ, ປະເທດຂອງພວກເຮົາ ຍັງມີຊາຍແດນຕິດຈອດກັບສາມຫລ່ຽມຄຳ ຊຶ່ງເປັນ ສະຖານທີ່ທີ່ມີຄວາມສ່ຽງ ທີ່ຈະເຮັດໃຫ້ກຸ່ມອາຊະຍາກຳ ຫຼື ຜູ້ຄ້າຢາເສບຕິດສວຍໃຊ້ ສປປ ລາວ ເປັນທາງຜ່ານ ເພື່ອ ຂົນສົ່ງຢາເສບຕິດໄປປະເທດອື່ນ; ຊຶ່ງຊ່ອງທາງການລັກລອບຂົນສົ່ງຢາເສບຕິດ ສ່ວນຫຼາຍແມ່ນຜ່ານຊ່ອງທາງທຳມະ ຊາດ, ຜ່ານດ່ານປະເພນີທີ່ຍັງບໍ່ທັນມີການຄຸ້ມຄອງຢ່າງເຂັ້ມງວດ, ການຂົນສົ່ງທາງນ້ຳ ແລະ ອື່ນໆ.

### 2.3.2. ການສໍ້ລາດບັງຫຼວງ

ການກະທຳຜິດຂໍ້ຫາ ການສໍ້ລາດບັງຫຼວງ ຖືເປັນອາຊະຍາກຳຮ້າຍແຮງ ແລະ ສຳຄັນທີ່ສົ່ງຜົນກະທົບຕໍ່ຄວາມໜ້າເຊື່ອໝັ້ນຂອງປະເທດ ແລະ ເປັນບັນຫາສຳຄັນຂອງສາກົນ. ການປະເມີນອາຊະຍາກຳນີ້ ໃນໄລຍະປີ 2018-2022 ມີຈຳນວນສະຖິຕິຄະດີເພີ່ມຂຶ້ນທຽບ ກັບການປະເມີນຄັ້ງຜ່ານມາປີ 2017-2018 ມີທັງໝົດຈຳນວນ 10 ຄະດີ, ກວມເອົາ 0.05% ຂອງການກະທຳຜິດຕົ້ນ ໃນນັ້ນທີ່ເປັນຄະດີຟອກເງິນມີ 01 ຄະດີ, ຊຶ່ງພຶດຕິກຳການກະທຳຜິດສ່ວນໃຫຍ່ ແມ່ນສວຍໃຊ້ສິດອຳນາດ ແລະ ໜ້າທີ່ຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ ແລະ ມູນຄ່າຂອງຊັບສິນເສຍຫາຍ ສະເລ່ຍຈຳນວນ 130 ຕື້ກວ່າກີບ ຫຼື ທຽບເທົ່າ 7.5 ລ້ານກວ່າ ໂດລາສະຫະລັດ, ໄດ້ຈັດໄພຂົ່ມຂູ່ການສໍ້ລາດບັງຫຼວງ ຢູ່ ໃນລະດັບ **<u>ກາງ.</u>**

### 2.3.3. ການລັກຊັບພົນລະເມືອງ

ການກະທຳຜິດ ຖານການລັກຊັບພົນລະເມືອງ ເປັນອາຊະຍາກຳທີ່ເກີດຂຶ້ນຫຼາຍສະແດງໃຫ້ເຫັນໃນຈຳນວນ ສະຖິຕິຄະດີເພີ່ມຂຶ້ນ ລວມທັງໝົດໃນໄລຍະປີ 2018-2022 ມີຈຳນວນ 2,376 ຄະດີ, ກວມເອົາ 13.79% ຂອງການ ກະທຳຜິດຕົ້ນ ໃນນັ້ນທີ່ເປັນຄະດີຟອກເງິນມີຈຳນວນ 06 ຄະດີ, ເນື່ອງຈາກສະພາບເສດຖະກິດມີການປ່ຽນແປງເຮັດໃຫ້ ເປັນປັດໃຈທີ່ສຳຄັນກໍ່ໃຫ້ເກີດການກະທຳຜິດ. ການກະທຳຜິດສ່ວນໃຫຍ່ມີມູນຄ່າຊັບສິນທີ່ບໍ່ສູງຫຼາຍ ແຕ່ມີຄວາມຖີ່ໃນ ການກະທຳຜິດ ແລະ ການກະທຳຜິດດັ່ງກ່າວ ແມ່ນໄດ້ຮັບການແກ້ໄຂຕາມກົດໝາຍຂອງ ສປປ ລາວ ຊຶ່ງມີມູນຄ່າຂອງ ຊັບສິນເສຍຫາຍສະເລ່ຍຈຳນວນ 2.6 ຕື້ກວ່າກີບ ຫຼື ທຽບເທົ່າ 150,987 ໂດລາສະຫະລັດ, ໄພຂົ່ມຂູ່ຂອງການລັກຊັບ ພົນລະເມືອງ ຢູ່ໃນລະດັບ **<u>ກາງ.</u>**

### 2.3.4. ການສໍ້ໂກງຊັບພົນລະເມືອງ

ການກະທຳຜິດ ຖານການສໍ້ໂກງຊັບພົນລະເມືອງ ເປັນອາຊະຍາກຳຫນຶ່ງທີ່ບໍ່ຮ້າຍແຮງຫຼາຍ ແຕ່ມີຄະດີເກີດຂຶ້ນ ຢ່າງຕໍ່ເນື່ອງ. ຜ່ານການດຳເນີນການສືບສວນ-ສອບສວນ, ດຳເນີນຄະດີມີ 1,574 ຄະດີ, ກວມເອົາ 9.13% ຂອງການ ກະທຳຜິດຕົ້ນ ໃນນັ້ນທີ່ເປັນຄະດີຟອກເງິນມີຈຳນວນ 04 ຄະດີ ແລະ ມູນຄ່າຂອງຊັບສິນເສຍຫາຍສະເລ່ຍຈຳນວນ 14 ຕື້ກວ່າກີບ ຫຼື ທຽບເທົ່າ 813,008 ໂດລາສະຫະລັດ. ໄພຂົ່ມຂູ່ຂອງການສໍ້ໂກງຊັບພົນລະເມືອງ ຢູ່ໃນ ລະດັບ **<u>ກາງ</u>**. ການເຄື່ອນໄຫວກະທຳຜິດຂອງອາຊະຍາກຳນີ້ມີຫຼາຍຮູບແບບເປັນຕົ້ນ ການສ້າງຄວາມເຊື່ອໝັ້ນໃຫ້ຜູ້ເຄາະຮ້າຍ, ຖືເອົາ ການຮ່ວມມືທຸລະກິດຂັ້ນຕົ້ນເປັນສາກບັງໜ້າ, ການຊວນເຊື່ອຜ່ານສື່ສັງຄົມອອນລາຍ ແລະ ອື່ນໆ. ການກະທຳຜິດທີ່ ພົ້ນເດັ່ນແມ່ນການສໍ້ໂກງຜ່ານການຮ່ວມທຸລະກິດນຳກັນ, ການກູ້ຢືມເງິນ, ສໍ້ໂກງໂທລະຄົມມະນາຄົມ ແລະ ອື່ນໆ, ຊຶ່ງ ເຮັດໃຫ້ຜູ້ເຄາະຮ້າຍຫຼົງເຊື່ອແລ້ວເອົາຊັບສິນຕົນໃຫ້ຄົນອື່ນ ເຮັດໃຫ້ສະຖິຕິຄະດີ ແລະ ຜົນເສຍຫາຍເພີ່ມຂຶ້ນ ແຕ່ຜູ້ກະ ທຳຜິດກໍ່ໄດ້ຮັບການແກ້ໄຂຕາມລະບຽບກົດໝາຍຂອງ ສປປ ລາວ.

### 2.3.5. ການຄ້າມະນຸດ

ການກະທຳຜິດຖານການຄ້າມະນຸດ ແມ່ນອາຊະຍາກຳທີ່ຮ້າຍແຮງ ແລະ ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ຊີວິດ, ຊັບສິນ, ສຸຂະພາບຈິດ, ລະເມີດສິດທິພົ້ນຖານຂອງພົນລະເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍໃນ ສັງຄົມ. ຜ່ານການດຳເນີນການແກ້ໄຂ, ສືບສວນ-ສອບສວນມີຈຳນວນສະຖິຕິຄະດີທີ່ບໍ່ຫຼາຍ ແລະ ຫຼຸດລົງຈາກການປະ ເມີນຄັ້ງຜ່ານມາປີ 2017-2018, ຊຶ່ງໃນປີ 2018-2022 ມີທັງໝົດຈຳນວນ 65 ຄະດີ ກວມເອົາ 0.37% ຂອງການກະ ທຳຜິດຕົ້ນ ໃນນັ້ນທີ່ເປັນຄະດີຟອກເງິນມີຈຳນວນ 01 ຄະດີ ແລະ ມູນຄ່າຂອງຊັບສິນສະເລ່ຍຈຳນວນ 530 ລ້ານກວ່າ ກີບ ຫຼື ທຽບເທົ່າ 30,778 ໂດລາສະຫະລັດ. ໄພຂົ່ມຂູ່ຂອງການຄ້າມະນຸດ ຢູ່ໃນລະດັບ **<u>ກາງ-ຕ່ຳ.</u>** ຜ່ານການເອົາຄຳ ໃຫ້ການຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການດຳເນີນຄະດີຊີ້ໃຫ້ເຫັນວ່າ ການຄ້າມະນຸດຢູ່ ສປປ ລາວ ມີຫຼາຍ ຮູບແບບເປັນຕົ້ນ ການບັງຄັບທາງເພດ, ການບັງຄັບແຮງງານ ແລະ ການຮັບຈ້າງຖືພາ. ຜູ້ຖືກເຄາະຮ້າຍຈາກການຄ້າ ມະນຸດສ່ວນໃຫຍ່ແມ່ນຖືກຕົວະຍົວະຫຼອກລວງໂດຍສະເໜີຄ່າແຮງງານສູງ ເພື່ອໄປອອກແຮງງານຢູ່ປະເທດທີ່ໃກ້ຄຽງ, ບາງເຂດເສດຖະກິດພິເສດໃນປະເທດ ແລະ ອື່ນໆ. ບັນດາຄະດີທີ່ເກີດຂຶ້ນຕໍ່ຜູ້ກະທຳຜິດຖານການຄ້າມະນຸດ ແມ່ນໄດ້

ຮັບການແກ້ໄຂ ແລະ ດຳເນີນຄະດີຕາມກົດໝາຍຂອງ ສປປ ລາວ. ສ່ວນຜູ້ຖືກເຄາະຮ້າຍແມ່ນໄດ້ຮັບການຊ່ວຍເຫຼືອຟື້ນຟູທາງດ້ານຮ່າງກາຍ, ຈິດໃຈ ແລະ ຝຶກວິຊາຊີບກ່ອນຈະສົ່ງກັບຄືນສູ່ສັງຄົມ.

### 2.3.6. ການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ

ການກະທຳຜິດຖານການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ ເປັນການກະທຳຜິດອາຍາທີ່ໄດ້ສົ່ງຜົນກະທົບໂດຍກົງຕໍ່ຄູ່ຮ່ວມທຸລະກິດໂດຍກົງ. ຜ່ານການດຳເນີນແກ້ໄຂຄະດີໃນໄລຍະ ປີ 2018-2022 ແມ່ນມີຈຳນວນສະຖິຕິຄະດີເພີ່ມຂຶ້ນທັງໝົດຈຳນວນ 115 ຄະດີ ກວມເອົາ 0.66 % ຂອງການກະທຳຜິດຕົ້ນ ແລະ ມູນຄ່າຂອງຊັບສິນເສຍຫາຍສະເລ່ຍຈຳນວນ 370 ລ້ານກວ່າກີບ ຫຼື ທຽບເທົ່າ 21,486 ໂດລາສະຫະລັດ, ເຖິງວ່າໄພຂົ່ມຂູ່ການປອມແປງແຊັກ, ການນຳໃຊ້ແຊັກປອມ ຫຼື ພັນທະບັດອື່ນທີ່ຜິດກົດໝາຍ ມີຈຳນວນທີ່ເພີ່ມຂຶ້ນ ແຕ່ຄວາມສ່ຽງຂອງການຟອກເງິນແມ່ນຢູ່ໃນລະດັບ **ຕ່ຳ**, ເນື່ອງຈາກ ເປັນການຈົງໃຈ ຫຼື ເຈດຕະນາຂອງຜູ້ກະທຳຄວາມຜິດ ປອມແປງແຊັກ ຫຼື ຂຽນແຊັກທີ່ບໍ່ມີຈຳນວນເງິນ ເພື່ອມີເວລາໃນການຊື້-ຂາຍຊັບສິນ ຫຼື ດຳເນີນທຸລະກິດຮ່ວມກັນ.

### 2.3.7. ການປອມແປງເງິນ ຫຼື ການນຳໃຊ້ເງິນປອມ

ການກະທຳຜິດຖານການປອມແປງເງິນ ຫຼື ການນຳໃຊ້ເງິນປອມ ເຖິງເປັນຄະດີອາຍາທີ່ເກີດຂຶ້ນບໍ່ຫຼາຍ ແຕ່ກໍມີຄະດີເກີດຂຶ້ນ ຊຶ່ງຕົວເລກຄະດີຊີ້ໃຫ້ເຫັນມີ 13 ຄະດີ ກວມເອົາ 0.07% ແລະ ມູນຄ່າຂອງຊັບສິນ ສະເລ່ຍຈຳນວນ 1 ຕື້ ກວ່າກີບ ຫຼື ທຽບເທົ່າ 58,072 ໂດລາສະຫະລັດ. ພາຍຫຼັງທີ່ໄດ້ພິຈາລະນາກ່ຽວກັບລະດັບໄພຂົ່ມຂູ່ການປອມແປງເງິນ ຫຼື ການນຳໃຊ້ເງິນປອມ ຢູ່ໃນລະດັບ **ຕ່ຳ** ເຖິງວ່າມີຈຳນວນທ່າອ່ຽງທີ່ເພີ່ມຂຶ້ນ ເພາະເປັນຄວາມລົ້ງເຄີຍຂອງປະຊາຊົນລາວສ່ວນໃຫ່ຍ ໂດຍສະເພາະ ຢູ່ທ້ອງຖິ່ນ ແມ່ນນຳໃຊ້ເງິນສົດໃນການຊື້-ຂາຍລະຫວ່າງກັນ, ການໃຊ້ຈ່າຍຕົວຈິງຍັງບໍ່ໄດ້ກວດກາລະອຽດ ແລະ ຍັງບໍ່ທັນມີເຄື່ອງມື ຈຶ່ງເປັນຊ່ອງຫວ່າງ ແລະ ເປີດໂອກາດ ໃຫ້ກຸ່ມຄົນບໍ່ດີສວຍໃຊ້ເຂົ້າໃນການກະທຳຜິດ ເພື່ອຜົນປະໂຫຍດຂອງຜູ້ກະທຳຜິດເອງ ຊຶ່ງມີມູນຄ່າທີ່ບໍ່ສູງ.

### 2.3.8. ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ

ການກະທຳຜິດຖານການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ ລວມທັງໝົດມີ 205 ຄະດີ ກວມເອົາ 1.19% ຂອງການກະທຳຜິດຕົ້ນ ແລະ ມູນຄ່າຂອງຊັບສິນສະເລ່ຍຈຳນວນ 405 ລ້ານກວ່າກີບ ຫຼື ທຽບເທົ່າ 23,519 ໂດລາສະຫະລັດ. ໄພຂົ່ມຂູ່ຂອງການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ ຢູ່ໃນລະດັບ **ຕ່ຳ** ເນື່ອງຈາກປັດໃຈທີ່ເປັນພື້ນຖານຂອງຜູ້ກະທຳຜິດສ່ວນໃຫຍ່ແມ່ນສວຍໃຊ້ຊ່ອງຫວ່າງການເພີ່ມຈຳນວນຕົວເລກໃນເອກະສານ, ການປອມແປງລາຍເຊັນ, ການປະທັບ ແລະ ອື່ນໆ, ຊຶ່ງການກະທຳຜິດດັ່ງກ່າວມີມູນຄ່າທີ່ບໍ່ສູງ ສ່ວນໃຫຍ່ເປັນລາຍໄດ້ສ່ວນຕ່າງຈາກການນຳໃຊ້ເອກະສານບໍລິຫານ ເພື່ອນຳໃຊ້ເຂົ້າໃນຜົນປະໂຫຍດຂອງຜູ້ກະທຳຜິດເອງ.

### 2.3.9. ການລະເມີດລະບຽບການກ່ຽວກັບລະບອບພາສີ

ການກະທຳຜິດຜິດຖານການລະເມີດລະບຽບການກ່ຽວກັບລະບອບພາສີ ເປັນການກະທຳຜິດທີ່ເກີດຂຶ້ນຢູ່ຕາມເຂດຊາຍແດນຂອງກຸ່ມຄົນບໍ່ດີອາໄສຄວາມລົ້ງເຄີຍໃນເຂດພູຜາ-ປ່າດົງ ຫຼື ຊ່ອງທາງທຳມະຊາດ ທີ່ເຈົ້າໜ້າທີ່ມີຄວາມຫຍຸ້ງຍາກໃນການເຂົ້າເຖິງ ແລະ ການສວຍໃຊ້ຊ່ອງຫວ່າງບັນດາເຄື່ອງມື ຫຼື ອຸປະກອນ ການກວດກາຜູ້ໂດຍສານເຂົ້າ-ອອກ ສປປ ລາວ ບາງດ່ານພາສີຊາຍແດນຍັງບໍ່ທັນທົ່ວເຖິງ. ວຽກງານການສືບສວນ-ສອບສວນ ໄພຂົ່ມຂູ່ການລະເມີດລະບຽບການກ່ຽວກັບລະບອບພາສີ ແລະ ການຟອກເງິນ ແມ່ນເປັນບັນຫາໃໝ່ ທີ່ເຈົ້າໜ້າທີ່ພາສີພວມຢູ່ໃນການສ້າງຄວາມສາມາດ ຫຼື ການຝຶກອົບຮົມ, ຊຶ່ງໄລຍະຜ່ານມາປີ 2018-2022 ການດຳເນີນຄະດີສ່ວນໃຫຍ່ແມ່ນເປັນການສຶກສາອົບຮົມ ແລະ ແກ້ໄຂທາງດ້ານບໍລິຫານ. ໄພຂົ່ມຂູ່ຂອງການລະເມີດລະບຽບການກ່ຽວກັບລະບອບພາສີ ຢູ່ໃນລະດັບ **ຕ່ຳ.**

### 2.3.10. ບັນດາການກະທຳຜິດທີ່ມີລັກສະນະຂ້າມຊາດ

ໃນການທົບທວນການປະເມີນການກະທຳຜິດໃນຄັ້ງນີ້ເຫັນໄດ້ວ່າ ການກະທຳຜິດທີ່ເປັນໄພຂົ່ມຂູ່ມີລັກສະນະຂ້າມຊາດ ປະກອບມີໄພຂົ່ມຂູ່ ການຜະລິດ ແລະ ຄ້າຂາຍຢາເສບຕິດ ແລະ ການຄ້າມະນຸດ. ການກະທຳຜິດດັ່ງກ່າວ ລັດຖະບານລາວໄດ້ມີຄວາມພະຍາຍາມສູງໃນການແກ້ໄຂ, ດຳເນີນຄະດີ ແລະ ປາບປາມ ນອກຈາກນຳໃຊ້ມາດຕະການຢ່າງເຂັ້ມງວດທາງດ້ານກົດໝາຍແລ້ວ, ຍັງໄດ້ອອກວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນປີ 2021-2023 ແລະ ໄດ້ຕໍ່ວາລະແຫ່ງຊາດດັ່ງກ່າວຮອດປີ 2025. ສະເພາະບັນຫາການຄ້າມະນຸດ, ລັດຖະບານລາວຖືເປັນສຳຄັນ ຊຶ່ງມີຄະນະກຳມະການລະດັບຊາດຮັບຜິດຊອບສະເພາະ ຄະນະກຳມະການດັ່ງກ່າວກຳລັງຈັດຕັ້ງປະຕິບັດແຜນງານແຫ່ງຊາດວ່າດ້ວຍການຕ້ານການຄ້າມະນຸດໄລຍະ 05 ປີ (2021-2025) ໂດຍມີກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບຫຼັກໃນການປະສານງານກັບພາກສ່ວນກ່ຽວຂ້ອງນັບແຕ່ຂັ້ນສູນກາງຈົນຮອດຂັ້ນທ້ອງຖິ່ນ, ໂດຍເນັ້ນໃສ່ການປ້ອງກັນ, ການປົກປ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການດຳເນີນຄະດີ ແລະ ການຮ່ວມມືສາກົນ.

ນອກຈາກນີ້, ຍັງມີສະພາບການກະທຳຜິດທີ່ພົ້ນເດັ່ນທີ່ມີລັກສະນະຂ້າມຊາດຂອງກຸ່ມຄົນບໍ່ດີທີ່ມີການເຄື່ອນໄຫວ ສໍ້ໂກງຊັບທາງໂທລະຄົມ (Call Center) ຢູ່ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ, ເມືອງ ຕົ້ນເຜິ້ງ, ແຂວງ ບໍ່ແກ້ວ, ຊຶ່ງໄດ້ສວຍໃຊ້ຊ່ອງຫວ່າງໃບອະນຸຍາດດຳເນີນທຸລະກິດຈາກການອະນຸຍາດໃຫ້ດຳເນີນທຸລະກິດທີ່ລັດຖະບານໄດ້ກຳນົດ ແຕ່ໄປດຳເນີນທຸລະກິດສໍ້ໂກງຊັບທາງໂທລະຄົມ ຢູ່ໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ເປັນບ່ອນເຄື່ອນໄຫວ ສໍ້ໂກງຊັບທາງໂທລະຄົມ ຂອງບຸກຄົນ ຫຼື ກຸ່ມຄົນ ສ່ວນໃຫຍ່ແມ່ນສັນຊາດ ຈີນ (87%), ຫວຽດນາມ (10%), ມາເລເຊຍ (1%), ເອທິໂອເປຍ (1%) ແລະ ມຽນມາ (1%) ໂດຍການນຳໃຊ້ ໂທລະສັບ ແລະ ຄອມພິວເຕີ ເປັນເຄື່ອງມືໃນການກໍ່ການກະທຳຜິດ. ເຈົ້າໜ້າທີ່ ສປປ ລາວ ໂດຍຮ່ວມກັບ ເຈົ້າໜ້າທີ່ຂອງປະເທດ ສປ. ຈີນ ແລະ ສສ. ຫວຽດນາມ ໄດ້ດຳເນີນການແກ້ໄຂຕໍ່ ບຸກຄົນ ຫຼື ກຸ່ມຄົນ ທີ່ເຄື່ອນໄຫວສໍ້ໂກງຊັບທາງໂທລະຄົມ ແລະ ວັດຖຸເຄື່ອງຂອງກາງ ລາວ ໄດ້ສ້າງບົດບັນທຶກມອບສິ່ງໃຫ້ເຈົ້າໜ້າທີ່ແຕ່ລະປະເທດທີ່ກ່ຽວຂ້ອງນຳໄປດຳເນີນຄະດີຕາມລະບຽບກົດໝາຍ.

## 2.4. ການວິເຄາະລະດັບໄພຂົ່ມຂູ່ຈາກຕ່າງປະເທດອ້ອມຂ້າງ ສປປ ລາວ

ສປປ ລາວ ເປັນປະເທດໜຶ່ງທີ່ຕັ້ງຢູ່ແຫຼມອິນດູຈີນ ມີຊາຍແດນຕິດກັບ 05 ປະເທດ (ປະເທດ ສສ. ຫວຽດນາມ, ສປ. ຈີນ, ມຽນມາ, ກຳປູເຈຍ ແລະ ໄທ). ຈາກທີ່ຕັ້ງພູມມີປະເທດ, ສປປ ລາວ ຍັງຕິດຈອດກັບສາມຫລ່ຽມຄຳ ປະກອບມີ 03 ປະເທດຄື ລາວ, ໄທ ແລະ ມຽນມາ ຊຶ່ງເປັນສະຖານທີ່ ທີ່ມີຄວາມສ່ຽງ ແລະ ຖືເປັນບັນຫາອາຊະຍາກຳຂ້າມຊາດ ແລະ ເປັນບັນຫາທີ່ເຄັ່ງຮ້ອນຂອງໂລກທີ່ກຳລັງຊອກຫາທຸກວິທີທາງເພື່ອສະກັດກັ້ນ, ຕ້ານ ແລະ ປາບປາມ. ຜ່ານການຕິດຕາມ ແລະ ປະສານງານກັບຄູ່ຮ່ວມງານຕ່າງປະເທດຢ່າງໃກ້ຊິດໃນໄລຍະຜ່ານມາ ເຫັນວ່າ ສະພາບອາຊະຍາກຳດັ່ງກ່າວ ມີການເຄື່ອນໄຫວເລີກແລບ, ແນບນຽນ ແລະ ມີລັກສະນະສະຫຼັບຊັບຊ້ອນ ທີ່ພົ້ນເດັ່ນແມ່ນ ຄ້າຂາຍຢາເສບຕິດ ຕິດພັນກັບອາຊະຍາກຳຂ້າມຊາດອື່ນ ເປັນຕົ້ນ: ການຄ້າມະນຸດ, ການຄ້າອາວຸດ, ການສໍ້ໂກງທາງດ້ານອິນເຕີເນັດ, ການລັກພາໂຕ, ການຄາດຕະກຳ ແລະ ອື່ນໆ. ບັນຫາອາຊະຍາກຳດັ່ງກ່າວ ໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຕະຫຼອດຮອດການພັດທະນາເສດຖະກິດຢູ່ເຂດຊາຍແດນ.

ຍ້ອນເຫັນໄດ້ສະພາບອາຊະຍາກຳດັ່ງກ່າວທີ່ເກີດຂຶ້ນຢ່າງຕໍ່ເນື່ອງ, ລັດຖະບານລາວ ຈຶ່ງມີຄວາມເປັນຫ່ວງເປັນໄຍຕໍ່ຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ການພັດທະນາ ທັງຮັບປະກັນຜົນປະໂຫຍດແກ່ປະຊາຊົນ ຈຶ່ງໄດ້ເພີ່ມທະວີຄວາມເອົາໃຈໃສ່ ບັນຫາອາຊະຍາກຳຕາມຂອບເຂດຊາຍແດນ ທີ່ມີການຈັດຕັ້ງທີ່ຮ້າຍແຮງ ເຊິ່ງໄດ້ເກີດຂຶ້ນ, ກຳລັງເກີດຂຶ້ນ, ຍັງຈະສືບຕໍ່ເກີດຂຶ້ນ ດ້ວຍຫຼາຍຮູບແບບ, ຫຼາຍວິທີການ, ມີລັກສະນະເຄືອຂ່າຍຂ້າມຊາດ.

ສຳລັບ ສປປ ລາວ ກໍເປັນປະເທດໜຶ່ງໃນບັນດາປະເທດ ທີ່ໄດ້ຮັບຜົນກະທົບເນື່ອງຈາກທີ່ຕັ້ງພູມສັນຖານຂອງປະເທດ ມີຄວາມສະດວກໃນການເດີນທາງເຂົ້າ-ອອກຂອງພົນລະເມືອງລາວ ແລະ ຕ່າງປະເທດ, ທັງເປັນປະເທດ ທີ່ກຳລັງພັດທະນາທາງດ້ານເສດຖະກິດຢ່າງກ້ວາງຂວາງ ຈຶ່ງອາດມີຄວາມສ່ຽງທີ່ອາດຖືກສວຍໃຊ້ເພື່ອເປັນຊ່ອງທາງໃນການກະທຳຜິດຂອງກຸ່ມຄົນບໍ່ດີ ຫຼື ອາຊະຍາກຳ.

### 2.5. ສະຫຼຸບຜົນການປະເມີນ

ຜົນການປະເມີນຄວາມສ່ຽງລະດັບຊາດ ດ້ານໄພຂົ່ມຂູ່ ທີ່ມີຄວາມສ່ຽງສູງຕໍ່ການຟອກເງິນ ສາມາດສະຫຼຸບໄດ້ດັ່ງນີ້:

**ຕາຕະລາງ 2.1: ຜົນການປະເມີນຄວາມສ່ຽງລະດັບຊາດ ດ້ານໄພຂົ່ມຂູ່**

| ລດ | ການກະທຳຜິດ | ລະດັບຄວາມສ່ຽງ | ໝາຍເຫດ |
|---|---|---|---|
| 1 | ການຜະລິດ ແລະ ຄ້າຂາຍຢາເສບຕິດ | ກາງ-ສູງ | |
| 2 | ການສໍ້ລາດບັງຫຼວງ | ກາງ | |
| 3 | ການລັກຊັບພົນລະເມືອງ | ກາງ | |
| 4 | ການສໍ້ໂກງຊັບພົນລະເມືອງ | ກາງ | |
| 5 | ການຄ້າມະນຸດ | ກາງ-ຕ່ຳ | |
| 6 | ການປອມແປງແຊັກ, ການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ | ຕ່ຳ | |
| 7 | ການປອມແປງເງິນ ຫຼື ນຳໃຊ້ເງິນປອມ | ຕ່ຳ | |
| 8 | ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ | ຕ່ຳ | |
| 9 | ການລະເມີດລະບຽບການກ່ຽວກັບລະບອບພາສີ | ຕ່ຳ | |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

## III. ການປະເມີນມາດຕະການເພື່ອປ້ອງກັນຄວາມສ່ຽງດ້ານການຟອກເງິນ ທີ່ອາດເກີດຂຶ້ນ

### 3.1. ພາບລວມ

ສປປ ລາວ ແມ່ນນຳໃຊ້ລະບົບກົດໝາຍແບບຂຽນ (Civil Law) ການນຳໃຊ້ກົດໝາຍ ແລະ ນິຕິກຳຂອງ ສປປ ລາວ ປະກອບມີ 02 ປະເພດຄື: 1). ນິຕິກຳທີ່ມີຜົນບັງຄັບທົ່ວໄປ (ເປັນຕົ້ນ ລັດຖະທຳມະນູນ, ກົດໝາຍ, ຍັດຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດຂອງລັດຖະບານ) ແລະ 2). ນິຕິກຳທີ່ມີຜົນບັງຄັບສະເພາະ (ເປັນຕົ້ນ ລັດຖະດຳລັດປະກາດໃຊ້ກົດໝາຍ, ລັດຖະດຳລັດ, ດຳລັດ ຫຼື ຂໍ້ຕົກລົງກ່ຽວກັບການຍ້ອງຍໍ ຫຼື ແຕ່ງຕັ້ງບຸກຄົນໃຫ້ດຳລົງຕຳແໜ່ງໃດໜຶ່ງ ຫຼື ກ່ຽວກັບວຽກງານສະເພາະໃດໜຶ່ງ ແລະ ແຈ້ງການ). ປະຈຸບັນ ສປປ ລາວ ໄດ້ອອກກົດໝາຍ ທັງໝົດມີ 166 ສະບັບ, ນິຕິກຳລຸ່ມກົດໝາຍມີທັງໝົດ 1,269 ສະບັບ, ຊຶ່ງໃນນັ້ນມີນິຕິກຳທີ່ຕິດພັນກັບກົນໄກການຈັດຕັ້ງປະຕິບັດໂດຍກົງຕໍ່ກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼາຍກວ່າ 50 ສະບັບ. ການຈັດຕັ້ງປະຕິບັດວຽກງານ ຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ແມ່ນອີງຕາມກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

### 3.2. ການດຳເນີນການປະເມີນຄວາມສ່ຽງ

ການປະເມີນໂດຍຜ່ານການວິເຄາະ ແລະ ການອະທິບາຍ ຫຼື ການໃຫ້ເຫດຜົນຕໍ່ກັບຄວາມບອບບາງ ປະກອບມີ 22 ຕົວປ່ຽນຫຼັກ ຄື: 1). ຄຸນນະພາບຂອງນະໂຍບາຍ ແລະ ຍຸດທະສາດການຕ້ານການຟອກເງິນ; 2). ປະສິດທິຜົນຂອງການນິຍາມການກະທຳຜິດດ້ານການຟອກເງິນ; 3). ຄວາມຮອບດ້ານຂອງກົດໝາຍວ່າດ້ວຍການຮິບຊັບສິນ; 4). ຄຸນນະພາບຂອງການເກັບກຳ ແລະ ວິໄຈຂໍ້ມູນຂອງໜ່ວຍງານຂ່າວກອງທາງການເງິນ; 5). ຄວາມສາມາດ ແລະ ຊັບພະຍາກອນ ສຳລັບການສືບສວນ-ສອບສວນ ອາດຊະຍາກຳດ້ານການເງິນ (ລວມທັງການຮິບຊັບສິນ); 6). ຄວາມຊື່ສັດສຸດຈະລິດ ແລະ ຄວາມເປັນເອກະລາດ ຂອງຜູ້ສືບສວນ-ສອບສວນ ອາດຊະຍາກຳດ້ານການເງິນ (ລວມທັງການຮິບຊັບສິນ); 7). ຄວາມສາມາດ ແລະ ຊັບພະຍາກອນ ສຳລັບການຍື່ນຟ້ອງຄະດີ ການກະທຳຜິດດ້ານການເງິນ (ລວມທັງການຮິບຊັບສິນ); 8). ຄວາມຊື່ສັດສຸດຈະລິດ ແລະ ຄວາມເປັນເອກະລາດ ຂອງໄອຍະການ ຂອງຄະດີການກະທຳຜິດດ້ານການເງິນ (ລວມທັງການຮິບຊັບສິນ); 9). ຄວາມສາມາດ ແລະ ຊັບພະຍາກອນ ສຳລັບການພິຈາລະນາຄະດີຢູ່ສານ (ລວມທັງການຮິບຊັບສິນ); 10). ຄວາມຊື່ສັດສຸດຈະລິດ ແລະ ຄວາມເປັນເອກະລາດ ຂອງຜູ້ພິພາກສາ (ລວມທັງການຮິບຊັບສິນ); 11). ຄຸນນະພາບຂອງການກວດກາຊາຍແດນ; 12). ຄວາມຮອບດ້ານຂອງລະບົບພາສີກ່ຽວກັບເງິນສົດ ແລະ ເຄື່ອງມືທີ່ຄ້າຍຄືກັນ; 13). ປະສິດທິຜົນຂອງການກວດກາ ກ່ຽວກັບເງິນສົດ ແລະ ເຄື່ອງມືທີ່ຄ້າຍຄືກັນ; 14). ປະສິດທິຜົນຂອງການຮ່ວມມືພາຍໃນປະເທດ; 15). ປະສິດທິຜົນຂອງການຮ່ວມມືສາກົນ; 16). ລະດັບຄວາມເປັນລະບົບທາງການຂອງເສດຖະກິດ;17). ລະດັບຄວາມຊື່ສັດສຸດຈະລິດດ້ານການເງິນ; 18). ປະສິດທິຜົນຂອງການຈັດຕັ້ງປະຕິບັດອາກອນ; 19). ການມີການກວດສອບບັນຊີທີ່ເປັນເອກະລາດ; 20). ການມີໂຄງລ່າງກວດກາການຢັ້ງຢືນຕົນທີ່ໜ້າເຊື່ອຖື; 21). ການມີແຫຼ່ງຂໍ້ມູນຂ່າວສານທີ່ເປັນເອກະລາດ; ແລະ 22). ການມີ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບກຳມະສິດທີ່ມີຜົນປະໂຫຍດ. ຈາກຕົວປ່ຽນຄວາມບອບບາງ 22 ຕົວປ່ຽນຫຼັກ ທີ່ກ່າວມາຂ້າງເທິງ ຄະນະຮັບຜິດຊອບໄດ້ປະເມີນ ແລະ ໃຫ້ເຫດຜົນຜ່ານ 11 ຕົວປ່ຽນກາງ ດັ່ງທີ່ໄດ້ລະບຸໄວ້ໃນພາກຜົນການປະເມີນດັ່ງກ່າວ ໃນຂໍ້ທີ 3.3 ແລະ 3.4 ຂອງພາກທີ III.

### 3.3. ຜົນການປະເມີນມາດຕະການເພື່ອປ້ອງກັນຄວາມສ່ຽງດ້ານການຟອກເງິນອາດເກີດຂຶ້ນ

ໃນການປະເມີນຄວາມບອບບາງ ຄັ້ງນີ້ ຄະນະຮັບຜິດຊອບໄດ້ນຳໃຊ້ກົນໄກການເຮັດວຽກ ດ້ວຍວິທີການຈັດກອງປະຊຸມ, ປຶກສາຫາລື, ການສັງລວມ, ສະໜອງຂໍ້ມູນ, ເອກະສານ ແລະ ລະບຽບການ ທີ່ກ່ຽວຂ້ອງ ໃຫ້ແຕ່ລະພາກສ່ວນທີ່ຕິດພັນກັບແຕ່ລະຕົວປ່ຽນ ຊຶ່ງປະກອບມີ 13 ກະຊວງອົງການຈັດຕັ້ງ ແລະ ລວມມີ 32 ກົມກອງທີ່ໄດ້ເຮັດວຽກຮ່ວມກັນປະເມີນກ່ຽວກັບການທົບທວນຄວາມບອບບາງຂອງປະເທດ ຊຶ່ງມີຜົນປະເມີນດັ່ງນີ້:

#### 3.3.1. ຄວາມໜ້າເຊື່ອຖືຂອງຂໍ້ມູນ ຫຼື ບັນຊີການເງິນ

ຄວາມໜ້າເຊື່ອຖືຂອງຂໍ້ມູນ ຫຼື ບັນຊີການເງິນ ແມ່ນຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກວ່າ ສປປ ລາວ ມີການປັບປຸງການຄຸ້ມຄອງການເກັບລາຍຮັບທີ່ໃຫ້ມີປະສິດທິຜົນໄດ້ຫຼາຍຂຶ້ນ, ແນໃສ່ຮັບປະກັນການເກັບລາຍຮັບສ່ວຍສາອາກອນໃຫ້ບັນລຸໄດ້ຕາມຄາດໝາຍ ໃນຂອບເຂດທົ່ວປະເທດ. ເຖິງແມ່ນວ່າໄລຍະຜ່ານມາຂະແໜງສ່ວຍສາອາກອນໄດ້ປະເຊີນກັບອຸປະສັກ ແລະ ສິ່ງທ້າທາຍຫຼາຍດ້ານໃນການຈັດຕັ້ງປະຕິບັດການຈັດເກັບລາຍຮັບ. ຢ່າງໃດກໍ່ດີ, ສາເຫດຕົ້ນຕໍ ທີ່ພາໃຫ້ເກີດມີສິ່ງທ້າທາຍ ເນື່ອງຈາກການບໍ່ປະຕິບັດຕາມລະບຽບການທີ່ກຳນົດໄວ້, ການບໍ່ມາແຈ້ງອາກອນ, ການແຈ້ງອາກອນຊັກຊ້າ.

ສະນັ້ນ, ກົມສ່ວຍສາອາກອນ, ກະຊວງການເງິນ ຈຶ່ງມີການປັບປຸງແກ້ໄຂໂດຍນຳໃຊ້ລະບົບການເສຍອາກອນທີ່ອຳນວຍຄວາມສະດວກ, ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ຕໍ່ກັບການເສຍພັນທະອາກອນ ໂດຍຜ່ານລະບົບເອເລັກໂຕຣນິກ (TaxRIS) ຫຼື ການປ້ອນຂໍ້ມູນອາກອນແບບອອນລາຍ ທີ່ສາມາດຜິມການແຈ້ງແຕ່ລະປະເພດອາກອນດ້ວຍຕົນເອງໄດ້, ຫຼັງຈາກນັ້ນ ຈຶ່ງສາມາດເລືອກຊ່ອງທາງການຊຳລະອາກອນໄດ້ໂດຍກຳນົດມີ 3 ຊ່ອງທາງຄື: 1). ຊຳລະຜ່ານ ລະບົບ Easy-Tax ຂອງທະນາຄານ ປ່ອງຮັບເງິນຂອງທະນາຄານ; 2). ປ່ອງຮັບເງິນຂອງຄັງເງິນແຫ່ງຊາດ ແລະ 3). ແຈ້ງຜ່ານປ່ອງບໍລິການຂອງຂະແໜງສ່ວຍສາອາກອນ, ຊຶ່ງອົງການສືບສວນ-ສອບສວນ ສາມາດເຂົ້າເຖິງແຫຼ່ງຂໍ້ມູນສ່ວຍສາອາກອນໄດ້ ຕາມລະບຽບການ. ພະນັກງານ-ເຈົ້າໜ້າທີ່ສ່ວຍສາອາກອນ ມີໜ້າທີ່ໃນການສະ

ໝອງຂໍ້ມູນ ຂ່າວສານ, ແນະນຳ, ອະທິບາຍ ກ່ຽວກັບວຽກງານຄຸ້ມຄອງສ່ວຍສາອາກອນ. ທັງນີ້, ໃນການປະຕິບັດຕົວຈິງ ເຈົ້າໜ້າທີ່ສ່ວຍສາອາກອນ ແມ່ນນຳໃຊ້ມາດຕະການທາງບໍລິຫານເປັນຫຼັກ ເປັນຕົ້ນ ການປັບໃໝ ແລະ ຢຸດຕິຊົ່ວຄາວ ຊຶ່ງເຮັດໃຫ້ບໍ່ມີຕົວເລກການດຳເນີນຄະດີທາງອາຍາ ແລະ ສະຖິຕິ ການກະທຳຜິດຕົ້ນຈາກ ການລະເມີດລະບຽບທາງອາກອນ.

ສຳລັບຜູ້ກວດສອບ ຫຼື ບໍລິສັດກວດສອບບັນຊີເອກະລາດ ດຳເນີນການກວດສອບບັນຊີ ໂດຍສອດຄ່ອງກັບມາດຕະຖານການກວດສອບ. ໂດຍກຳນົດໃຫ້ວິສາຫະກິດກວດສອບຕ້ອງປະຕິບັດລະບຽບການເຄື່ອນໄຫວວິຊາຊີບຕາມ ຈັນຍາບັນດ້ານວິຊາຊີບ ແລະ ມາດຕະຖານວິຊາຊີບດ້ານການກວດສອບ ຊຶ່ງກະຊວງການເງິນ ມີມາດຕະຖານດ້ານວິຊາຊີບ ສຳລັບການກວດສອບ ໂດຍກຳນົດໃຫ້ວິສາຫະກິດກວດສອບ ປະຕິບັດມາດຕະຖານສາກົນດ້ານການກວດສອບ ທີ່ສະພາມາດຕະຖານສາກົນດ້ານການກວດສອບ ແລະ ການຮັບປະກັນ (IAASB) ປະກາດໃຊ້ແຕ່ລະໄລຍະ, ໃນນີ້ລວມມີມາດຕະຖານທີ່ຕິດພັນກັບວຽກງານຕ້ານການຟອກເງິນ (ISA 240).

ຢ່າງໃດກໍ່ຕາມ, ລະດັບຂອງຄວາມຊື່ສັດທາງດ້ານການເງິນ, ປະສິດທິຜົນຂອງການຈັດຕັ້ງປະຕິບັດອາກອນ ແລະ ການມີການກວດສອບທີ່ເປັນເອກະລາດ ແມ່ນສາມາດຈັດຕັ້ງປະຕິບັດໄດ້. ແຕ່ກົນໄກການຈັດຕັ້ງປະຕິບັດຕົວຈິງ ຍັງບໍ່ທັນຮັດກຸມ ເທົ່າທີ່ຄວນ ຊຶ່ງເກີດຈາກຂໍ້ຈຳກັດດ້ານຄວາມຮັບຮູ້-ເຂົ້າໃຈສະເພາະດ້ານ, ວັດຖຸປະກອນ ຫຼື ເຄື່ອງມືທີ່ທັນສະໄໝ ແລະ ການບັງໃຊ້ມາດຕະການລົງໂທດທາງອາຍາ ໃນກໍລະນີມີການລະເມີດ.

### 3.3.2. ຄຸນນະພາບຂອງໂຄງສ້າງການຊອກຮູ້ລູກຄ້າ

ຄຸນນະພາບຂອງໂຄງສ້າງການຊອກຮູ້ລູກຄ້າ ແມ່ນຢູ່ໃນລະດັບ **ກາງ-ຕ່ຳ** ເນື່ອງຈາກວ່າ ສປປ ລາວ ມີພື້ນຖານໂຄງລ່າງໃນການເກັບກຳຂໍ້ມູນບຸກຄົນ, ນິຕິບຸກຄົນ ທີ່ສາມາດເຂົ້າເຖິງໄດ້ ເພື່ອກວດສອບຮູບປະພັນຂອງລູກຄ້າ ໂດຍນຳໃຊ້ແຫຼ່ງເອກະສານ, ຂໍ້ມູນ ຫຼື ຂ່າວສານທີ່ໜ້າເຊື່ອຖື ແລະ ເປັນເອກະລາດ ສາມາດປັບໃຊ້ໃນການສະກັດກັ້ນການນຳໃຊ້ເອກະສານປອມ ແລະ ເອກະສານຢັ້ງຢືນຕົນທີ່ບໍ່ຖືກຕ້ອງ, ຊຶ່ງບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ສາມາດນຳໃຊ້ເຂົ້າໃນການຢັ້ງຢືນຂໍ້ມູນລູກຄ້າໂດຍຜ່ານຖານຂໍ້ມູນຂອງປະເທດ ເປັນຕົ້ນ ລະບົບຂຶ້ນທະບຽນສຳມະໂນຄົວ ແລະ ບັດປະຈຳຕົວພົນລະເມືອງ ຊຶ່ງເປັນເອກະສານລະບຸຕົວຕົນ ແລະ ຂໍ້ມູນສ່ວນບຸກຄົນທີ່ນຳໃຊ້ເຮັດທຸລະກຳຕ່າງໆ. ປັດຈຸບັນ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ກະຊວງປ້ອງກັນຄວາມສະຫງົບ ສາມາດເຊື່ອມໂຍງກັບທຸກແຂວງໃນຂອບເຂດທົ່ວປະເທດ ຊຶ່ງເປັນລະບົບຂໍ້ມູນຂ່າວສານສາທາລະນະ ຄົບຖ້ວນ.

ນອກຈາກນີ້, ຍັງໄດ້ມີການສ້າງຕັ້ງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທີ່ມີພາລະບົດບາດ ເປັນສູນກາງໃນການເກັບກຳຂໍ້ມູນຈາກ ສະມາຊິກ, ອົງການຈັດຕັ້ງ ແລະ ບໍລິສັດສາທາລະນຸປະໂພກ. ໂດຍມີຮູບແບບການບໍລິການມີ 2 ຮູບແບບ: 1) ກັບທີ່ ສຳລັບບຸກຄົນ ແລະ ນິຕິບຸກຄົນທົ່ວໄປ ແລະ 2) ຮູບແບບອອນລາຍ ສຳລັບສະມາຊິກ ໂດຍຜ່ານລະບົບຂໍ້ມູນສິນເຊື່ອ (24/7) ແລະ ມີແຫຼ່ງຂໍ້ມູນຂ່າວສານທີ່ໜ້າເຊື່ອຖືໄດ້ ດັ່ງນີ້:

1. **ການເກັບກຳຂໍ້ມູນຈາກ ສະມາຊິກ** ຈຳນວນ 239 ແຫ່ງ, ທະນາຄານທຸລະກິດ 39 ແຫ່ງ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ 17 ແຫ່ງ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ 106 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 29 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 30 ແຫ່ງ, ໂຮງຊວດຈຳ 15 ແຫ່ງ, ພາກສ່ວນອື່ນໆ 3 ແຫ່ງ;
2. **ການເກັບກຳຂໍ້ມູນຈາກ ກະຊວງອຸດສາຫະກຳ ແລະ ການຄ້າ** ເປັນຕົ້ນ ຂໍ້ມູນທະບຽນວິສາຫະກິດ ດ້ວຍລະບົບ Application Programming Interface (API);
3. **ການເກັບກຳຂໍ້ມູນຈາກ ບໍລິສັດສາທາລະນຸປະໂພກ:** ກໍ່ຄື ການຊຳລະຄ່າໄຟຟ້າ, ການຊຳລະຄ່ານ້ຳປະປາ ແລະ ການຊຳລະຄ່າໂທລະຄົມ.

ພ້ອມດຽວກັນນີ້, ຍັງມີກົນໄກການຈັດຕັ້ງປະຕິບັດ ໃນເວລາແຈ້ງຂຶ້ນທະບຽນ ປະກອບມີ: ຂໍ້ມູນຂາຮຸ້ນ ຫຼື ຜູ້ຖືຮຸ້ນ, ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ກວດກາ ຈຳນວນ, ປະເພດເອກະສານ, ຄົບຖ້ວນ ແລະ ຄວາມຖືກຕ້ອງຂອງເນື້ອໃນເອກະສານ ໂດຍສະເພາະ ຊື່ ແລະ ນາມສະກຸນຂາຮຸ້ນ, ຜູ້ຖືຮຸ້ນ ໃຫ້ຖືກຕ້ອງ

ຕາມບັດປະຈຳຕົວ, ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ. ສຳລັບ ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ເປັນນິຕິບຸກຄົນ ທີ່ສ້າງຕັ້ງພາຍໃຕ້ກົດໝາຍຕ່າງປະເທດ ກໍ່ຈະກວດກາຊື່ດັ່ງກ່າວໃຫ້ຖືກກັບໃບທະບຽນວິສາຫະກິດ ຫຼື ເອກະສານຢັ້ງຢືນການສ້າງຕັ້ງ ນິຕິບຸກຄົນ ລວມທັງລາຍຊື່ຜູ້ຈັດການ, ຜູ້ອຳນວຍການ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງນິຕິບຸກຄົນດັ່ງກ່າວ.

ສຳລັບຂໍ້ມູນກ່ຽວກັບເຈົ້າຂອງຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ມີມາດຕະຖານໃນການຈັດເກັບ. ນອກຈາກນີ້, ສຳລັບການເກັບກຳຂໍ້ມູນກ່ຽວກັບສ່ວຍສາອາກອນແມ່ນຜ່ານລະບົບຄຸ້ມຄອງສ່ວຍສາອາກອນ (TaxRIS); ລະບົບຂໍ້ມູນການນຳເຂົ້າ-ສົ່ງອອກ; ລະບົບຄຸ້ມຄອງເງິນຕາຕ່າງປະເທດ, ລະບົບຂໍ້ມູນຂ່າວສານສິນເຊື່ອ; ລະບົບຄຸ້ມຄອງການຈັດຫາງານ; ລະບົບຄຸ້ມຄອງການລົງທຶນ ແລະ ລະບົບອື່ນໆ. ທັງນີ້, ຂໍ້ມູນກ່ຽວກັບເຈົ້າຂອງຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ສາມາດຄົ້ນຫາຂໍ້ມູນ ໂດຍຜ່ານຊ່ອງທາງ: 1). ເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ; ແລະ 2). ສຳເນົາເນື້ອໃນທະບຽນວິສາຫະກິດ (ເປັນເອກະສານ ຫຼື ຟາຍ).

ພ້ອມດຽວກັນນີ້, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີພັນທະໃນການຢັ້ງຢືນຕົວຕົນຂອງລູກຄ້າ ໂດຍການຊອກຮູ້ລູກຄ້າ ແລະ ການເພີ່ມທະວີເອົາໃຈໃສ່ລູກຄ້າ ກ່ອນ ແລະ ຫຼັງການໃຫ້ບໍລິການລູກຄ້າ ຕາມນິຕິກຳກຳນົດ.

ຢ່າງໃດກໍ່ຕາມ, ທຽບໃສ່ຄວາມຄືບຖ້ວນ ແລະ ຮອບດ້ານຂອງກົນໄກການລະບຸຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ ຊຶ່ງປັດໃຈຕົ້ນຕໍແມ່ນເກີດຂໍ້ຈຳກັດດ້ານວັດຖຸອຸປະກອນ ຫຼື ເຄື່ອງມືທີ່ທັນສະໄໝ ຮອງຮັບລະບົບການເຊື່ອມ ແລະ ການເຂົ້າເຖິງຖານຂໍ້ມູນລະຫວ່າງກັນ.

### 3.3.3. ຄວາມສາມາດໃນການເຂົ້າເຖິງ ຂໍ້ມູນຂ່າວສານ ແລະ ຫຼັກຖານທີ່ໜ້າເຊື່ອຖື

ຄວາມສາມາດໃນການເຂົ້າເຖິງ ຂໍ້ມູນຂ່າວສານ ແລະ ຫຼັກຖານທີ່ໜ້າເຊື່ອຖື ແມ່ນຢູ່ໃນ ລະດັບ **ກາງ** ເນື່ອງຈາກວ່າ ສປປ ລາວ ມີການຕິດຕາມການເຄື່ອນໄຫວເສດຖະກິດນອກລະບົບ (Informal Economy) ຊຶ່ງແມ່ນການດຳເນີນທຸລະກິດທີ່ບໍ່ຢູ່ພາຍໃຕ້ລະບົບ ຫຼື ການຄຸ້ມຄອງທີ່ເປັນທາງການ ຊຶ່ງເປັນຫົວໜ່ວຍທີ່ຜະລິດສິນຄ້າ ແລະ ການບໍລິການທີ່ ຖືກ ຫຼື ຜິດ ກົດໝາຍ. ເປັນຕົ້ນ ການຈ້າງງານນອກລະບົບ (Informal employment) ແມ່ນວຽກງານທີ່ຖືກດຳເນີນການນອກໂຄງສ້າງທີ່ເປັນທາງການ ເຊິ່ງບໍ່ຢູ່ໃນລະບົບອາກອນ, ກົດລະບຽບຂອງບ່ອນເຮັດວຽກ ແລະ ແຜນງານການປົກປ້ອງທາງສັງຄົມ ໂດຍບໍ່ຈຳແນກວ່າຫົວໜ່ວຍເສດຖະກິດນັ້ນຈະຢູ່ໃນລະບົບທີ່ເປັນທາງການ ຫຼື ບໍ່ເປັນທາງການ. ໂດຍເສດຖະກິດນອກລະບົບຈະບໍ່ໄດ້ປະກອບພັນທະໃຫ້ພາກລັດກຳຕາມ, ແຕ່ມູນຄ່າເພີ່ມໃນການຜະລິດສິນຄ້າ ແລະ ການບໍລິການໃນເສດຖະກິດນອກລະບົບ ແມ່ນປະກອບສ່ວນເຂົ້າໃນ ລວມຍອດຜະລິດຕະພັນພາຍໃນ (GDP) ແລະ ການສ້າງວຽກເຮັດງານທຳໃນປະເທດ ຊຶ່ງຂໍ້ມູນຂ່າວສານກ່ຽວກັບ ລັກສະນະ ແລະ ຂະໜາດຂອງ ເສດຖະກິດນອກລະບົບ ແມ່ນມີໜ້ອຍ ແລະ ຄາດຄະເນໄດ້ຍາກ ຂໍ້ມູນດັ່ງກ່າວແມ່ນສິ່ງທີ່ ຜູ້ວາງນະໂຍບາຍຈະຕ້ອງໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງຈະແຈ້ງ ຈຶ່ງຈະວາງນະໂຍບາຍເສດຖະກິດໄດ້ຖືກຕ້ອງ, ສັດສ່ວນສຳຄັນຂອງການເຄື່ອນໄຫວເສດຖະກິດຍັງດຳເນີນເປັນເງິນສົດເນື່ອງຈາກວ່າປະຊາຊົນລາວສ່ວນໃຫຍ່ ຍັງຊິນເຄີຍກັບການຈັບຈ່າຍໃຊ້ສອຍດ້ວຍເງິນສົດ ເປັນຕົ້ນການຊື້ສິນຄ້າອຸປະໂພກ-ບໍລິໂພກ ຫຼື ການດຳເນີນທຸລະກຳຂະໜາດນ້ອຍ ເປັນຕົ້ນ ແມ່ຄ້າພໍ່ຄ້າຊາວຂາຍ ແລະ ຫົວໜ່ວຍທຸລະກິດຂະໜາດນ້ອຍ ທີ່ເປີດຮ້ານຂາຍໝາກໄມ້ຕາມແຄມທາງແມ່ນຈ່າຍເງິນສົດໃຫ້ເຈົ້າຂອງທີ່ດິນ ແລ້ວກໍ່ຕັ້ງແຜງຂາຍເຄື່ອງໄດ້ເລີຍ.

ແຕ່ອີງໃສ່ຂໍ້ມູນຈາກສະຖາບັນຄົ້ນຄວ້າຂອງໂຄງການຮ່ວມມືດ້ານການຄຸ້ມຄອງທາງສັງຄົມ ລະຫວ່າງ ILO ຫຼື ເກົ່າຫຼີ ໃນ ສປປ ລາວ ທີ່ໄດ້ວິໄຈດ້ານເສດຖະກິດນອກລະບົບ ແລະ ການຂະຫຍາຍການຄຸ້ມຄອງດ້ານຄວາມໝັ້ນຄົງທາງສັງຄົມໃນ ສປປ ລາວ ໄດ້ພົບວ່າ ແຮງງານລາວສ່ວນໃຫຍ່ຢູ່ໃນຮູບແບບການຈ້າງງານນອກລະບົບ, ກວມເອົາ 82.9% ຂອງການຈ້າງງານທັງໝົດ ໂດຍອັດຕາສ່ວນການຈ້າງງານຂອງຜູ້ຍິງ (85.9%) ກວມເອົາຫຼາຍກວ່າ ຜູ້ຊາຍ (79.9%). ທັງນີ້, ເນື່ອງຈາກແຮງງານໃນເສດຖະກິດນອກລະບົບມີລາຍຮັບທີ່ບໍ່ສະໝ່ຳສະເໝີ ແລະ ບໍ່ມີການບັນທຶກບັນຊີ ຊຶ່ງເປັນການຍາກທີ່ຈະບັງຄັບໃຊ້ບັນດາກົດໝາຍຕ່າງໆ ເປັນຕົ້ນ ກົດໝາຍອາກອນ ແລະ ປະກັນສັງຄົມ.

ຢ່າງໃດກໍ່ຕາມ, ຕໍ່ກັບລະດັບການເປັນລະບົບທາງການຂອງເສດຖະກິດ ຍັງມີຂໍ້ຈຳກັດດ້ານໂຄງລ່າງຂອງຂໍ້ມູນຂ່າວສານແບບຮອບດ້ານ ແລະ ພຽງພໍ ເພື່ອຊຸກຍູ້ຄວາມໂປ່ງໃສ່ເສດຖະກິດຂອງປະເທດ.

### 3.3.4. ຄຸນນະພາບຂອງການ ກວດກາພາສີ ກ່ຽວກັບເງິນສົດ ແລະ ເຄື່ອງມື ທີ່ຄ້າຍຄືກັນ

ຄຸນນະພາບຂອງການ ກວດກາພາສີ ກ່ຽວກັບເງິນສົດ ແລະ ເຄື່ອງມື ທີ່ຄ້າຍຄືກັນ ແມ່ນຢູ່ໃນ ລະດັບ **ກາງ-ຕ່ຳ** ເນື່ອງຈາກວ່າ ສປປ ລາວ ມີ ນິຕິກຳ ແລະ ກົນໄກການຈັດຕັ້ງປະຕິບັດທີ່ຄົບຖ້ວນສົມຄວນ ລວມທັງນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການກວດຄົ້ນ ທີ່ໃຊ້ໃນການຄຸ້ມຄອງການຂົນສົ່ງເງິນສົດ ແລະ ວັດຖຸມີຄ່າ ຊຶ່ງມີການປັບປຸງເປັນແຕ່ລະໄລຍະ. ພ້ອມດຽວກັນນີ້, ຍັງມີມາດຕະການລົງໂທດຕໍ່ກັບຜູ້ລະເມີດລະບຽບກົດໝາຍ, ຊຶ່ງໃນເວລາການກວດຄົ້ນຫາກພົບເຫັນເງິນສົດ, ໂລຫະປະເສີດ ແລະ ແກ້ວປະເສີດທີ່ບໍ່ຖືກຕ້ອງແມ່ນສາມາດຍຶດໄດ້ຕາມລະບຽບການ ແລະ ກົດໝາຍກຳນົດ. ຢ່າງໃດກໍ່ຕາມ, ຄວາມຮອບດ້ານ ແລະ ປະສິດທິຜົນ ໃນການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ມີຄວາມຫຍຸ້ງຍາກໃນການກວດກາຕາມດ່ານຊາຍແດນ ແລະ ບາງກໍລະນີອາດກວດບໍ່ພົບເຫັນ ຍ້ອນຂາດວັດຖຸປະກອນ ແລະ ເຄື່ອງມືເທັກໂນໂລຊີທີ່ທັນສະໄໝ ເຂົ້າຊ່ວຍໃນວຽກງານການກວດກາຕົວຈິງ.

### 3.3.5. ຄຸນນະພາບຂອງການກວດກາຜ່ານແດນ ກ່ຽວກັບເງິນສົດ ແລະ ເຄື່ອງມືທີ່ຄ້າຍຄືກັນ

ຄຸນນະພາບຂອງການກວດກາຜ່ານແດນ ກ່ຽວກັບເງິນສົດ ແລະ ເຄື່ອງມືທີ່ຄ້າຍຄືກັນ ແມ່ນຢູ່ໃນ ລະດັບ **ກາງ-ຕ່ຳ** ເນື່ອງຈາກວ່າ ສປປ ລາວ ມີກົນໄກໃນການຮ່ວມມື ເປັນຕົ້ນການເຊັນບົດບັນທຶກຮ່ວມມືສອງຝ່າຍກັບບັນດາປະເທດໃກ້ຄຽງໃນການສະໜອງຂໍ້ມູນຊຶ່ງກັນ ແລະ ກັນ, ມີຂັ້ນຕອນວິທີການໃນການປະຕິບັດການກວດກາ, ນຳໃຊ້ວັດຖຸອຸປະກອນ ແລະ ເຄື່ອງມືເຕັກນິກທາງວິຊາການຕ່າງໆ ເຂົ້າໃນການກວດຄົ້ນ. ນອກຈາກນີ້, ຍັງມີກຳລັງເຈົ້າໜ້າທີ່ທີ່ໄດ້ຮັບການຝຶກອົບຮົມວຽກງານວິຊາສະເພາະ ພ້ອມທັງມີການສ້າງໃຫ້ພະນັກງານໃຫ້ມີຄວາມຮູ້ຄວາມສາມາດໃຫ້ໄດ້ຕາມມາດຕະຖານສາກົນ ເຊັ່ນ: ການຝຶກອົບຮົມເຕັກນິກໃນການສືບສວນ-ສອບສວນ; ເຕັກນິກການຄວບຄຸມການລັກລອບຂົນສົ່ງຢາເສບຕິດພາຍໃຕ້ໂຄງການ CADS; ການກວດກາຄຸ້ມຄອງດ່ານຊາຍແດນ ແລະ ອື່ນໆ. ນອກຈາກນີ້, ຍັງໄດ້ມີການຕິດປ້າຍໂຄສະນາແຈ້ງການ ແລະ ລະບຽບການຢູ່ບັນດາດ່ານພາສີຊາຍແດນ ເພື່ອໃຫ້ປະຊາຊົນ, ຜູ້ໂດຍສານທີ່ນຳເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນໃນເວລາເຂົ້າ-ອອກປະເທດ ທີ່ມີມູນຄ່າເກີນກຳນົດ ຕ້ອງໄດ້ແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ.

ຢ່າງໃດກໍ່ຕາມ, ຕໍ່ກັບຄຸນນະພາບຂອງການ ກວດກາພາສີ ແລະ ກວດກາຊາຍແດນ ເຊັ່ນ ການຈັດຕັ້ງເຄື່ອນໄຫວຕະເວນຕາມແນວຊາຍແດນຂອງທະຫານຊາຍແດນ ໂດຍລວມແມ່ນເຮັດໄດ້ດີ ແຕ່ກໍ່ບໍ່ສາມາດຄວບຄຸມໄດ້ທຸກພື້ນທີ່ບໍລິເວນຊາຍແດນ ຍ້ອນຂໍ້ຈຳກັດທາງພູມສາດທຳມະຊາດ, ຊຶ່ງເຂດຊາຍແດນດັ່ງກ່າວຕັ້ງຢູ່ພື້ນທີ່ຫ່າງໄກສອກຫຼີກຈາກເສັ້ນທາງ ຫຼື ເຂດຕົວເມືອງ ທີ່ເປັນຂໍ້ບົກຜ່ອງ ແລະ ບັນຫາທີ່ຫຍຸ້ງຍາກຍ້ອນລະບົບເອເລັກໂຕຣນິກ ແລະ ກົນໄກການປະສານງານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ເຮັດໃຫ້ເກີດຊ່ອງວ່າງໃຫ້ມີການລັກລອບ ນຳເຂົ້າ-ສົ່ງອອກສິນຄ້າ, ຄ້າມະນຸດ, ຢາເສບຕິດ, ຄ້າອາວຸດ ແລະ ລັກລອບຂົນເງິນສົດ ແລະ ວັດຖຸມີຄ່າ ເຂົ້າ-ອອກປະເທດ. ນອກຈາກນີ້, ໃນການຈັດຕັ້ງປະຕິບັດຕົວຈິງສາມາດກວດຄົ້ນ ແລະ ຈັບກຸມຜູ້ກະທຳຜິດມາດຳເນີນຄະດີຕໍ່ກັບການລັກລອບຂົນສົ່ງເງິນສົດ ແລະ ວັດຖຸມີຄ່າຂ້າມແດນ ແຕ່ຍັງບໍ່ສາມາດສືບສວນ-ສອບສວນ ເປັນຄະດີອາຍາ ແລະ ຄະດີຟອກເງິນ.

### 3.3.6. ຄຸນນະພາບຂອງການ ສືບສວນ-ສອບສວນ ຄະດີອາຍາ

ຄຸນນະພາບຂອງການ ສືບສວນ-ສອບສວນ ຄະດີອາຍາ ແມ່ນຢູ່ໃນ ລະດັບ **ກາງ-ຕ່ຳ** ເນື່ອງຈາກວ່າ ສປປ ລາວ ໄດ້ສ້າງຕັ້ງໜ່ວຍງານຂໍ້ມູນຂ່າວສານຂອງປະເທດກໍ່ຄື: ສຕຟງ ໃນປີ 2007 ໂດຍເປັນໜຶ່ງໃນອົງການຈັດຕັ້ງລັດທີ່ມີຖານະທຽບເທົ່າກົມ ແລະ ມີພາລະບົດບາດເປັນເສນາທິການ ແລະ ຊ່ວຍວຽກໃຫ້ແກ່ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ໃນການຈັດຕັ້ງປະຕິບັດການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ສຕຟງ ຖືກສ້າງຕັ້ງຂຶ້ນໃນຮູບແບບຂອງການ

ບໍລິຫານຂໍ້ມູນຂ່າວກອງທາງດ້ານການເງິນ ຊຶ່ງເປັນໜ້າທີ່ໜຶ່ງທີ່ສຳຄັນ ໃນການຮັບລາຍງານທຸລະກຳທີ່ສົງໄສ, ວິເຄາະຂໍ້ມູນ, ນຳສົ່ງ ແລະ ສະໜອງຂໍ້ມູນຂ່າວກອງທາງດ້ານການເງິນ ໃຫ້ແກ່ອົງການສືບສວນ-ສອບສວນ ພາຍໃນປະເທດ ແລະ ຄູ່ຮ່ວມງານຕ່າງປະເທດ. ສຳລັບງົບປະມານໃນການເຄື່ອນໄຫວວຽກງານ, ການປະກອບວັດຖຸເຕັກນິກ ແລະ ບຸກຄະລາກອນ ແມ່ນລັດຖະບານເປັນຜູ້ສະໜອງໃຫ້ ຕາມແຜນກຳນົດໃນແຕ່ລະໄລຍະ ໄດ້ຮັບການສະໜອງດ້ານງົບປະມານ ໃນການເຄື່ອນໄຫວວຽກງານ ຢ່າງຄ່ອງຕົວ ແຕ່ຍັງບໍ່ທັນພຽງພໍທຽບໃສ່ສະພາບການຕົວຈິງ. ສຳລັບການຝຶກອົບຮົມໃຫ້ແກ່ພະນັກງານທັງພາຍໃນ ແລະ ຕ່າງປະເທດ ສະເລ່ຍຫຼາຍກວ່າ 80 ເທື່ອຄັ້ງ. ຢ່າງໃດກໍ່ຕາມ, ປັດຈຸບັນ ປະກອບມີບຸກຄະລາກອນ ທັງໝົດຈຳນວນ 46 ທ່ານ ຊຶ່ງທຽບໃສ່ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ກໍ່ຄືໜ້າວຽກຕົວຈິງ ແມ່ນຍັງມີຄວາມຈຳເປັນຕ້ອງເພີ່ມບຸກຄະລາກອນໃນໜ້າວຽກແຕ່ລະດ້ານ. ສຕຟງ ໄດ້ປະສານສົມທົບກັບເຈົ້າໜ້າທີ່ ແລະ ບັນດາຄູ່ຮ່ວມງານຕ່າງປະເທດໃນການແລກປ່ຽນຂໍ້ມູນທາງດ້ານການເງິນ ຊຶ່ງມີລາຍລະອຽດດັ່ງນີ້:

**ຕາຕະລາງທີ 3.1: ສັງລວມການແລກປ່ຽນຂໍ້ມູນລະຫວ່າງ ສຕຟງ ແລະ ເຈົ້າໜ້າທີ່ ສືບສວນ-ສອບສວນ**

| ພາກສ່ວນ | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| ກະຊວງປ້ອງກັນຄວາມສະຫງົບ | 42 | 49 | 86 | 86 | 184 |
| ກະຊວງການເງິນ, ກົມພາສີ | 1 | 3 | 4 | - | 7 |
| ກະຊວງກະສິກຳ ແລະ ປ່າໄມ້, ກົມກວດກາປ່າໄມ້ | 4 | 3 | 1 | - | - |
| ອົງການກວດກາລັດຖະບານ, ກົມ ສືບສວນ-ສອບສວນ ຕ້ານການສໍ້ລາດບັງຫຼວງ | - | 2 | 1 | - | - |
| **ລວມ** | **47** | **57** | **92** | **86** | **191** |

ແຫຼ່ງຂໍ້ມູນ: ສຳນັກງານຂໍ້ມູນຕ້ານການຟອກເງິນ 2024

**ຕາຕະລາງທີ 3.2: ສັງລວມການຮັບການລາຍງານລະຫວ່າງ ສຕຟງ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ**

| ການໄດ້ຮັບບົດລາຍງານ | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| ບົດລາຍງານທຸລະກຳທີ່ສົງໄສ | 293 | 403 | 316 | 334 | 202 |
| ບົດລາຍງານທຸລະກຳເງິນສົດເກີນກຳນົດ | 357,269 | 367,661 | 382,026 | 445,913 | 571,000 |
| ບົດລາຍງານ ກ່ຽວກັບ ເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ໃນ ເວລາ ເຂົ້າ-ອອກ ສປປ ລາວ | 26 | | 19 | 8 | 10 |

ແຫຼ່ງຂໍ້ມູນ: ສຳນັກງານຂໍ້ມູນຕ້ານການຟອກເງິນ 2024

**ຕາຕະລາງທີ 3.3: ສັງລວມການແລກປ່ຽນຂໍ້ມູນ ລະຫວ່າງ ສຕຟງ ແລະ ບັນດາຄູ່ຮ່ວມງານຕ່າງປະເທດ**

| | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| ຂາເຂົ້າ | 7 | 5 | 3 | 1 | 3 |
| ຂາອອກ | 0 | 2 | 3 | 4 | 0 |

ແຫຼ່ງຂໍ້ມູນ: ສຳນັກງານຂໍ້ມູນຕ້ານການຟອກເງິນ 2024

**ຕາຕະລາງທີ 3.4: ສັງລວມສະຖິຕິການລົງກວດກາຫົວໜ່ວຍທີ່ມີໜ້າທີ່ລາຍງານຂອງ ສຕຟງ**

| | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|
| ຫົວໜ່ວຍທີ່ມີໜ້າທີ່ລາຍງານ | 18 | 19 | 4 | 27 | 11 |

ແຫຼ່ງຂໍ້ມູນ: ສຳນັກງານຂໍ້ມູນຕ້ານການຟອກເງິນ 2024

ອົງການສືບສວນ-ສອບສວນປະກອບມີ 6 ພາກສ່ວນ: ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ປ່າໄມ້, ເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ, ເຈົ້າໜ້າທີ່ພາສີ-ອາກອນ, ເຈົ້າໜ້າທີ່ປ້ອງກັນຊາດ ແລະ ເຈົ້າໜ້າທີ່ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຮັບການສະໜອງດ້ານ ເຕັກນິກວິຊາສະເພາະ, ຄວາມຮູ້ຝຶກອົບຮົມ, ມີຊັບພະຍາກອນ ຫຼື ບຸກຄະລາກອນ. ພ້ອມດຽວກັນນີ້, ຍັງມີກອບນິຕິກຳທີ່ກຳນົດສິດ ແລະ ໜ້າທີ່ໃຫ້ອົງການ ສືບສວນ-ສອບສວນ ເພື່ອດຳເນີນການສືບສວນ-ສອບສວນ ການກະທຳຜິດ,ການຕິດຕາມ, ກວດຄົ້ນ, ກັກ, ຍຶດ, ອາຍັດ ຊັບສິນ, ເງິນທີ່ໄດ້ ຫຼື ຜົນຈາກການກະທຳຜິດຕົ້ນ ແລະ ເຄື່ອງມືທາງດ້ານການເງິນທີ່ໄດ້ມາຈາກການກະທຳຜິດ ຊຶ່ງບັນດາອົງການສືບສວນ-ສອບສວນ ສາມາດຈັດຕັ້ງປະຕິບັດໄດ້ເປັນຢ່າງດີ. ພ້ອມດຽວກັນນີ້, ການຈັດຕັ້ງປະຕິບັດວຽກງານຂອງການສືບສວນ-ສອບສວນ ແມ່ນປະຕິບັດບົນພື້ນຖານຄວາມຊື່ສັດສຸດຈະລິດ ແລະ ມີຄວາມເປັນເອກະລາດ. ນອກຈາກນີ້ ກໍ່ຍັງໄດ້ກຳນົດບັນດາຂໍ້ຫ້າມຕິດພັນກັບການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງອົງການສືບສວນ-ສອບສວນ ເປັນຕົ້ນ: 1). ໃຊ້ສິດ,ໜ້າທີ່ຕຳແໜ່ງເກີນຂອບເຂດຄວາມຮັບຜິດຊອບຂອງຕົນ; 2). ໃຊ້ສິດ,ໜ້າທີ່ ແລະ ອາວຸດນາບຂູ່ປະຊາຊົນ; 3). ສວຍໃຊ້ສິດ,ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດສ່ວນຕົວ.

ອົງການໄອຍະການປະຊາຊົນສູງສຸດ ເປັນອົງການລັດທີ່ມີພາລະບົດບາດ ແລະ ໜ້າທີ່ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ ທັງເປັນອົງການຕິດຕາມກວດກາຂອງລັດ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕາມກົດໝາຍ. ພ້ອມດຽວກັນນີ້, ອົງການໄອຍະການປະຊາຊົນມີລະບົບການຈັດຕັ້ງຄົບຖ້ວນ, ມີງົບປະມານ, ບຸກຄະລາກອນ ແລະ ຄວາມສາມາດໃນການດຳເນີນການສັ່ງຟ້ອງ ແລະ ຖະແຫຼງຄະດີຕໍ່ກັບການກະທຳຜິດດ້ານການເງິນ ລວມທັງກາ-ນຟອກເງິນ ແລະ ການຮັບສິນບົນ. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ພະນັກງານໄອຍະການປະຊາຊົນສູງສຸດ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນສູງສຸດ ດຳເນີນການສັ່ງຟ້ອງ ແລະ ຖະແຫຼງຄະດີການກະທຳຜິດດ້ານການເງິນ ດ້ວຍຄວາມເປັນເອກະລາດ ແລະ ເປັນເຈົ້າຕົນເອງໃນການເຄື່ອນໄຫວວຽກງານ. ນອກຈາກນີ້, ເພື່ອຮັບປະກັນຄວາມຊື່ສັດສຸດຈະລິດ ຍັງມີການກຳນົດທີ່ເປັນຂໍ້ຫ້າມບໍ່ໃຫ້ມີພຶດຕິກຳ ເປັນຕົ້ນ: ການສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ; ການປະຕິບັດສິດ, ໜ້າທີ່ ເກີນຂອບເຂດ; ການບັງຄັບ ແລະ ນາບຂູ່ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;ເມີນເສີຍຕໍ່ໜ້າທີ່, ປິດເບືອນຄວາມຈິງ, ປົກບັງ ຫຼື ປົກປ້ອງ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ.

ກົນໄກການປະສານງານຂອງບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງກັບການຕ້ານການຟອກເງິນ ທີ່ມີສ່ວນຮ່ວມໃນການຕ້ານ ການຟອກເງິນ ສາມາດຮ່ວມມື ແລະ ປະສານງານກັນຢ່າງມີປະສິດທິຜົນ ໂດຍໄດ້ສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນປີ 2015 ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ປະກອບດ້ວຍ ຮອງນາຍົກລັດຖະມົນຕີ ເປັນປະທານ ແລະ ຮອງລັດຖະມົນຕີ ຫຼື ຮອງຫົວໜ້າອົງການ ທີ່ກ່ຽວຂ້ອງ ເປັນຮອງປະທານ ແລະ ກຳມະການ ລວມທັງໝົດ 17 ທ່ານ. ໂດຍຜ່ານການແຕ່ງຕັ້ງຄະນະໜ່ວຍງານວິຊາການ ປະກອບມີ 40 ທ່ານ ຊຶ່ງຄະນະດັ່ງກ່າວ ປະກອບມີບັນດາອົງການສືບສວນ-ສອບສວນ, ອົງການຈັດຕັ້ງທີ່ເປັນຜູ້ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ສຕຝງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊຶ່ງຄະນະດັ່ງກ່າວໄດ້ມີການປະຊຸມປຶກສາຫາລື 03 ເດືອນ ຕໍ່ຄັ້ງ ຫຼື ກໍລະນີ ຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມຂຶ້ນໃນເວລາໃດກໍ່ໄດ້ ຊຶ່ງໃນໄລຍະຜ່ານມາໄດ້ມີການຈັດກອງປະຊຸມປຶກສາຫາລື ຫຼາຍກວ່າ 100 ເທື່ອຄັ້ງ.

ພ້ອມດຽວກັນນີ້, ກໍ່ຍັງມີຄະນະຈຸດປະສານງານຮັບຜິດຊອບສະເພາະວຽກງານ ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນລະດັບວິຊາການ ຊຶ່ງເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດວຽກງານຕົວຈິງ ປະກອບມີ 12 ທ່ານ ເພື່ອຮັບປະກັນການປະສານງານກັນລະຫວ່າງ ອົງການສືບສວນ-ສອບສວນ, ໄອຍະການປະຊາຊົນ,

ສານປະຊາຊົນ ແລະ ສຕຝງ ໃຫ້ມີຄວາມໝັກແໜ້ນ, ຄົບຖ້ວນ, ສະດວກ, ຄ່ອງຕົວ ແລະ ທັນກັບສະພາບການ ໂດຍມີ ບົດບາດ ແລະ ໜ້າທີ່ ຕົ້ນຕໍຄື ເປັນຈຸດປະສານງານ, ສະໜອງທຸກໆຂໍ້ມູນ, ກວດກາຄືນບົດລາຍງານຂ່າວກອງທາງດ້ານ ການເງິນ ແລະ ກວດກາຄືນບັນດາຄະດີທີ່ຕົນຮັບຜິດຊອບ ໂດຍມີການຮັບ, ສົ່ງ ແລະ ສະໜອງຂໍ້ມູນ. ຊຶ່ງການນຳສົ່ງບົດ ລາຍງານຂ່າວກອງທາງດ້ານການເງິນ ໃຫ້ແກ່ເຈົ້າໜ້າທີ່ນັບແຕ່ 2018-2022 ລວມມີຈຳນວນ 473 ເທື່ອຄັ້ງ.

ສປປ ລາວ ມີ ນິຕິກຳ ແລະ ກົນໄກການຮ່ວມມືທາງອາຍາລະຫວ່າງປະເທດ ໃນລັກສະນະທີ່ຕັ້ງໜ້າ ແລະ ມີປະ ສິດທິຜົນ ກ່ຽວກັບການຕ້ານການຟອກເງິນ, ການກະທຳຜິດຕົ້ນ, ການສືບສວນ-ສອບສວນ ລວມທັງການຍຶດ, ອາຍັດ ແລະ ຮິບຊັບສິນ ທີ່ຈະແຈ້ງ. ນອກຈາກນີ້, ຍັງເຂົ້າເປັນພາຄີສົນທິສັນຍາຫຼາຍສະບັບທີ່ສຳຄັນ ແລະ ກ່ຽວຂ້ອງກັບການ ຮ່ວມມືສາກົນໃນການຕ້ານການຟອກເງິນ ທັງພາກພື້ນ ແລະ ສາກົນ. ພ້ອມດຽວກັນນີ້, ຍັງມີກົນໄກການຊ່ວຍເຫຼືອຊຶ່ງ ກັນ ແລະ ກັນທາງດ້ານກົດໝາຍ ທີ່ທັນສະພາບການໃນຫຼາຍຮູບແບບ ພາຍໃຕ້ການເປັນພາຄີບັນດາສົນທິສັນຍາສາກົນ ແລະ ການຮ່ວມມືສາກົນອື່ນໆ. ສຳລັບຂອບເວລາທີ່ເໝາະສົມ ໃນການຮ້ອງຂໍ ຫຼື ສະໜອງ ການຮ່ວມມືແມ່ນຈັດຕັ້ງ ປະຕິບັດຕາມເນື້ອໃນສົນທິສັນຍາ ຫຼື ຕາມລະບຽບກົດໝາຍພາຍໃນຂອງແຕ່ລະປະເທດ ຊຶ່ງນັບແຕ່ 2018-2022 ລວມ ມີຈຳນວນ 28 ເທື່ອຄັ້ງ.

ຢ່າງໃດກໍ່ຕາມ, ໃນດ້ານການພັດທະນາສ້າງຂີດຄວາມສາມາດ ຂອງບຸກຄະລາກອນ, ວັດຖຸປະກອນ ຫຼື ເຄື່ອງມື ທີ່ເປັນລະບົບອີເລັກໂຕຣນິກ ແລະ ການຈັດຕັ້ງປະຕິບັດກົນໄກການປະສານງານ ທັງພາຍ ແລະ ຕ່າງປະເທດ ຕົວຈິງ ທຽບໃສ່ຫຼັກການທີ່ລະບຸໄວ້ໃນນິຕິກຳ ຍັງບໍ່ທັນພຽງພໍ ແລະ ເຂັ້ມງວດເທົ່າທີ່ຄວນ ເຮັດໃຫ້ການດຳເນີນການສືບສວນ-ສອບສວນທາງດ້ານການເງິນ ຫຼື ການຟອກເງິນ ບາງຄັ້ງຍັງມີຄວາມລ່າຊ້າ ຊຶ່ງຕິດພັນກັບ ຫຼາຍພາກສ່ວນ, ຫຼາຍແຂວງ, ຫຼາຍປະເທດ ແລະ ຫຼາຍກຸ່ມກະທຳຜິດ ຈຶ່ງອາດດຳເນີນການບໍ່ທັນກັບເຫດການຕົວຈິງທີ່ເກີດຂຶ້ນ.

### 3.3.7. ຄຸນນະພາບຂອງການ ຍື່ນຟ້ອງຄະດີອາຍາ

ຄຸນນະພາບຂອງການ ຍື່ນຟ້ອງຄະດີອາຍາ ແມ່ນຢູ່ໃນ ລະດັບ **<u>ກາງ</u>** ເນື່ອງຈາກວ່າ ສປປ ລາວ ມີກອບນິຕິກຳທີ່ ກຳນົດການເຄື່ອນໄຫວຂອງອົງການດຳເນີນຄະດີກ່ຽວກັບການຟອກເງິນ ປະກອບມີ: 1). ອົງການສືບສວນ-ສອບສວນ; 2). ອົງການໄອຍະການປະຊາຊົນ; ແລະ 3). ສານປະຊາຊົນ. ນອກຈາກນີ້, ຊຶ່ງນິຕິກຳຍັງກຳນົດໃຫ້ການດຳເນີນຄະດີ ກ່ຽວກັບສະຖານການຟອກເງິນ ຕ້ອງດຳເນີນຄະດີໄປຄຽງຄູ່ກັບການດຳເນີນຄະດີກ່ຽວກັບການກໍ່ອາຊະຍາກຳ ແລະ ການ ກະທຳຜິດຕົ້ນອື່ນ ພ້ອມທັງການສືບສວນ-ສອບສວນທາງດ້ານການເງິນ ທີ່ສາມາດດຳເນີນໄດ້ຢ່າງຮີບດ່ວນ, ຄົບຖ້ວນ, ຮອບຄອບ ແລະ ຮັບປະກັນການປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ຍຸຕິທຳ. ໃນກໍລະນີ ຫາກບໍ່ມີການກະທຳຜິດຕົ້ນ ຫຼື ການກະທຳຜິດຕົ້ນເກີດຂຶ້ນຢູ່ນອກດິນແດນ ແມ່ນໃຫ້ດຳເນີນສະເພາະຄະດີກ່ຽວກັບສະຖານການຟອກເງິນ. ສຳລັບ ວິທີການ ແລະ ຂັ້ນຕອນ ໃນການດຳເນີນຄະດີກ່ຽວກັບການຟອກເງິນ ແມ່ນປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍອື່ນທີ່ກ່ຽວຂ້ອງ.

ຢ່າງໃດກໍ່ຕາມ, ເນື່ອງຈາກໃນດ້ານຂອງຄຸນນະພາບຂອງການສືບສວນ-ສອບສວນ, ຄວາມສາມາດຂອງບຸກ ຄະລາກອນໃນການສັ່ງຟ້ອງຄະດີທາງດ້ານການເງິນ ຫຼື ຟອກເງິນ, ປະສິດທິຜົນໃນການຮ່ວມມືພາຍໃນປະເທດ ແລະ ລະຫວ່າງປະເທດ ດັ່ງທີ່ໄດ້ອະທິບາຍຜົນການວິເຄາະໄວ້ໃນຕົວປ່ຽນກາງໃນຂໍ້ 3.3.6 ຂ້າງເທິງແມ່ນຍັງມີຂີດຈຳກັດ ສົມຄວນ ຊຶ່ງເປັນສ່ວນໜຶ່ງທີ່ເຮັດໃຫ້ຄຸນນະພາບຂອງການສັ່ງຟ້ອງຄະດີທີ່ຕິດພັນກັບການຟອກເງິນ ຍັງບໍ່ທັນໄດ້ດີເທົ່າ ທີ່ຄວນ.

### 3.3.8. ຄຸນນະພາບ ຂອງການຕັດສິນ ຫຼື ການພິຈາລະນາຄະດີ

ຄຸນນະພາບ ຂອງການຕັດສິນ ຫຼື ການພິຈາລະນາຄະດີ ແມ່ນຢູ່ໃນ ລະດັບ **<u>ກາງ-ຕ່ຳ</u>** ເນື່ອງຈາກວ່າ ສປປ ລາວ ມີ ນິຕິກຳທີ່ຈະແຈ້ງ ໂດຍກຳນົດໃຫ້ສານປະຊາຊົນ ເປັນອົງການຕຸລາການ ທີ່ເຮັດໜ້າທີ່ພິຈາລະນາຕັດສິນຄະດີ ຊຶ່ງຢູ່

ສປປ ລາວ ແມ່ນສານມີສິດອຳນາດພິຈາລະນາຕັດສິນ, ພິພາກສາຄະດີ ບົນພື້ນຖານຫຼັກຖານ, ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ. ໃນການໄຕ່ສວນ ແລະ ພິຈາລະນາຕັດສິນຄະດີ ສານມີຄວາມເປັນເອກະລາດ ແລະ ປະຕິບັດ ຕາມກົດໝາຍຢ່າງເຂັ້ມງວດ. ຜູ້ພິຈາລະນາຕັດສິນ ແລະ ພິພາກສາຄະດີ ຢູ່ພາຍໃຕ້ຫຼັກການຈັນຍາບັນຂອງຜູ້ພິພາກສາ ເປັນຕົ້ນ 1). ຈັນຍາບັນ ຕໍ່ຕົນເອງ; 2). ຈັນຍາບັນ ຕໍ່ວິຊາຊີບ; 3). ຈັນຍາບັນ ຕໍ່ການຈັດຕັ້ງ; ແລະ 4). ຈັນຍາບັນ ຕໍ່ປະຊາຊົນ ແລະ ສັງຄົມ. ພ້ອມດຽວກັນນີ້, ຍັງມີຫຼັກການກ່ຽວກັບການຫ້າມບໍ່ໃຫ້ມີພຶດຕິກຳ ເປັນຕົ້ນ 1). ສວຍໃຊ້ໜ້າທີ່ຕຳແໜ່ງ, ສິດອຳນາດ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນ, ໝູ່ຄູ່, ພັກພວກ ຫຼື ຍາດພີ່ນ້ອງຂອງຕົນ; 2). ບັງຄັບ ນາບຂູ່, ນຳໃຊ້ສິດ, ປະຕິບັດໜ້າທີ່ ເກີນຂອບເຂດ ຫຼື ລະເມີດລະບຽບການດຳເນີນຄະດີ; 3). ລຳອຽງ ຫຼື ເຂົ້າຂ້າງ ອອກຂາ ທີ່ພາໃຫ້ມີການຕັດສິນ ຫຼື ພິພາກສາຄະດີ ບໍ່ມີຄວາມຍຸຕິທຳ; 4). ເປີດເຜີຍຄວາມລັບ ກ່ອນການຕັດສິນ ຫຼື ພິພາກສາຄະດີ; 5). ທວງ, ຮຽກ, ໃຫ້ ຫຼື ຮັບເອົາ ສິນບົນ ແລະ ມີພຶດຕິກຳອື່ນ ທີ່ຜິດຕໍ່ຈັນຍາບັນ, ຈັນຍາທຳ.

ຢ່າງໃດກໍ່ຕາມ, ໃນດ້ານການພັດທະນາຂີດຄວາມສາມາດ ຂອງບຸກຄະລາກອນ, ລະບົບອີເລັກໂຕຣນິກ ແລະ ກົນໄກ ການຈັດຕັ້ງປະຕິບັດ ທຽບໃສ່ສະພາບການປັດຈຸບັນ ຍັງບໍ່ທັນພຽງພໍ ແລະ ຮອບດ້ານ ເທົ່າທີ່ຄວນ. ນອກຈາກນີ້, ຍັງມີຂີດຈຳກັດ ໃນດ້ານຄຸນນະພາບຂອງການສືບສວນ-ສອບສວນ ແລະ ການສັ່ງຟ້ອງ ຄະດີຟອກເງິນ ດັ່ງທີ່ໄດ້ອະທິບາຍຜົນການວິເຄາະໄວ້ໃນຕົວປ່ຽນກາງໃນຂໍ້ **3.3.6-3.3.7** ຂ້າງເທິງ ຊຶ່ງເປັນສ່ວນໜຶ່ງທີ່ເຮັດຄຸນນະພາບຂອງການຕັດສິນ ແລະ ການພິຈາລະນາ ຄະດີທີ່ຕິດພັນກັບການຟອກເງິນ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

### 3.3.9. ຄຸນນະພາບຂອງ ນິຕິກຳການຮິບຊັບສິນ

ຄຸນນະພາບຂອງ ນິຕິກຳການຮິບຊັບສິນ ແມ່ນຢູ່ໃນ ລະດັບ **<u>ກາງ-ຕ່ຳ</u>** ເນື່ອງຈາກວ່າ ສປປ ລາວ ມີກອບນິຕິກຳທີ່ຮອບດ້ານ ແລະ ຄົບຖ້ວນສົມຄວນ ຖືວ່າເປັນໂຄ່ງສ້າງໃນການຮິບຊັບສິນ (ກົດໝາຍ, ຂັ້ນຕອນ ແລະ ເຈົ້າໜ້າທີ່) ກົນໄກກ່ຽວກັບການກັກ, ຍຶດ, ອາຍັດ ແລະ ຮິບ ຊັບສິນ ທີ່ຮອບດ້ານສົມຄວນ ຊຶ່ງສາມາດຢຸດການເຄື່ອນໄຫວ ແລະ ຮິບເອົາເງິນລາຍໄດ້ ແລະ ສິ່ງທີ່ເຄື່ອງມືຂອງອາດຊະຍາກຳ ໂດຍພົບວ່າ ນິຕິກຳສະເພາະທີ່ໃຊ້ຕ້ານການຟອກເງິນ ກໍ່ຄືກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ມີຂໍ້ກຳນົດທີ່ຂະຫຍາຍອອກ ຄື: 1). ເງິນລາຍໄດ້ ແລະ ສິ່ງທີ່ເປັນເຄື່ອງມືຂອງການຟອກເງິນ ແລະ ການກະທຳຜິດທີ່ມີການຢຶນຢັນ, 2). ຜົນກຳໄລທີ່ໄດ້ ຈາກການກະທຳຜິດດັ່ງກ່າວ, ແລະ 3). ຊັບສົມບັດທີ່ມີມູນຄ່າກົງກັນ ທີ່ຢູ່ໃນການຄອບຄອງຂອງຈຳເລີຍທາງອາຍາ ຫຼື ບຸກຄົນທີສາມ ເປັນຕົ້ນ ຜົນຈາກການກະທຳຜິດຕົ້ນ ທີ່ເປັນ ເງິນ ຫຼື ຊັບສິນ ທີ່ໄດ້ມາໂດຍທາງກົງ ຫຼື ທາງອ້ອມ ຈາກການກະທຳຜິດຕົ້ນ, ຊັບສິນທີ່ໄດ້ປ່ຽນຮູບ ຫຼື ປ່ຽນແປງທັງໝົດ ຫຼື ບາງສ່ວນ ເປັນຊັບສິນອື່ນ ລວມທັງຜົນຕອບແທນ ຈາກການລົງທຶນ ຊຶ່ງເຈົ້າໜ້າທີ່ ສືບສວນ-ສອບສວນ ທີ່ກ່ຽວຂ້ອງ ມີສິດນຳໃຊ້ມາດຕະການ ຍຶດ ຫຼື ອາຍັດຊັບ ລວມທັງຊັບສິນທີ່ມີມູນຄ່າທຽບເທົ່າ ໃນກໍລະນີ ກວດພົບ, ພົບເຫັນ ຫຼື ສົງໄສວ່າມີການຟອກເງິນ. ນອກຈາກນີ້, ທີ່ມີຂໍ້ມູນຫຼັກຖານພຽງພໍກ່ຽວກັບທຶນທີ່ກ່ຽວຂ້ອງກັບ ການກະທຳຜິດຕົ້ນ, ການຟອກເງິນ ແລະ ການເຂົ້າຮ່ວມໃນການກະທຳຜິດດັ່ງກ່າວ ສານປະຊາຊົນ ຕ້ອງລົງຄຳຕັດສິນໃຫ້ຮິບຊັບ ດັ່ງນີ້:

1. ທຶນ ທີ່ເປັນຜົນຈາກການກະທຳຜິດຕົ້ນ ລວມທັງຊັບສິນທີ່ໄດ້ຈາກການລົງທຶນ ຫຼື ໄດ້ຮັບຈາກການແລກປ່ຽນ ຫຼື ມູນຄ່າຂອງຊັບສິນທີ່ກ່ຽວຂ້ອງ ແລະ ຊັບສິນທີ່ມີມູນຄ່າທຽບເທົ່າ ກັບການເຄື່ອນໄຫວດັ່ງກ່າວ;
2. ທຶນ ທີ່ນຳໃຊ້ ຫຼື ຈະນຳໃຊ້ເຂົ້າໃນການກະທຳຜິດດັ່ງກ່າວ;
3. ທຶນ ແລະ ຜົນປະໂຫຍດອື່ນ ທີ່ເປັນລາຍໄດ້ຈາກທຶນ ຂອງການກໍ່ອາຊະຍາກຳ;
4. ເຄື່ອງມືທາງດ້ານການເງິນທີ່ກ່ຽວຂ້ອງກັບການກະທຳຜິດ;
5. ທຶນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫາ 4 ທີ່ໄດ້ມອບ ຫຼື ໂອນກຳມະສິດໃຫ້ບຸກຄົນໃດໜຶ່ງ ຫຼື ບຸກ ຄົນທີສາມ ແລ້ວ.

ການນຳໃຊ້ມາດຕະການ ຍຶດ ຫຼື ອາຍັດຊັບນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າ ດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ ພ້ອມທັງຮັບປະກັນສິດ ແລະ ຜົນ

ປະໂຫຍດອັນຊອບທຳຂອງບຸກຄົນທີສາມ ແລະ ບໍ່ໃຫ້ມີຜົນສະທ້ອນເຖິງການເຄື່ອນໄຫວຢ່າງເປັນປົກກະຕິຂອງລະບົບການເງິນ-ເງິນຕາ. ສຳລັບຕົວປ່ຽນກາງອື່ນ ດັ່ງຄະນະຮັບຜິດຊອບປະເມີນໄດ້ອະທິບາຍຜົນການວິເຄາະ ໄວ້ໃນບັນດາຕົວປ່ຽນກາງທີ່ກ່າວມາຂ້າງເທິງ.

ຢ່າງໃດກໍ່ຕາມ, ເນື່ອງຈາກວ່າມີຂີດຈຳກັດ ໃນດ້ານຄຸນນະພາບຂອງການສຶບສວນ-ສອບສວນ, ການສັ່ງຟ້ອງ ແລະ ການຕັດສິນ ຫຼື ພິຈາລະນາ ຄະດີຟອກເງິນ ດັ່ງທີ່ໄດ້ອະທິບາຍຜົນການວິເຄາະໄວ້ໃນຕົວປ່ຽນກາງໃນຂໍ້ 3.3.6, 3.3.7 ແລະ 3.3.8 ຂ້າງເທິງ ຊຶ່ງເປັນສ່ວນໜຶ່ງທີ່ເຮັດໃຫ້ຄຸນນະພາບຂອງການ ຍຶດ, ອາຍັດ ແລະ ອິບ ຊັບສິນ ທີ່ຕິດພັນກັບການຟອກເງິນ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

### 3.3.10. ຄວາມບອບບາງຂອງ ຂະແໜງການ

ຄວາມບອບບາງຂອງ ຂະແໜງການ ແມ່ນຢູ່ໃນ ລະດັບ **<u>ກາງ-ສູງ</u>** ເນື່ອງຈາກການທົບທວນ ແລະ ປະເມີນຄືນ ຄວາມສ່ຽງແຫ່ງຊາດ ໃນຄັ້ງທີ່ II ຂອງ ສປປ ລາວ ແມ່ນໄດ້ດຳເນີນການປະເມີນຄວາມບອບບາງຂອງແຕ່ລະຂະແໜງການຂອງເສດຖະກິດ ຕໍ່ການກະທຳຜິດດ້ານການຟອກເງິນ ໂດຍປະກອບມີ **05** ຂະແໜງການ ຄື: 1). ຂະແໜງການກາຊີໂນ ແມ່ນມີຄວາມສ່ຽງຢູ່ໃນລະດັບ **<u>ສູງ</u>**; 2). ຂະແໜງການທະນາຄານ ແມ່ນມີຄວາມສ່ຽງຢູ່ໃນລະດັບ **<u>ກາງ-ສູງ</u>**; 3). ຂະແໜງການອະສັງຫາລິມະຊັບ ແມ່ນມີຄວາມສ່ຽງຢູ່ໃນລະດັບ **<u>ກາງ-ສູງ</u>**; 4). ຂະແໜງການຊັບສິນເໝືອນຈິງ ແມ່ນມີຄວາມສ່ຽງຢູ່ໃນລະດັບ **<u>ກາງ</u>** ແລະ 5). ຂະແໜງການນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ແມ່ນມີຄວາມສ່ຽງຢູ່ໃນລະດັບ **<u>ກາງ-ຕ່ຳ</u>** ຊຶ່ງລາຍລະອຽດຜົນຂອງການປະເມີນ ແຕ່ລະໂມດູນ ສະຫຼຸບໄວ້ ຂໍ້ **6.1, 6.2, 6.3, VII, VIII** ຂອງບົດລາຍງານສະບັບນີ້.

### 3.3.11. ຄວາມສາມາດຕ້ານການຟອກເງິນໃນລະດັບຊາດ

ຄວາມສາມາດຕ້ານການຟອກເງິນໃນລະດັບຊາດ ແມ່ນຢູ່ໃນ ລະດັບ **<u>ກາງ</u>** ເນື່ອງຈາກວ່າ ສປປ ລາວ ມີ ນິຕິກຳ ທີ່ຮອບດ້ານ-ຄົບຖ້ວນ ສົມຄວນ, ສປປ ລາວ ເປັນໜຶ່ງໃນສະມາຊິກຂອງກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນປີ 2007 ຊຶ່ງລັດຖະບານຂອງ ສປປ ລາວ ໄດ້ໃຫ້ຄຳໝັ້ນສັນຍາຕໍ່ກັບການປະຕິບັດພັນທະໃນການເປັນປະເທດສະມາຊິກ ໂດຍສະເພາະການປະຕິບັດຕາມ ຂໍ້ແນະນຳ 40 ຂໍ້ ຂອງອົງການຕ້ານການຟອກເງິນສາກົນ ແລະ ຮັບການປະເມີນຜົນຮອບດ້ານ ເປັນແຕ່ລະໄລຍະ. ນອກຈາກນີ້, ຍັງມີການສ້າງ ແລະ ປັບປຸງ ນິຕິກຳພາຍຂອງຕົນ ໃຫ້ສອດຄ່ອງກັບຫຼັກການພາຍໃນ ແລະ ມາດຕະຖານສາກົນ ຈຳນວນຫຼາຍກວ່າ 50 ສະບັບ.

ລັດຖະບານຂອງ ສປປ ລາວ ເປັນຜູ້ຄຸ້ມຄອງວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ຄຕຟ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນຜູ້ປະສານງານກັບ ກະຊວງອົງການຈັດຕັ້ງ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ເພື່ອຄຸ້ມຄອງ ແລະ ຕິດຕາມວຽກງານດັ່ງກ່າວ ໂດຍມີ ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນກອງເລຂາ. ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ປະຕິບັດ ສິດ ແລະ ໜ້າທີ່ ຂອງຕົນຕາມກຳນົດໄວ້ໃນກົດໝາຍຕ້ານການຟອກເງິນ ເປັນຕົ້ນ: ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ, ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານດັ່ງກ່າວ ຂອງປະເທດ.

ມີນິຕິກຳທີ່ກຳນົດນິຍາມ, ການກະທຳ ແລະ ຮູບແບບ ຂອງການຟອກເງິນ ລວມເອົາຮູບແບບຟອກເງິນດ້ວຍຕົນເອງ ທີ່ຈະແຈ້ງສົມຄວນ ຊຶ່ງຖືກສ້າງເປັນກົດໝາຍສະເພາະ ຖືໄດ້ວ່າເປັນການກະທຳຜິດທີ່ແຍກອອກຕ່າງຫາກ ແລະ ເປັນກະທຳຜິດທີ່ເກີດຂຶ້ນຄູ່ຂະໜາດກັບການກະທຳຜິດຕົ້ນ ຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ (ມາດຕາ 9) ການຟອກເງິນ ແມ່ນການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ໂດຍ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ຊຶ່ງຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນ ມາຈາກການກໍ່ອາຊະຍາກຳ ຫຼື

ການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ເຊື່ອງອຳຄຸນລັກສະນະ, ທີ່ມາຂອງເງິນ ແລະ ທີ່ຕັ້ງຂອງຊັບສິນ ຊຶ່ງການກະທຳທີ່ເປັນການຟອກເງິນ ມີ ດັ່ງນີ້:

1. ການປ່ຽນຮູບ ຫຼື ການໂອນ ເງິນ ຫຼື ຊັບສິນອື່ນ ໂດຍມີຈຸດປະສົງ ປົກປິດ ເງິນ ຫຼື ຊັບສິນ ທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເຊື່ອງອຳພົນຈາກການກະທຳຜິດຕົ້ນ ຫຼື ໃຫ້ການຊ່ວຍເຫຼືອຜູ້ກະທຳຜິດຕົ້ນ ເພື່ອຫຼົບຫຼີກຄວາມຮັບຜິດຊອບຈາກການກະທຳຜິດ;
2. ການປົກປິດ ຫຼື ເຊື່ອງອຳ ແຫຼ່ງ, ສະຖານທີ່, ການໂອນ, ການຄອບຄອງ, ການເຄື່ອນຍ້າຍ ຫຼື ການເປັນເຈົ້າຂອງ ຫຼື ກຳມະສິດ ທີ່ແທ້ຈິງຂອງເງິນ ຫຼື ຊັບສິນນັ້ນ;
3. ການໄດ້ມາ, ການຄອບຄອງ, ການນຳໃຊ້ທຶນ ທີ່ມາຈາກການກະທຳຜິດຕົ້ນ ເຊັ່ນ ການໃຫ້ກູ້ຢືມ ເງິນ ຫຼື ຊັບສິນອື່ນ, ການນຳໃຊ້ ເງິນ ຫຼື ຊັບສິນນັ້ນ ເຂົ້າໃສ່ການລົງທຶນໂດຍກົງ;
4. ການກະທຳ ຫຼື ການຮ່ວມກັນກະທຳຜິດ ເປັນຕົ້ນ: ການເຂົ້າຮ່ວມວາງແຜນ, ຊ່ວຍເຫຼືອ, ປະຕິບັດ, ສົ່ງເສີມ, ອຳນວຍຄວາມສະດວກ ຫຼື ໃຫ້ຄຳປຶກສາ ລວມທັງຄວາມພະຍາຍາມກ່ຳການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ມາດຕານີ້.

- **<u>ສຳລັບຮູບແບບຂອງການຟອກເງິນ (ມາດຕາ 10)</u>:** ການຟອກເງິນ ມີສີ່ ຮູບແບບ ດັ່ງນີ້:
  1. ການຟອກເງິນດ້ວຍຕົນເອງ ຊຶ່ງແມ່ນ ການຟອກເງິນ ໂດຍບຸກຄົນ ຫຼື ນິຕິບຸກຄົນ ທີ່ກະທຳຜິດຕົ້ນ ແລະ ນຳເອົາຜົນຈາກການກະທຳຜິດຕົ້ນນັ້ນມາຟອກ;
  2. ການຟອກເງິນໂດຍບຸກຄົນທີສາມ ຊຶ່ງແມ່ນ ການຟອກເງິນ ໂດຍບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ທີ່ບໍ່ມີສ່ວນຮ່ວມກັບການກະທຳຜິດຕົ້ນ;
  3. ການຟອກເງິນໂດຍບໍ່ມີຄວາມຜິດຕົ້ນ ຊຶ່ງແມ່ນ ການຟອກເງິນ ໂດຍບໍ່ມີເຫດການ ຫຼື ຫຼັກຖານຢັ້ງຢືນ ກ່ຽວກັບການກະທຳຜິດຕົ້ນ;
  4. ການຟອກເງິນທີ່ມີການກະທຳຜິດຕົ້ນຢູ່ຕ່າງປະເທດ ຊຶ່ງແມ່ນ ການຟອກເງິນ ໂດຍມີການກະທຳຜິດຕົ້ນ ເກີດຂຶ້ນຢູ່ນອກດິນແດນຂອງ ສປປ ລາວ.

ພ້ອມດຽວກັນນີ້, ຍັງມີຫຼາຍຮູບການລົງໂທດທີ່ມີລັກສະນະຢັບຢັ້ງ ສຳລັບການກະທຳຜິດດ້ານການຟອກເງິນ ເປັນຕົ້ນ: ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ ຊຶ່ງມີນິຕິກຳສະເພາະກຳນົດຫຼັກການຂອງການນຳໃຊ້ ມາດຕະການທາງບໍລິຫານ ແລະ ມາດຕະການທາງອາຍາ.

ຢ່າງໃດກໍ່ຕາມ, ເນື່ອງຈາກວ່າມີຂີດຈຳກັດ ໃນດ້ານຄຸນນະພາບຂອງການສືບສວນ-ສອບສວນ, ການສັ່ງຟ້ອງ, ການຕັດສິນ ຫຼື ພິຈາລະນາ ແລະ ການຮິບຊັບສິດ ທີ່ກ່ຽວຂ້ອງກັບຄະດີຟອກເງິນ ດັ່ງທີ່ໄດ້ອະທິບາຍຜົນການວິເຄາະໄວ້ໃນຕົວປ່ຽນກາງໃນຂໍ້ 3.3.6, 3.3.7, 3.3.8 ແລະ 3.3.9 ຂ້າງເທິງ ຊຶ່ງເປັນສ່ວນໜຶ່ງທີ່ເຮັດໃຫ້ຄວາມສາມາດໃນການຕ້ານການຟອກເງິນຂອງປະເທດ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ເມື່ອທຽບກັບກອບນິຕິກຳທີ່ກ່ຽວຂ້ອງກຳນົດ.

### 3.4. ສະຫຼຸບຜົນການປະເມີນ

ຜ່ານການປະເມີນ, ເກັບກຳຂໍ້ມູນ, ບົດສຳພາດ ແລະ ການແລກປ່ຽນຂໍ້ມູນຂອງຄະນະຮັບຜິດຊອບ ແລະ ຄະນະທີ່ປະເມີນຂະແໜງການທີ່ກ່ຽວຂ້ອງ ເຫັນວ່າຄວາມບອບບາງຂອງ ສປປ ລາວ ຕໍ່ກັບການຕ້ານການຟອກເງິນ, ໂດຍການອີງໃສ່ 11 ຕົວປ່ຽນກາງ ຈາກ 22 ຕົວປ່ຽນຫຼັກ ຕາມທີ່ໄດ້ກຳນົດໃນຄູ່ມືປະເມີນຂອງທະນາຄານ ແລະ ຜົນການປະເມີນ 05 ຂະແໜງການຫົວໜ່ວຍທຸລະກິດ ທີ່ມີຄວາມບອບບາງຕໍ່ການຟອກເງິນ ຊຶ່ງສາມາດສະຫຼຸບໄດ້ 02 ດ້ານຄື: **1). ຄວາມບອບບາງຂອງລະບົບການຕ້ານການຟອກເງິນຂອງປະເທດ ຢູ່ໃນລະດັບ ກາງ-ສູງ** ແລະ **2). ຄວາມບອບບາງໃນການຕ້ານການຟອກເງິນໃນຂະແໜງການທັງໝົດຂອງປະເທດ ຢູ່ໃນລະດັບ ກາງ-ສູງ.** ເນື່ອງຈາກ ສປປ ລາວ ມີກົດ

ໝາຍ ແລະ ນິຕິກຳທີ່ເປັນເຄື່ອງມື ທີ່ຮັດກຸມພໍສົມຄວນ ແລະ ສອດຄ່ອງກັບມາດຕະຖານສາກົນ. ຢ່າງໃດກໍ່ຕາມ, ຍັງ ເຫັນວ່ານິຕິກຳ ແລະ ການບັງຄັບໃຊ້ກົນໄກການຈັດຕັ້ງປະຕິບັດວຽກງານຂອງບັນດາອົງການຈັດທີ່ກ່ຽວຂ້ອງ ແມ່ນຍັງບໍ່ ທັນ ເຂັ້ມງວດ ພຽງພໍ ແລະ ບໍ່ແທດເໝາະທັນກັບສະພາບການຕົວຈິງຂອງການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມ ໃນໄລຍະປັດຈຸບັນ. ນອກຈາກນີ້, ໃນດ້ານບຸກຄະລາກອນ, ງົບປະມານ, ວັດຖຸເຕັກນິກ ແລະ ລະບົບອີເລັກໂຕຣນິກ ຊຶ່ງຍັງບໍ່ທັນໄດ້ຮັບການສະໜອງ, ປັບປຸງ, ພັດທະນາ ຫຼື ສ້າງຂຶ້ນໃໝ່ ເທົ່າທີ່ຄວນ ເພື່ອຮອງຮັບການສ້າງ ລະບົບຕ້ານ ການຟອກເງິນຂອງປະເທດ ໃຫ້ມີຄວາມເຂັ້ມແຂງ, ສັກສິດ ແລະ ປະສິດທິຜົນ.

❖ **ຕາຕະລາງທີ 3.5: ສະຫຼຸບຜົນການປະເມີນຄວາມບອບບາງແຫ່ງຊາດ ຂອງ ສປປ ລາວ:**

| **ຜົນການປະເມີນ** | **ຄະແນນລະດັບ ຄວາມບອບບາງ** |
|---|---|
| **1.** ຄວາມໜ້າເຊື່ອຖືຂອງຂໍ້ມູນ/ບັນຊີການເງິນ | **ກາງ** |
| **2.** ຄຸນນະພາບຂອງໂຄງສ້າງການຊອກຮູ້ລູກຄ້າ | **ກາງ-ຕ່ຳ** |
| **3.** ຄວາມສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ຫຼັກຖານ ທີ່ໜ້າເຊື່ອຖື | **ກາງ** |
| **4.** ຄຸນນະພາບຂອງການ ກວດກາພາສີ ກຽວກັບ ເງິນສົດ ແລະ ເຄື່ອງມື ທີ່ຄ້າຍຄືກັນ | **ກາງ-ຕ່ຳ** |
| **5.** ຄຸນນະພາບຂອງການ ກວດກາຜ່ານແດນ ກຽວກັບເງິນສົດ ແລະ ເຄື່ອງມືທີ່ຄ້າຍຄືກັນ | **ກາງ-ຕ່ຳ** |
| **6.** ຄຸນນະພາບຂອງການ ສືບສວນ-ສອບສວນ ຄະດີອາຍາ | **ກາງ-ຕ່ຳ** |
| **7.** ຄຸນນະພາບຂອງການ ຍື່ນຟ້ອງຄະດີອາຍາ | **ກາງ-ຕ່ຳ** |
| **8.** ຄຸນນະພາບ ຂອງການຕັດສິນ ຫຼື ການພິຈາລະນາຄະດີ | **ກາງ-ຕ່ຳ** |
| **9.** ຄຸນນະພາບຂອງກອບນິຕິກຳການຮິບຊັບສິນ | **ກາງ** |
| **10.** ຄວາມບອບບາງຂອງຂະແໜງການ<br>1) ຂະແໜງການກາຊິໂນ: **ສູງ;**<br>2) ຂະແໜງການການທະນາຄານ: **ກາງ-ສູງ;**<br>3) ຂະແໜງການອະສັງຫາລິມະຊັບ: **ກາງ-ສູງ;**<br>4) ຂະແໜງການຊັບສິນເໝືອຈິງ: **ກາງ;**<br>5) ຂະແໜງການນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ: **ຕ່ຳ-ປານກາງ.** | **ກາງ-ສູງ** |
| **11.** ຄວາມສາມາດຕ້ານການຟອກເງິນໃນລະດັບຊາດ | **ກາງ** |
| **ສະຫຼຸບ:** ຄວາມບອບບາງລະດັບຊາດຕໍ່ການຟອກເງິນ | **ກາງ-ສູງ** |
| **ສະຫຼຸບ:** ຄວາມສາມາດຕ້ານການຟອກເງິນໃນລະດັບຊາດ ຂອງຂະແໜງການທັງໝົດ | **ກາງ-ສູງ** |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

# IV. ການປະເມີນຄວາມສ່ຽງ ອາຊະຍາກຳທາງດ້ານອາກອນ

## 4.1. ພາບລວມ

ລາຍຮັບສ່ວຍສາອາກອນເປັນລາຍຮັບຫຼັກທີ່ສຳຄັນໃນການປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ກໍ່ຄືປະເທດຊາດ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການປັບປຸງວຽກງານການຈັດເກັບລາຍຮັບສ່ວຍສາ ອາກອນຈຶ່ງເປັນວຽກງານທີ່ເປັນບຸລິມະສິດ ຂອງລັດຖະບານ ກໍ່ຄື ກະຊວງການເງິນທີ່ຈະຕ້ອງໄດ້ເອົາໃຈໃສ່ ໃນການ ປັບປຸງການຄຸ້ມຄອງເກັບລາຍຮັບໃຫ້ເຕີບໃຫຍ່, ເຂັ້ມແຂງ ແນໃສ່ຮັບປະກັນການເກັບລາຍຮັບສ່ວຍສາອາກອນໃຫ້ ບັນລຸໄດ້ຕາມຄາດໝາຍ ໃນຂອບເຂດທົ່ວປະເທດ.

ຈຸດປະສົງຫຼັກຂອງການປະເມີນຄວາມສ່ຽງ ອາຊະຍາກຳທາງດ້ານອາກອນ ເພື່ອລະບຸ, ວິເຄາະ, ປະເມີນ ແລະ ຫຼຸດຜ່ອນຄວາມສ່ຽງຂອງການລະເມີດລະບຽບທາງດ້ານອາກອນ, ການກໍ່ອາຊະຍາກຳທາງດ້ານອາກອນ ແລະ ການຟອກ

ເງິນ ຊຶ່ງຈະປະກອບມີ: 1) ໄພຂົ່ມຂູ່ ອາຊະຍາກຳທາງດ້ານອາກອນ ເພື່ອກຳນົດໄພຄຸກຄາມດ້ານການລະເມີດລະບຽບອາກອນ, 2) ໄພຂົ່ມຂູ່ ການຟອກເງິນຜ່ານອາຊະຍາກຳທາງດ້ານອາກອນ ແລະ 3) ຄວາມບອບບາງດ້ານນິຕິກຳ ແລະ ກົນໄກການຈັດຕັ້ງປະຕິບັດ, ແລະ ມາດຕະການສະກັດກັ້ນບັນຫາດັ່ງກ່າວ. ທັງນີ້, ກໍ່ເພື່ອໃຫ້ກຳນົດໄດ້ໄພຄຸກຄາມທາງອາຊະຍາກຳທາງດ້ານອາກອນ ແລະ ການຟອກເງິນ ແລະ ສ້າງຄວາມເຂົ້າໃຈກ່ຽວກັບໄພຄຸກຄາມເຫຼົ່ານັ້ນ, ໂດຍສະເພາະແມ່ນຂົງເຂດຂອງການລະເມີດລະບຽບທາງອາກອນ, ທ່າອ່ຽງຂອງການລະເມີດທາງອາກອນ ທີ່ເປັນໄພຂົ່ມຂູ່ບູລິມະສິດ ແລະ ຄວາມສ່ຽງນຳໄປສູ່ການຟອກເງິນ, ຜົນທີ່ໄດ້ຮັບດັ່ງກ່າວສາມາດເປັນຂໍ້ມູນຕໍ່ກັບການກຳນົດນະໂຍບາຍ ແລະ ການປັບປຸງແກ້ໄຂຂໍ້ມູນພາຍໃນປະເທດໄດ້ເປັນຢ່າງດີ.

### 4.2. ການດຳເນີນການປະເມີນຄວາມສ່ຽງ

ຫຼັກການປະເມີນຕົວຈິງຂອງອາຊະຍາກຳທາງດ້ານອາກອນ ແມ່ນອີງຕາມຂັ້ນຕອນ ແລະ ກົນໄກຄູ່ມືການປະເມີນຄວາມສ່ຽງ ຂອງອົງການຕ້ານການຟອກເງິນສາກົນ ໂດຍນຳໃຊ້ເຄື່ອງມືໃນການປະເມີນອາຊະຍາກຳທາງດ້ານອາກອນ ທີ່ທະນາຄານໂລກພັດທະນາຂຶ້ນ, ຊຶ່ງໄດ້ມີການພິຈາລະນາ ແລະ ວິເຄາະຢ່າງຖີ່ຖ້ວນຂອງອະນຸກຳມະການຕໍ່ກັບຂໍ້ມູນທີ່ສາມາດເກັບກຳໄດ້ຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນ: ກໍລະນີ, ຄະດີ ຫຼື ພຶດຕິກຳທີ່ເກີດຂຶ້ນຕົວຈິງ ແລ້ວນຳມາສຶມທຽບໃສ່ຄວາມອາດສາມາດໃນການສະກັດກັ້ນບັນຫາດັ່ງກ່າວກໍ່ຄືບັນດານິຕິກຳທີ່ມີຢູ່. ນອກຈາກນີ້, ຍັງໄດ້ພິຈາລະນາກ່ຽວກັບທ່າອ່ຽງ ແລະ ອົງປະກອບອື່ນໆ ທີ່ອາດເກີດຂຶ້ນໃນອານາຄົດວ່າມີຄວາມເປັນໄປໄດ້ຫຼາຍໜ້ອຍຊ້ຳໃດ ໂດຍການພິຈາລະນາຈາກ ຂໍ້ມູນການຈັດຕັ້ງປະຕິບັດຕົວຈິງ, ຕົວເລກການປະຕິບັດພັນທະການເກັບລາຍຮັບສ່ວຍສາອາກອນ ໃນໄລຍະປີ 2018-2022, ການແລກປ່ຽນຂໍ້ມູນຂ່າວສານ ພາຍໃນ ແລະ ພາຍນອກ, ບັນດາແຫຼ່ງຂໍ້ມູນເປີດ ເພື່ອຊ່ວຍໃຫ້ຜົນການປະເມີນມີຄວາມໜ້າເຊື່ອຖື ແລະ ສອດຄ່ອງກັບຄວາມສ່ຽງຕົວຈິງ.

- ❖ ໃນການປະເມີນດ້ານໄພຂົ່ມຂູ່ ແມ່ນໄດ້ພິຈາລະນາຂໍ້ມູນຂະໜາດຂອງ ສັດສ່ວນຂອງ 04 ປະເພດອາກອນ:
  1) ອາກອນລາຍໄດ້ບຸກຄົນ;
  2) ອາກອນກຳໄລ;
  3) ອາກອນມູນຄ່າເພີ່ມ;
  4) ອາກອນເງິນເດືອນ.
- ❖ ໃນການປະເມີນຄວາມບອບບາງທາງດ້ານນິຕິກຳ ແລະ ກົນໄກ ຈະເກັບຂໍ້ມູນຈາກນິຕິກຳ, ຕົວເລກການຝຶກອົບຮົມ ແລະ ສະຖິຕິການບໍ່ປະຕິບັດຕາມລະບຽບ, ເພື່ອປະເມີນຄວາມບອບບາງ ດ້ານຫຼັກການ ແລະ ກົນໄກການຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນ ໂດຍແຍກອອກເປັນ 09 ຂົງເຂດຄື:

1) ຄວາມບອບບາງດ້ານການບໍ່ຂຶ້ນທະບຽນ;
2) ຄວາມບອບບາງດ້ານການເກັບຮັກສາລຶງບັນຊີທີ່ບໍ່ຖືກຕ້ອງ;
3) ຄວາມບອບບາງດ້ານການຕົວະປອມແປງ ແລະ ການກົດຂວາງ;
4) ຄວາມບອບບາງດ້ານການບໍ່ແຈ້ງ;
5) ຄວາມບອບບາງດ້ານການແຈ້ງບໍ່ຖືກຕ້ອງ;
6) ຄວາມບອບບາງດ້ານການບໍ່ຊຳລະ;
7) ຄວາມບອບບາງດ້ານການໂອນລາຄາ;
8) ຄວາມບອບບາງດ້ານແຜນການສໍ້ໂກງ;
9) ຄວາມບອບບາງດ້ານແຜນການເອົາອອກນອກປະເທດ.

ໃນການປະເມີນຄວາມບອບບາງ ຈະເກັບຂໍ້ມູນຈາກນິຕິກຳ ແລະ ຕົວເລກການຝຶກອົບຮົມ, ການດຳເນີນມາດຕະການ, ຊຶ່ງມີທັງໝົດ 18 ປັດໄຈ[1] ຂອງເຣດ້າການປະຕິບັດງານໄຂວ່.

[1] 1) ການເກັບອາກອນທີ່ຢູ່ອາໃສ (Residence Taxation), 2) ການເກັບອາກອນຕາມແຫລ່ງທີ່ມີ (Source Taxation), 3) ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs Small & Medium-sized Enterprises), 4) ວິສາຫະກິດຂ້າມຊາດ (MNEs Multinational Enterprises), 5) ບຸກຄົນທີ່ປະກອບອາຊີບອິດສະຫລະ (Self-Employed Individuals), 6) ບຸກຄົນທີ່ມີລາຍໄດ້ສຸດທິສູງ (HNWI High-Net Worth Individuals), 7) ອາກອນລາຍໄດ້ສ່ວນ

### 4.3. ຜົນການປະເມີນ

ອີງໃສ່ສະພາບການຈັດຕັ້ງປະຕິບັດຕົວຈິງ ຂອງ ສປປ ລາວ ມີ 3 ດ້ານ: 1) ການປະເມີນໄພຂົ່ມຂູ່ ອາຊະຍາກຳ ທາງດ້ານອາກອນ, 2) ການປະເມີນໄພຂົ່ມຂູ່ ການຟອກເງິນ ຜ່ານອາຊະຍາກຳທາງດ້ານອາກອນ ແລະ 3) ການປະເມີນ ຄວາມບອບບາງ, ຊຶ່ງຜົນການປະເມີນສາມາດສັງລວມດັ່ງນີ້:

#### 4.3.1. ການປະເມີນໄພຂົ່ມຂູ່ ອາຊະຍາກຳທາງດ້ານອາກອນ

ໃນການປະເມີນ ແມ່ນໄດ້ພິຈາລະນາຂໍ້ມູນຂະໜາດຂອງ ສັດສ່ວນຂອງ 04 ປະເພດອາກອນ: 1) ອາກອນລາຍ ໄດ້ບຸກຄົນ; 2) ອາກອນກຳໄລ; 3) ອາກອນມູນຄ່າເພີ່ມ ແລະ 4) ອາກອນເງິນເດືອນ ທຽບໃສ່ລາຍໄດ້ທັງໝົດ ແລະ ທຽບໃສ່ຂໍ້ມູນຕົວເລກຕົວຈິງ ເປັນຕົ້ນແມ່ນ: ຈຳນວນການປະຕິບັດການດຳເນີນຄະດີ ແລະ ມາດຕະການລົງໂທດ, ການ ແລກປ່ຽນຂໍ້ມູນກັບຂະແໜງການກ່ຽວຂ້ອງ ແລະ ປະເທດທີ່ມີສົນທິສັນຍາອາກອນຊ້ຳຊ້ອນ, ໂດຍສະເພາະປະເທດ ທີ່ມີຊາຍແດນກັບ ສປປ ລາວ (ຕໍ່ໄປນີ້ເອີ້ນວ່າ "ຄວາມສ່ຽງທີ່ຮູ້, ບັນດາແຫຼ່ງຂໍ້ມູນເປີດທີ່ໜ້າເຊື່ອຖື ທັງຂໍ້ມູນຈຳນວນ ຄັ້ງຂອງການລະເມີດລະບຽບອາກອນ (ເຫດການ) ແລະ ມູນຄ່າຂອງການລະເມີດ (ຊັບສິນ) ແລະ ດຸນພິນິດ ຂອງ ຊ່ຽວຊານ/ເຈົ້າໜ້າທີ່ອາກອນ (ຕໍ່ໄປນີ້ເອີ້ນວ່າ "ຄວາມສ່ຽງທີ່ຮັບຮູ້).

***<u>ໝາຍເຫດ</u>:*** *ການປະເມີນໄພຂົ່ມຂູ່ດ້ານອາຊະຍາກຳອາກອນຄັ້ງນີ້ ຢູ່ໃນປະເພດ ອາກອນລາຍໄດ້ສ່ວນບຸກຄົນ ຈະກວມ ເອົາ ອາກອນເງິນເດືອນແລ້ວ, ເນື່ອງຈາກ ລະບົບໃນການເກັບກຳ ແລະ ລາຍງານປະເພດອາກອນ ຂອງ ສປປ ລາວ ບໍ່ ໄດ້ແຍກປະເພດອາກອນເງິນເດືອນສະເພາະ, ຊຶ່ງໄດ້ອາກອນລາຍໄດ້ສ່ວນບຸກຄົນ ໄດ້ກວມເອົາອາກອນເງິນເດືອນແລ້ວ.*

#### 1) ໄພຂົ່ມຂູ່ອາກອນລາຍໄດ້ສ່ວນບຸກຄົນ

ຈາກຜົນການປະເມີນສະແດງໃຫ້ເຫັນວ່າ ການລະເມີດທາງດ້ານການປະຕິບັດພັນທະອາກອນລາຍໄດ້ຂອງ ບຸກຄົນ ມີຄວາມສ່ຽງທີ່ຮູ້ ຢູ່ໃນລະດັບຕ່ຳຫຼາຍ ໂດຍອີງໃສ່ຂໍ້ມູນຕົວເລກຕົວຈິງ ໃນສະຖິຕິການປະຕິບັດການດຳເນີນ ຄະດີ ແລະ ມາດຕະການລົງໂທດ ທີ່ຕິດພັນກັບອາກອນລາຍໄດ້ ເຫັນວ່າຢູ່ໃນລະດັບ **<u>ຕ່ຳຫຼາຍ</u>.** ເຖິງຢ່າງໃດກໍ່ຕາມ, ດ້ານ ຄວາມສ່ຽງທີ່ຮັບຮູ້ (Perceived) ຕົວຈິງ ສະແດງໃຫ້ເຫັນວ່າ ການລະເມີດທາງດ້ານການປະຕິບັດພັນທະອາກອນລາຍ ໄດ້ຂອງບຸກຄົນ ຢູ່ໃນລະດັບ **<u>ຕ່ຳ</u>** ຖ້າທຽບໃສ່ ຄວາມສ່ຽງທີ່ຮູ້ ແມ່ນຢູ່ລະດັບທີ່ສູງກວ່າ ເນື່ອງຈາກວ່າ ການຈັດຕັ້ງ ປະຕິບັດຕົວຈິງຂອງເຈົ້າໜ້າທີ່ອາກອນ ເຫັນວ່າມີປັດໄຈພາຍນອກອື່ນ ເປັນຕົ້ນແມ່ນ: ເຖິງວ່າກົດໝາຍຈະໄດ້ກຳນົດໃຫ້ ບຸກຄົນທີ່ມີລາຍໄດ້ ຕ້ອງໄດ້ແຈ້ງລາຍຮັບປະຈຳປີ ຕາມກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67 ລົງວັນທີ 18 ມິຖຸນາ 2019, ມາດຕາ 51 ການໄລ່ລຽງອາກອນປະຈຳປີ. ແຕ່ພາກປະຕິບັດຕົວຈິງເຫັນວ່າ ບຸກຄົນທົ່ວໄປຍັງບໍ່ໄດ້ ປະຕິບັດເປັນຮູບປະທຳ, ເນື່ອງຈາກການຂໍເລກປະຈຳຕົວເສຍອາກອນ (PTIN) ຫາກໍເລີ່ມປະຕິບັດໃນປີ 2022 ຊຶ່ງການ ເຜີຍແຜ່ນຳໃຊ້ PTIN ຍັງບໍ່ທັນທົ່ວເຖິງ ແລະ ການຂໍຕົວເລກຜູ້ເສຍອາກອນ ບໍ່ຫຼາຍ ທຽບໃສ່ຈຳນວນປະຊາກອນຕົວ ຈິງ. ນອກຈາກນີ້ ຄວາມສ່ຽງທີ່ຮູ້ ຢູ່ໃນລະດັບຕ່ຳຫຼາຍ ເພາະສະຖິຕິຕົວເລກການລະເມີດອາກອນລາຍໄດ້ມີໜ້ອຍ (ຊຶ່ງຕົວເລກດັ່ງກ່າວແມ່ນລົງເລິກສະເພາະອາກອນລາຍໄດ້ຈາກເງິນເດືອນ) ສາເຫດເນື່ອງຈາກ ໃນກົດໝາຍອາກອນ ລາຍໄດ້ເງິນເດືອນ ຂອງບຸກຄົນທົ່ວໄປ ແມ່ນນິຕິບຸກຄົນ ແມ່ນໄດ້ເຮັດໜ້າທີ່ໃນການຄິດໄລ່ເກັບ ແລະ ແຈ້ງ-ມອບ ເຮັດໃຫ້ຜົນສະແດງຄວາມສ່ຽງທີ່ຮູ້ ຢູ່ໃນລະດັບ **<u>ຕ່ຳຫຼາຍ.</u>**

---

ບຸກຄົນ (Personal Income Tax), 8) ອາກອນລາຍໄດ້ຂອງບໍລິສັດ (Corporate Income Tax), 9) ອາກອນເງິນເດືອນ (Payroll Tax), 10) ອາກອນ ການຊົມໃຊ້ (Consumption Taxes), 11) ອາກອນຫັກຢູ່ບ່ອນຈ່າຍ (Withholding Tax), 12) ການຄວບຄຸມ ແລະ ການຕິດຕາມ (Control and Monitoring), 13) ຂ່າວກອງ ແລະ ຄວາມສ່ຽງ (Intelligence and Risk), 14) ການກວດສອບບັນຊີ ແລະ ການສືບສວນສອບສວນ (Audit and Investigation), 15) ການບັງຄັບໃຊ້ກົດໝາຍ ແລະ ໂທດ (Enforcement and Penalties), 16) ການແລກປ່ຽນຂໍ້ມູນ (Exchange of Information), 17) ການຮ່ວມມືລະຫວ່າງໜ່ວຍງານ (Inter-Agency Cooperation) ແລະ 18) ການຫັນເປັນອັດຕະໂນມັດ (Automation).

**2) ໄພຂົ່ມຂູ່ອາກອນກຳໄລ**

ຈາກຜົນການປະເມີນສະແດງໃຫ້ເຫັນວ່າ ການລະເມີດທາງດ້ານການປະຕິບັດພັນທະອາກອນກຳໄລ ມີຄວາມສ່ຽງທີ່ຮູ້ ຢູ່ໃນລະດັບ**ຕ່ຳ** ໂດຍອີງໃສ່ຂໍ້ມູນຕົວເລກຕົວຈິງ ໃນສະຖິຕິການປະຕິບັດການດຳເນີນຄະດີ ແລະ ມາດຕະການລົງໂທດ ທີ່ຕິດພັນກັບອາກອນກຳໄລ ເຫັນວ່າຢູ່ໃນລະດັບຕ່ຳ. ເຖິງຢ່າງໃດກໍ່ຕາມ, ດ້ານຄວາມສ່ຽງທີ່ຮັບຮູ້ ຕົວຈິງ ສະແດງໃຫ້ເຫັນວ່າ ການລະເມີດທາງດ້ານການປະຕິບັດພັນທະອາກອນກຳໄລ ຢູ່ໃນລະດັບ **ກາງ-ຕ່ຳ** ຖ້າທຽບໃສ່ ຄວາມສ່ຽງທີ່ຮູ້, ເນື່ອງຈາກຍັງບໍ່ມີນິຕິກຳທີ່ເປັນເຄື່ອງມືໃນການຄຸ້ມຄອງກຸ່ມທຸລະກິດ ຂະໜາດໃຫຍ່ (Multinational enterprises "MNEs") ເປັນຕົ້ນແມ່ນ ການໂອນລາຄາ (Transfer Pricing "TP"), ການປະເມີນຕົວຊີ້ວັດໃນການກວດກາ ເຖິງວ່າຈະມີເຄື່ອງມື ແລະ ນິຕິກຳ ທີ່ເປັນພື້ນຖານໃນການກວດກາ, ແຕ່ເນື່ອງຈາກວ່າເປັນເຄື່ອງມືໃໝ່ ມີຫລາຍດ້ານທີ່ເປັນສິ່ງທ້າທາຍ ເປັນຕົ້ນແມ່ນ: ທາງດ້ານຂໍ້ມູນພາຍໃນ ແລະ ຂໍ້ມູນກັບພາກສ່ວນພາຍນອກ ຍັງບໍ່ທັນຈອດກັນ, ດ້ານບຸກຄະລາກອນ ຍັງບໍ່ມີຄວາມເຂັ້ມແຂງ, ຄວາມເຂົ້າໃຈຂອງຜູ້ປະກອບການໃນການ ແຈ້ງຍັງບໍ່ຖືກຕ້ອງ. ນອກນີ້, ຄວາມສ່ຽງອື່ນທີ່ເຫັນໄດ້ກໍ່ຄື: ຂໍ້ມູນການນຳເຂົ້າ-ສົ່ງອອກ ເມື່ອທຽບລະຫວ່າງ ເອກະສານຕົວເລກ, ເອກະສານຂອງຜູ້ເສຍອາກອນ ແລະ ຂໍ້ມູນພາສີ ແມ່ນຈະມີຕົວເລກຜິດດ່ຽງ ຍັງບໍ່ກົງກັນ, ການແຈ້ງລາຄາສິນຄ້າ ເວລາມີການນຳເຂົ້າຍັງຕ່ຳ ທຽບໃສ່ລາຄາຕະຫຼາດໂລກ. ນອກນີ້, ການປະຕິບັດການແລກປ່ຽນຂໍ້ມູນ-ຂ່າວສານກັບບັນດາປະເທດທີ່ມີສົນທິສັນຍາແມ່ນບໍ່ຍັງເປັນຮູບປະທຳ, ການສະເໜີຂໍຂໍ້ມູນແມ່ນ On request ຍັງບໍ່ແມ່ນຮູບແບບອັດຕະໂນມັດ. ສົນທິສັນຍາອາກອນຊ້ຳຊ້ອນກັບບັນດາ ປະເທດ ຍັງມີຈຳນວນຈຳກັດ.

**3) ໄພຂົ່ມຂູ່ອາກອນມູນຄ່າເພີ່ມ**

ຈາກຜົນການປະເມີນຂ້າງເທິງ ສະແດງໃຫ້ເຫັນວ່າ ການລະເມີດທາງດ້ານການປະຕິບັດພັນທະອາກອນມູນຄ່າເພີ່ມ ມີຄວາມສ່ຽງທີ່ຮູ້ ຢູ່ໃນລະດັບ**ກາງ-ຕ່ຳ** ໂດຍອີງໃສ່ຂໍ້ມູນຕົວເລກຕົວຈິງ ໃນສະຖິຕິການປະຕິບັດການດຳເນີນຄະດີ ແລະ ມາດຕະການລົງໂທດ ທີ່ຕິດພັນກັບອາກອນມູນຄ່າເພີ່ມ ເຫັນວ່າຢູ່ໃນລະດັບ **ກາງ-ຕ່ຳ**. ເຖິງຢ່າງໃດກໍ່ຕາມ, ດ້ານຄວາມສ່ຽງທີ່ຮັບຮູ້ (Perceived) ຕົວຈິງ ສະແດງໃຫ້ເຫັນວ່າ ການລະເມີດທາງດ້ານການປະຕິບັດພັນທະອາກອນມູນຄ່າເພີ່ມ ຢູ່ໃນລະດັບ **ກາງ** ຖ້າທຽບໃສ່ ຄວາມສ່ຽງທີ່ຮູ້, ເນື່ອງຈາກ ການສົມທຽບໃສ່ຂໍ້ມູນທີ່ຮັບຮູ້ ຈາກແຫຼ່ງຂໍ້ມູນເປີດເຫັນວ່າມີຄວາມສ່ຽງລະດັບສູງ; ລະບົບການແລກປ່ຽນຂໍ້ມູນຂ່າວສານ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງຍັງຈຳກັດ; ກົດໝາຍອາກອນມູນຄ່າເພີ່ມ ຍັງເຫັນວ່າມີການຍົກເວັ້ນຫຼາຍ ຊຶ່ງເປັນຊ່ອງວ່າງ; ການນຳໃຊ້ໃບເກັບເງິນແບບເອເລັກໂຕຣນິກ ຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນວົງກວ້າງ (ຈຳນວນໜຶ່ງຍັງໃຊ້ແບບເຈ້ຍຢູ່); ຄວາມເຂົ້າໃຈຂອງຜູ້ປະກອບການ ໃນການແຈ້ງມອບອາກອນມູນຄ່າເພີ່ມ ຍັງບໍ່ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍກຳນົດ. ນອກຈາກນີ້, ຄວາມສ່ຽງອື່ນທີ່ເຫັນໄດ້ກໍ່ຄື: ການແຈ້ງລາຄາສິນຄ້າ ເວລາມີການນຳເຂົ້າຍັງຕ່ຳ ທຽບໃສ່ລາຄາຕະຫຼາດໂລກ, ການຂຽນໃບເກັບເງິນອາກອນມູນຄ່າເພີ່ມ ຍັງຕ່ຳ ບໍ່ສອດຄ່ອງກັບລາຄາຕົວຈິງ, ຂໍ້ມູນການນຳເຂົ້າ-ສົ່ງອອກ ເມື່ອທຽບລະຫວ່າງ ເອກະສານຕົວເລກ, ເອກະສານຂອງຜູ້ເສຍອາກອນ ແລະ ຂໍ້ມູນພາສີ ແມ່ນຈະມີຕົວເລກຜິດດ່ຽງ ຍັງບໍ່ກົງກັນ.

ສະຫຼຸບແລ້ວ ເຫັນວ່າ ອາກອນມູນຄ່າເພີ່ມ ເປັນອາກອນຫຼັກ ທີ່ປະກອບສ່ວນເຂົ້າໃນລາຍຮັບທັງໝົດ ໃນສັດສ່ວນ 49% ຂອງລາຍຮັບທັງໝົດ ຮອງລົງມາແມ່ນ ອາກອນກຳໄລ 33% ແລະ ອາກອນລາຍໄດ້ສ່ວນບຸກຄົນ 18%. ຜົນການປະເມີນຂ້າງເທິງ ເຫັນໄດ້ວ່າ ໄພຂົ່ມຂູ່ທາງດ້ານອາຊະຍາກຳທາງດ້ານສ່ວຍສາອາກອນ ແມ່ນອາກອນມູນຄ່າເພີ່ມ ຊຶ່ງເຫັນໄດ້ຄວາມສ່ຽງ ຢູ່ໃນລະດັບສູງກວ່າໝວດ (ລະດັບ ກາງ) ເມື່ອທຽບໃສ່ 03 ປະເພດອາກອນ.

### 4.3.2. ການປະເມີນໄພຂົ່ມຂູ່ ການຟອກເງິນຜ່ານອາຊະຍາກຳທາງດ້ານອາກອນ

ເຖິງແມ່ນວ່າ ໃນກອບກົດໝາຍໄດ້ກຳນົດມາດຕະການຕໍ່ການລະເມີດທາງດ້ານສ່ວຍສາອາກອນ ໃຫ້ປະຕິບັດລົງໂທດທາງອາຍາ ແຕ່ພາກປະຕິບັດຕົວຈິງ ແມ່ນໃຊ້ມາດຕະການທາງບໍລິຫານ ເປັນຕົ້ນ ການປັບໄໝ, ຢຸດຕິຊື່ອຄາວ ຊຶ່ງເຮັດໃຫ້ ບໍ່ມີຕົວເລກການດຳເນີນຄະດີທາງອາຍາ ແລະ ສະຖິຕິ ການກະທຳຜິດຕົ້ນຈາກ ການລະເມີດລະບຽບທາງອາກອນ ທີ່ກໍ່ໃຫ້ເກີດການຟອກເງິນ, ຈຶ່ງເຮັດໃຫ້ ສປປ ລາວ ບໍ່ສາມາດປະເມີນຄວາມສ່ຽງໄພຂົ່ມຂູ່ການຟອກເງິນຜ່ານອາຊະຍາກຳທາງດ້ານອາກອນ ດັ່ງກ່າວໄດ້.

### 4.3.3. ການປະເມີນຄວາມບອບບາງ

❖ <u>ນິຕິກຳທີ່ຕິດພັນ</u>

ສປປ ລາວ ໄດ້ມີນິຕິກຳໃນການປ້ອງກັນ ອາຊະຍາກຳທາງດ້ານອາກອນ ທີ່ເປັນການຕ້ານການລະເມີດລະບຽບນິຕິກຳ ແລະ ການຟອກເງິນ ທີ່ສອດຄ່ອງກັບມາດຕະຖານສາກົນ ຈຳນວນຫຼາຍກວ່າ 10 ສະບັບ, ດັ່ງລາຍລະອຽດລຸ່ມນີ້:

1. ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;
2. ກົດໝາຍ ວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
3. ກົດໝາຍ ວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
4. ກົດໝາຍ ວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;
5. ກົດໝາຍ ວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019;
6. ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
7. ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021;
8. ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍອາກອນລາຍໄດ້ ສະບັບເລກທີ 0819/ກງ, ລົງວັນທີ 10 ກຸມພາ 2021;
9. ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ ສະບັບເລກທີ 1939/ກງ, ລົງວັນທີ 12 ເມສາ 2021;
10. ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍອາກອນຊົມໃຊ້ ສະບັບເລກທີ 0394/ກງ, ລົງວັນທີ 04 ກຸມພາ 2022.

ຜ່ານການໃຫ້ຄະແນນເຫັນວ່າ ການຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນ ໄດ້ມີນິຕິກຳທີ່ເປັນພື້ນຖານສອດຄ່ອງກັບມາດຕະຖານສາກົນ ທີ່ຮັດກຸມພໍສົມຄວນ, ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນ ສາມາດຈັດຕັ້ງປະຕິບັດໄດ້ດີລະດັບໜຶ່ງ, ຊຶ່ງສະແດງອອກຜົນການປະເມີນດ້ານຄວາມບອບບາງໄດ້ໃນລະດັບ **<u>ກາງ</u>** (ຄະແນນສະເລ່ຍ ສູງກວ່າລະດັບກາງ ຂຶ້ນໄປ).

- ❖ ການຮ່ວມມືປະສານງານລະຫວ່າງໜ່ວຍງານ ສະເລ່ຍ 9 ຂົງເຂດ ຢູ່ໃນລະດັບສູງຫຼາຍ, ຊຶ່ງຖືວ່າປະຕິບັດໄດ້ດີ ເນື່ອງຈາກການຮ້ອງຂໍການຮ່ວມມືໄດ້ກຳນົດໄວ້ໃນຂອບນິຕິກຳທີ່ເປັນອັນລວມ ແລະ ມີການແລກປ່ຽນຂໍ້ມູນຂ່າວສານ ຊຶ່ງກັນ ແລະ ກັນ ລະຫວ່າງໜ່ວຍງານພາຍໃນ ເພື່ອສະໜັບສະໜູນວຽກງານສ່ວຍສາອາກອນ. ເຖິງຢ່າງໃດກໍ່ດີ, ການແລກປ່ຽນແບບອັດຕະໂນມັດ ຍັງຈຳກັດ, ສາມາດປະຕິບັດໄດ້ສ່ວນໃດໜຶ່ງ ກັບບາງຂະແໜງການ ແລະ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ກັບສາກົນ.
- ❖ ຜົນການປະເມີນຄວາມບອບບາງດ້ານການໂອນລາຄາ (TP) ເຫັນວ່າ ປະຕິບັດບໍ່ໄດ້ດີ ເນື່ອງຈາກວ່າ ສປປ ລາວ ຍັງບໍ່ໄດ້ມີນິຕິກຳໃນການຄຸ້ມຄອງວຽກງານດັ່ງກ່າວ.
- ❖ ການບັງຄັບໃຊ້ກົດໝາຍ ແລະ ໂທດ ເຫັນວ່າ ມີກົນໄກໃນການປ້ອງກັນ ການນຳໃຊ້ກົດໝາຍ ແລະ ໂທດໄດ້ດີ (ໃນລະດັບກາງ) ເນື່ອງຈາກ ກອບກົດໝາຍໄດ້ກຳນົດມາດຕະການຕໍ່ການລະເມີດທາງດ້ານສ່ວຍສາອາກອນ ໃຫ້ປະຕິບັດລົງໂທດທາງອາຍາ, ເຖິງຢ່າງໃດກໍ່ຕາມ ສະຖິຕິການບໍ່ປະຕິບັດຕາມລະບຽບຂອງການໂອນລາຄາ

ແລະ ການແຈ້ງ ຕ່ຳ, ຊຶ່ງຖືວ່າຜູ້ເສຍອາກອນ ຍັງຈັດຕັ້ງປະຕິບັດບໍ່ໄດ້ດີ ອາດເນື່ອງຈາກວ່າ ຄວາມເຂົ້າໃຈຂອງ ຜູ້ເສຍອາກອນ, ການເຜີຍແຜ່ບໍ່ທົ່ວເຖິງ ແລະ ຄວາມຕ້ອງການເຊືອງອຳລາຍຮັບ. ນອກຈາກນີ້, ໃນພາກ ປະຕິບັດຕົວຈິງ ແມ່ນໃຊ້ມາດຕະການທາງບໍລິຫານ ເປັນຕົ້ນ ການປັບໄໝ, ຢຸດຕິຊົ່ວຄາວ ຊຶ່ງເຮັດໃຫ້ ບໍ່ມີຕົວ ເລກການດຳເນີນຄະດີທາງອາຍາ ແລະ ສະຖິຕິ ການກະທຳຜິດຕົ້ນຈາກ ການລະເມີດລະບຽບທາງອາກອນ.

- ອາກອນມູນຄ່າເພີ່ມ ເຫັນວ່າ ການຂຶ້ນທະບຽນຂອງ ນິຕິບຸກຄົນທີ່ມີລາຍຮັບເກີນ 400 ລ້ານກີບ ແມ່ນໄດ້ຂຶ້ນ ທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມໄດ້ຢ່າງຖືກຕ້ອງ (ລະດັບ 94.67%). ແຕ່ເຖິງຢ່າງໃດກໍຕາມ, ຜົນ ການວິເຄາະ ການແຈ້ງບໍ່ຖືກຕ້ອງ ຂອງການປະຕິບັດການແຈ້ງອາກອນມູນຄ່າເພີ່ມ ຢູ່ໃນລະດັບກາງ (60.72%) ຊຶ່ງສະແດງອອກໃຫ້ເຫັນວ່າ ເຖິງຈະມີການຂຶ້ນທະບຽນຫຼາຍ ແຕ່ການແຈ້ງອາກອນມູນຄ່າເພີ່ມບໍ່ ຖືກຕ້ອງ ມີການເຊືອງອຳທາງດ້ານລາຍຮັບ ເປັນຕົ້ນແມ່ນການແຈ້ງຕ່ຳກວ່າມູນຄ່າຕົວຈິງ, ແຈ້ງສູນ ແລະ ບໍ່ມາ ແຈ້ງ.
- ອາກອນກຳໄລ ເຫັນວ່າ ການຂຶ້ນທະບຽນຂອງ ນິຕິບຸກຄົນ ແມ່ນໄດ້ປະຕິບັດການຂຶ້ນທະບຽນໄດ້ ລະດັບ 100%. ແຕ່ເຖິງຢ່າງໃດກໍຕາມ, ຜົນການວິເຄາະ ການແຈ້ງບໍ່ຖືກຕ້ອງ ຂອງການປະຕິບັດການແຈ້ງອາກອນກຳ ໄລ ຢູ່ໃນລະດັບກາງ (60.72%) ຊຶ່ງສະແດງອອກໃຫ້ເຫັນວ່າ ເຖິງຈະມີການຂຶ້ນທະບຽນຫຼາຍ ແຕ່ຍັງມີການ ແຈ້ງອາກອນກຳໄລບໍ່ຖືກຕ້ອງ ມີການເຊືອງອຳທາງດ້ານລາຍຮັບ.
- ອາກອນລາຍໄດ້ສ່ວນບຸກຄົນ ເຫັນວ່າ ການຂຶ້ນທະບຽນອາກອນລາຍໄດ້ສ່ວນບຸກຄົນ ແມ່ນໄດ້ປະຕິບັດການ ຂຶ້ນທະບຽນໄດ້ ລະດັບ 50% ຖືວ່າ ຍັງບໍ່ໄດ້ດີເທົ່າທີ່ຄວນ. ແຕ່ການປະຕິບັດການ ການແຈ້ງບໍ່ຖືກ ປະຕິບັດໄດ້ ໃນລະດັບ 50%, ເນື່ອງຈາກມີການເຊືອງອຳລາຍໄດ້, ຂໍ້ມູນດ້ານລາຄາ ແລະ ລາຍໄດ້ ຍັງບໍ່ຖືກກັບລາຄາ ຕະຫຼາດ ແລະ ບໍ່ສອດຄ່ອງກັບລາຍໄດ້ທີ່ໄດ້ຮັບຕົວຈິງ.
- ອາກອນເງິນເດືອນ ເຫັນວ່າ ມີການຂຶ້ນທະບຽນໃນລະດັບ 100%. ແຕ່ເຖິງຢ່າງໃດກໍຕາມ, ຜົນການວິເຄາະ ການແຈ້ງບໍ່ຖືກຕ້ອງ ຂອງການປະຕິບັດການແຈ້ງອາກອນເງິນເດືອນ ຢູ່ໃນລະດັບກາງ (90%) ຊຶ່ງສະແດງ ອອກໃຫ້ເຫັນວ່າ ການປະຕິບັດອາກອນເງິນເດືອນ ສາມາດຈັດຕັ້ງປະຕິບັດໄດ້ດີ ບໍ່ມີຄວາມສ່ຽງ, ເນື່ອງຈາກ ໄດ້ມີການກຳນົດໃຫ້ຫົວໜ່ວຍທຸລະກິດເຮັດໜ້າທີ່ໃນການແຈ້ງ-ມອບ ອາກອນເງິນເດືອນ ຂອງພະນັກງານທີ່ ມີລາຍໄດ້ ຂຶ້ນກັບນິຕິບຸກຄົນດັ່ງກ່າວ ໃນແຕ່ລະເດືອນ.
- ສຳລັບການປະເມີນ ດ້ານການແລກປ່ຽນຂໍ້ມູນ ຈັດຕັ້ງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ ແລະ ບໍ່ມີຂໍ້ມູນມາຢັ້ງຢືນ (ຄະແນນສະເລ່ຍລວມ ຂອງ 9 ຂົງເຂດ ຢູ່ໃນລະດັບກາງ 0.51). ເຖິງວ່າ ສປປ ລາວ ຈະມີສົນທິສັນຍາຊ້ຳ ຊ້ອນໃນການແລກປ່ຽນຂໍ້ມູນກັບບັນດາ 14 ປະເທດ ຖືວ່າຕົວເລກສົນທິສັນຍາຍັງໜ້ອຍ ຂ້ອນຂ້າງຈຳກັດ, ຊຶ່ງໃນພາກປະຕິບັດຕົວຈິງໃນການແລກປ່ຽນຂໍ້ມູນຂ່າວສານ ໄດ້ມີການແລກປ່ຽນຂໍ້ມູນຂ່າວສານ ສະເພາະ ພຽງແຕ່ຜ່ານຊ່ອງທາງການຮ້ອງຂໍ (On request) ແມ່ນມີຈຳນວນ ໜ້ອຍຫຼາຍ.
- ການກວດສອບບັນຊີ ແລະ ການສືບສວນ-ສອບສວນ ເຫັນວ່າ ບໍ່ມີຂໍ້ມູນ, ເນື່ອງຈາກ ຂະແໜງສ່ວຍສາ ອາກອນບໍ່ໄດ້ເກັບກຳສະຖິຕິ ຈຳນວນການລະເມີດເປັນແຕ່ລະກໍລະນີທີ່ລະອຽດ, ນອກຈາກນີ້, ຈຳນວນການ ປະຕິບັດມາດຕະການລົງໂທດທາງອາຍາ ບໍ່ມີຈັກກໍລະນີໃນໄລຍະຜ່ານມາ, ເນື່ອງຈາກນຳໃຊ້ການມາດຕະການ ທາງດ້ານບໍລິຫານ (ປັບໄໝ). ສະນັ້ນ, ຈຶ່ງເຮັດໃຫ້ຜົນການວິເຄາະການກວດສອບບັນຊີ-ການສືບສວນສອບ ສວນ ຕ່ອງກາງນກວດກາຫຼັງການແຈ້ງ ບໍ່ມີສະແດງຜົນອອກມາໄດ້.

#### 4.3.4. ສະຫຼຸບການປະເມີນ

ຜ່ານການປະເມີນທັງສາມດ້ານ ເຫັນວ່າ ຜົນການປະເມີນຄວາມສ່ຽງ ແລະ ການລະເມີດລະບຽບທາງດ້ານ ອາກອນ, ການກໍ່ອາຊະຍາກຳທາງດ້ານອາກອນ ແລະ ການຟອກເງິນ ແມ່ນຢູ່ໃນລະດັບ **<u>ກາງ</u>,** ເນື່ອງຈາກເຫັນວ່າ ສປປ ລາວ ມີກົດໝາຍ ແລະ ນິຕິກຳທີ່ເປັນເຄື່ອງມືໃນການຈັດເກັບລາຍຮັບ ທີ່ຮັດກຸມຜ້ສົມຄວນ ແລະ ສອດຄ່ອງກັບ ມາດຕະຖານສາກົນ. ເຖິງຢ່າງໃດກໍ່ຕາມ ຍັງເຫັນວ່ານິຕິກຳຄຸ້ມຄອງໃນການຈັດເກັບພັນທະ (ເປັນຕົ້ນ: ການໂອນລາຄາ) ຍັງບໍ່ສາມາດປະຕິບັດໄດ້ດີເທົ່າທີ່ຄວນ, ຄວາມເຂົ້າໃຈຂອງຜູ້ເສຍອາກອນ ຕໍ່ການປະຕິບັດພັນທະອາກອນ ຍັງບໍ່ໄດ້ດີ, ການເຜີຍແຜ່ນິຕິກຳ ແລະ ກົນໄກການປະຕິບັດ ຍັງບໍ່ທົ່ວເຖິງ. ນອກຈາກນີ້, ໃນພາກປະຕິບັດຕົວຈິງ ແມ່ນໃຊ້ມາດ

ຕະການທາງບໍລິຫານ ເປັນຕົ້ນ ການປັບໄໝ, ຢຸດຕິຊົ່ວຄາວ ຊຶ່ງເຮັດໃຫ້ບໍ່ມີຕົວເລກການດຳເນີນຄະດີທາງອາຍາ ແລະ ສະຖິຕິ ການກະທຳຜິດຕົ້ນຈາກ ການລະເມີດລະບຽບທາງອາກອນ.

## V. ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

### 5.1. ພາບລວມ

ໃນການປະເມີນຄວາມສ່ຽງດ້ານການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໜຶ່ງໃນພຶດຕິກຳຂອງການກະຜິດຕົ້ນ ທີ່ອາດກໍ່ໃຫ້ເກີດຜົນຈາກການກະທຳຜິດ ເປັນ ເງິນ ຫຼື ຊັບສິນ ທີ່ໄດ້ມາໂດຍທາງກົງ ຫຼື ທາງອ້ອມ, ຊັບສິນທີ່ໄດ້ປ່ຽນຮູບ ຫຼື ປ່ຽນແປງ ທັງໝົດ ຫຼື ບາງສ່ວນ ເປັນຊັບສິນອື່ນ ທີ່ອາດຈະນຳເອົາໄປ ຫຼື ນຳເຂົ້າມາ ຝອກເງິນ ໂດຍອາໃສ ຫຼື ຜ່ານ ຂະບວນການ, ຊ່ອງຫວ່າງ, ຂັ້ນຕອນ ແລະ ພຶດຕິກຳການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງບຸກຄົນ ຫຼື ກຸ່ມຄົນ ທີ່ກະທຳຜິດ ຫຼື ລະເມີດລະບຽບກົດໝາຍ.

ຈຸດປະສົງ ຂອງການປະເມີນການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນເພື່ອລະບຸ, ປະເມີນ, ທຳຄວາມເຂົ້າໃຈ ແລະ ວາງວິທີທາງແກ້ໄຂ ຊຶ່ງການປະເມີນດັ່ງກ່າວນີ້ແມ່ນອີງໃສ່ຄວາມສ່ຽງ 02 ດ້ານ ຄື:

- ລະບຸໄພຂົ່ມຂູ່: ພຶດຕະກຳທາງດ້ານການກະທຳຜິດ ຕິດພັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ເປັນຕົ້ນຕໍ ທີ່ອາດກໍ່ໃຫ້ເກີດການຝອກເງິນຈາກພຶດຕິກຳດັ່ງກ່າວ;
- ປະເມີນຄວາມບອບບາງ ທາງດ້ານນິຕິກຳ ແລະ ກົນໄກໃນການຕ້ານ ສະກັດກັ້ນ ການກະທຳຜິດ ທີ່ຕິດພັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ສ້າງແຜນປະຕິບັດງານບູລິມະສິດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຄວບຄຸມການກະທຳຜິດ ທີ່ຕິດພັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫລຸດຜ່ອນຄວາມບອບບາງທາງດ້ານການຝອກເງິນ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### 5.2. ການດຳເນີນການປະເມີນ

ການປະເມີນດັ່ງກ່າວ ໄດ້ດຳເນີນໄປບົນພື້ນຖານ ການວິເຄາະ, ວິໄຈ ແລະ ປະເມີນ ຈາກຖານຂໍ້ມູນທີ່ມີຢູ່ ແລະ ສະຖິຕິທີ່ເກີດຂຶ້ນຕົວຈິງ ໄດ້ສັງລວມຂໍ້ມູນຈາກພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ ເພື່ອຊ່ວຍລະບຸຄວາມສ່ຽງ 02 ດ້ານ ຄື: 1). ດ້ານໄພຂົ່ມຂູ່ທີ່ອາດຈະກໍ່ໃຫ້ມີການຝອກເງິນ ແລະ 2). ດ້ານຄວາມບອບບາງຂອງລະບົບທີ່ຕ້ານ ສະກັດກັ້ນ ບັນຫາດັ່ງກ່າວ, ຊຶ່ງການປະເມີນແມ່ນໄດ້ຄຳນຶງເຖິງຄວາມສ່ຽງທີ່ອາດຈະເກີດຂຶ້ນພາຍໃນປະເທດ, ຈາກບັນດາປະເທດອ້ອມຂ້າງ ແລະ ໃນພາກພື້ນ.

ໃນນັ້ນໂດຍອີງຕາມແບບວິທີການປະເມີນ ປະກອບມີ 10 ພຶດຕິກຳ ທີ່ອາດຈະເປັນໄພຂົ່ມຂູ່ ຊຶ່ງປະກອບມີ 1). ການກະທຳຜິດກ່ຽວກັບການຄ້າສັດປ່າ; 2). ການກະທຳຜິດກ່ຽວກັບການປ່າໄມ້; 3). ການກະທຳຜິດກ່ຽວກັບການປະມົງ; 4). ການກະທຳຜິດກ່ຽວກັບສິ່ງເສດເຫລືອ/ມົນລະພິດ; 5). ການກະທຳຜິດກ່ຽວກັບການຈີກຄົ້ນ/ການຂຸດຄົ້ນບໍ່ແຮ່; 6). ການກະທຳຜິດກ່ຽວກັບການຂຸດຄົ້ນບໍ່ແຮ່; 7). ການກະທຳຜິດກ່ຽວກັບການຂໍໃບອະນຸຍາດເພື່ອການຂຸດເຈາະບໍ່ແຮ່; 8). ການກະທຳຜິດກ່ຽວກັບການຂຸດເຈາະ ແລະ ການຜະລິດ; 9). ການກະທຳຜິດກ່ຽວກັບການຄ້າ-ຂາຍແຮ່ທາດ ແລະ 10). ການກະທຳຜິດກ່ຽວກັບການເກັບລາຍຮັບແຮ່ທາດ.

ສຳລັບດ້ານຄວາມບອບບາງ ປະກອບມີ 14 ຕົວປ່ຽນກາງ ຈາກ 23 ຕົວປ່ຽນຫຼັກ ຄື: 1). ການເຂົ້າໃຈຄວາມສ່ຽງ, ການປະສານງານ, ແລະ ການເກັບກຳຂໍ້ມູນ; 2). ຄຳນິຍາມຂອງການລະເມີດ ແລະ ອາຊະຍາກຳ; 3). ໂທດທາງການປົກຄອງ ຫລື ທາງແພ່ງ; 4). ໂທດທາງອາຍາ; 5). ການກູ້ຄືນ ແລະ ການຈັດການຊັບສິນຂອງອາຊະຍາກຳ; 6). ການຄວບຄຸມການສໍ້ລາດບັງຫລວງ; 7). ການຮ່ວມມືພາຍໃນປະເທດ; 8). ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ; 9). ການຮ່ວມມືສາກົນ; 10). ການນຳໃຊ້ຜູ້ຊ່ຽວຊານ; 11). ຄວາມຮັບຮູ້ຂອງສາທາລະນະຊົນ ແລະ ການມີສ່ວນຮ່ວມຂອງພາກເອກະຊົນ; 12). ຄວາມອາດສາມາດຂອງເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ຢູ່ດ່ານຊາຍແດນ; 13). ສິ່ງຈູງໃຈ ແລະ

ການປົກປ້ອງສຳລັບການລາຍງານ; 14). ການນຳໃຊ້ຂໍ້ມູນຂ່າວສານທີ່ມີປະສິດທິພາບ; 15). ຄວາມອາດສາມາດຂອງເຈົ້າໜ້າທີ່; 16). ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ; 17). ຄວາມອາດສາມາດຂອງ ໜ່ວຍງານຂ່າວກອງທາງດ້ານການເງິນ; 18). ຄວາມອາດສາມາດຂອງໜ່ວຍງານບັງຄັບໃຊ້ກົດໝາຍອາຍາ; 19). ການປົກປ້ອງທາງດ້ານກົດໝາຍສຳລັບໄອຍະການ, ຜູ້ພິພາກສາ; 20). ເຈົ້າຂອງ ແລະ ຜູ້ອຳນວຍການຜົນປະໂຫຍດຂອງນິຕິບຸກຄົນ; 21). ການປົກປ້ອງທາງດ້ານກົດໝາຍສຳລັບໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ພາສີ; 22). ຄວາມອາດສາມາດຂອງໄອຍະການ ແລະ ຕຸລາການ; 23).ການຄຸ້ມຄອງລະບຽບການ, ການບໍລິຫານ ແລະ ຄວາມໂປ່ງໃສຂອງຂະແໜງການ.

ຮູບແບບ ແລະ ວິທີການປະເມີນ ແມ່ນແບ່ງອອກເປັນ 2 ແບບຟອມສອບຖາມ ຫຼື ແບບຟອມສັງລວມ ຄື: 1). ແບບຟອມສັງລວມດ້ານໄພຂົ່ມຂູ່ ຊຶ່ງສັງລວມເອົາຕົວເລກ ຫຼື ສະຖິຕິ (2018-2022) ກ່ຽວກັບການລົງໂທດທາງດ້ານ: ບໍລິຫານ (ປັບໃໝທາງປົກຄອງ), ການສືບສວນ-ສອບສວນ, ການສັ່ງຟ້ອງ, ການຕັດສິນ, ການປະຕິບັດຄຳຕັດສິນຂອງສານ, ການຍຶດ, ອາຍັດ, ຮິບຊັບ, ມູນຄ່າທັງໝົດ;  2). ແບບຟອມສອບຖາມດ້ານຄວາມບອບບາງ ຊຶ່ງແມ່ນການສອບຖາມ ຫຼື ສຳພາດຄວາມຮັບຮູ້, ຄວາມເຂົ້າໃຈ, ກົນໄກການປະຕິບັດຕົວຈິງ ແລະ ນິຕິກຳທີ່ມີກ່ຽວກັບລະບົບການຕ້ານບັນຫາດັ່ງກ່າວ. ໃນນັ້ນ, ໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບລົງເກັບກຳຂໍ້ມູນຕົວຈິງຢູ່ທ້ອງຖິ່ນ ລວມມີ 7 ແຂວງ (ຈຳປາສັກ, ສະຫວັນນະເຂດ, ຄຳມ່ວນ, ບໍລິຄຳໄຊ, ຊຽງຂວາງ, ຫຼວງນ້ຳທາ ແລະ ບໍ່ແກ້ວ). ອີກ 10 ແຂວງ ແມ່ນໄດ້ມີການສົ່ງແບບຟອມທັງ 02 ແບບຟອມໃຫ້ຂະແໜງການກ່ຽວຂ້ອງສັງລວມ ແລະ ປະກອບຂໍ້ມູນເຂົ້າ ແລ້ວສົ່ງກັບໃຫ້ຄະນະຮັບຜິດຊອບ ກໍ່ຄືກົມທີ່ກ່ຽວຂ້ອງຂອງແຕ່ລະກະຊວງທີ່ຕິດພັນ.

### 5.3. ຜົນການປະເມີນ

#### 5.3.1. ຜົນຂອງການປະເມີນໄພຂົ່ມຂູ່ ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**1) ການກະທຳຜິດກ່ຽວກັບສັດປ່າ**

ພຶດຕິກຳດັ່ງກ່າວແມ່ນການເຄື່ອນໄຫວໃນຮູບແບບຂອງການສ້າງເຄືອຄ່າຍຂ້າມຊາດທີ່ອາໄສດິນແດນຂອງ ສປປ ລາວເປັນທາງຜ່ານ ໃນການຂົນສົ່ງແບບຜິດກົດໝາຍໄປຍັງປະເທດປາຍທາງ ຫຼື ປະເທດທີ່ສາມ, ຊຶ່ງໃນໄລຍະເກັບກຳຂໍ້ມູນ ມີສະຖິຕິໃນການດຳເນີນຄະດີຕໍ່ກັບ ການກະທຳຜິດກ່ຽວກັບສັດປ່າ ຈຳນວນ 19 ຄະດີ ກວມເອົາ 31,66% ຂອງການກະທຳຜິດຕົ້ນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ມີມູນຄ່າຂອງຊັບສິນສະເລ່ຍປະມານ 5,696,800,000 ກີບ ຫຼື ທຽບເທົ່າ 259,476.73 ໂດລາສະຫະລັດ. ໃນເວລາດຽວກັນກໍ່ພົບເຫັນ ແລະ ນຳໃຊ້ມາດຕະການຕໍ່ກໍລະນີການລະເມີດລະບຽບທາງບໍລິຫານ ຈຳນວນ 446 ກໍລະນີ ແລະ ມີມູນຄ່າປັບໃໝ ຫຼື ການໃຊ້ແທນຄືນຄ່າເສຍຫາຍ ສະເລ່ຍປະມານ 8,237,500,000 ກີບ ຫຼື ທຽບເທົ່າ 375,177 ໂດລາສະຫະລັດ.

ສະພາບລວມຂອງການລະເມີດ ຫຼື ພຶດຕິກຳ ທີ່ຕິດພັນກັບການລ່າ, ຊື້-ຂາຍ, ຄອບຄອງ, ນຳເຂົ້າ-ສົ່ງອອກ ແລະ ການຂົນສົ່ງ ກ່ຽວກັບສັດປ່າ ຂອງ ສປປ ລາວ ໄດ້ລາຍງານກັບກອງເລຂາໄຊເຕັດສ໌ ຫຼື ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ຄື: 1). ການລ່າສັດ ແມ່ນເປັນລັກສະນະບໍ່ໄດ້ລ່າເປັນອາຊີບຫຼັກ ຫຼື ເປັນຂະບວນໃຫຍ່, ສ່ວນໃຫຍ່ເປັນການລ່າແບບພື້ນເມືອງ ເພື່ອຫາລ້ຽງຊີບຂອງຊາວບ້ານໃນທ້ອງຖິ່ນ ໂດຍມີບາງຄັ້ງເອົາມາວາງຂາຍຕາມທ້ອງຕະຫຼາດ ແລະ ບໍ່ສາມາດສັ່ງຊື້ໄດ້ຕາມຄວາມຕ້ອງການ ແລະ ອາຊີບຂອງປະຊາຊົນກໍ່ແມ່ນການປູກຝັງລ້ຽງສັດ ຖ້າມີເວລາວ່າງຈາກລະດູການທຳການຜະລິດ ກໍ່ເຂົ້າປ່າຫາສັດມາເປັນອາຫານບາງຄັ້ງຄາວ; 2). ຕໍ່ກັບການມີໄວ້ຄອບຄອງສັດປ່າປະເພດຫ້ວງຫ້າມ ໃນໄລຍະຜ່ານມາປະຊາຊົນລາວບໍ່ທັນເຂົ້າໃຈ ແລະ ຮັບຮູ້ລະບຽບກົດໝາຍຈຶ່ງໄດ້ນຳສັດດັ່ງກ່າວມາລ້ຽງເພື່ອຄວາມມັກ (ບໍ່ໄດ້ລ້ຽງເພື່ອຄ້າ-ຂາຍ) ພາຍຫຼັງມີການໂຄສະນາເຜີຍແຜ່ກົດໝາຍໃຫ້ປະຊາຊົນເຂົ້າໃຈ ແລະ ມີປະຊາຊົນຈຳນວນໜຶ່ງທີ່ມີສັດປ່າຢູ່ໃນການຄອບຄອງໄດ້ຕື່ນໂຕນຳສັດດັ່ງກ່າວມາມອບໃຫ້ເຈົ້າໜ້າທີ່ປ່າໄມ້ເພື່ອນຳໄປບຳບັດ ແລະ ປ່ອຍຄືນສູ່ທຳມະຊາດ ສ່ວນການນຳເຂົ້າ-ສົ່ງອອກ ສປປ ລາວ ແມ່ນບໍ່ທັນມີ ແຕ່ສ່ວນຫຼາຍແມ່ນເປັນການຂົນສົ່ງຜ່ານຊາຍແດນ. ດັ່ງນັ້ນ, ຜົນການປະເມີນໄພຂົ່ມຂູ່ການກະທຳຜິດດັ່ງກ່າວ ແມ່ນຈັດຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກພຶດຕິກຳດັ່ງກ່າວເຄື່ອນໄຫວໃນຮູບແບບລັກສະນະເຄືອຄ່າຍຂ້າມຊາດ ຊຶ່ງສາມາດປ່ຽນຈາກການກະທຳຜິດຕົ້ນເປັນເຄືອຄ່າຍຟອກເງິນລະຫວ່າງປະເທດ.

**2) ການກະທຳຜິດກ່ຽວກັບປ່າໄມ້**

ພຶດຕິກຳດັ່ງກ່າວແມ່ນການເຄື່ອນໄຫວໃນລັກສະນະເປັນຂະບວນການ ທີ່ຢູ່ໃນລະດັບທ້ອງຖິ່ນ ມີການລັກລອບຕັດ, ຂຸດຄົ້ນ, ຂົນສົ່ງ ແລະ ຊື້-ຂາຍ ແບບບໍ່ຖືກກົດໝາຍ ຈາກພື້ນທີ່ໜຶ່ງໄປຍັງພື້ນທີ່ໜຶ່ງ ທັງພາຍໃນ ແລະ ລະຫວ່າງປະເທດ (ບາງທ້ອງຖິ່ນ ທີ່ຕິດຊາຍ) ຊຶ່ງໃນໄລຍະເກັບກຳຂໍ້ມູນ ສະຖິຕິໃນການດຳເນີນຄະດີຕໍ່ກັບ ການກະທຳຜິດກ່ຽວກັບປ່າໄມ້ມີ 32 ຄະດີ ກວມເອົາ 53.33% ຂອງການກະທຳຜິດຕົ້ນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ມີມູນຄ່າຂອງຊັບສິນສະເລ່ຍຈຳນວນ 299,520,412,310 ກີບ ຫຼື ທຽບເທົ່າ 13,639,692.90 ໂດລາສະຫະລັດ. ໃນເວລາດຽວກັນກໍ່ພົບເຫັນ ແລະ ນຳໃຊ້ມາດຕະການຕໍ່ກໍລະນີການລະເມີດລະບຽບທາງບໍລິຫານຈຳນວນ 1493 ກໍລະນີ ແລະ ມີມູນຄ່າປັບໃໝ ຫຼື ການໃຊ້ແທນຄືນຄ່າເສຍຫາຍ ສະເລ່ຍປະມານ 7,465,000,000 ກີບ ຫຼື ທຽບເທົ່າ 339,935.88 ໂດລາສະຫະລັດ. ດັ່ງນັ້ນ, ຜົນການປະເມີນໄພຂົ່ມຂູ່ການກະທຳຜິດດັ່ງກ່າວ ແມ່ນຈັດຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກພຶດຕິກຳດັ່ງກ່າວເຄື່ອນໄຫວໃນຮູບແບບ ຫຼື ລັກສະນະຂະບວນການຢູ່ນຳທ້ອງຖິ່ນ ແລະ ລາຄາ ຫຼື ມູນຄ່າຂອງການຊື້ຂາຍ ໄມ້ຫຼາຍຊະນິດ ມີມູນຄ່າສູງ ຈຶ່ງອາດມີຄວາມສ່ຽງກໍ່ໃຫ້ເກີດການຟອກເງິນຈາກພຶດຕິກຳດັ່ງກ່າວ.

**3) ການກະທຳຜິດກ່ຽວກັບການປະມົງ**

ພຶດຕິກຳດັ່ງກ່າວແມ່ນການເຄື່ອນໄຫວໃນຮູບແບບລັກສະນະເປັນການຫາປາແບບພື້ນບ້ານ ແລະ ເປັນກຸ່ມຄົນສ່ວນໜ້ອຍຕາມແມ່ນ້ຳ ຫ້ວຍຮ່ອງຄອງບຶງ ຕາມແຕ່ລະທ້ອງຖິ່ນນັ້ນໆ ຜ່ານການເກັບກຳຂໍ້ມູນ ແມ່ນບໍ່ມີສະຖິຕິໃນການກະທຳຜິດດັ່ງກ່າວ. ດ້ວຍເຫດນີ້ຜົນການປະເມີນພຶດຕິກຳດັ່ງກ່າວ ຈຶ່ງມີຄວາມສ່ຽງໃນລະດັບ **<u>ຕ່ຳ</u>** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**4) ການກະທຳຜິດກ່ຽວກັບສິ່ງເສດເຫລືອ ແລະ ມົນລະພິດ**

ພຶດຕິກຳກ່ຽວກັບສິ່ງເສດເຫຼືອ/ມົນລະພິດທີ່ກວດພົບທັງໝົດໃນຂອບເຂດທົ່ວປະເທດ ຕາມຄຳຮ້ອງຟ້ອງຂອງປະຊາຊົນ ແລະ ການເກັບກຳສະຖິຕິ ຊຶ່ງຜ່ານການເກັບກຳຂໍ້ມູນ ແມ່ນບໍ່ພົບເຫັນການກະທຳຜິດທາງອາຍາ. ມີພຽງແຕ່ການລະເມີດລະບຽບທາງບໍລິຫານ ຈຳນວນທັງໝົດ 170 ກໍລະນີ ແລະ ມີມູນຄ່າປັບໃໝ ຫຼື ການໃຊ້ແທນຄືນຄ່າເສຍຫາຍ ສະເລ່ຍປະມານ 1,085,000,000 ກີບ ຫຼື ທຽບເທົ່າ 49,413.13 ໂດລາສະຫະລັດ. ແຕ່ເນື່ອງຈາກບັນຫາທີ່ເກີດຂຶ້ນເຫຼົ່ານັ້ນ ມີລັກສະນະທີ່ບໍ່ຮຸນແຮງ (ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດແມ່ນຮັບຮູ້, ຮັບຊາບຕໍ່ຜົນກະທົບທີ່ເກີດຂຶ້ນ, ຮັບຜິດຊອບຊົດເຊີຍຄືນສູ່ສະພາບເດີມ ແລະ ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ) ຈຶ່ງສາມາດແກ້ໄຂໂດຍການໄກ່ເກ່ຍຊຸກຍູ້ໃຫ້ເຈົ້າຂອງໂຄງການ ຫຼື ຜູ້ປະກອບການ ດຳເນີນການປັບປຸງແກ້ໄຂບັນຫາສິ່ງແວດລ້ອມໃຫ້ກັບສູ່ສະພາບປົກກະຕິ ຈະບໍ່ມີການລົງໂທດ ຫຼື ປັບໃໝໃດໆ. ດ້ວຍເຫດນີ້, ການປະເມີນພຶດຕິກຳດັ່ງກ່າວ ຈຶ່ງມີຄວາມສ່ຽງຢູ່ໃນລະດັບ **<u>ກາງ</u>** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**5) ການກະທຳຜິດກ່ຽວກັບ ການຈີກຄົ້ນ ແລະ ການຂຸດຄົ້ນບໍ່ແຮ່**

ພຶດຕິກຳດັ່ງກ່າວ ທີ່ເກີດຂຶ້ນໃນຂອບເຂດທົ່ວປະເທດ ຕາມການຮ້ອງຟ້ອງຂອງພໍ່ແມ່ປະຊາຊົນ ແລະ ການເກັບສະຖິຕິ ຊຶ່ງໃນໄລຍະເກັບກຳຂໍ້ມູນ ມີສະຖິຕິໃນການດຳເນີນຄະດີ ຈຳນວນ 09 ຄະດີກວມເອົາ 15% ຂອງການກະທຳຜິດຕົ້ນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ມີມູນຄ່າຂອງຊັບສິນສະເລ່ຍປະມານ 405,000,000 ກີບ ຫຼື ທຽບເທົ່າ 18,446.93 ໂດລາສະຫະລັດ. ໃນເວລາດຽວກັນກໍ່ພົບເຫັນ ແລະ ນຳໃຊ້ມາດຕະການຕໍ່ການລະເມີດລະບຽບທາງດ້ານບໍລິຫານ ຈຳນວນ 128 ກໍລະນີ ແລະ ມີມູນຄ່າປັບໃໝ ຫຼື ການໃຊ້ແທ່ນຄືນຄ່າເສຍຫາຍ ສະເລ່ຍປະມານ 643,000,000 ກີບ ຫຼື ທຽບເທົ່າ 29,149.73 ໂດລາສະຫະລັດ. ແຕ່ເນື່ອງຈາກບັນຫາທີ່ເກີດຂຶ້ນນັ້ນ ມີຫຼັກສະນະທີ່ບໍ່ຮຸນແຮງ ຈຶ່ງສາມາດແກ້ໄຂໂດຍການໄກ່ເກ່ຍ ຊຸກຍູ້ໃຫ້ເຈົ້າຂອງໂຄງການ ຫຼື ຜູ້ປະກອບການ ດຳເນີນການປັບປຸງແກ້ໄຂບັນຫາທີ່ເກີດຈາກການສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ ແມ່ນບໍ່ມີການລົງໂທດ ແລະ ປັບໃໝໃດໆ ແຕ່ມີການສຶກສາ

ອິບຣິມ ແລະ ການແຈ້ງເຕືອນ. ດ້ວຍເຫດນີ້, ການປະເມີນຜົດຕິກຳກ່ຽວກັບຈີກຄົ້ນ ແລະ ການຂຸດຄົ້ນບໍ່ແຮ່ ຈຶ່ງຢູ່ໃນລະດັບຄວາມສ່ຽງ **<u>ກາງ</u>** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**6) ການກະທຳຜິດກ່ຽວກັບການຂຸດຄົ້ນແຮ່ທາດ**

ຜົດຕິກຳດັ່ງກ່າວ ຢູ່ໃນຂອບເຂດທົ່ວປະເທດ ອາດເປັນການຂຸດຄົ້ນແຮ່ທາດ ໃນລັກສະນະບໍ່ຖືກຕາມລະບຽບ ຫຼື ບໍ່ຖືກກົດໝາຍ ຜ່ານການເກັບກຳຂໍ້ມູນ ແມ່ນບໍ່ພົບເຫັນການກະທຳຜິດທາງອາຍາ. ມີພຽງແຕ່ການລະເມີດລະບຽບທາງບໍລິຫານ ຈຳນວນທັງໝົດ 54 ກໍລະນີ ແລະ ມີມູນຄ່າປັບໃໝ ຫຼື ການໃຊ້ແທ່ນຄືນຄ່າເສຍຫາຍ ສະເລ່ຍປະມານ 4,050,000,000 ກີບ ຫຼື ທຽບເທົ່າ 184,443.43 ໂດລາສະຫະລັດ. ແຕ່ເນື່ອງຈາກບັນຫາອາດຊະຍະກຳທີ່ເກີດຂຶ້ນເຫຼົ່ານັ້ນ ມີຫຼັກສະນະທີ່ບໍ່ຮຸນແຮງ ຈຶ່ງສາມາດແກ້ໄຂໂດຍການໄກ່ເກ່ຍ ຊຸກຍູ້ໃຫ້ເຈົ້າຂອງໂຄງການ ຫຼື ຜູ້ປະກອບການດຳເນີນການປັບປຸງແກ້ໄຂບັນຫາທີ່ເກີດຈາກການສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ເຫຼົ່ານັ້ນຈະບໍ່ມີການລົງໂທດ ແລະ ປັບໃໝໃດໆ ເປັນພຽງການແຈ້ງເຕືອນ ເທົ່ານັ້ນ, ໃນອະນາຄົດອາດຈະບໍ່ມີຄວາມຮຸນແຮງໃນການລະເມີດກົດໝາຍ, ສັນຍາ ແລະ ຂໍ້ຕົກລົງຕ່າງໆ. ດ້ວຍເຫດນີ້, ການປະເມີນຜົດຕິກຳກ່ຽວກັບການຂຸດຄົ້ນແຮ່ທາດ ຈຶ່ງຢູ່ໃນລະດັບຄວາມສ່ຽງ **<u>ກາງ</u>** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**7) ການກະທຳຜິດກ່ຽວກັບການຂໍໃບອະນຸຍາດເພື່ອການຂຸດເຈາະບໍ່ແຮ່**

ຜ່ານການເກັບກຳຂໍ້ມູນ ແມ່ນບໍ່ພົບເຫັນຜົດຕິກຳ ການກະທຳຜິດ ຫຼື ການລະເມີດລະບຽບທາງບໍລິຫານ ຊຶ່ງສະທ້ອນໃຫ້ເຫັນການອອກໃບອານຸຍາດສ່ວນໃຫ່ຍແມ່ນເປັນໄປຕາມເງື່ອນໄຂ ແລະ ມາດຖານທີ່ທາງລັດຖະບານກຳນົດ. ນອກຈາກນີ້, ການລະເມີດສ່ວນໃຫ່ຍແມ່ນຢູ່ໃນຂະບວນການຂຸດຄົ້ນແຮ່ທາດຕົວຈິງ ຊຶ່ງເກີດຂຶ້ນພາຍຫຼັງການອອກໃບອານຸຍາດຕົວຈິງ. ດ້ວຍເຫດນີ້, ການຂໍໃບອະນຸຍາດເພື່ອການຂຸດເຈາະບໍ່ແຮ່ ຈຶ່ງຢູ່ໃນລະດັບຄວາມສ່ຽງ **<u>ກາງ</u>** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**8) ການກະທຳຜິດກ່ຽວກັບການຂຸດເຈາະ ແລະ ການຜະລິດ**

ຜ່ານມາການເກັບກຳຂໍ້ມູນ ແມ່ນບໍ່ພົບເຫັນສະຖິຕິການກະທຳຜິດກ່ຽວກັບການຂຸດເຈາະ ແລະ ການຜະລິດແຮ່ທາດ ຢູ່ໃນຂອບເຂດທົ່ວປະເທດ ຊຶ່ງການກະທຳຜິດດັ່ງກ່າວແມ່ນມີພຽງ ແຕ່ການລະເມີດລະບຽບການ ແລະ ປະຕິບັດມາດຕະການທາງບໍລິຫານ ຈຳນວນທັງໝົດ 28 ກໍລະນີ ແລະ ມີມູນຄ່າປັບໃໝ ຫຼື ການໃຊ້ແທ່ນຄືນຄ່າເສຍຫາຍ ສະເລ່ຍປະມານ 140,000,000 ກວ່າກີບ ຫຼື ທຽບເທົ່າ 6,377.79 ໂດລາສະຫະລັດ. ຢ່າງໃດກໍ່ຕາມ, ບັນຫາທີ່ເກີດຂຶ້ນເຫຼົ່ານັ້ນມີລັກສະນະທີ່ບໍ່ຮຸນແຮງ ຈຶ່ງສາມາດແກ້ໄຂ ໂດຍການໄກ່ເກ່ຍ ຊຸກຍູ້ໃຫ້ເຈົ້າຂອງໂຄງການ ຫຼື ຜູ້ປະກອບການ ດຳເນີນການປັບປຸງແກ້ໄຂບັນຫາທີ່ເກີດຈາກເຫດການເຫຼົ່ານັ້ນ ເຮັດໃຫ້ບໍ່ມີສະຖິຕິການລົງໂທດ ແລະ ປັບໃໝທາງອາຍາໃດໆ ເປັນພຽງການແຈ້ງເຕືອນເທົ່ານັ້ນ. ດ້ວຍເຫດນີ້, ການປະເມີນຜົດຕິກຳກ່ຽວກັບການຂຸດເຈາະ ແລະ ການຜະລິດແຮ່ທາດ ຈຶ່ງຢູ່ໃນລະດັບຄວາມສ່ຽງ **<u>ກາງ</u>** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**9) ການກະທຳຜິດກ່ຽວກັບການຄ້າ ແລະ ການຂາຍແຮ່ທາດ**

ຜ່ານການການເກັບກຳສະຖິຕິການຄ້າ ແລະ ການຂາຍໃນຂະແໜງບໍ່ແຮ່ ແມ່ນບໍ່ພົບເຫັນການກະທຳຜິດ ຫຼື ການລະເມີດລະບຽບການທາງບໍລິຫານ ຍ້ອນບັນດາໂຄງການທີ່ມາລົງທຶນຢູ່ ສປປ ລາວ ເປັນໂຄງການຈາກຕ່າງປະເທດ ໃນຂະແໜງບໍ່ແຮ່. ສະນັ້ນ, ຕໍ່ກັບ ການຊື-ຂາຍຜະລິດຕະພັນແຮ່ທາດດັ່ງກ່າວ ລັດຖະບານ ໄດ້ມີລະບຽບຄຸ້ມຄ້ອງການຂົນສົ່ງ ແລະ ການສົ່ງອອກແຮ່ທາດແຕ່ລະຊະນິດ ກ່ອນຈະມີການສົ່ງອອກຕ່າງປະເທດ. ນອກຈາກນັ້ນ, ໂຄງການສ່ວນ

ຫຼາຍທີ່ສຳປະທານສຳຫຼວດ ຫຼື ຂຸດຄົ້ນແຮ່ທາດ ໄດ້ມີສັນຍາຊື້-ຂາຍຮ່ວມກັນກ່ອນແລ້ວ. ດ້ວຍເຫດນີ້, ການກະທຳຜິດ ກ່ຽວກັບການຄ້າ ແລະ ຂາຍແຮ່ທາດ ຈຶ່ງຢູ່ໃນລະດັບຄວາມສ່ຽງ **ຕ່ຳ** ທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

**10) ການກະທຳຜິດກ່ຽວກັບການເກັບລາຍຮັບແຮ່ທາດ**

ຜ່ານການເກັບກຳ ສະຖິຕິການກະທຳຜິດກ່ຽວກັບການເກັບລາຍຮັບແຮ່ທາດ ແມ່ນບໍ່ພົບເຫັນການກະທຳຜິດ ຫຼື ການລະເມີດລະບຽບການທາງບໍລິຫານ ເນື່ອງຈາກການເກັບລາຍຮັບໃນຂະແໜງບໍ່ແຮ່ ຕໍ່ກັບບັນດາໂຄງການທີ່ມາລົງທຶນຢູ່ ສປປ ລາວ ມີສັນຍາສຳປະທານຊອກຄົ້ນ, ສຳຫຼວດ, ສັນຍາຂຸດຄົ້ນ ແລະ ປຸງແຕ່ງ. ໃນກໍລະນີການສົ່ງອອກແຮ່ທາດໄປຕ່າງປະເທດ ຕ້ອງໄດ້ຈ່າຍຄ່າຊັບພະຍາກອນແຮ່ທາດ (Royalty) ແລະ ອາກອນ (Profit Tax) ແຮ່ທາດກ່ອນ ຈຶ່ງສາມາດເຄື່ອນຍ້າຍ ແລະ ຈຳໜ່າຍໄດ້ ຊຶ່ງພາຍຫຼັງການສົ່ງອອກ ຫຼື ຈຳໜ່າຍດັ່ງກ່າວ ເມື່ອນິຕິບຸກຄົນນັ້ນໆໄດ້ຮັບການຊຳລະຈະກາຍເປັນລາຍຮັບ ທີ່ຕ້ອງຈ່າຍອາກອນລາຍຮັບຂອງນິຕິບຸກຄົນດັ່ງກ່າວ ຕາມກຳນົດໄວ້ໃນ 1)**.** ກົດໝາຍສ່ວຍສາອາກອນ ສະບັບປັບປຸງ, 70/ສພຊ, ລົງວັນ 15 ທັນວາ 2015 ແລະ 2). ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ ສພຊ, ລົງວັນທີ 18 ມິຖຸນາ 2019. ທັງນີ້, ໃນໄລຍະຜ່ານມາຍັງບໍ່ທັນມີການລະເມີດກ່ຽວກັບການເກັບລາຍຮັບດັ່ງກ່າວ. ດ້ວຍເຫດນີ້, ການປະເມີນພຶດຕິກຳກ່ຽວກັບການເກັບລາຍຮັບແຮ່ທາດ ຈຶ່ງຢູ່ໃນລະດັບຄວາມສ່ຽງ **ກາງ** ໃນການທີ່ຈະຖືກສວຍໃຊ້ເຂົ້າໃນການຟອກເງິນ.

### 5.3.2. ຜົນຂອງການປະເມີນທາງດ້ານຄວາມບອບບາງຂອງປະເທດ ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**1)** ປະສິດທິພາບຂອງການລາຍງານ, ການໃຫ້ເບາะແສ ຢູ່ໃນລະດັບ **ກາງ-ຕ່ຳ:** ເນື່ອງຈາກວ່າ ສປປ ລາວ ໄດ້ເພີ່ມທະວີການຈັດຕັ້ງປະຕິບັດບັນດາກົດໝາຍແບບມີຈຸດສຸມ ໃນການເສີມສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກົນໄກການຕ້ານການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຮູບແບບການເຜີຍແຜ່, ການປະຊາສຳພັນ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນຂອບເຂດທົ່ວປະເທດ ເພື່ອໃຫ້ເປັນເຄື່ອຂ່າຍໃນການແຈ້ງ ຫຼື ລາຍງານຂໍ້ມູນ ກ່ຽວກັບການລະເມີດລະບຽບກົດໝາຍ ໄປຫາໜ່ວຍງານທີ່ຮັບຜິດຊອບສະເພາະເພື່ອໃຫ້ດຳເນີນ ການຕ້ານ ສະກັດກັ້ນ ພຶດຕິກຳການລະເມີດໃຫ້ທັນກັບສະພາບ.

ສຳລັບການດຳເນີນຄະດີອາຍາ ອົງການ ແລະ ຜູ້ດຳເນີນຄະດີອາຍາ (ລວມທັງຜູ້ລາຍງານ ຫຼື ການໃຫ້ເບາะແສ) ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍ (ຕາມມາດຕາ 7 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ) ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊັບສິນ ສ່ວນລວມ ຫຼື ຄອບຄົວ. ນອກຈາກນີ້, ທຸກພຶດຕິກຳຂອງ ບຸກຄົນ ຫຼື ການຈັດຕັ້ງອື່ນ ເຊັ່ນ: ການບັງຄັບ, ການນາບຂູ່, ການໃສ່ຮ້າຍ ແລະ ການນິນທາ ຊຶ່ງສ້າງຄວາມເສຍຫາຍຕໍ່ອົງການ ແລະ ຜູ້ດຳເນີນຄະດີອາຍາ ຈະຖືກລົງໂທດຕາມກົດໝາຍ.

**2)** ປະສິດທິພາບຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ຢູ່ໃນລະດັບ **ກາງ:** ເນື່ອງຈາກວ່າ ສປປ ລາວ ມີນິຕິກຳ ແລະ ກົນໄກໃນການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ອົງການບໍ່ຫວັງຜົນກຳໄລ ໃນການຈັດຕັ້ງປະຕິບັດວຽກງານ ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ມີປະສິດທິພາບ; ແຕ່ເຖິງຢ່າງໃດກໍຕາມ, ຜ່ານມາ ສຕຟງ ໄດ້ຮັບການລາຍງານທຸລະກຳທີ່ສົງໄສຈຳນວນໜຶ່ງທີ່ເປັນການເຄື່ອນໄຫວທີ່ຕິດພັນກັບອາຊະຍາກຳທຳມະຊາດ ແລະ ສິ່ງແວດລ້ອມ, ຢ່າງໃດກໍ່ດີ, ຜ່ານການວິເຄາະເຫັນວ່າຍັງບໍ່ແມ່ນຕິດພັນກັບບັນຫາດັ່ງກ່າວໂດຍກົງເປັນພຽງການສົ່ງໃຫ້ເຈົ້າໜ້າທີ່ປ່າໄມ້ເປັນຂໍ້ມູນໃນການຕິດຕາມ. ອີກທັງ ການມີສ່ວນຮ່ວມຂອງໜ່ວຍງານຕ່າງໆທີ່ກ່ຽວຂ້ອງ ຈາກທັງພາກລັດ, ພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ຍັງບໍ່ທັນໄດ້ດີເທົ່າທີ່ຄວນໃນການສະໜອງຂໍ້ມູນຂ່າວສານທີ່ເປັນປະໂຫຍດ ເພື່ອສະໜັບສະໜູນການ

ກວດຈັບອາຊະຍາກຳ ແລະ ການຟອກເງິນລາຍໄດ້ຈາກການກໍ່ອາຊະຍາກຳໃນຂະແໜງການດັ່ງກ່າວ. ຜ່ານມາ ເຖິງວ່າ ສຕຟງ ແລະ ອົງການຈັດຕັ້ງສາກົນ ໄດ້ຈັດເຜີຍແຜ່, ຝຶກອົບຮົມ ຍົກສູງຄວາມຮັບຮູ້ ໃນບັນຫາດັ່ງກ່າວ ກໍຕາມ ແຕ່ຍັງບໍ່ທັນທົ່ວເຖິງ ແລະ ຮັດກຸມ, ບໍ່ມີຄູ່ມືສະເພາະຂອງພາກສ່ວນກ່ຽວຂ້ອງໃນການກວດຈັບອາຊະຍາກຳດັ່ງກ່າວ.

**ຕາຕະລາງທີ 5.1: ການລາຍງານທຸລະກຳທີ່ສົງໄສ ທີ່ຕິດພັນກັບອາຊະຍາກຳທຳມະຊາດ ແລະ ສິ່ງແວດລ້ອມ ທີ່ ສຕຟງ ໄດ້ຮັບ ໄລຍະປີ 2018-2020**

| ຫົວໜ່ວຍທີ່ມີໜ້າທີ່ລາຍງານ | 2018 | 2019 | 2020 |
|---|---|---|---|
| ທະນາຄານທຸລະກິດ | 8 | 10 | 6 |
| ລວມທັງໝົດ | 24 | | |

ແຫຼ່ງຂໍ້ມູນ: ສຳນັກງານຂໍ້ມູນຕ້ານການຟອກເງິນ, 2024

**3)** ຄຸນນະພາບຂອງຂໍ້ມູນຂ່າວກອງ ຢູ່ໃນລະດັບ **<u>ກາງ:</u>** ເນື່ອງຈາກວ່າ ສປປ ລາວ ມີການນຳໃຊ້ກົນໄກໃນການຄຸ້ມຄອງອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ໃຫ້ມີຄວາມຂັ້ນແຂງ ແລະ ນຳໃຊ້ຂໍ້ມູນທີ່ມີປະສິດທິພາບ ໃນການຕິດຕາມ-ກວດສອບອາຊະຍາກຳ ທີ່ອາດຈະເກີດຂຶ້ນໃນ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ໃນຈຳນວນ 30 ແຫ່ງ ທີ່ເຄື່ອນໄຫວກິດຈະກຳທີ່ກ່ຽວຂ້ອງ. ກະຊວງພາຍໃນ ແລະ ກະຊວງການຕ່າງປະເທດ ໃນຖານະອົງການຄຸ້ມຄອງ ໄດ້ຮ່ວມກັບ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ໃນການປູກຈິດສຳນຶກ, ການໂຄສະນາໃຫ້ກັບສັງຄົມ ແລະ ການມີສ່ວນຮ່ວມກັບຊຸມຊົນທ້ອງຖິ່ນ ເພື່ອສົ່ງເສີມການອະນຸລັກສິ່ງແວດລ້ອມແບບຍືນຍົງ. ນອກຈາກນີ້ , ຍັງມີການຝຶກອົບຮົມ ແລະ ສ້າງຄວາມອາດສາມາດໃຫ້ກັບພະນັກງານທີ່ກ່ຽວຂ້ອງ ຂັ້ນສູງກາງ ແລະ ທ້ອງຖິ່ນ ໃນການຕິດຕາມ ແລະ ປະເມີນຜົນ, ການແລກປ່ຽນບົດຮຽນຂອງພາກພື້ນ ແລະ ສາກົນ.

ພ້ອມດຽວກັນນີ້, ເຈົ້າໜ້າທີ່ອົງການສືບສວນ-ສອບສວນ ມີການນຳໃຊ້ບົດລາຍງານຂ່າວກອງທາງດ້ານການເງິນ ທີ່ໄດ້ຮັບຈາກ ສຕຟງ ເຂົ້າໃນສືບສວນ-ສອບສວນ ໃນການນຳຮອຍເສັ້ນທາງການເງິນ ຕໍ່ກັບການກະທຳຜິດດັ່ງກ່າວ. ມີການແລກປ່ຽນຂໍ້ມູນກັບຄູ່ຮ່ວມງານຕ່າງປະເທດ ຜ່ານກົນໄກການເປັນສະມາຊິກຂອງກຸ່ມໜ່ວຍງານ.

**ຕາຕະລາງທີ 5.2: ຈຳນວນບົດລາຍງານຂ່າວກອງທາງດ້ານການເງິນທີ່ໄດ້ສົ່ງໃຫ້ກັບເຈົ້າໜ້າທີ່ສືບສວນ-ສອບສວນ**

| ລ/ດ | ພາກສ່ວນ | 2018 | 2019 | 2020 |
|---|---|---|---|---|
| 1 | ກະຊວງກະສິກຳ ແລະ ປ່າໄມ້ | 2 | 2 | 1 |
| 2 | ກະຊວງການເງິນ | 1 | 2 | 2 |
| **ລວມ** | | 3 | 4 | 3 |

ແຫຼ່ງຂໍ້ມູນ: ສຳນັກງານຂໍ້ມູນຕ້ານການຟອກເງິນ 2024

**4)** ຄວາມອາດສາມາດຂອງໜ່ວຍງານທີ່ໄດ້ຮັບການແຕ່ງຕັ້ງ (Designated Authorrity) ຢູ່ໃນລະດັບ **<u>ກາງ:</u>** ເນື່ອງຈາກວ່າ ເຈົ້າໜ້າທີ່ຜູ້ຈັດຕັ້ງປະຕິບັດຕົວຈິງຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ມີຄວາມເຂົ້າໃຈ ຄວາມສ່ຽງ, ກົນໄກວິທີການຕ້ານ ແລະ ນຳໃຊ້ມາດຕະການທາງບໍລິຫານ ຫຼື ທາງອາຍາຕໍ່ຜູ້ກະທຳຜິດໄດ້ດີ ສົມຄວນ ຊຶ່ງມີການປະສານງານ ແລະ ການເກັບກຳຂໍ້ມູນກ່ຽວກັບການກະທຳຜິດ ທັງພາຍໃນ ແລະ ຕ່າງປະເທດ ໃນວຽກງານດັ່ງກ່າວ ເປັນຕົ້ນ ຄະນະກຳມະການປະສານງານບັງຄັບໃຊ້ກົດໝາຍໃນການຕ້ານ ສະກັດກັ້ນ ຄ້າຂາຍສັດນ້ຳ-ສັດປ່າ ແລະ ຜຶດຜັນຫວງຫ້າມ (LAO-WEN), ຄະນະກຳມະການ CITES ເພື່ອ ຕິດຕາມກວດກາຈຳນວນສັດ ແລະ ຜຶດທີ່ຫວງຫ້າມ ເພື່ອລາຍງານສາກົນ. ພ້ອມນີ້, ສປປ ລາວ ຍັງມີນິຕິກຳ

ແລະ ຍຸດທະສາດ ໃນການຕ້ານອາຊະກຳດັ່ງກ່າວ. ຢ່າງໃດກໍ່ຕາມ, ສປປ ລາວ ແມ່ນກຳລັງປະເຊີນກັບໄພຂົ່ມຂູ່ຈາກລັກລອບຊື້-ຂາຍສັດປ່າທີ່ເປັນລັກສະນະຂະບວນການຂ້າມຊາດ ໂດຍນຳໃຊ້ດິນແດນຂອງລາວເປັນທາງຜ່ານໄປຍັງປະເທດປາຍທາງ.

ໄລຍະແຕ່ປີ 2018-2022, ສະຖິຕິການກະທຳຜິດກ່ຽວກັບການສໍ້ລາດບັງຫຼວງ ທັງໝົດຈຳນວນ 10 ຄະດີ ແລະ ມູນຄ່າຂອງຊັບສິນສະເລ່ຍເປັນຈຳນວນເງິນ 130 ຕື້ກວ່າກີບ ຫຼື ທຽບເທົ່າ 7.5 ລ້ານໂດລາສະຫະລັດ ຊຶ່ງໃນນັ້ນແມ່ນບໍ່ພົບເຫັນການກະທຳຜິດທີ່ເປັນການສໍ້ຫຼາດບັງຫຼວງດ້ານຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ.

ໃນດ້ານການຄຸ້ມຄອງລະບຽບການ, ການບໍລິຫານ ແລະ ຄວາມໂປ່ງໃສຂອງຂະແໜງການອອກໃບອະນຸຍາດ ຫຼື ການເຂົ້າຮ່ວມໃນຕະຫລາດ ແລະ ເຈົ້າຂອງຜົນປະໂຫຍດ ໃນໄລຍະຜ່ານມາ ຕໍ່ກັບກົນໄກການຈັດຕັ້ງປະຕິບັດ ເຫັນວ່າ ໃນຂະບວນການຄົ້ນຄວ້າອອກໃບທະບຽນວິສາຫະກິດ ຂອງກະຊວງອຸດສະຫະກຳ ແລະ ການຄ້າ ແມ່ນນິຕິກຳ ທີ່ຈະແຈ້ງ, ມີການກວດກາຜູ້ຂໍອະນຸຍາດ ແລະ ໄດ້ມີການນຳໃຊ້ຂໍ້ມູນ ຫຼື ແລກປ່ຽນຂໍ້ມູນປະຫວັດທາງດ້ານອາຊາຍາກຳ ຈາກອົງການສືບສວນ-ສອບສວນ ແລະ ສານປະຊາຊົນ ຕາມກຳນົດໄວ້ໃນນິຕິກຳທີ່ກ່ຽວຂ້ອງກັບທະບຽນວິສາຫະກິດ ກໍລະນີ ຫາກບໍ່ມີເງື່ອນໄຂ ແລະ ມາດຕະຖານທີ່ຄົບຖ້ວນ ກໍ່ຈະບໍ່ມີການອອກໃບທະບຽນທຸລະກິດໃຫ້. ຢ່າງໃດກໍ່ດີ, ກໍລະນີຫາກໄດ້ຮັບໃບທະບຽນທຸລະກິດແລ້ວ ຜູ້ທີ່ມີຈຸດປະສົງຢາກດຳເນີນທຸລະກິດໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຍັງຈະຕ້ອງດຳເນີນການຂໍອະນຸຍາດດຳເນີນທຸລະກິດ ຈາກກະຊວງທີ່ກ່ຽວຂ້ອງຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງກ່ຽວຂ້ອງກຳນົດ.

**5)** ຄວາມຊື່ສັດ ແລະ ຄວາມເປັນເອກະລາດຂອງ ໄອຍະການ ແລະ ສານ ຢູ່ໃນລະດັບ **<u>ສູງ:</u>** ເນື່ອງຈາກວ່າ ສປປ ລາວ ມີການຄວບຄຸມການສໍ້ລາດບັງຫຼວງ ໂດຍໄດ້ມີການອອກນິຕິກຳ ຫ້າມຜູ້ທີ່ມີສິດອຳນາດ, ຖານະຕຳແໜ່ງ ມີພຶດຕິກຳ ສໍ້ລາດບັງຫຼວງຢູ່ໃນ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ຊຶ່ງມີກົນໄກການຕ້ານການສໍ້ລາດບັງຫຼວງໃນຂະແໜງຕ່າງໆ ໂດຍສະເພາະຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນບັນດານິຕິກຳທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດຕົວຈິງ ຂອງ ສປປ ລາວ ດັ່ງນີ້:

- ສປປ ລາວ ໄດ້ເຂົ້າເປັນພາຄີສົນທິສັນຍາຂອງອົງການສະຫະປະຊາຊາດ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໃນປີ 2003;
- ອອກກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ໃນກົດໝາຍດັ່ງກ່າວໄດ້ກຳນົດໃຫ້ພະນັກງານລັດ ຕ້ອງແຈ້ງຊັບສິນ ແລະ ໄດ້ກຳນົດກົນໄກດຳເນີນງານລະດັບຊາດຢູ່ທັງສູນກາງ ແລະ ທ້ອງຖິ່ນ ໂດຍສ້າງຕັ້ງອົງການກວດກາແຫ່ງລັດ ເພື່ອເປັນໜ່ວຍງານ ສືບສວນ-ສອບສວນ ການສໍ້ລາດບັງຫຼວງ ແລະ ສ້າງຍຸດທະສາດແຫ່ງຊາດ ກ່ຽວກັບ ການຕ້ານການສໍ້ຫຼາດບັງຫຼວງຂອງປະເທດ;
- ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ໄດ້ສ້າງຕັ້ງກົມກວດກາພາຍໃນສະເພາະ ເພື່ອເຮັດບົດບາດໃນການກວດກາຈັດຕັ້ງປະຕິບັດໜ້າທີ່ ຂອງກົມກ່ຽວຂ້ອງຂອງຕົນ.
- ພ້ອມກັນນີ້, ຍັງມີກອບນິຕິກຳໃນການຄຸ້ມຄອງ ແລະ ປົກປ້ອງ ທີ່ໄດ້ລະບຸໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ການປົກປ້ອງເຈົ້າໜ້າທີ່ ສືບສວນ-ສອບສວນ, ໄອຍະການປະຊາຊົນ ແລະ ສານປະຊາຊົນສູງສຸດ ທີ່ກ່ຽວຂ້ອງກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງຈະໄດ້ຮັບການປົກປ້ອງ ຄື: ໃນການດຳເນີນຄະດີອາຍາ ອົງການ ແລະ ຜູ້ດຳເນີນຄະດີອາຍາ ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍຈາກ ການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊັບສິນ ສ່ວນລວມ ຫຼື ຄອບຄົວ ຈະຖືກລົງໂທດຕາມກົດໝາຍ.

**6)** ປະສິດທິພາບຂອງການລົງໂທດ ຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກວ່າ: ສປປ ລາວ ມີກອບທາງດ້ານນິຕິກຳ ກ່ຽວກັບ ໂທດທາງແພ່ງ ຫຼື ທາງປົກຄອງ ແລະ ໂທດທາງອາຍາ ໄວ້ໃນນິຕິກຳທີ່ກ່ຽວຂ້ອງ ເປັນຕົ້ນ: 1). ປະມວນກົດໝາຍອາຍາສະບັບປີ 2017, 2). ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2022; 3). ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 21/ສພຊ, ລົງວັນທີ 7 ກໍລະກົດ 2022; 4). ກົດໝາຍວ່າດ້ວຍ ສັດປ່າ (ສະບັບປັບປຸງ) 098/ລບ, ລົງວັນທີ 30 ສິງຫາ 2023; 5). ດຳລັດວ່າດ້ວຍ ການຄຸ້ມຄອງການຄ້າຂາຍ ສັດນ້ຳ-ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ສະບັບເລກທີ 299/ລບ, ລົງວັນທີ 5 ມິຖຸນາ 2024; 6). ດຳລັດວ່າດ້ວຍ ການປັບໃໝ ແລະ ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ສະບັບເລກທີ 365/ລບ, ລົງວັນທີ 21 ສິງຫາ 2024; ແລະ 7). ດຳລັດວ່າດ້ວຍ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບແຮ່ທາດ ສະບັບເລກທີ 373/ບລ, ລົງວັນທີ 1 ທັນວາ 2023, ຊຶ່ງໄດ້ກຳນົດໂທດໃນແຕ່ລະດ້ານດັ່ງນີ້:

- ສຳລັບການລະເມີດທາງແພ່ງ ຫຼື ທາງປົກຄອງ ມີມາດຕະການ: ການສຶກສາອົບຮົມ; ກ່າວເຕືອນ, ລົງວິໄນ (ໂຈະ, ປົດ, ຖອນ, ເລື່ອນການພິຈາລະນາຕຳແໜ່ງ); ປັບໃໝທາງດ້ານບໍລິຫານ ແລະ ໃຊ້ແທນຄືນຄ່າເສຍຫາຍ;
- ສຳລັບການລະເມີດ ແລະ ການກຳນົດໂທດທາງອາຍາ: 1). **ສຳລັບນິຕິບຸກຄົນ:** ໂທດປັບໃໝ, ໂທດຍົກເລີກທຸລະກິດ, ຫ້າມດຳເນີນທຸລະກິດບາງປະເພດ, ຫ້າມລະດົມທຶນ, ຫ້າມນຳໃຊ້ແຊັກ ຫຼື ບັດເຄຼດິດ, ຮິບວັດຖຸສິ່ງຂອງ ຫຼື ຟື້ນຟູຄືນ. 2) **ສຳລັບບຸກຄົນ:** ການລົງໂທດທາງອາຍາຕໍ່ບັນດາພຶດຕິກຳທີ່ກ່ຽວຂ້ອງກັບການກະທຳຜິດທາງດ້ານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີກຳນົດໂທດຕັດອິດສະຫຼະພາບ ຢູ່ລະຫວ່າງ 3 ເດືອນ ຫາ 6 ປີ ແລະ ປັບໃໝທາງອາຍາ 3 ລ້ານກີບ ຫາ 500 ລ້ານກີບ.

**7)** ຄວາມຊື່ສັດ ແລະ ເອກະລາດຂອງໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ພາສີ ຢູ່ໃນລະດັບ **<u>ສູງ:</u>** ເນື່ອງຈາກວ່າ ສປປ ລາວ ໄດ້ສ້າງຕັ້ງອົງການກວດກາແຫ່ງລັດ ທີ່ເຮັດບົດບາດໃນການຕ້ານ ສະກັດກັ້ນ ການສໍ້ລາດບັງຫຼວງ ຂອງປະເທດ ເປັນຂັ້ນສູນກາງ (ມະຫາພາກ) ແລະ ກຳນົດໃຫ້ມີການສ້າງຕັ້ງກົມກວດກາພາຍໃນ ຢູ່ໃນແຕ່ລະກະຊວງອົງການຈັດຕັ້ງຂອງລັດ ແລະ ສ້າງຂະແໜງການກວດກາຢູ່ໃນແຕ່ລະແຂວງທີ່ເຮັດໜ້າທີ່ໃນການກວດກາໃນລະດັບທ້ອງຖິ່ນ ລວມທັງ ກະຊວງອົງການຈັດຕັ້ງລັດທີ່ເຮັດໜ້າທີ່ໃນການຕ້ານ ສະກັດກັ້ນ ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຈົ້າໜ້າທີ່ພາສີ (ທັງຢູ່ສູນກາງ ແລະ ທ້ອງຖິ່ນ). ຢ່າງໃດກໍ່ຕາມ, ອີງໃສ່ຜົນການປະເມີນດ້ານໄພຂົ່ມຂູ່ທີ່ໄດ້ກ່າວມາຂ້າງເທິງ ແມ່ນບໍ່ພົບສະຖິຕິການດຳເນີນຄະດີການສໍ້ລາດບັງຫຼວງທີ່ກ່ຽວຂ້ອງກັບການກະທຳທີ່ຕິດພັນກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**8)** ຄຸນນະພາບຂອງຍຸດທະສາດ ແລະ ແຜນປະຕິບັດງານ ແມ່ນຢູ່ໃນລະດັບ **<u>ກາງ-ສູງ:</u>** ເນື່ອງຈາກວ່າ ສປປ ລາວ ມີນິຕິກຳ ແລະ ຍຸດທະສາດ ໃນການຕ້ານ ສະກັດກັ້ນ ການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ມີຄະນະກຳມະການ LAO-WEN ແລະ ຄະນະກຳມະການ CITES ເພື່ອຕິດຕາມກວດກາຈຳນວນສັດ ແລະ ພືດທີ່ຫວງຫ້າມ ເພື່ອລາຍງານສາກົນ. ອີກທັງເຈົ້າໜ້າທີ່ມີຄວາມເຂົ້າໃຈຄວາມສ່ຽງ, ກົນໄກ ວິທີການຕ້ານ ແລະ ນຳໃຊ້ມາດຕະການທາງບໍລິຫານ ຫຼື ທາງອາຍາຕໍ່ຜູ້ກະທຳຜິດໄດ້ດີສົມຄວນ. ທັງນີ້ຍັງມີກົນໄກການຮ່ວມມືລະຫວ່າງ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ພາກລັດ ໃນການແກ້ໄຂບັນຫາດັ່ງກ່າວ ໃນ ສປປ ລາວ ໂດຍຜ່ານການປູກຈິດສຳນຶກ ແລະ ການສຶກສາ, ການເຜີຍແຜ່ຊຸມຊົນ, ໂຄງການໃຫ້ການສະໜັບສະໜູນໃນການຝຶກອົບຮົມ, ແລກປ່ຽນບົດຮຽນ ແລະ ການແບ່ງປັນຄວາມຮູ້.

ພ້ອມດຽວກັນນີ້, ໄດ້ຍົກສູງ ແລະ ເພີ່ມທະວີການແກ້ໄຂບັນຫາທີ່ສັບສົນ ເປັນແຕ່ລະໄລຍະ, ເພີ່ມທະວີການຊຸກຍູ້ໃຫ້ຊຸມຊົນຂັ້ນທ້ອງຖິ່ນມີສ່ວນຮ່ວມໃນການຕິດຕາມ ແລະ ລາຍງານອາຊະຍາກຳດ້ານສິ່ງແວດລ້ອມ

ໃຫ້ສາມາດຊ່ວຍລະບຸການເຄື່ອນໄຫວທີ່ຜິດກົດໝາຍ ແລະ ປຸກຈິດສຳນຶກໃຫ້ປະຊາຊົນເປັນເຈົ້າການ ໂດຍສະເພາະການຮ່ວມມືພາຍໃນ; ກົນໄກລະຫວ່າງອົງກອນລັດໃນການສະໜອງຂໍ້ມູນ ແລະ ອື່ນໆ ໂດຍສະເພາະໃນຂັ້ນທ້ອງຖິ່ນແມ່ນໄດ້ມີການເຜີຍແຜ່ໃນລັກສະນະລວງກວ້າງ ປະຊາສຳພັນ ແລະ ເນັ້ນການມີສ່ວນຮ່ວມ ຫຼື ພັນທະຂອງພາກປະຊາຊົນ ແລະ ເອກະຊົນ ທີ່ມີບົດບາດກ່ຽວຂ້ອງ ເພື່ອໃຫ້ເກີດກົນໄກທີ່ເປັນເຄື່ອຄ່າຍໃນການແຈ້ງ ຫຼື ລາຍງານຂໍ້ມູນ ກ່ຽວກັບການລະເມີດລະບຽບກົດໝາຍ ຂອງ ບຸກຄົນ, ກຸ່ມຄົນ, ນິຕິບຸກຄົນ ຫຼື ຜູ້ປະກອບການ ແລະ ເຈົ້າໜ້າທີລັດ ໄປຫາໜ່ວຍງານທີ່ຮັບຜິດຊອບສະເພາະເພື່ອໃຫ້ດຳເນີນ ການຕ້ານ ສະກັດກັ້ນ ພຶດຕິກຳການລະເມີດໃຫ້ທັນກັບສະພາບ.

**9)** ປະສິດທິພາບຂອງກອບນິຕິກຳຕໍ່ກັບການລະເມີດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນຢູ່ໃນລະດັບ **<u>ກາງ-ສູງ:</u>** ເນື່ອງຈາກວ່າ ສປປ ລາວ ມີຄຳນິຍາມ ແລະ ການກຳນົດໂທດທາງອາຍາ ຕໍ່ກັບການກະທຳຜິດທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍອີງໃສ່ການເປັນສະມາຊິກຂອງ CITES, ເຂົ້າເປັນພາຄີໃນສົນທິສັນຍາຕ່າງໆ ເຊັ່ນ: Basel, Rotterdam, Stockholm ຊຶ່ງໄດ້ກຳນົດໃຫ້ບັນດາການກະທຳຜິດກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄວ້ໃນປະມວນກົດໝາຍອາຍາ ພາກທີ II, ໝວດທີ 9, ມາດຕາທີ 326 - 353 ແລະ ກຳນົດໃຫ້ການຮ່ວມກັນກະທຳຜິດທີ່ກ່ຽວຂ້ອງກັບການກະທຳຜິດທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນການທຳຜິດທາງອາຍາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງປະມວນກົດໝາຍອາຍາ. ນອກຈາກນີ້, ຍັງມີນິຕິກຳສະເພາະຈຳນວນໜຶ່ງທີ່ກຳນົດນິຍາມ, ກົນໄກການຕ້ານສະກັດກັ້ນ ແລະ ການກຳນົດໂທດການກະທຳຜິດທາງອາຍາ ຕໍ່ບັນຫາດັ່ງກ່າວ ຕາມທີ່ໄດ້ລະບຸໄວ້ໃນ ຂໍ້ 6 ໃນ ຂໍ້ 5.3.2.

ນອກຈາກນີ້, ໃນປະມວນກົດໝາຍອາຍາສະບັບປີ 2017 ໄດ້ກຳນົດກ່ຽວກັບ "ໂທດຮິບຊັບ" ແລະ "ໂທດຮິບວັດຖຸສິ່ງຂອງ" (ມາດຕາ 52 ແລະ 53) ແລະ ມີນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ ທີ່ສາມາດ ກັກ, ຍຶດ ແລະ ອາຍັດ ຕາມນິຕິກຳທີ່ໄດ້ລະບຸໄວ້ໃນ 1). ກົດໝາຍວ່າດ້ວຍ ການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງ ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021; 2). ດຳລັດວ່າດ້ວຍ ຊັບສິນທີ່ຖືກຍຶດ ແລະ ຮິບເປັນຂອງລັດ ສະບັບເລທີ 280/ລບ, ລົງວັນທີ 09/08/2022 ແລະ 3). ຄຳແນະນຳຂອງ ລັດຖະມົນຕີ ກະຊວງຍຸຕິທຳ ກ່ຽວກັບ ວຽກງານການເງິນ, ການຮິບ ແລະ ມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 446/ກຍ, ລົງວັນທີ 05/04/2019. ຢ່າງໃດກໍ່ຕາມ, ສຳລັບຊ່ອງທາງການດຳເນີນການກູ້ຄືນ ແລະ ການບໍລິຫານຈັດການ ຕໍ່ກັບຊັບສິນທີ່ກ່ຽວຂ້ອງກັບການກະທຳຜິດທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ການຮ້ອງຂໍ/ສະເໜີຂໍຄວາມຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ລະຫວ່າງປະເທດ ເພື່ອເກັບກູ້ຊັບສິນຄືນ ຜ່ານກົນໄກ ຫຼື ເຄືອຂ່າຍ ທີ່ ສປປ ລາວ ເປັນສະມາຊິກ ຂອງ South East Asia Justice Network (SEA Just), Egmont Group ແລະ ອົງການ Asset Recovery Interagency Network - ASIA PACIFIC (ARIN-AP). ນອກຈາກນີ້, ຍັງມີກອບນິຕິກຳທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຮ່ວມມືລະຫວ່າງປະເທດທາງອາຍາ ສະບັບເລກທີ 88/ສພຊ, ລົງວັນທີ 12 ພະຈິກ 2020. ສຳລັບການຕ້ານການສໍ້ລາດບັງຫຼວງແມ່ນອະທິບາຍໃນຂໍ້ 5 ໃນຂໍ້ 5.3.2.

**10)** ປະສິດທິພາບໃນການຈັດຕັ້ງປະຕິບັດວຽກງານຂອງເຈົ້າໜ້າທີ່ພາສີ ແລະ ການຄວບຄຸມຊາຍແດນ ຢູ່ໃນລະດັບ **<u>ກາງ-ສູງ:</u>** ເນື່ອງຈາກວ່າ ສປປ ລາວ ໄດ້ມີການຮ່ວມມື ແລະ ການປະສານງານ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປັບປຸງແກ້ໄຂບັນຫາການຄວບຄຸມພາສີ ແລະ ຊາຍແດນ ຢ່າງເປັນປົກກະຕິ; ສ້າງກົນໄກແລກປ່ຽນຂໍ້ມູນໃຫ້ມີຄຸນນະພາບ ໂດຍຜ່ານຄະນະ LAO-WEN (ກະຊວງກະສິກຳ ແລະ ປ່າໄມ້, ອົງການໄອຍາປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງການເງິນ, ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ).

ກະຊວງການເງິນ ໄດ້ອອກຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການ ສືບສວນ - ສອບ ສວນ ການຟອກເງິນ ຄຽງຄູ່ກັບການກະທຳຜິດຕົ້ນ ສະບັບເລກທີ 09100/ກພສ, ລົງວັນທີ 18 ພະຈິກ 2019. ນອກຈາກນີ້, ກົມພາສີ ຮ່ວມກັບ ສຳນັກງານຂໍ້ມູນຕ້ານການຟອກເງິນ ພັດທະນາລະບົບລາຍງານທາງເອເລັກ ໂຕຣນິກ ກ່ຽວກັບການນຳເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນຂອງບຸກຄົນ, ນິຕິບຸກຄົນ ໃນ ເວລາເຂົ້າ-ອອກ ສປປ ລາວ ຜ່ານດ່ານພາສີຊາຍແດນ ເພື່ອອຳນວຍຄວາມສະດວກ ແລະ ຮັບປະກັນຄວາມ ວ່ອງໄວ, ປອດໄພ ແລະ ປະສິດທິພາບຂອງການລາຍງານທຸລະກຳ ຊຶ່ງຖືກນຳໃຊ້ ແຕ່ວັນທີ 14 ມັງກອນ 2020 ຕາມແຈ້ງການ ສະບັບເລກທີ 00245/ກພສ ໃນບັນດາດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ.

ນອກຈາກນີ້, ສປປ ລາວ ໄດ້ມີນິຕິກຳທີ່ຜັນຂະຫຍາຍສອດຄ່ອງກັບກົດໝາຍພາຍໃນ ຕາມທີ່ໄດ້ລະບຸ ໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ສົນທິສັນຍາສາກົນ ເປັນຕົ້ນ Basel, Rotterdam, Stockholm, Minamata, Vienna, Kyoto Protocol ເພື່ອຄຸ້ມຄອງ ແລະ ປົກປ້ອງເຈົ້າໜ້າ ທີ່ບັງຄັບໃຊ້ກົດໝາຍ ແລະ ເຈົ້າໜ້າທີ່ພາສີ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ການຮ່ວມມືກັບປະເທດເພື່ອນບ້ານໃນການເນີນສືບສວນ-ສອບສວນອາຊະຍາກຳຂ້າມຊາດ ເປັນຕົ້ນ: ຂະບວນການຕັດໄມ້ຜິດກົດໝາຍ, ການລັກລອບ-ຂົນສົ່ງ ແລະ ການຄ້າຂາຍສັດນ້ຳ ແລະ ສັດປ່າຫວງຫ້າມ ແລະ ອື່ນໆ.

ນອກຈາກນີ້, ເຈົ້າໜ້າທີ່ພາສີຍັງມີຄູ່ມື (Customs-FIU Cooperation handbook, Customs Enforcement Guide line on AML/CFT, Risk Management compendium) ຈາກອົງການພາສີ ໂລກ ໃນການຕິດຕາມກວດກາ ແລະ ອຸປະກອນ ທີ່ທັນສະໄໝ ສຳລັບຄົ້ນຫາເຄື່ອງຊຸກເຊື່ອງໃນພາກສະໜາມ ທີ່ເອີ້ນເປັນພາສາສາກົນວ່າ “(Portable Backscatter X-ray)” ແລະ ເຄື່ອງມືທີ່ໃຊ້ກວດອາໂລຫະຕ່າງໆ ລວມໄປເຖິງແກ້ວປະເສີດ ເອີ້ນເປັນພາສາສາກົນວ່າ “(XRF Analysers)” ຊຶ່ງເຈົ້າໜ້າທີ່ຍັງໄດ້ນຳໃຊ້ກົດ ໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ກົດໝາຍວ່າດວ້ຍພາສີ; ກົດໝາຍວ່າດ້ວຍ ການຕ້ານ ການ ຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ຄຳແນະນຳວ່າດ້ວຍ ການແຈ້ງ ເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ໃນ ເວລາ ເຂົ້າ-ອອກ ສປປ ລາວ ເລກທີ 06/ຄຕຝງ, ລົງວັນທີ 19 ພຶດສະພາ 2015 ແລະ ລະບົບເຊື່ອມໂຍງລະຫວ່າງ ສຳນັກງານຂໍ້ມູນຕ້ານການເງິນ ກັບ ເຈົ້າໜ້າທີ່ພາສີ ໃນການລາຍງານ ທຸລະກຳເງິນສົດຂ້າມແດນ. ນອກຈາກນັ້ນ, ເຈົ້າໜ້າທີ່ໄດ້ມີການປັບປຸງຄູ່ມືຂອງຕົນ ໂດຍກຳນົດເອົາການ ສືບສວນ-ສອບສວນ ທາງດ້ານການເງິນເຂົ້າໃນຄູ່ມື ການສືບສວນ-ສອບສວນພາຍໃນ. ພ້ອມດຽວກັນນີ້, ເຈົ້າ ໜ້າທີ່ພາສີກໍ່ໄດ້ເຂົ້າຮ່ວມການຝຶກອົບຮົມທາງດ້ານວິຊາການຈາກບັນດາອົງການສາກົນ ເປັນຕົ້ນ ອົງການ ສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ ປະຈຳ ສປປ ລາວ  ແລະ ສະຖາບັນຊ່ວຍເຫຼືອທາງ ດ້ານກົດໝາຍ ແລະ ວິຊາການ ຢ່າງເປັນປະຈຳ.

ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ ປະຈຳ ສປປລາວ ໄດ້ໃຫ້ການ ຊ່ວຍເຫຼືອທາງດ້ານວິຊາການ (ສະຖານທູດອາເມຣິກາເປັນຜູ້ສະໜັບສະໜູນທາງດ້ານງົບປະມານ) ໃນການສ້າງ ຄວາມອາດສາມາດໃຫ້ກັບເຈົ້າໜ້າທີ່ ສືບສວນ-ສອບສວນ ຊຶ່ງໂຄງການດັ່ງກ່າວມີໄລຍະເວລາຈັດຕັ້ງປະຕິບັດ 03 ປີ (2019-2021), ເນັ້ນໃສ່ແກ້ໄຂຄວາມບອບບາງຈາກຜົນການປະເມີນຄວາມສ່ຽງລະດັບຊາດ ເຊັ່ນ: ເຕັກນິກການສືບສວນ-ສອບສວນທາງດ້ານການເງິນ, ຮັບປະກັນການຈັດຕັ້ງປະຕິບັດແບບຍາວນານໂດຍການ ສ້າງຄູ່ມືເຕັກນິກການສືບສວນ-ສອບສວນ ທາງດ້ານການເງິນ ແລະ ຈັດຝຶກອົບຮົມໃນຂອບເຂດທົ່ວປະເທດ ເພື່ອໃຫ້ຄວາມຮູ້ໃນດ້ານການຈັດຕັ້ງປະຕິບັດຕົວຈິງ, ຮອດປັດຈຸບັນໄດ້ສຳເລັດການຝຶກອົບຮົມ ຈຳນວນ 02 ຄັ້ງ, ຈຳນວນຜູ້ເຂົ້າຮ່ວມຫຼາຍກວ່າ 100 ເທື່ອຄົນ.

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ ໂດຍໄດ້ຮັບທຶນຈາກປະເທດ ການາດາ ແລະ ລຸກຊຳບວກ ໃນການຈັດສະໜອງສື່ສິ່ງພິມ ແລະ ອຸປະກອນທີ່ຈຳເປັນ (ແຜ່ນພັບ, ແຜ່ນໂປດສະຕິ, ປ້າຍ ໂຄສະນາ,...) ເຂົ້າໃນວຽກງານໂຄສະນາເຜີຍແຜ່ ໃຫ້ທົ່ວພາກສ່ວນທົ່ວສັງຄົມ ໂດຍສະເພາະແມ່ນອົງການດຳ ເນີນຄະດີ.

**11)** ປະສິດທິພາບຂອງການນຳໃຊ້ກົດໝາຍເພື່ອປົກປ້ອງເຈົ້າໜ້າທີ່ ຢູ່ໃນລະດັບ **ສູງ:** ເນື່ອງຈາກວ່າ ກົດໝາຍວ່າ ດ້ວຍ ການດຳເນີນຄະດີອາຍາ ຂອງ ສປປ ລາວ ໄດ້ກຳນົດກ່ຽວກັບ ການປົກປ້ອງເຈົ້າໜ້າທີ່ ໃນມາດຕາ 7: 1). ໃນການດຳເນີນຄະດີອາຍາ ອົງການ ແລະ ຜູ້ດຳເນີນຄະດີອາຍາ ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍຈາກ ການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊັບສິນ ສ່ວນລວມ ຫຼື ຄອບຄົວ; 2). ທຸກພຶດຕິກຳຂອງ ບຸກຄົນ ຫຼື ການຈັດຕັ້ງອື່ນ ເຊັ່ນ: ການບັງຄັບ, ການນາບຂູ່, ການໃສ່ຮ້າຍ ແລະ ການນິນທາ ຊຶ່ງສ້າງຄວາມເສຍຫາຍຕໍ່ອົງການ ແລະ ຜູ້ດຳເນີນຄະດີອາຍາ ຈະຖືກລົງໂທດຕາມກົດໝາຍ; 3). ໃນການດຳເນີນຄະດີອາຍາ ພົນລະເມືອງ ໄດ້ຮັບການປົກປ້ອງ ຊີວິດ, ສຸຂະພາບ, ກຽດສັກສີ ຫຼື ຊັບສິນ ຂອງຕົນ ແລະ 4). ທຸກພຶດຕິກຳຂອງ ອົງການ ແລະ ຜູ້ດຳເນີນຄະດີອາຍາ ເຊັ່ນ: ການທຸບຕີ, ການທໍລະມານ, ການບັງຄັບ ແລະ ການນາບຂູ່ ຊຶ່ງສ້າງຄວາມເສຍຫາຍຕໍ່ພົນລະເມືອງ ຈະຖືກລົງໂທດຕາມກົດໝາຍ.

**12)** ປະສິດທິພາບຂອງການນຳໃຊ້ກົດໝາຍອາຍາ ຢູ່ໃນລະດັບ **ສູງ:** ເນື່ອງຈາກວ່າ ສປປ ລາວ ມີການແຕ່ງຕັ້ງ ຄະນະຊີ້ນຳ ແລະ ຄະນະກຳມະການ LAO-WEN, ຊຶ່ງພາຍໃຕ້ກົນໄກດັ່ງກ່າວ ບັນດາພາກສ່ວນກ່ຽວຂ້ອງ ໄດ້ ປະຊຸມປຶກສາຫາລືລະຫວ່າງກັນ, ສົ່ງ-ຮັບ ແລະ ແລກປ່ຽນຂໍ້ມູນລະຫວ່າງກັນ 03 ເດືອນ/ຄັ້ງ, ລວມທັງຮ່ວມ ກັນໃນ ການສືບສວນ-ສອບສວນ ແລະ ດຳເນີນຄະດີ ເປັນແຕ່ລະໄລຍະ ເປັນຕົ້ນ: ເຈົ້າໜ້າທີ່ອົງການສືບສວນ-ສອບສວນປ່າໄມ້, ອົງການສືບສວນ-ສອບສວນປ້ອງກັນຄວາມສະຫງົບ ແລະ ອົງການສືບສວນ-ສອບສວນ ພາສີ ໃນການຕິດຕາມເຄື່ອນຍ້າຍຂ້າມຊາດທີ່ ຊື້-ຂາຍ ຊົ້ນສ່ວນສັດປ່າຫ້ວງຫ້າມ.

ນອກຈາກນີ້, ອົງການຈັດຕັ້ງຫຼັກໃນການຈັດຕັ້ງປະຕິບັດກົນໄກ ກໍ່ຄື ກະຊວງກະສິກຳ ແລະ ປ່າໄມ້ ໄດ້ ອອກຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບ ການສືບສວນ-ສອບສວນ ການຟອກເງິນ ຄຽງຄູ່ກັບ ການກະທຳຜິດຕົ້ນ ສະບັບເລກທີ 2109/ກກປມ, ລົງວັນທີ 31 ທັນວາ 2019; ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມກວດກາປ່າໄມ້ ປີ 2022; ຂໍ້ຕົກລົງວ່າດ້ວຍ ການກວດກາ ແລະ ການດຳເນີນຄະດີ ກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້. ການຝຶກອົບຮົມໃຫ້ເຈົ້າໜ້າທີ່ກ່ຽວກັບ ເຕັກນິກໃນການ ສືບສວນ-ສອບສວນທາງດ້ານການເງິນ ແລະ ຈັດຕັ້ງປະຕິບັດການສືບສວນ-ສອບສວນການກະທຳຜິດຕົ້ນອາ ຊະຍາກຳທາງດ້ານສິ່ງແວດລ້ອມ ຄຽງຄູ່ກັບ ການສືບສວນ-ສອບສວນທາງດ້ານການເງິນ ເພື່ອໃຫ້ສອດຄ່ອງ ກັບພາລະບົດບາດໃໝ່. ພ້ອມນີ້, ທ່າອ່ຽງຂອງການຟອກເງິນທີ່ຈະເກີດຂຶ້ນຈາກອາຊະຍາກຳສັດນ້ຳ ແລະ ສັດປ່າ ຖືກກຳນົດເຂົ້າໃນແຜນດຳເນີນງານຂອງກະຊວງກະສິກຳ ແລະ ປ່າໄມ້ ປີ 2018-2025.

ທັງນີ້, ຜົນການສຳຫຼວດ ແລະ ສຳພາດເຈົ້າໜ້າທີ່ຜູ້ຈັດຕັ້ງປະຕິບັດຕົວຈິງໃນຂອບເຂດທົ່ວປະເທດ ພົບ ວ່າ: ເຈົ້າໜ້າທີ່ມີຄວາມເຂົ້າໃຈຄວາມສ່ຽງ, ກົນໄກວິທີການຕ້ານ ແລະ ນຳໃຊ້ມາດຕະການທາງບໍລິຫານ ຫຼື ທາງອາຍາຕໍ່ຜູ້ກະທຳຜິດໄດ້ດີສົມຄວນ. ໂດຍຜ່ານການຈັດຕັ້ງປະຕິບັດນິຕິກຳສະເພາະຈຳນວນໜຶ່ງທີ່ກຳນົດນິ ຍາມ ແລະ ກົນໄກຮູບແບບວິທີການຕ້ານສະກັດກັ້ນບັນຫາດັ່ງກ່າວ, ຊຶ່ງນິຕິກຳໄດ້ລະບຸໄວ້ໃນຂໍ້ 6 ໃນ ຂໍ້ 5.3.2.

**13)** ປະສິດທິພາບຂອງການດຳເນີນຄະດີ ແມ່ນຢູ່ໃນລະດັບ **ສູງ:** ເນື່ອງຈາກວ່າ ສປປ ລາວ ມີກົນໄກການບັງຄັບໃຊ້ ນິຕິກຳທີ່ກ່ຽວຂ້ອງໃນການດຳເນີນຄະດີ ເຊັ່ນ: ປະມວນກົດໝາຍອາຍາ ແລະ ນິຕິກຳຈຳນວນໜຶ່ງ ທີ່ອົງ ການຈັດຕັ້ງທີ່ກ່ຽວຂ້ອງໄດ້ນຳໃຊ້ໃນການຕ້ານ ສະກັດກັ້ນ ບັນຫາດັ່ງກ່າວ ໂດຍມີສະຖິຕິຢັ້ງຢືນດັ່ງທີ່ໄດ້ລະບຸ ໄວ້ໃນ ຂໍ້ 5.3.1. ນອກຈາກນີ້, ກະຊວງອົງການຈັດຕັ້ງ ທີ່ກ່ຽວຂ້ອງໄດ້ປັບປຸງ ແລະ ເພີ່ມພາລະບົດບາດໃນ ການສືບສວນ-ສອບສວນທາງດ້ານການເງິນ ເປັນຕົ້ນ:

- ກະຊວງປ້ອງກັນຄວາມສະຫງົບໄດ້ອອກຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 2767/ປກສ, ລົງວັນທີ 16 ທັນວາ 2019;

- ກົມພາສີ, ກະຊວງການເງິນ ໄດ້ອອກຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສືບສວນ-ສອບສວນ ການຟອກເງິນ ຄຽງຄູ່ກັບການກະທຳຜິດຕົ້ນ ສະບັບເລກທີ 09100/ກພສ, ລົງວັນທີ 18 ພະຈິກ 2019;
- ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບ ການສືບສວນ-ສອບສວນ ການຟອກເງິນ ຄຽງຄູ່ກັບການກະທຳຜິດຕົ້ນ ສະບັບເລກທີ 2109/ ກກປມ, ລົງວັນທີ 31 ທັນວາ 2019.

**14)** ປະສິດທິພາບຂອງການບັງຄັບໃຊ້ກົດໝາຍອາຍາ ແມ່ນຢູ່ໃນລະດັບ **<u>ກາງ-ສູງ:</u>** ເນື່ອງຈາກວ່າ ເຈົ້າໜ້າທີ່ໄອຍະການປະຊາຊົນ ແລະ ຜູ້ພິພາກສາ ຂອງ ສປປ ລາວ ມີການເຄື່ອນວຽກງານ ຢ່າງເປັນອິດສະລະ, ມີຊັບພະຍາກອນມະນຸດຢ່າງພຽງພໍ, ມີນິຕິກຳທີ່ຄຸ້ມຄອງຂອງສະເພາະ, ໄດ້ຮັບການຝຶກອົບຮົມວຽກງານທີ່ກ່ຽວຂ້ອງທັງພາຍໃນ-ຕ່າງປະເທດຢ່າງເປັນປົກກະຕິ ແລະ ນຳໃຊ້ງົບປະມານຂອງລັດ ໃນເຄື່ອນໄຫວວຽກຂອງຕົນຕາມແຜນວຽກ ແລະ ເຮັດບົດບາດ ຄື:

- ອົງການໄອຍະການປະຊາຊົນ ແມ່ນອົງການຕິດຕາມກວດກາຂອງລັດ, ມີພາລະບົດບາດຕິດຕາມ ແລະ ກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາລວມທັງການກະທຳຜິດ ຕໍ່ກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂຶ້ນສານ.
- ສານປະຊາຊົນ ແມ່ນອົງການຕຸລາການ, ມີພາລະບົດບາດດຳເນີນການພິຈາລະນາຕັດສິນ, ພິພາກສາຄະດີ ລວມທັງຄະດີກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ແນໃສ່ສຶກສາອົບຮົມພົນລະເມືອງ ປົກປັກຮັກສາສິດຜົນປະໂຫຍດອັນຊອບທຳຂອງ ພົນລະເມືອງ, ຮັບປະກັນຄວາມຍຸຕິທຳ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເພີ່ມທະວີນິຕິກຳ, ກຳຈັດ ແລະ ສະກັດກັ້ນ ການລະເມີດກົດໝາຍ. ໃນການໄຕ່ສວນ ແລະ ພິຈາລະນາຕັດສິນຄະດີ ສານມີຄວາມເປັນເອກະລາດ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

### 5.3.3. ສະຫຼຸບຜົນການປະເມີນ

ຜ່ານການປະເມີນທັງສາມດ້ານ ເຫັນວ່າ ຜົນການປະເມີນຄວາມສ່ຽງ ແລະ ຄວາມບອບບາງ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນຢູ່ໃນລະດັບ **<u>ກາງ-ສູງ,</u>** ເນື່ອງຈາກເຫັນວ່າ ສປປ ລາວ ມີກົດໝາຍ ແລະ ນິຕິກຳທີ່ເປັນເຄື່ອງມືໃນການຈັດເກັບລາຍຮັບ ທີ່ຮັດກຸມພໍສົມຄວນ ແລະ ສອດຄ່ອງກັບມາດຕະຖານສາກົນ. ເຖິງຢ່າງໃດກໍ່ຕາມ, ຍັງເຫັນວ່ານິຕິກຳ ແລະ ການບັງໃຊ້ກົນໄກການຈັດຕັ້ງປະຕິບັດວຽກງານຂອງບັນດາອົງການຈັດທີ່ກ່ຽວຂ້ອງ ແມ່ນຍັງບໍ່ທັນພຽງພໍ, ເຂັ້ມງວດ ແລະ ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດສັງຄົມ ເທົ່າທີ່ຄວນ. ນອກຈາກນີ້, ໃນພາກປະຕິບັດຕົວຈິງ ແມ່ນໃຊ້ມາດຕະການທາງບໍລິຫານ ເປັນຕົ້ນ: ການປັບໃໝ ແລະ ການທົດແທນຄືນ ຫຼື ການໃຊ້ແທນຄ່າເສຍຫາຍທາງແພ່ງ ເຮັດໃຫ້ບໍ່ມີຕົວເລກການດຳເນີນຄະດີທາງອາຍາ ແລະ ສະຖິຕິການກະທຳຜິດຕົ້ນ ລວມທັງການຟອກເງິນ ກ່ຽວກັບການກະທຳຜິດຕິດພັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

# VI. ຂະແໜງການທີ່ມີຄວາມສ່ຽງ

ສປປ ລາວ ໄດ້ດຳເນີນການປະເມີນຄວາມສ່ຽງບັນດາຂະແໜງການບຸລິມະສິດ 03 ຂະແໜງການ ທີ່ມີຄວາມສ່ຽງຕໍ່ການຟອກເງິນ ດັ່ງນີ້:

## 6.1. ຂະແໜງກາຊີໂນ

### 6.1.1. ພາບລວມ

ການປະເມີນຄວາມສ່ຽງແຫ່ງຊາດດ້ານການຟອກເງິນ ຂອງຂະແໜງກາຊີໂນແມ່ນການຈັດຕັ້ງປະຕິບັດຕາມຂໍ້ແນະນຳ 40 ຂໍ້ຂອງອົງການຕ້ານການຟອກເງິນສາກົນ, ຊຶ່ງ ມີຈຸດປະສົງ ເພື່ອຊອກໃຫ້ເຫັນບັນດາຄວາມສ່ຽງໂດຍລວມ ໃນຂະແໜງດັ່ງກ່າວ, ເປັນຕົ້ນຕິດພັນກັບ ອົງການຄຸ້ມຄອງກາຊີໂນ ພ້ອມທັງຈັດລຽງແຜນການດຳເນີນງານ ເພື່ອແກ້ໄຂຄວາມສ່ຽງທີ່ເປັນບຸລິມະສິດ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງວຽກງານຕ້ານການຟອກເງິນ ໃນຂະແໜງກາຊີໂນ.

ປະຈຸບັນ ສປປ ລາວ ປະກອບມີ ກະຊີໂນ 04 ແຫ່ງ ຄື: ບໍລິສັດ ສະຫວັນລີເຈນ ອິນເວສເມັ້ນ ຈຳກັດຜູ້ດຽວ ທີ່ແຂວງ ສະຫວັນນະເຂດ, ບໍລິສັດ ລາວ-ຊຸນຢູແອນ ພັດທະນາລີສອດ ຈຳກັດ (ແດນສະຫວັນນ້ຳທຶ່ມລີສອດ) ທີ່ແຂວງ ວຽງຈັນ, ບໍລິສັດ ເອັດສທີ ເວກັດ ທີ່ນະຄອນຫຼວງວຽງຈັນ ແລະ ກຸ່ມບໍລິສັດ ບັນເທີງດອກງໍ້ຄຳ ຈຳກັດ (ອາລູຊີ) ທີ່ແຂວງບໍ່ແກ້ວ, ການຄຸ້ມຄອງວຽກງານ ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນໄລຍະຜ່ານ ສຳນັກງານຂໍ້ມູນຕ້ານການຟອກເງິນ ຮ່ວມກັບ ກົມສົ່ງເສີມການລົງທຶນ ແລະ ຫ້ອງການຄຸ້ມຄອງເຂດເສດຖະກິດພິເສດ, ກະຊວງແຜນການ ແລະ ການລົງທຶນ ໄດ້ລົງກວດກາປະຈຳປີ, ຊຶ່ງໄດ້ກວດກາການຈັດຕັ້ງປະຕິບັດພັນທະຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ຂະແໜງການລັດ ທີ່ຄຸ້ມຄອງກາຊີໂນ ປະຈຸບັນ ແມ່ນເປັນຄວາມຮັບຜິດຊອບໂດຍກົງ ຂອງກະຊວງການເງິນ ຕາມ ສິດ, ໜ້າທີ່ ແລະ ພາລະບົດບາດ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 353/ນຍ, ລົງວັນທີ 2 ສິງຫາ 2024 ແລະ ສຳລັບກົມກ່ຽວຂ້ອງ ທີ່ຮັບຜິດຊອບວິຊາສະເພາະຄຸ້ມຄອງກາຊີໂນຮອບດ້ານ ຂອງກະຊວງເງິນແມ່ນ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສະບັບເລກທີ 2789/ກງ, ລົງວັນທີ 2 ສິງຫາ 2024; ຊຶ່ງກະຊວງການເງິນ ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງວຽກງານກາຊີໂນຢ່າງລວມສູນໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນການພິຈາລະນາກ່ຽວກັບ ການສ້າງ ແລະ ປັບປຸງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍທີ່ກ່ຽວຂ້ອງ ຂອງວຽກງານກາຊີໂນ, ຮັບຮອງເອົາລະບຽບການກ່ຽວກັບ ວຽກງານກະຊີໂນ, ຮັບຮອງເອົາການອະນຸຍາດສ້າງຕັ້ງ ຫຼື ຍຸບເລີກກາຊີໂນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ. ຊຶ່ງມີເຄື່ອງມືໃນການຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວວຽກງານກາຊີໂນແມ່ນ ດຳລັດວ່າດ້ວຍການຄຸ້ມຄອງທຸລະກິດກາຊີໂນ ແລະ ນິຕິກຳໃຕ້ກົດໝາຍ ເຊັ່ນ: ຮ່າງຄຳແນະນຳ ຂອງລັດຖະມົນຕີກະຊວງເງິນ ວ່າດ້ວຍການຄຸ້ມຄອງ ແລະ ການອອກອະນຸຍາດການດຳເນີນທຸລະກິດ ກາຊີໂນ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ ທີ່ເປັນບ່ອນອີງໃນການຄຸ້ມຄອງວຽກງານດັ່ງກ່າວ.

ຈຸດປະສົງຂອງການປະເມີນຂະແໜງກາຊີໂນ ເພື່ອ:

- ລະບຸຄວາມບອບບາງໂດຍລວມຂອງຂະແໜງການກາຊີໂນ;
- ລະບຸຄວາມບອບບາງ ແລະ ຊ່ອງຫວ່າງ ທາງດ້ານຜະລິດຕະພັນ, ການໃຫ້ບໍລິການ ແລະ ຊ່ອງທາງການບໍລິການ;
- ສ້າງແຜນຈັດຕັ້ງປະຕິບັດຕາມບຸລິມະສິດ ເພື່ອຄວາມເຂັ້ມແຂງໃນການຄຸ້ມຄອງວຽກງານຕ້ານການຟອກເງິນ ໃນຂະແໜງການກາຊີໂນ.

### 6.1.2. ການດຳເນີນການປະເມີນຄວາມສ່ຽງ

**1. ການປະເມີນຄວາມສ່ຽງ ດ້ານຄວາມບອບບາງ**

ການປະເມີນໃນຂະແໜງການຊີໂນແມ່ນອີງໃສ່ 12 ຕົວປ່ຽນດ້ານວຽກງານຕ້ານການຟອກເງິນຄື: 1) ຄວາມສົມບູນຂອງກອບນິຕິກຳ ດ້ານການຕ້ານການຟອກເງິນ, 2) ປະສິດທິຜົນຂອງຂັ້ນຕອນກວດກາ ແລະ ຫລັກການປະຕິບັດຕ່າງໆ, 3) ການສະໜອງ ແລະ ການບັງຄັບໃຊ້ຂອງການລົງໂທດດ້ານບໍລິຫານ, 4) ການສະໜອງ ແລະ ການບັງຄັບໃຊ້ຂອງການລົງໂທດດ້ານອາຍາ, 5) ປະສິດທິຜົນຂອງການຄວບຄຸມເງື່ອນໄຂອະນຸຍາດໃຫ້ສ້າງຕັ້ງ, 6) ຄວາມຊື່ສັດຂອງພະນັກງານທີ່ຮັບຜິດຊອບວຽກງານການຊີໂນ, 7) ຄວາມຮູ້ ຂອງພະນັກງານ ການຊີໂນ ທາງດ້ານການຕ້ານການຟອກເງິນ,8) ປະສິດທິຜົນການຈັດຕັ້ງປະຕິບັດຕາມສິດ ແລະ ພັນທະ, 9) ປະສິດທິຜົນຂອງການລາຍງານ ແລະ ການກວດສອບກົດຈະກຳທີ່ຫນ້າສົງໄສ, 10) ການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວຂອງ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ, 11) ການສະໜອງພື້ນຖານໂຄງລ່າງດ້ານຫຼັກຖານທີ່ເຊື່ອຖືໄດ້, 12) ການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານເອກະລາດ. ການໃຫ້ຄະແນນແຕ່ລະຕົວປ່ຽນ ແມ່ນການໃຫ້ຄະແນນບົນພື້ນຖານຄວາມຄົບຖ້ວນຂອງກອບນິຕິກຳ, ລະບຽບພາຍ, ການຈັດຕັ້ງປະຕິບັດຕົວຈິງ, ຄວາມຮູ້ຄວາມເຂົ້າໃຈ ແລະ ການປະຕິບັດບັນດາມາດຕະການທາງບໍລິຫານ ແລະ ທາງຍາອາ ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**2. ການປະເມີນຄວາມບອບບາງທາງດ້ານຜະລິດຕະພັນ**

ການປະເມີນຄວາມສ່ຽງທາງດ້ານຜະລິດຕະພັນ ແມ່ນອີງໃສ່ 11 ຕົວປ່ຽນ ຄື: 1) ຂະໜາດ/ປະລິມານທັງໝົດ, 2) ປະຫວັດຫຍໍ້ລູກຄ້າ, 3) ລະດັບຂອງກົດຈະກຳເງິນສົດ, 4) ການນຳໃຊ້ຕົວແທນ, 5) ການນຳໃຊ້ຜະລິດຕະພັນແບບປົກປິດຊື່, 6) ຄວາມຫຍຸ້ງຍາກໃນການກວດຄົ້ນທຸລະກຳຂອງຜະລິດຕະພັນ, 7) ການປະເມີນທ່າອ່ຽງຂອງການຟອກເງິນທີ່ອາດຈະຖືກສວຍໃຊ້, 8) ການນຳໃຊ້ຜະລິດຕະພັນເພື່ອຫຼົບຫຼີກອາກອນ ແລະ ສໍ້ໂກງ, 9) ການນຳໃຊ້ຜະລິດຕະພັນແບບບໍ່ສ່ອງໜ້າກັນ, 10) ການໃຫ້ບໍລິການ Junket Operator , 11) ການເງິນໂອນ.

### 6.1.3. ຜົນການປະເມີນ

**1. ການປະເມີນຄວາມສ່ຽງດ້ານຄວາມບອບບາງ**

**1) ຄຸນນະພາບຂອງການຄວບຄຸມວຽກງານຕ້ານການຟອກເງິນທົ່ວໄປ**

ປະຈຸບັນ ສປປ ລາວ ແມ່ນມີກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ ທີ່ເປັນເຄື່ອງມືໃນການຄຸ້ມຄອງ, ເຖິງຢ່າງໃດກໍ່ຕາມຕໍ່ກັບການຄຸ້ມຄອງວຽກງານຕ້ານການຟອກເງິນ ແຕ່ຕົວຈິງແມ່ນຍັງຢູ່ພາຍໃຕ້ຂັ້ນຕອນການສ້າງກົນໄກການຈັດຕັ້ງປະຕິບັດ ແລະ ລະບົບຮອບດ້ານ, ຊຶ່ງຈຳເປັນຕ້ອງໄດ້ມີການການສ້າງນິຕິກຳໃຕ້ກົດໝາຍ ແລະ ຄູ່ມືການຄຸ້ມຄອງ ເພື່ອເປັນເຄື່ອງມືລະອຽດໃນການກວດກາ ແລະ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດ ສິດ ແລະ ພັນທະຂອງຕົນຕໍ່ກັບວຽກງານຕ້ານການຟອກເງິນ ຢູ່ໃນຂະແໜງການຊີໂນ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**2) ຄຸນນະພາບຂອງການເຄື່ອນໄຫວທຸລະກິດການຊີໂນ**

ໃນໄລຍະຜ່ານມາ ການຂໍອະນຸຍາດດຳເນີນທຸລະກິດການຊີໂນ ແມ່ນຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອອກໃບອະນຸຍາດເຄື່ອນໄຫວທຸລະກິດ ໂດຍການພິຈາລະນາ ແມ່ນອີງໃສ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ຄູ່ມື ແລະ ການກວດກາເອກະສານ, ຂໍ້ມູນ ເພື່ອເປັນບ່ອນອີງໃນການພິຈາລະນາຄົ້ນໃນການອອກໃບອະນຸຍາດໃນແຕ່ລະຄັ້ງ ລວມທັງມີການກວດສອບປະຫວັດ ແລະ ແຫຼ່ງທີ່ມາຂອງທຶນ ຂອງຜູ້ມາຂໍສ້າງຕັ້ງ ແຕ່ບໍ່ໄດ້ດຳເນີນການກວດສອບກ່ຽວກັບປະຫວັດການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ສຶມທຶບກັບກະຊວງກ່ຽວຂ້ອງໃນການຕິດຕາມ ແລະ ກວດກາ ລວມ ທັງໄດ້ຈັດຝຶກອົບຮົມໃຫ້ກັບພະນັກງານກາຊິໂນ ເພື່ອຮູ້ເຖິງພາລະບົດບາດ ແລະ ສິດພັນທະ ກ່ຽວກັບວຽກງານ ການ ຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງຕົນເອງ ແລະ ຂອງຂະແໜງກາຊິໂນ. ນອກຈາກນີ້ກໍ່ໄດ້ເນັ້ນໜັກເລື່ອງການຮັກສາຄວາມລັບຂອງການລາຍງານ ແລະ ມາດຕະການຕໍ່ຜູ້ລະເມີດ.

ນອກຈາກນີ້, ມາດຕະການລົງໂທດທາງອາຍາ ແມ່ນໄດ້ກຳນົດການລົງໂທດທາງອາຍາຈະແຈ້ງໃນກົດໝາຍ ວ່າ ດ້ວຍການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຖິງຢ່າງໃດກໍ່ຕາມ ໄລຍະຜ່ານມາແມ່ນບໍ່ມີ ການກະທຳຜິດທາງອາຍາໃນຂະແໜງກາຊິໂນ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**3) ຄຸນນະພາບຂອງການຄຸ້ມຄອງວຽກງານການຕ້ານການຟອກເງິນ**

ໃນໄລະຜ່ານມາ ສຳນັກງານຂໍ້ມູນຕ້ານການຟອກເງິນ ຮ່ວມກັບ ກົມ ສົ່ງເສີມການລົງທຶນ ແລະ ຫ້ອງການຄຸ້ມ ຄອງເຂດເສດຖະກິດພິເສດ ກະຊວງແຜນການ ແລະ ການລົງທຶນ ໄດ້ລົງກວດກາປະຈຳປີ ທຸກປີ ເນື່ອງຈາກຂະແໜງ ການດັ່ງກ່າວນອນໃນຄວາມສ່ຽງສູງ ຜ່ານການຕິດຕາມກວດກາ ທາງດ້ານເອກະສານ ຫຼື ການລົງກວດກາກັບທີ່ ເພື່ອ ກວດກາການຈັດຕັ້ງປະຕິບັດ ພັນທະຕາມທີ່ໄດ້ກຳນົດໃນກົດໝາຍ ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການ ກໍ່ການຮ້າຍ ແລະ ລວມທັງການຊ່ວຍໃນການສ້າງຄູ່ມືການກວດກາສຳລັບຂະແໜງການດັ່ງກ່າວ. ປະຈຸບັນ ວຽກງານ ການຄຸ້ມຄອງ ແລະ ລົງຕິດຕາມກວດກາວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ ເປັນຜູ້ຮັບຜິດຊອບ.

ນອກຈາກນີ້ ຜ່ານການປະຕິບັດຕົວຈິງໃນໄລຍະຜ່ານມາ ກໍ່ເຫັນວ່າ ຍັງບໍ່ທັນກຳນົດຊັດເຈນກ່ຽວກັບຜູ້ຄຸ້ມຄອງ ຂະແໜງການດັ່ງກ່າວ ຈຶ່ງອາໄສບຸກຄະລາກອນໃນການຕິດຕາມກວດກາ ຈາກ ສຳນັກງານຂໍ້ມູນຕ້ານການຟອກເງິນ ເຊິ່ງເຫັນວ່າຍັງບໍ່ທັນພຽງພໍຖ້າທຽບໃສ່ໜ້າວຽກ.

ການປະຕິບັດມາດຕະການທາງບໍລິຫານກໍ່ໄດ້ກຳນົດຈະແຈ້ງໃນກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຂໍ້ຕົ້ງລົງວ່າດ້ວຍມາດຕະການທາງບໍລິຫານສຳລັບຫ້ວໜ່ວຍທີ່ມີໜ້າທີ່ ລາຍງານ, ໃນໄລຍະຜ່ານມາແມ່ນໄດ້ມີການນຳໃຊ້ມາດຕະການທາງບໍລິຫານ ກໍ່ຄືການແຈ້ງເຕືອນຕໍ່ກັບກາຊິໂນທີ່ບໍ່ ເອົາໃຈໃສ່ຈັດຕັ້ງປະຕິບັດພັນທະຂອງຕົນ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**4) ຄຸນນະພາບຂອງການກວດກາ ແລະ ຂັ້ນຕອນຂອງວຽກງານຕ້ານການຟອກເງິນ**

ກາຊິໂນທັງ 4 ແຫ່ງ ມີການແຕ່ງຕັ້ງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ກ່ຽວກັບວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ເຊິ່ງມີຂັ້ນຮອງອຳນວຍການເປັນຫົວໜ້າຄະນະ. ພ້ອມດຽວ ກັນນີ້ມີກາຊິໂນບາງແຫ່ງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດພັນທະຂອງຕົນຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ: ການສ້າງລະບຽບ, ມີການຈັດຝຶກອົບຮົມ ໃຫ້ຄວາມຮູ້ກັບພະນັກງານ, ມີການລາຍງານທຸລະກຳທີ່ສົງໄສມາຍັງ ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ມີການຊື້ ລະບົບເຕັກໂນໂລຊີທີ່ທັນສະໄໝໃນການກວດກາລາຍຊື່ຕ່າງໆ. ເຖິງຢ່າງໃດກໍ່ຕາມ ກໍ່ຍັງມີກາຊິໂນຈຳນວນໜຶ່ງທີ່ຍັງບໍ່ ທັນເຂົ້າໃຈກ່ຽວກັບພັນທະຂອງຕົນ, ຍັງບໍ່ມີການສ້າງລະບຽບພາຍໃນ, ບໍ່ມີການຝຶກອົບຮົມໃຫ້ກັບພະນັກງານ, ບໍ່ມີ ການປະເມີນຄວາມສ່ຽງພາຍໃນຂອງຕົນ, ບໍ່ມີການກວດສອບພາຍໃນ ແລະ ພາຍນອກ ແລະ ບໍ່ມີລະບົບທີ່ທັນສະໄໝ ໃນການກວດກາລາຍຊື່ລູກຄ້າ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**5) ຄຸນນະພາບຂອງການຈັດຕັ້ງປະຕິບັດ ການເພີ່ມທະວີເອົາໃຈໃສ່ຊອກຮູ້ລູກຄ້າ**

ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ອອກຂໍ້ຕົກລົງວ່າດ້ວຍມາດຕະການ ການເອົາໃຈໃສ່ລູກຄ້າ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອເປັນບ່ອນອີງໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ດຳເນີນການຊອກຮູ້ລູກຄ້າ ແລະ ເພີ່ມທະວີເອົາໃຈໃສ່ລູກຄ້າ. ເຊິ່ງໃນການຈັດຕັ້ງປະຕິບັດຕົວຈິງຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານແມ່ນພົບຄວາມຫຍຸ້ງຍາກໃນການຢັ້ງຢືນຄວາມຖືກຕ້ອງຂໍ້ມູນ, ເອກະສານຢັ້ງຢືນຕົນຕ່າງໆ, ການເຂົ້າເຖິງຂໍ້ມູນຂອງຜູ້ຮັບຜິນປະໂຫຍດທີ່ແທ້ຈິງ ແລະ ຂໍ້ມູນໂຄງລ່າງພື້ນຖານ, ພ້ອມທັງຍັງຂາດແຫຼ່ງຂໍ້ມູນເອກະລາດ ແລະມີ ຄວາມໜ້າເຊື່ອຖື. ການເຂົ້າເຖິງແຫຼ່ງຂໍ້ມູນທີ່ເປັນເອກະລາດຍັງມີຂອບເຂດຈຳກັດ ແລະ ການສະໜອງຂໍ້ມູນມີຄວາມຫຼ້າຊ້າ ເນື່ອງຈາກວ່າການເກັບກຳຂໍ້ມູນຂອງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ເປັນລະບົບຄົບຊຸດ ແລະ ບໍ່ທັນສະໄໝ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**6) ຄຳໝາຍໝັ້ນ ແລະ ຄວາມເປັນຜູ້ນຳຂອງການຄຸ້ມຄອງ**

ໃນໄລຍະຜ່ານມາ ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ມີການສ້າງນິຕິກຳຈຳນວນໜຶ່ງ ເພື່ອເປັນເຄື່ອງມືໃນການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ເຊິ່ງເປັນເຄື່ອງມືພື້ນຖານໃຫ້ກັບຫົວໜ້າໜ່ວຍທັງໝົດ, ເຊິ່ງການຈັດຕັ້ງປະຕິບັດຕົວຈິງຍັງພົບຄວາມຫຍຸ້ງຍາກ ແລະ ບໍ່ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງຂອງແຕ່ລະຂະແໜງການ, ແຕ່ເຖິງຢ່າງໃດກໍ່ຕາມ ແຕ່ປັດຈຸບັນອີງໃສ່ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ ໃນປີ 2024 ຊຶ່ງໄດ້ກຳນົດຊັດເຈນຜູ້ຄຸ້ມຄອງຂະແໜງການດັ່ງກ່າວກໍ່ຄື ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ ເປັນຜູ້ຄຸ້ມຄອງການຊີໂນ. ໃນນັ້ນ ກົມດັ່ງກ່າວໄດ້ກະກຽມຮັບຮອງບັນດານິຕິກຳທີ່ຈະໃຊ້ຄຸ້ມຄອງວຽກງານຕ້ານການຟອກເງິນ ໃນຂະແໜງການຊີໂນ ເຊັ່ນ: ລະບຽບກ່ຽວກັບຂັ້ນຕອນອອກໃບອະນຸຍາດ, ຄູ່ມືກວດກາ, ຄູ່ມືປະເມີນຄວາມສ່ຽງ ຕາມຫຼັກການບໍລິຫານຄວາມສ່ຽງ, ຂໍ້ຕົກລົງວ່າດ້ວຍມາດຕະການ ການເອົາໃຈໃສ່ລູກຄ້າ ແລະ ອື່ນໆ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ.</u>**

**7) ລະດັບການປະຕິບັດຕາມລະບຽບກົດໝາຍຂອງພະນັກງານ**

ມີພຽງ ຜູ້ບໍລິຫານ ແລະ ພະນັກງານ ຂະແໜງການຊີໂນ ທີ່ຮັບຜິດຊອບວຽກງານຕ້ານການຟອກເງິນ ທີ່ຮູ້ ແລະ ເຂົ້າໃຈ ເຖິງຜົນກະທົບ ຕໍ່ກັບຄວາມສ່ຽງ**,** ຊື່ສຽງ**,** ພາບພົດ ແລະ ມາດຕະການຕ່າງໆ ຂອງຕົນທີ່ຕິດພັນກັບວຽກງານຕ້ານການຟອກເງິນ.

ສ່ວນພະນັກງານຜູ້ອື່ນ ແມ່ນຍັງບໍ່ທັນໄດ້ຮັບຮູ້ ແລະ ເຂົ້າໃຈ ຍ້ອນບໍ່ໄດ້ຮັບການຝຶກອົບຮົມ ວຽກງານຕ້ານການຟອກເງິນ ຊຶ່ງຖືເປັນໜ້າວຽກໃໝ່ໃນຂະແໜງການຊີໂນ, ນອກຈາກນັ້ນ ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ເອກະສານຈຳເປັນໃນການສຶກສາຄົ້ນຄ້ວາຍັງບໍ່ທັນຫຼາຍ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**2. ການປະເມີນຄວາມບອບບາງທາງດ້ານຜະລິດຕະພັນ**

ສຳລັບຜົນການປະເມີນຄວາມບອບບາງທາງດ້ານຜະລິດຕະພັນ ອີງໃສ່ຕົວປ່ຽນເຫັນວ່າ ຜະລິດຕະພັນໂຕະໄພ້ (Table games) ຢູ່ໃນລະດັບ **<u>ກາງ-ສູງ</u>** ແລະ ຜະລິດຕະພັນຕູ້ເກມ (Slot machine) ຢູ່ ລະດັບ **<u>ສູງ.</u>**

**1)** ຜ່ານການເກັບກຳຂໍ້ມູນການໃຫ້ການບໍລິການ ຜະລິດຕະພັນໂຕະໄພ້ ເຫັນວ່າ: ຜະລິດຕະພັນດັ່ງກ່າວໄດ້ມີການໃຫ້ບໍລິການຈຳນວນຫຼາຍ ຊຶ່ງໄດ້ຮັບຄວາມນິຍົມຈາກຜູ້ທີ່ມາໃຊ້ບໍລິການຫຼາຍລະດັບ ແລະ ມີເງິນໝຸນວຽນເປັນຈຳນວນຫຼາຍ. ກ່ອນຈະນຳໃຊ້ບໍລິການ ຜະລິດຕະພັນໂຕະໄພ້ ຕ້ອງໄດ້ມີການແລກຊິບແທນເງິນສົດທຸກຄັ້ງ ເຊິ່ງເປັນຂັ້ນຕອນທີ່

ສຳຄັນທີ່ສາມາດກວດສອບ ແລະ ຕິດຕາມການໝຸນວຽນຂອງເງິນໄດ້ຢ່າງມີປະສິດທິພາບ. ດ້ວຍເຫດນີ້, ຄວາມບອບບາງທາງດ້ານຜະລິດຕະພັນໂຕະໄພ້ ຈຶ່ງຖືກຈັດລະດັບ **<u>ກາງ-ສູງ.</u>**

**2)** ຜ່ານການເກັບກຳຂໍ້ມູນການໃຫ້ການບໍລິການ ຜະລິດຕະພັນຕູ້ເກມ ເຫັນວ່າ: ຜະລິດຕະພັນຕູ້ເກມ ມີການອະນຸຍາດໃຫ້ຜູ້ໃຊ້ບໍລິການນຳໃຊ້ເງິນສົດໃນການຫຼິ້ນໂດຍກົງ ຊຶ່ງເປັນປັດໄຈທີ່ເຮັດໃຫ້ມີການໝຸນວຽນຂອງເງິນສົດຈຳນວນຫຼາຍ ແລະ ມີໂອກາດທີ່ຈະສວຍໃຊ້ເງິນສົດເຂົ້າໃນທຸລະກຳອື່ນບໍ່ສາມາດກວດສອບໄດ້. ດ້ວຍເຫດນີ້, ຄວາມບອບບາງທາງດ້ານຜະລິດຕະພັນຕູ້ເກມ ຈຶ່ງຖືກຈັດຢູ່ໃນລະດັບ **<u>ສູງ.</u>**

### 3. ສະຫຼຸບຜົນການປະເມີນຄວາມສ່ຽງໃນຂະແໜງການ ກາຊີໂນ

ຜ່ານການປະເມີນຄວາມສ່ຽງລະດັບຊາດຂອງຂະແໜງ ກາຊີໂນ ກ່ຽວກັບວຽກງານ ການຕ້ານ ການຟອກເງິນ ແມ່ນເຫັນວ່າຢູ່ໃນລະດັບ **<u>ສູງ.</u>** ເນື່ອງຈາກວ່າການປະຕິບັດພັນທະຕາມກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງຂະແໜງກາຊີໂນຍັງບໍ່ໄດ້ດີເທົ່າທີ່ຄວນເຊັ່ນ: ຄະນະຜູ້ອຳນວຍການ ແລະ ພະນັກງານ ຍັງບໍ່ເຂົ້າໃຈພັນທະຂອງຕົນກ່ຽວກັບວຽກງານການຕ້ານ ສະກັດກັ້ນ ການຟອກເງິນ, ຍັງບໍ່ມີການສ້າງລະບຽບພາຍໃນ, ຂາດການສ້າງແຜນງານໃນການຈັດຕັ້ງປະຕິບັດວຽກງານ, ຂາດການການກວດສອບການທັງພາຍໃນ ແລະ ພາຍນອກ, ຍັງບໍ່ມີການຝຶກອົບຮົມໃຫ້ຄວາມຮູ້ກັບພະນັກງານໃນກາຊີໂນເປັນປະຈຳ, ບໍ່ມີການລາຍງານທຸລະກຳເງິນທີ່ມີມູນຄ່າເກີນກຳນົດ ແລະ ທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຢ່າງເປັນປົກກະຕິ ແລະ ນອກຈາກນີ້, ຍັງບໍ່ມີຜູ້ຄຸ້ມຄອງທີ່ຊັດເຈນ ແລະ ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ ແມ່ນອີງຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ໃບທະບຽນສຳປະທານ ຂອງກະຊວງ ແຜນການ ແລະ ການລົງທຶນ ວ່າງອອກ, ການລົງໂທດທາງອາຍາກ່ຽວກັບການຟອກເງິນ ທີ່ຕິດພັນກັບ ກາຊີໂນ ໃນປັດຈຸບັນແມ່ນຍັງບໍ່ທັນມີເກີດຂຶ້ນ ສະນັ້ນ, ເຫັນໄດ້ວ່າ: ການຈັດປະຕິບັດວຽກງານ ຕ້ານການຟອກເງິນ ໃນຂະແໜງກາຊີໂນແມ່ນມີຄວາມບອບບາງ ແລະ ເປັນຊ່ອງຫວ່າງໃຫ້ອາດສະຍາກອນມາສວຍໃຊ້ໄດ້.

## 6.2. ຂະແໜງການທະນາຄານ

### 6.2.1. ພາບລວມ

ຮອດເດືອນທັນວາ ປີ 2023 ຂະແໜງການທະນາຄານໃນ ສປປ ລາວ ປະກອບມີທະນາຄານ 38 ແຫ່ງ ເຊິ່ງປະກອບມີ: ທະນາຄານທຸລະກິດລັດ 01 ແຫ່ງ, ທະນາຄານສະເພາະກິດ 01 ແຫ່ງ, ທະນາຄານທຸລະກິດລັດຮ່ວມທຶນ 05 ແຫ່ງ, ທະນາຄານເອກະຊົນ 07 ແຫ່ງ, ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ 08 ແຫ່ງ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ 16 ແຫ່ງ (01 ແຫ່ງ ຢູ່ໃນຂັ້ນຕອນການຍຸບເລີກເພື່ອຮ່ວມເຂົ້າກັນ), ມີສາຂາທະນາຄານທຸລະກິດ 116 ສາຂາ, 549 ໜ່ວຍບໍລິການ, 35 ໜ່ວຍແລກປ່ຽນ, ຫ້ອງຜູ້ປະສານງານ 05 ຫ້ອງ ແລະ ຕູ້ເອທີເອັມ 1,493 ຕູ້.

ໃນປີ 2023 ທະນາຄານທຸລະກິດມີ ຍອດຊັບສິນທັງໝົດ 381,546.81 ຕື້ກີບ, ເງິນຝາກ 243,719.60 ຕື້ກີບ ແລະ ສິນເຊື່ອ 166,089.74 ຕື້ກີບ.

ໃນທ້າຍປີ 2023 ທະນາຄານທຸລະກິດມີຍອດຊັບສິນທັງຫມົດກວມເອົາ 144% ຂອງ GDP[2] ເຫັນວ່າຂະແໜງການທະນາຄານມີແຫຼ່ງທຶນໝຸນວຽນໃນລະບົບເສດຖະກິດຈຳນວນຫຼາຍ, ປະຈຸບັນທະນາຄານທຸລະກິດໄດ້ມີການປັບປຸງ ແລະ ພັດທະນາລະບົບການບໍລິການໃຫ້ມີຫຼາຍຮູບແບບຜະລິດຕະພັນ ແລະ ຫັນເປັນທັນສະໄໝຫຼາຍຂຶ້ນເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງການບໍລິການໃນຂະແໜງການເງິນເຮັດໃຫ້ການນຳໃຊ້ບໍລິການໃນຂະ

[2] ອີງຕາມຂໍ້ມູນທີ່ເປີດເຜີຍ ແລະ ບົດລາຍເສດຖະກິດ ປີ 2023 ຂອງທະນາຄານ ແຫ່ງ ສປປ ລາວ

ແໜງການທະນາຄານມີການຂະຫຍາຍຕົວເພີ່ມຂຶ້ນໃນແຕ່ລະປີ ຈຶ່ງເຮັດໃຫ້ຂະແໜງການທະນາຄານມີຄວາມສ່ຽງອາດຈະຖືກສວຍໃຊ້ເພື່ອຟອກເງິນ.

ຈຸດປະສົງ ຂອງການປະເມີນຄວາມສ່ຽງຂະແໜງທະນາຄານ ແມ່ນການປະເມີນ ແລະ ທົບທວນຄືນ ເພື່ອໃຫ້ເຫັນໄດ້ການປ່ຽນແປງ ດ້ານໄພຂົ່ມຂູ່ ດ້ານການຟອກເງິນ ແລະ ດ້ານຄວາມບອບບາງ :

- ລະບຸຄວາມບອບບາງໂດຍລວມຂອງຂະແໜງການທະນາຄານ;
- ລະບຸຄວາມບອບບາງ ແລະ ຊ່ອງຫວ່າງ ທາງດ້ານຜະລິດຕະພັນ, ການໃຫ້ບໍລິການ ແລະ ຊ່ອງທາງການບໍລິການ;
- ສ້າງແຜນຈັດຕັ້ງປະຕິບັດຕາມບູລິມະສິດ ເພື່ອຄວາມເຂັ້ມແຂງໃນການຄວບຄຸມວຽກງານຕ້ານການຟອກເງິນໃນຂະແໜງການທະນາຄານ.

### 6.2.2. ການດຳເນີນການປະເມີນຄວາມສ່ຽງ

#### 1. ການປະເມີນຄວາມສ່ຽງທາງດ້ານຄວາມບອບບາງຂະແໜງການທະນາຄານ

ການປະເມີນຄວາມສ່ຽງຂະແໜງການທະນາຄານ ແມ່ນອີງໃສ່ 13 ຕົວປ່ຽນຄື: 1) ຄວາມສົມບູນຂອງກອບນິຕິກຳ ດ້ານການຕ້ານການຟອກເງິນ, 2) ປະສິດທິຜົນຂອງຂັ້ນຕອນກວດກາ ແລະ ຫລັກການປະຕິບັດຕ່າງໆ, 3) ການສະໜອງ ແລະ ການບັງຄັບໃຊ້ຂອງການລົງໂທດດ້ານບໍລິຫານ, 4) ການສະໜອງ ແລະ ການບັງຄັບໃຊ້ຂອງການລົງໂທດດ້ານອາຍາ, 5) ປະສິດທິຜົນຂອງການຄວບຄຸມເງື່ອນໄຂອະນຸຍາດໃຫ້ສ້າງຕັ້ງ, 6) ຄວາມຊື່ສັດຂອງພະນັກງານທະນາຄານ, 7) ຄວາມຮູ້ ຂອງພະນັກງານ ທະນາຄານ ທາງດ້ານການຕ້ານການຟອກເງິນ, 8) ປະສິດທິຜົນການຈັດຕັ້ງປະຕິບັດຕາມສິດ ແລະ ພັນທະ, 9) ປະສິດທິຜົນຂອງການລາຍງານ ແລະ ການກວດສອບທຸລະກຳທີ່ຫນ້າສົງໄສ, 10) ລະດັບຂອງຄວາມກົດດັນທາງຕະຫຼາດເພື່ອປະຕິບັດຕາມມາດຕະຖານ, 11) ການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວຂອງ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ, 12) ການສະໜອງພື້ນຖານໂຄງລ່າງດ້ານຫຼັກຖານທີ່ເຊື່ອຖືໄດ້, 13) ການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານເອກະລາດ.

#### 2. ການປະເມີນຄວາມສ່ຽງທາງດ້ານຜະລິດຕະພັນທະນາຄານ

ການປະເມີນຄວາມສ່ຽງທາງດ້ານຜະລິດຕະພັນແມ່ນອີງໃສ່ 12 ຕົວປ່ຽນຄື: 1) ມູນຄ່າທັງໝົດ, 2) ຂະໜາດການດຳເນີນທຸລະກຳສະເລ່ຍ, 3) ຂໍ້ມູນພື້ນຖານລູກຄ້າ, 4) ຄຸນລັກສະນະ, 5) ລະດັບຂອງກິດຈະກຳເງິນສົດ, 6) ຄວາມຖີ່ຂອງການດຳເນີນທຸລະກຳສາກົນ, 7) ປັດໄຈທີ່ມີຄວາມສ່ຽງອື່ນໆ ເປັນຕົ້ນແມ່ນ ການນຳໃຊ້ທີ່ປົກປິດຊື່, 8) ການມີຕົວຕົນຂອງປະເພດການຟອກເງິນຕໍ່ກັບການລະເມີດ, 9) ການນຳໃຊ້ຜະລິດຕະພັນ/ບໍລິການໃນແຜນການສໍ້ໂກງ ຫຼື ຫຼົບຫຼີກອາກອນ, 10) ຄວາມຫຍຸ້ງຍາກໃນການກວດຄືນການບັນທຶກຂໍ້ມູນ, 11) ການນຳໃຊ້ຜະລິດຕະພັນ/ບໍລິການແບບບໍ່ຊ່ອງໜ້າ, 12) ການໃຫ້ບໍລິການໂດຍຜ່ານຕົວແທນ ແລະ ປະເມີນ 13 ຜະລິດຕະພັນຄື: ບັນຊີເງິນຝາກລູກຄ້າພິເສດ, ລູກຄ້າບຸກຄົນ, ບັນຊີເງິນຝາກລູກຄ້ານິຕິບຸກຄົນ, ບັນຊີເງິນຝາກກະແສລາຍວັນ, ບັນຊີທະນາຄານຕົວແທນ, ສິນເຊື່ອສຳລັບລູກຄ້າບຸກຄົນ, ສິນເຊື່ອສຳລັບລູກຄ້າວິສາຫະກິດຂະໜາດນ້ອຍ ແລະ ກາງ, ສິນເຊື່ອສຳລັບລູກຄ້າວິສາຫະກິດຂະໜາດໃຫຍ່, ໂອນເງິນ, ເຄື່ອງມືບໍລິການທາງການເງິນ, ເຄື່ອງມືບໍລິການທາງການຄ້າ, ບໍລິການເອເລັກໂທຣນິກ, ແລກປ່ຽນເງິນ.

### 6.2.3. ຜົນການປະເມີນ

#### 1. ການປະເມີນຄວາມສ່ຽງໃນຂະແໜງການທະນາຄານ

#### 1) ຄຸນນະພາບຂອງການຈັດຕັ້ງປະຕິບັດຂອງທະນາຄານ

ໃນໄລຍະຜ່ານມາ ການຂໍອະນຸຍາດດຳເນີນທຸລະກິດທະນາຄານ ແມ່ນຂຶ້ນກັບກົມຄຸ້ມຄອງທະນາຄານທຸລະກິດທະນາຄານແຫ່ງ ສປປ ລາວ ເປັນຜູ້ອອກໃບອະນຸຍາດເຄື່ອນໄຫວທຸລະກິດ ໂດຍການພິຈາລະນາ ແມ່ນອີງໃສ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ຄູ່ມື ແລະ ການກວດກາເອກະສານ, ຂໍ້ມູນ ເພື່ອເປັນບ່ອນອີງໃນການພິຈາລະນາຄົ້ນໃນການອອກໃບອະນຸຍາດໃນແຕ່ລະຄັ້ງ ລວມທັງມີການກວດສອບປະຫວັດຂອງຜູ້ມາຂໍສ້າງຕັ້ງ ແລະ ແຫຼ່ງທີ່ມາຂອງທຶນ.

ສຳລັບ ສຳນັກງານຂໍ້ມູນຕ້ານການຟອກເງິນ ແມ່ນຜູ້ຄຸ້ມຄອງວຽກງານການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຊິ່ງໄດ້ເປັນເຈົ້າການ ໃນການຕິດຕາມ ແລະ ກວດກາ ລວມທັງໄດ້ຈັດຝຶກອົບຮົມໃຫ້ກັບທະນາຄານທຸລະກິດ ໂດຍເນັ້ນໜັກພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ເພື່ອຮູ້ເຖິງພາລະບົດບາດ ແລະ ສິດພັນທະກ່ຽວກັບວຽກງານການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງເຂົາເຈົ້າ ນອກຈາກນີ້ກໍ່ໄດ້ເນັ້ນໜັກເລື່ອງການຮັກສາຄວາມລັບຂອງການລາຍງານ ແລະ ມາດຕະການຕໍ່ຜູ້ລະເມີດ.

ນອກຈາກນີ້, ມາດຕະການລົງໂທດທາງອາຍາ ແມ່ນໄດ້ກຳນົດການລົງໂທດທາງອາຍາຈະແຈ້ງໃນກົດໝາຍ ວ່າດ້ວຍການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍໃນໄລຍະຜ່ານມາແມ່ນບໍ່ມີການກະທຳຜິດທາງອາຍາໃນຂະແໜງທະນາຄານ.

ໃນໄລຍະຜ່ານມາຜູ້ຄຸ້ມຄອງກໍຄື ສຳນັກງານຂໍ້ມູນຕ້ານການຟອກເງິນ ແມ່ນໄດ້ສຸມໃສ່ການຊຸກຍູ້ໃຫ້ບັນດາທະນາຄານທຸລະກິດສ້າງພື້ນຖານໂຄງລ່າງດ້ານວຽກງານຕ້ານການຟອກເງິນ ພາຍໃນທະນາຄານເປັນຕົ້ນແມ່ນ ການສ້າງນິຕິກຳພາຍໃນ, ແຕ່ງຕັ້ງພາກສ່ວນຮັບຜິດຊອບທີ່ເປັນເອກະລາດ, ຈັດຕັ້ງການກວດກາພາຍໃນຕໍ່ກັບວຽກງານຕ້ານການຟອກເງິນ ຈຶ່ງສົ່ງຜົນໃຫ້ທະນາຄານຈຳນວນໜຶ່ງແມ່ນມີລະບົບກວດກາກ່ຽວກັບວຽກງານຕ້ານການຟອກເງິນເຊັ່ນ: ລະບົບກວດບັນຊີດຳ ແລະ ລະບົບກວດຈັບທຸລະກຳທີ່ໜ້າສົງໃສ.ທະນາຄານ 38 ແຫ່ງໄດ້ແຕ່ງຕັ້ງພະນັກງານຂັ້ນບໍລິຫານຮັບຜິດຊອບວຽກງານຕ້ານການຟອກເງິນ, ເຖິງຢ່າງໃດກໍຕາມຜ່ານການປະເມີນຍັງເຫັນວ່າບັນດາທະນາຄານຍັງບໍ່ທັນມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດສ່ວນໃຫ່ຍຍັງຖືເບົາ ແລະ ທຸກທະນາຄານຍັງບໍ່ມີການກວດສອບພາຍນອກຕໍ່ກັບວຽກງານຕ້ານການຟອກເງິນ ຈຶ່ງສົ່ງຜົນໃຫ້ການປະເມີນຕໍ່ກັບປະສິດທິພາບຂອງລະບົບຕ້ານການຟອກເງິນຂອງທະນາຄານໄດ້ລະດັບ **<u>ກາງ.</u>**

**2) ຄຸນນະພາບຂອງນະໂຍບາຍ ແລະ ຂັ້ນຕອນການຕ້ານການຟອກເງິນພາຍໃນ**

ໄລຍະຜ່ານມາໄດ້ມີການສ້າງ ແລະ ປະກາດນຳໃຊ້ລະບຽບກ່ຽວກັບການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສົມທົບກັບການລົງຊຸກຍູ້ວຽກງານຕ້ານການຟອກເງິນ ຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ຢ່າງຕໍ່ເນື່ອງ ຈຶ່ງສົ່ງຜົນໃຫ້ການຄຸ້ມຄອງວຽກງານ ຕ້ານການຟອກເງິນ ພາຍໃນຂອງທະນາຄານປະສິດທິພາບຫຼາຍຂຶ້ນ, ແຕ່ເຖິງຢ່າງໃດກໍ່ຕາມສະຕິຕື່ນຕົວໃນການຈັດຕັ້ງປະຕິບັດຂອງທະນາຄານທຸລະກິດຍັງມີລັກສະນະເອື່ອຍອີງໃສ່ຜູ້ຄຸ້ມຄອງ. ດັ່ງນັ້ນ, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ຂອງທະນາຄານໄດ້ລະດັບ **<u>ກາງ</u>**.

**3) ຄຳໝາຍໝັ້ນ ແລະ ຄວາມເປັນຜູ້ນຳຂອງການຄຸ້ມຄອງ**

ໃນໄລຍະຜ່ານມາສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ມີການສ້າງນິຕິກຳໃຕ້ກົດໝາຍຈຳນວນໜຶ່ງເພື່ອເປັນເຄື່ອງມືໃນການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊິ່ງເປັນຫຼັກການລວມຂອງໝົດທຸກຫົວໜ່ວຍ, ການຈັດຕັ້ງປະຕິບັດຕົວຈິງຍັງພົບຄວາມຫຍຸ້ງຍາກ ແລະ ບໍ່ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງຂອງແຕ່ລະຫົວໜ່ວຍ, ແຕ່ເຖິງຢ່າງໃດກໍ່ຕາມ ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ປັບປຸງ ກົດໝາຍວ່າດ້ວຍການຕ້ານສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ ເພື່ອໃຫ້ສອດຄ່ອງກັບການປະຕິບັດຕົວຈິງ. ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ຂອງທະນາຄານໄດ້ລະດັບ **<u>ກາງ</u>**.

**4) ລະດັບການປະຕິບັດຕາມລະບຽບກົດໝາຍຂອງພະນັກງານທະນາຄານ**

ຜູ້ບໍລິຫານ ແລະ ພະນັກງານ ທະນາຄານ ທີ່ປະຈຳຢູ່ສຳນັກງານໃຫ່ຍ ຫຼື ສາຂາ ມີຄວາມຮູ້ ແລະ ເຂົ້າໃຈ ເຖິງຜົນກະທົບ ຕໍ່ກັບຄວາມສ່ຽງ, ຊື່ສຽງ, ພາບພົດ ແລະ ມາດຕະການຕ່າງໆ ຂອງຕົນທີ່ຕິດພັນກັບວຽກງານການຕ້ານການຟອກເງິນ. ສ່ວນພະນັກງານຕາມໜ່ວຍບໍລິການ ແມ່ນຍັງບໍ່ທັນໄດ້ຮັບຮູ້ ແລະ ເຂົ້າໃຈຍ້ອນບໍ່ໄດ້ຮັບການຝຶກອົບຮົມວຽກງານການຕ້ານການຟອກເງິນ, ນອກຈາກນັ້ນ ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ເອກະສານຈຳເປັນໃນການສຶກສາຄົ້ນຄ້ວາຍັງບໍ່ທັນຫຼາຍ. ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ຂອງທະນາຄານໄດ້ລະດັບ **<u>ກາງ.</u>**

**5) ການປະຕິບັດລະບຽບກົດໝາຍຂອງພະນັກງານທະນາຄານ**

ສືບເນື່ອງຈາກການຊຸກຍູ້ຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ໃຫ້ບັນດາທະນາຄານຈັດຝຶກອົບຮົມຢ່າງຕໍ່ເນື່ອງໃຫ້ກັບພະນັກງານພາຍໃນຂອງຕົນຢ່າງເປັນປົກກະຕິເຮັດໃຫ້ພະນັກງານທະນາຄານມີຄວາມຮູ້ໃນດ້ານວຽກງານຕ້ານການຟອກເງິນ ໃນລະດັບກາງ. ຜ່ານການປະເມີນພະນັກງານທະນາຄານສ່ວນໃຫ່ຍແມ່ນມີຄວາມຮູ້ດ້ານການຊອກຮູ້ລູກຄ້າ ແລະ ການລາຍງານທຸລະກຳທີ່ໜ້າສົງໄສ, ແຕ່ຍັງບໍ່ທັນເຂົ້າໃຈວ່າຕົນເອງຈະຖືກລົງໂທດທາງດ້ານບໍລິຫານ ແລະ ດ້ານອາຍາ ໃນກໍລະນີຫາກມີການເມີດ ຫຼື ບໍ່ປະຕິບັດຕາມລະບຽບການທີ່ກຳນົດ, ຍ້ອນວ່າທະນາຄານສ່ວນໃຫ່ຍແມ່ນຍັງບໍ່ໄດ້ມີການກຳນົດໃນລະບຽບພາຍໃນກ່ຽວກັບການລົງໂທດພະນັກງານທີ່ລະເມີດລະບຽບຕ້ານການຟອກເງິນ. ພ້ອມກັນນັ້ນ, ສຳນັກງານຂໍ້ມູນຕ້ານການຟອກເງິນ ກໍຍັງບໍ່ທັນເຂັ້ມງວດໃນການປະຕິບັດມາດຕະການລົງໂທດຕໍ່ທະນາຄານ. ນອກນັ້ນ ລະບຽບພາຍໃນຂອງທະນາຄານຍັງບໍ່ໄດ້ກຳນົດກົນໄກການປົກປ້ອງພະນັກງານທີ່ອາດໄດ້ຮັບຜົນກະທົບຈາກການລາຍງານທຸລະກຳທີ່ໜ້າສົງໄສຊຶ່ງອາດເຮັດການລາຍງານທຸລະກຳທີ່ໜ້າສົງໄສບໍ່ມີປະສິດທິຜາບເທົ່າທີ່ຄວນ. ດ້ວຍເຫດຜົນດັ່ງກ່າວສິ່ງຜົນໃຫ້ຜົນການປະເມີນການຈັດຕັ້ງປະຕິບັດລະບຽບຂອງພະນັກງານຢູ່ໄດ້ລະດັບ **<u>ກາງ.</u>**

**6) ຄຸນນະພາບຂອງການເພີ່ມທະວີເອົາໃຈໃສ່ລູກຄ້າ**

ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ອອກຂໍ້ຕົກລົງວ່າດ້ວຍມາດຕະການ ການເອົາໃຈໃສ່ລູກ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອເປັນບ່ອນອີງໃນການ ດຳເນີນການຊອກຮູ້ລູກຄ້າ ແລະ ເພີ່ມທະວີເອົາໃຈໃສ່ລູກຄ້າ. ເຊິ່ງໃນການຈັດຕັ້ງປະຕິບັດຕົວຈິງຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານພົບຄວາມຫຍຸ້ງຍາກ ໃນການຢັ້ງຢືນຄວາມຖືກຕ້ອງ ຂໍ້ມູນ, ເອກະສານຢັ້ງຢືນຕົນຕ່າງໆ, ການເຂົ້າເຖິງຂໍ້ມູນຂອງຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ຂໍ້ມູນໂຄງລ່າງພື້ນຖານ ພ້ອມທັງຍັງຂາດແຫຼ່ງຂໍ້ມູນເອກະລາດ ແລະ ມີຄວາມໜ້າເຊື່ອຖື. ການເຂົ້າເຖິງແຫຼ່ງຂໍ້ມູນທີ່ເປັນເອກະລາດຍັງມີຂອບເຂດຈຳກັດ ແລະ ການສະໜອງຂໍ້ມູນມີຄວາມຫຼ້າຊ້າ, ເນື່ອງຈາກວ່າການເກັບກຳຂໍ້ມູນຂອງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ເປັນລະບົບຄົບຊຸດ ແລະ ບໍ່ທັນສະໄໝ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ການປະເມີນຜົນໃນຕົວຊີ້ບອກນີ້ ຂອງທະນາຄານ ໄດ້ລະດັບ **<u>ກາງ-ຕ່ຳ.</u>**

**7) ຄຸນນະພາບຂອງການຄຸ້ມຄອງວຽກງານຕ້ານການຟອກເງິນ**

ໃນໄລະຜ່ານມາ ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ລົງກວດກາປະຈຳປີ ຕາມຄວາມສ່ຽງ ຜ່ານການຕິດຕາມກວດກາ ທາງດ້ານເອກະສານ ຫຼື ການລົງກວດກາກັບທີ່ ເພື່ອກວດກາການຈັດຕັ້ງປະຕິບັດ ພັນທະຕາມທີ່ໄດ້ກຳນົດໃນກົດໝາຍ ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລວມທັງມີການເກັບກຳຂໍ້ມູນກວດກາໄວ້ຖານຂໍ້ມູນຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ.

ຜ່ານການ ຕິດຕາມ ແລະ ກວດກາ ທະນາຄານສ່ວນໃຫຍ່ແມ່ນສາມາດຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ໂດຍສະເພາະແມ່ນທະນາຄານຕ່າງປະເທດ ທີ່ປະຕິບັດເຂັ້ມງວດຕາມລະບຽບຂອງສຳນັກງານໃຫຍ່. ເຖິງຢ່າງໃດກໍ່ຕາມ, ຍັງມີທະນາຄານຈຳນວນໜຶ່ງຍັງຂາດຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດລະບຽບ, ຍັງບໍ່ມີແນວຄິດລິເລີ່ມໃນການພັດທະນາ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວດ້ວຍຕົນເອງ ຍັງເອື່ອຍອີງໃສ່ຜູ້ຄຸ້ມຄອງ. ອີກດ້ານໜຶ່ງຍ້ອນວ່າ ທະນາຄານສ່ວນໃຫ່ຍຍັງບໍ່ມີສາຍພົວພັນກັບທະນາຄານຕົວແທນຕ່າງປະເທດ (ທະນາຄານທີ່ເປັນຊັ້ນນຳຂອງໂລກ) ທີ່ມີການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ທີ່ເນັ້ນໃສ່ທະນາຄານຕົວແທນຕ່າງປະເທດ ແລະ ການບໍລິການສ່ວນໃຫ່ຍຂອງທະນາຄານແມ່ນຢູ່ໃນຂົງເຂດພາກພື້ນ ຈຶ່ງນຳໃຊ້ທະນາຄານຕົວແທນຢູ່ປະເທດໃກ້ຄຽງ. ຍ້ອນສາເຫດດັ່ງກ່າວຈຶ່ງສົ່ງຜົນໃຫ້ການປະເມີນຜົນການຄຸ້ມຄອງວຽກງານການຕ້ານການຟອກເງິນຂອງທະນາຄານໄດ້ລະດັບ **<u>ກາງ.</u>**

**2. ການປະເມີນຄວາມສ່ຽງທາງດ້ານຜະລິດຕະພັນ**

❖ **ຜະລິດຕະພັນທີ່ມີຄວາມສ່ຽງຢູ່ໃນລະດັບ ກາງ-ຕ່ຳ**

**1) ຜະລິດພັນເງິນຝາກລູກຄ້າພິເສດ**

ເງິນຝາກລູກຄ້າພິເສດ ເປັນກຸ່ມລູກຄ້າທີ່ມີຄວາມສ່ຽງ ແລະ ກຸ່ມທີ່ມີມູນຄ່າຊັບສິນສູງ, ມີສິດທິພິເສດໃນການເຂົ້າເຖິງການບໍລິການທີ່ຫຼາກຫຼາຍ ແລະ ມູນຄ່າການເຄື່ອນໄຫວທຸລະກຳທີ່ສູງ. ແຕ່ໃນ ສປປ ລາວ ເຫັນວ່າການໃຫ້

ບໍລິການຜະລິດຕະພັນເງິນຝາກລູກຄ້າພິເສດແມ່ນຍັງມີຈຳກັດ (ມີທະນາຄານ 09 ແຫ່ງທີ່ໃຫ້ບໍລິການກວມເອົາ 26.47%) ແລະ ມູນຄ່າເງິນຝາກທັງໝົດຂອງລູກຄ້ากลุ่มนี้ແມ່ນກວມເອົາ 12,74% ຂອງຍອດເງິນຝາກທັງໝົດ. ຜ່ານການປະເມີນເຫັນວ່າ ຜະລິດຕະພັນເງິນຝາກລູກຄ້າພິເສດ ແມ່ນ ຢູ່ໃນລະດັບ **<u>ກາງ-ຕ່ຳ.</u>**

**2) ບໍລິການເອເລັກໂທຣນິກ**

ການບໍລິການເອເລັກໂທຣນິກແມ່ນຜະລິດຕະພັນໜຶ່ງ ມີການພັດທະນາ ແລະ ຂະຫຍາຍຕົວ ຖ້າທຽບກັບຜະລິດຕະພັນອື່ນ, ເນື່ອງຈາກວ່າການນຳໃຊ້ເຄື່ອງມືເອເລັກໂທຣນິກເພື່ອຊຳລະຕ່າງປະເທດ ແມ່ນຢູ່ໃນລະດັບຕ່ຳ ແລະ ມີການພົວພັນກັບເງິນສົດຢູ່ໃນລະດັບຕ່ຳ. ນອກນີ້, ເຫັນວ່າທຸລະກຳເຄື່ອງມືເອເລັກໂທຣນິກມີມູນຄ່າສະເລ່ຍ ທີ່ຢູ່ໃນລະດັບຕ່ຳທຽບກັບມູນຄ່າສະເລ່ຍການໂອນເງິນທັງໝົດ ແລະ ການໃຊ້ເຄື່ອງມືເອເລັກໂທຣນິກເຖິງວ່າຈະມີລັກສະນະບໍລິການແບບບໍ່ຊ່ອງໜ້າກໍ່ຕາມ ແຕ່ລູກຄ້າທີ່ໃຊ້ບໍລິການແມ່ນຕ້ອງເປີດບັນຊີເງິນຝາກ ແລະ ສະໜອງຂໍ້ມູນຊອກຮູ້ລູກຄ້າໃຫ້ແກ່ທະນາຄານກ່ອນຈຶ່ງສາມາດນຳໃຊ້ບໍລິການໄດ້ ແລະ ມູນຄ່າທຸລະກຳສະເລ່ຍຢູ່ໃນລະດັບຕ່ຳເຊັ່ນດຽວກັນ, ເພາະທະນາຄານຈຳກັດວົງເງິນໃນການເຄື່ອນໄຫວ. ຜ່ານການປະເມີນເຫັນວ່າຜະລິດຕະພັນ ເອເລັກໂທນິກແມ່ນ ຢູ່ໃນລະດັບ **<u>ກາງ-ຕ່ຳ.</u>**

**3) ບໍລິການແລກປ່ຽນເງິນ**

ຜ່ານການເກັບກຳຂໍ້ມູນ ຂອງການໃຫ້ບໍລິການແລກປ່ຽນເງິນຂອງທະນາຄານທຸລະກິດເຫັນວ່າມີມູນຄ່າ ແລະ ສະເລ່ຍຕໍ່ທຸລະກຳ ຢູ່ລະດັບ ກາງ-ຕ່ຳ ທຽບກັບການໂອນເງິນທັງໝົດ. ເຖິງແມ່ນວ່າ, ມູນຄ່າການໃຫ້ເຮັດທຸລະກຳຢູ່ຕ່າງປະເທດ ແລະ ທະນາຄານຈະຈັດຄວາມສ່ຽງລູກຄ້າຢູ່ໃນລະດັບຕ່ຳ. ສະນັ້ນ, ຜ່ານການປະເມີນເຫັນວ່າ ການໃຫ້ບໍລິການແລກປ່ຽນເງິນຕາຕ່າງປະເທດ ແມ່ນ ຢູ່ໃນລະດັບ **<u>ກາງ-ຕ່ຳ.</u>**

**4) ສິນເຊື່ອສຳລັບລູກຄ້າບຸກຄົນ**

ຜ່ານການສັງລວມຕົວເລກສະຖິຕິເຫັນວ່າທະນາຄານທຸລະກິດໄດ້ປ່ອຍສິນເຊື່ອໃຫ້ລູກຄ້າบุกคลกวมเอา 43,51% ຂອງຍອດສິນເຊື່ອທັງໝົດແລະເຫັນວ່າมูนค่าการปล่อยสินเชื่อสะเลี่ยต่สันยาแม่นบ่สูงเซิ่งอาดเกิดจาก ເຈົ້າຂອງວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍຈຳນວນໜຶ່ງດຳເນີນການກູ້ຍືມໃນນາມສ່ວນຕົວແລະມູນຄ່າການເຄື່ອນໄຫວຮັບ-ຊຳລະສິນເຊື່ອດ້ວຍຮູບແບບເງິນສົດແມ່ນຍັງຢູ່ໃນລະດັບທີ່ບໍ່ສູງຫລາຍ. ພ້ອມດຽວກັນນີ້, ຍັງເຫັນວ່າທະນາຄານທຸລະກິດມີການກວດສອບຂໍ້ມູນລູກຄ້າຢ່າງລະອຽດໃນການປ່ອຍສິນເຊື່ອແຕ່ລະຄັ້ງພ້ອມທັງລົງກວດກາກັບທີ່ເພື່ອຢັ້ງຢືນຕົວຕົນແລະຈັດຄວາມສ່ຽງລູກຄ້ากลุ่มนี้ໃນລະດັບຕ່ຳ. ຜົນການປະເມີນຄວາມສ່ຽງສິນເຊື່ອສຳລັບລູກຄ้าบุกคลมยู่ในละดับ **<u>ກາງ-ຕ່ຳ.</u>**

**5) ເຄື່ອງມືບໍລິການທາງການເງິນ**

ຜ່ານການເກັບກຳຂໍ້ມູນເຫັນວ່າການນຳໃຊ້ເຄື່ອງມືດັ່ງກ່າວມີ ມູນຄ່າກວມເອົາ 8% ຂອງมูนค่าโอนเงินทั้งหมดและ ลูกຄ้າส่วนใหย่เป็นลูกค้า ที่เป็นวิสาหะกิด และ ยังต้องเป็นลูกค้าเงินฝากของทะนาคานก่อนเซิ่งต้องผ่านขะบวนการชอกฮู้ข้อมูนลูกค้าพ้อมดวกกันนี้, ยังเห็นว่าการนำใช้เครื่องมือดังกล่าวแม่นมีการพัวพันกับการนำใช้เงินสดในละดับต่ำกาง และ การนำใช้ชำละสะสางกับต่างประเทดยู่ในละดับต่ำ. ดังนั้น, จึ่งเฮัดให้ละดับความสู่งของเครื่องมือบริหารทางการเงินถูกจัดยู่ในละดับ **<u>ກາງ-ຕ່ຳ.</u>**

**6) ເຄື່ອງມືບໍລິການທາງການຄ້າ**

ຜະລິດຕະພັນນີ້ເປັນຜະລິດຕະພັນທີ່ມີລັກສະນະຄ້າຍຄືກັບບໍລິການໂອນເງິນ ແລະ ເຄື່ອງມືຊຳລະອື່ນໆ ຊຶ່ງຜູ້ທີ່ຈະສາມາດນຳໃຊ້ບໍລິການໄດ້ຕ້ອງເປັນລູກຄ້າເງິນຝາກຂອງທະນາຄານກ່ອນ ແລະ ຕ້ອງຜ່ານການຊອກຮູ້ຂໍ້ມູນລູກຄ้า.

ນອກຈາກນີ້, ເນື່ອງຈາກເປັນທຸລະກຳທີ່ຕິດພັນກັບການຊຳລະຕ່າງປະເທດ ທີ່ມີລະດັບການນຳໃຊ້ເງິນສົດຢູ່ລະດັບ ຕ່ຳ ແລະ ມີລັກສະນະການກູ້ຢືມສິນເຊື່ອເຮັດໃຫ້ທະນາຄານມີການກວດສອບຂໍ້ມູນຕ່າງໆກ່ອນການໃຫ້ບໍລິການຢ່າງ ລະອຽດຊຶ່ງລວມທັງການປ້ອງກັນຄວາມສ່ຽງທີ່ຈະກ່ຽວຂ້ອງກັບການຟອກເງິນດ້ວຍ. ສະນັ້ນ, ຜ່ານການປະເມີນເຫັນວ່າ ເຄື່ອງມືບໍລິການທາງດ້ານການຄ້າແມ່ນ ຢູ່ໃນລະດັບ **<u>ກາງ-ຕ່ຳ.</u>**

**7) ສິນເຊື່ອສຳລັບລູກຄ້າວິສະຫະກິດຂະໜາດນ້ອຍ ແລະ ກາງ**

ເນື່ອງຈາກວ່າ ມູນຄ່າສິນເຊື່ອລູກຄ້າຂະໜາດກາງ ແລະ ນ້ອຍ ກວມເອົາພຽງແຕ່ 9% ຂອງຍອດສິນເຊື່ອທັງ ໝົດ ແລະ ມູນຄ່າສິນເຊື່ອຕໍ່ສັນຍາຢູ່ໃນລະດັບ ກາງ-ຕ່ຳ ນອກຈາກນີ້, ທະນາຄານທຸລະກິດມີການກວດສອບຂໍ້ມູນລູກ ຄ້າຢ່າງລະອຽດໃນການປ່ອຍສິນເຊື່ອແຕ່ລະຄັ້ງ ແລະ ຈັດຄວາມສ່ຽງລູກຄ້າກຸ່ມນີ້ໃນລະດັບຕ່ຳເປັນສ່ວນໃຫຍ່. ຜ່ານ ການປະເມີນເຫັນວ່າຜະລິດຕະພັນສິນເຊື່ອສຳລັບລູກຄ້າວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ໃນລະດັບ **<u>ກາງ-ຕ່ຳ.</u>**

❖ **ຜະລິດຕະພັນ ທີ່ມີຄວາມສ່ຽງຢູ່ໃນລະດັບ ກາງ**

**8) ບັນຊີທະນາຄານຕົວແທນ**

ບັນຊີທະນາຄານຕົວແທນແມ່ນຜະລິດຕະພັນໜຶ່ງທີ່ນຳໃຊ້ເພື່ອຊຳລະສະສາງ ຂອງລູກຄ້າທະນາຄານ ແລະ ສະ ຖາບັນການເງິນ. ຜ່ານການເກັບກຳຂໍ້ມູນເຫັນວ່າລູກຄ້າກຸ່ມນີ້ແມ່ນເຄື່ອນໄຫວການຊຳລະສະສາງຕ່າງປະເທດເປັນສ່ວນ ໃຫຍ່ສະແດງອອກຜ່ານຕົວເລກການຊຳລະຕ່າງປະເທດທີ່ສູງແຕ່ມີການເຄື່ອນໄຫວເງິນ ສົດຢູ່ໃນລະດັບ ຕ່ຳ. ນອກຈາກ ນີ້, ເຫັນວ່າຜະລິດຕະພັນນີ້ແມ່ນມີມູນຄ່າການເຄື່ອນໄຫວທຸລະກຳທັງໝົດທີ່ຢູ່ຍັງບໍ່ສູງ ຖ້າທຽບກັບມູນຄ່າສະເລ່ຍຕໍ່ ທຸລະກຳທີ່ຢູ່ໃນລະດັບ ສູງ. ດັ່ງນັ້ນ,ຈຶ່ງໄດ້ຈັດໃຫ້ຜະລິດຕະພັນບັນຊີທະນາຄານຕົວແທນມີຄວາມສ່ຽງລະດັບ **<u>ກາງ.</u>**

**9) ຜະລິດຕະພັນເງິນຝາກລູກຄ້າບຸກຄົນ**

ເງິນຝາກລູກຄ້າບຸກຄົນ ແມ່ນຜະລິດຕະພັນການໃຫ້ບໍລິການໜຶ່ງທີ່ເປັນພື້ນຖານ ແລະ ທັງເປັນແຫລ່ງທຶນຂອງ ທະນາຄານທຸລະກິດຊຶ່ງຜ່ານການເກັບກຳຂໍ້ມູນ ເຫັນວ່າ ການໃຫ້ບໍລິການເງິນຝາກລູກຄ້າບຸກຄົນ ມີມູນຄ່າກວມເອົາ 43,71% ຂອງຍອດເງິນຝາກທັງໝົດໂດຍທະນາຄານແມ່ນຈັດຄວາມສ່ຽງລູກຄ້າບຸກຄົນຢູ່ໃນລະດັບກາງ, ອີງຕາມ ສະພາບປັດຈຸບັນ ລູກຄ້າບຸກຄົນມີການເຄື່ອນໄຫວບັນຊີດັ່ງກ່າວຫຼາຍຂຶ້ນ ແລະ ມີການເຄື່ອນໄຫວເຊື່ອມໂຍງກັບ ຜະລິດຕະພັນອື່ນໆຫຼາຍສົມຄວນ. ເຖິງແມ່ນວ່າການເຄື່ອນໄຫວເງິນສົດຂອງລູກຄ້າກຸ່ມນີ້ຜ່ານການຝາກ ແລະ ຖອນ ເງິນສົດຈະຢູ່ໃນລະດັບກາງ-ສູງ ແຕ່ພົບວ່າທະນາຄານສ່ວນໃຫຍ່ແມ່ນໃຫ້ຄວາມເອົາໃຈໃສ່ສູງສົມຄວນໃນການຊອກຮູ້ ຂໍ້ມູນລູກຄ້າໃນເວລາເປີດບັນຊີເງິນຝາກ, ກວດສອບລາຍຊື່ບຸກຄົນທີ່ຖືກມາດຕະການລົງໂທດ, ບໍ່ມີການອະນຸຍາດການ ເປີດບັນຊີນິລະນາມ ແລະ ລະດັບການຊຳລະຕ່າງປະເທດຕ່ຳ. ຜ່ານການປະເມີນ ຈຶ່ງຈັດຄວາມສ່ຽງຜະລິດຕະພັນເງິນຝາກ ກຸ່ມນີ້ຢູ່ໃນລະດັບ **<u>ກາງ.</u>**

**10) ສິນເຊື່ອສຳລັບລູກຄ້າວິສາຫະກິດຂະໜາດໃຫຍ່**

ອີງຕາມການເກັບຂໍ້ມູນຈາກທະນາຄາທຸລະກິດເຫັນວ່າສິນເຊື່ອສຳລັບລູກຄ້າວິສາຫະກິດຂະໜາດໃຫຍ່ມີມູນຄ່າ ກວມເອົາ 73% ຂອງຍອດສິນເຊື່ອທັງໝົດ ແລະ ມີມູນຄ່າສິນເຊື່ອຕໍ່ສັນຍາຢູ່ໃນລະດັບສູງ, ການກູ້ຢືມແມ່ນຕິດພັນກັບ ການຊຳລະຕ່າງປະເທດ ແລະ ການຮັບຊຳລະໜີ້ດ້ວຍເງິນສົດ ກໍຢູ່ໃນລະດັບກາງ-ຕ່ຳ. ທະນາຄານທຸລະກິດຈັດຄວາມສ່ຽງ ລູກຄ້າກຸ່ມນີ້ໃນລະດັບຍັງຕ່ຳ ແລະ ມີການກວດສອບຂໍ້ມູນລູກຄ້າຢ່າງລະອຽດ. ພ້ອມນີ້, ເຫັນວ່າທະນາຄານມີຄວາມ ເອົາໃຈໃສ່ໃນການກວດກາທຸລະກຳໂອນເງິນຫຼາຍສົມຄວນ ຕີລາຄາຈາກທະນາຄານເກືອບທັງໝົດມີລະບົບກວດສອບ ລາຍຊື່ບຸກຄົນທີ່ຖືກມາດຕະການລົງໂທດ. ພ້ອມດຽວກັນນັ້ນ, ລູກຄ້າສ່ວນໃຫຍ່ທີ່ຈະໃຊ້ບໍລິການໂອນເງິນໄດ້ແມ່ນ ຕ້ອງເປັນລູກຄ້າເງິນຝາກຂອງທະນາຄານກ່ອນ ເຊິ່ງຕ້ອງຜ່ານຂະບວນການຊອກຮູ້ຂໍ້ມູນລູກຄ້າ ແລະ ທະນາຄານໄດ້ປະ ເມີນທ່າອ່ຽງການຟອກເງິນ. ດ້ວຍເຫດນີ້, ຈຶ່ງປະເມີນຄວາມສ່ຽງຜະລິດຕະພັນໂອນເງິນໃຫ້ຢູ່ໃນລະດັບ **<u>ກາງ.</u>**

❖ **ຜະລິດຕະພັນ ທີ່ມີຄວາມສ່ຽງຢູ່ໃນລະດັບ ກາງ-ສູງ**

**11) ຜະລິດຕະພັນເງິນຝາກລູກຄ້ານິຕິບຸກຄົນ**

ຜ່ານການເກັບກຳຂໍ້ມູນ ການໃຫ້ບໍລິການເງິນຝາກລູກຄ້ານິຕິບຸກຄົນ ເຫັນວ່າມີການເຄື່ອນໄຫວພົວພັນກັບຫຼາຍຜະລິດຕະພັນລວມທັງທຸລະກຳຊຳລະສະສາງກັບຕ່າງປະເທດແມ່ນຢູ່ໃນລະດັບ ສູງ ແລະ ລູກຄ້າກຸ່ມນີ້ແມ່ນການເຄື່ອນໄຫວຊຳລະສະສາງ ຢູ່ໃນລະດັບ ສູງ ທີ່ມີລັກສະນະຄ້າຍຄືກັບຜະລິດຕະພັນເງິນຝາກລູກຄ້າບຸກຄົນ. ເນື່ອງຈາກທະນາຄານທຸລະກິດຈັດຄວາມສ່ຽງລູກຄ້າກຸ່ມນີ້ໃນລະດັບກາງ. ສະນັ້ນ, ຈຶ່ງຈັດຄວາມສ່ຽງຜະລິດຕະພັນເງິນຝາກປະເພດນີ້ຢູ່ໃນລະດັບ **<u>ກາງ-ສູງ.</u>**

**12) ບັນຊີເງິນຝາກກະແສລາຍວັນ**

ເງິນຝາກກະແສລາຍວັນ ເປັນຜະລິດຕະພັນເງິນຝາກໜຶ່ງ ທີ່ລູກຄ້າສ່ວນໃຫຍ່ເປັນລູກຄ້າວິສາຫະກິດ ຜ່ານການເກັບກຳເຫັນວ່າມູນຄ່າເງິນຝາກກະແສລາຍວັນກວມເອົາ 26,05% ຂອງຍອດເງິນຝາກທັງໝົດ. ນອກຈາກນີ້, ເຫັນວ່າລູກຄ້າເງິນຝາກກຸ່ມນີ້ມີການນຳໃຊ້ເງິນສົດ ແລະ ເພື່ອການເຄື່ອນໄຫວຊຳລະສະສາງຕ່າງປະເທດໃນລະດັບ ສູງ ເຊິ່ງສາເຫດອາດເກີດຈາກລູກຄ້າສ່ວນໃຫຍ່ແມ່ນກຸ່ມບໍລິສັດ ເພື່ອການຄ້າ ຫຼື ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກສິນຄ້າ. ທະນາຄານທຸລະກິດຈັດຄວາມສ່ຽງລູກຄ້ากลุ่มนี้ຢູ່ໃນລະດັບກາງເພາະລູກຄ້າສ່ວນໃຫຍ່ເປັນຫ້ວໜ່ວຍວິສາຫະກິດຊຶ່ງທະນາຄານທຸລະກິດໄດ້ມີການເກັບກຳຂໍ້ມູນລູກຄ້າທີ່ລະອຽດ. ດັ່ງນັ້ນ,ຈຶ່ງຈັດຄວາມສ່ຽງຜະລິດຕະພັນເງິນຝາກປະເພດນີ້ຢູ່ໃນລະດັບ **<u>ກາງ-ສູງ.</u>**

**13) ຜະລິດຕະພັນໂອນເງິນ**

ຜະລິດຕະພັນໂອນເງິນ ເປັນ ຜະລິດຕະພັນຕົ້ນຕໍຂອງຂະແໜງການທະນາຄານໃນ ສປປ ລາວ ຊຶ່ງມີມູນຄ່າ ແລະ ການເຄື່ອນໄຫວຕໍ່ທຸລະກຳໃນລະດັບສູງພ້ອມນີ້, ກໍມີການພົວພັນກັບຜະລິດຕະພັນອື່ນໆ ທີ່ຫຼາກຫຼາຍສົມຄວນ. ຜ່ານການລົງເກັບກຳຂໍ້ມູນເຫັນວ່າ ທະນາຄານໄດ້ມີຄວາມເອົາໃຈໃສ່ໃນການກວດກາທຸລະກຳໂອນເງິນຫຼາຍສົມຄວນ ສະແດງອອກວ່າທະນາຄານ ມີລະບົບກວດສອບລາຍຊື່ບຸກຄົນທີ່ຖືກມາດຕະການລົງໂທດເປັນສ່ວນໃຫຍ່. ນອກຈາກນີ້, ລູກຄ້າທີ່ຈະໃຊ້ບໍລິການໂອນເງິນ ແມ່ນຕ້ອງເປັນລູກຄ້າເງິນຝາກຂອງທະນາຄານກ່ອນເຊິ່ງຕ້ອງຜ່ານຂະບວນການຊອກຮູ້ຂໍ້ມູນລູກຄ້າ. ເຖິງຢ່າງໃດກໍຕາມ, ຜ່ານການປະເມີນຄວາມສ່ຽງຜະລິດຕະພັນໂອນເງິນ ຢູ່ໃນລະດັບ **<u>ກາງ-ສູງ.</u>**

**3. ສະຫຼຸບຜົນການປະເມີນຄວາມສ່ຽງໃນຂະແໜງການ ທະນາຄານ**

ຜ່ານການປະເມີນຄວາມສ່ຽງລະດັບຊາດຂອງຂະແໜງ ທະນາຄານ ຜົນການວິເຄາະບັນດາຂໍ້ມູນຄວາມບອບບາງທາງດ້ານນິຕິກຳ ແລະ ກົນໄກ ຄວາມບອບບາງທາງດ້ານຜະລິດຕະພັນທັງໝົດ ເຫັນວ່າ ບັນດາກົດໝາຍ ແລະ ນິຕິກຳຂອງຜູ້ຄຸ້ມຄອງ ທີ່ໃຊ້ເປັນເຄື່ອງມືໃນການຄຸ້ມຄອງ ທະນາຄານທຸລະກິດ ຍັງບໍ່ທັນເປັນລະບົບຄົບຊຸດ, ດ້ານການປະຕິບັດການລົງໂທດຕໍ່ກັບທະນາຄານທີ່ບໍ່ຈັດຕັ້ງປະຕິບັດພັນທະຕາມກົດໝາຍຍັງຈຳກັດ ສົ່ງຜົນໃຫ້ຫຼາຍຕົວປ່ຽນຍັງບໍ່ທັນມີລະບຽບຄຸ້ມຄອງທີ່ເໝາະສົມ ຕໍ່ກັບວຽກງານ ຕ້ານການຟອກເງິນ ຢູ່ໃນປະເພດທີ່ມີລະດັບ **<u>ກາງ-ສູງ</u>**.

**6.3. ທຸລະກິດຊື້-ຂາຍ ອະສັງຫາລິມະຊັບ**

**6.3.1. ພາບລວມ**

ການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ຂອງ ສປປ ລາວ ສຳລັບຂະແໜງອະສັງຫາລິມະຊັບ ຄັ້ງທີ 2 ນີ້ກໍ່ເພື່ອເປັນການທົບທວນຄືນຜົນການຈັດຕັ້ງປະຕິບັດແກ້ໄຂຂໍ້ຄົງຄ້າງ ຈາກຜົນການປະເມີນ (ການປະເມີນຄັ້ງທຳອິດ) ແລະ ອີງໃສ່ຜົນບົດປະເມີນຄວາມສ່ຽງຮອບດ້ານ ຄັ້ງທີ 2 ຂອງ ສປປ ລາວ. ນອກຈາກນັ້ນກໍ່ ເປັນການທົບທວນຄືນຜົນການແກ້ໄຂຄວາມສ່ຽງຕາມແຜນທີ່ກຳນົດໄວ້ໃນປີ 2018.

ຜົນການປະເມີນຄັ້ງກ່ອນ ປີ 2018 ສປປ ລາວ ຍັງບໍ່ທັນມີລະບຽບ ຫຼື ນິຕິກຳສະເພາະໃນການຄຸ້ມຄອງ ຕິດຕາມ ແລະ ກວດກາສຳລັບຂະແໜງການອາສັງຫາລິມາຊັບເທື່ອ, ສຳລັບນິຕິກຳກ່ຽວກັບວຽກງານການຕ້ານ ການ ຟອກເງິນ ແມ່ນອີງໃສ່ແຕ່ກົດໝາຍ ຊຶ່ງບໍ່ທັນມີຄູ່ໃນການຈັດຕັ້ງປະຕິບັດສະເພາະ.

ມາຮອດປີ 2022 ຂະແໜງການລັດ ທີ່ຄຸ້ມຄອງທຸລະກິດຊື້-ຂາຍ ອະສັງຫາລິມະຊັບ ແມ່ນເປັນຄວາມ ຮັບຜິດຊອບໂດຍກົງ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສິດ, ໜ້າທີ່ ແລະ ພາລະບົດບາດຫຼັກ ແມ່ນຄຸ້ມຄອງການເຄື່ອນໄຫວ, ການຂໍໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ, ໄດ້ສ້າງລະບຽບການ ນິຕິກຳຄຸ້ມ ຄອງສະເພາະເພື່ອເປັນເຄື່ອງໃນການຕິດຕາມ ແລະ ກວດກາເປັນຕົ້ນ

1). ຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ຂໍ້ຕົກລົງວ່າດ້ວຍ ທຸລະກິດກ່ຽວກັບທີ່ດິນ ເລກທີ 4392/ກຊສ, ລົງວັນທີ 22 ສິງຫາ 2022,

2). ຄູ່ມືແນະນຳວິຊາການກ່ຽວກັບການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບ ອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ສະບັບເລກທີ 5978/ກຊສ, ລົງວັນທີ 22 ພະຈິກ 2022

3). ຄູ່ມືແນະນຳວິຊາການ ກ່ຽວກັບການກວດກາ ວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທຸລະກິດກ່ຽວກັບທີ່ດິນ ເລກທີ 6967/ກຊສ, ລົງວັນທີ 22 ພະຈິກ 2022

ຈຸດປະສົງຂອງການປະເມີນຄວາມສ່ຽງ ທີ່ຕິດພັນກັບທຸລະກິດຊື້-ຂາຍ ອະສັງຫາລິມະຊັບ ເປັນອົງປະກອບ ສຳຄັນໃນການຈັດຕັ້ງປະຕິບັດ ແລະ ການພັດທະນາລະບົບການຕ້ານ ການຟອກເງິນ ລວມທັງກົດໝາຍ, ລະບຽບການ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງໃນການຟອກເງິນ ທີ່ຈະຊ່ວຍໃນການຈັດສັນແຫຼ່ງຂໍ້ມູນໄດ້ຢ່າງມີປະສິດຕິພາບໃຫ້ຂະ ແໜງການອະສັງຫາລິມະຊັບ.

ການປະເມີນຄວາມສ່ຽງແຫ່ງຊາດ ຂອງອານຸກຳມະການຮັບຜິດຊອບ ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ປະເມີນ ຄວາມສ່ຽງ ທີ່ຕິດພັນ ຂະແໜງອະສັງຫາລິມະຊັບ ກໍ່ແມ່ນເພື່ອ:

1) ເກັບກຳຂໍ້ມູນກ່ຽວກັບການຄຸ້ມຄອງ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ຂອງ ອະສັງຫາລິມະຊັບ ໃນ ສປປ ລາວ;
2) ລະບຸໄພຂົ່ມຂູ່ກ່ຽວກັບ ອະສັງຫາລິມະຊັບ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຫຼື ຂຶ້ນທະບຽນຢູ່ ໃນ ສປປ ລາວ ທີ່ໄດ້ລະເມີດຕໍ່ລະບຽບກົດໝາຍໃນໄລຍະຜ່ານມາ;
3) ການປະເມີນຄວາມສ່ຽງຂອງ ອະສັງຫາລິມະຊັບ ເພື່ອລະບຸປັດໃຈຄວາມສ່ຽງ ສະເພາະກັບແຕ່ລະປະເພດ;
4) ປະເມີນຄວາມບອບບາງແຫ່ງຊາດ ຂະແໜງອະສັງຫາລິມະຊັບ.

### 6.3.2. ການດຳເນີນການປະເມີນຄວາມສ່ຽງ

ການເກັບກຳຂໍ້ມູນເພື່ອມາດຳເນີນການປະເມີນຄວາມສ່ຽງແຫ່ງຊາດດ້ານການຕ້ານ ການຟອກເງິນ ທີ່ຕິດພັນກັບ ອະສັງຫາລິມະຊັບ ແມ່ນໄດ້ເກັບກຳໃນໄລຍະ 05 ປີຍ້ອນຫຼັງ ນັບແຕ່ປີ 2019-2023, ໂດຍການນຳສົ່ງແບບສອບຖາມ ໃຫ້ພາກສ່ວນກ່ຽວຂ້ອງກ່ອນລົງເກັບກຳຂໍ້ມູນຕົວຈິງ ແລະ ມີການຈັດກອງປະຊຸມເຜີຍແຜ່ ຢູ່ສູນກາງ ແລະ ທ້ອງຖິ່ນ ລວມມີ 04 ແຂວງ ຄື: ແຂວງຫຼວງພະບາງ, ແຂວງຈຳປາສັກ, ແຂວງສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ, ອີງໃສ່ບັນດາແຂວງ ແມ່ນເປັນແຂວງທີ່ມີການລົງທຶນ ແລະ ກຳລັງພັດທະນາທຸລະກິດດ້ານອະສັງຫາລິມະຊັບ ທັງພາຍໃນ ແລະ ຈາກຕ່າງປະເທດ.

ເຜີຍແຜ່ສ້າງຄວາມເຂົ້າໃຈ ຈຸດປະສົງໃນການປະເມີນຄວາມສ່ຽງລະດັບຊາດ ໂດຍມີຈາກພາກສ່ວນພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ ແລະ ບໍລິສັດທີ່ດຳເນີນທຸລະກິດດ້ານ ອະສັງຫາລິມະຊັບ ຈາກນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ ໂດຍ ໄດ້ອະທິບາຍຂັ້ນຕອນການປະເມີນ, ເນື້ອໃນການປະເມີນແຕ່ລະຕົວປ່ຽນ ພ້ອມທັງກຳນົດເວລາປະຕິບັດ ແລະ ສຳເລັດ ການປະເມີນ.

### 6.3.3. ຜົນການປະເມີນ

ຜົນການຈັດຕັ້ງປະຕິບັດແຕ່ລະດ້ານສາມາດປະເມີນຜົນໄດ້ດັ່ງນີ້:

**1. ຄວາມບອບບາງຂອງຂະແໜງການທຸລະກິດຊື້-ຂາຍອະສັງຫາລິມະຊັບ**

ການດຳເນີນທຸລະກິດຊື້-ຂາຍອະສັງຫາລິມາຊັບໃນ ສປປ ລາວ ໄດ້ມີການຄຸ້ມຄອງຈາກພາກລັດ ໃນປີ 2022 ຂະຫນາດຂອງທຸລະກິດຊື້-ຂາຍອະສັງຫາລິມະຊັບໃນຂອບເຂດທົ່ວປະເທດແມ່ນມີ ທັງໝົດ 621 ບໍລິສັດ (ໃນນັ້ນໄດ້ເຂົ້າ ມາຂໍອອກໃບອະນຸຍາດດຳເນີນທຸລະກິດຕາມລະບຽບການທີ່ວາງອອກແລ້ວຈຳນວນ 59 ບໍລິສັດ, ສ່ວນບໍລິສັດອື່ນ ແມ່ນຢູ່ໃນຂັ້ນຕອນການປຸກລະດົມໃນການໃຫ້ເຂົ້າມາຂໍໃບອານຸຍາດເພື່ອດຳເນີນທຸລະກິດຕາມລະບຽບການທີ່ວາງ ອອກ), ໃນປີ 2023 ກວມເອົາ 2,8% ຂອງ GDP ທັງໝົດ ແລະ ອີງຕາມບົດລາຍງານສະພາບການເຕີບໂຕເສດຖະກິດ ຂອງ ສປປ ລາວ 2023 ແລະ ທ່າອ່ຽງ 2024 ຄາດຄະເນການຂະຫຍາຍຕົວເພີ່ມຂຶ້ນ 0,2%. ຊຶ່ງຖ້າອີງໃສ່ຂໍ້ມູນຂະໜາດ ການດຳເນີນທຸລະກິດຕົວຈິງເຫັນວ່າມີແຫຼ່ງທຶນໝຸນວຽນໃນລະບົບເສດຖະກິດບໍ່ຫຼາຍ ຖ້າທຽບໃສ່ຂະແໜງການອື່ນ, ພ້ອມດຽວກັນນັ້ນ, ການເຄື່ອນໄຫວຊື້-ຂາຍ ປະຈຸບັນໄດ້ກຳນົດໃຫ້ຊື້-ຂາຍ ຜ່ານລະບົບທະນາຄານ ຕາມຂໍ້ຕົກລົງວ່າ ດ້ວຍທຸລະກິດກ່ຽວກັບທີ່ດິນ ເລກທີ 4392/ກຊສ, ລົງວັນທີ 22 ສິງຫາ 2022 ເພື່ອນຳໃຊ້ຂັ້ນຕອນການຊອກຮູ້ລູກຄ້າ ໃຫ້ຫັດກຸມຂຶ້ນ, ລວມທັງຫຼຸດຜ່ອນການນຳໃຊ້ເງິນສົດເຂົ້າໃນການຊື້-ຂາຍ. ດ້ວຍເຫດນັ້ນ, ຜົນການປະເມີນ ຄວາມ ບອບບາງຂອງຂະແໜງການທຸລະກິດຊື້-ຂາຍອະສັງຫາລິມະຊັບ ຈັດຢູ່ລະດັບ **<u>ກາງ.</u>**

**2. ຄຸນນະພາບຂອງການຄວບຄຸມ ຕ້ານການຟອກເງິນ**

ຜົນການປະເມີຄຸນນະພາບຂອງການຄວບຄຸມ ຕ້ານການຟອກເງິນ ແມ່ນຈັດຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກວ່າ:

**1) ຄຸນນະພາບຂອງການເພີ່ມທະວີເອົາໃຈໃສ່ລູກຄ້າ**

ຂັ້ນຕອນການກວດສອບແລະ ການປ່ຽນແປງ ເຈົ້າຂອງວິສາຫະກິດ, ຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ກ່ອນ ແລະ ຫຼັງອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ເພື່ອປ້ອງກັນບໍ່ໃຫ້ອາດຊະຍາກອນ ສວາຍໃຊ້ຂະແໜງການ ດັ່ງກ່າວເຂົ້າໃນການຟອກເງິນ ແມ່ນໄດ້ລະບຸແຈ້ງ ພາຍໃຕ້ ຄູ່ມືແນະນຳວິຊາການ ກ່ຽວກັບການກວດສອບຜູ້ຮັບຜົນ ປະໂຫຍດທີ່ແທ້ຈິງກ່ອນ ແລະ ຫຼັງອອກໃບອະນຸບາດ ເລກທີ 6968/ກຊສ.ກທດ, ລົງວັນທີ 22/12/2022 ແລະ ການເຄື່ອນໄຫວຊື້-ຂາຍອາສັງຫາລິມາຊັບແມ່ນ ຕາມຂໍ້ຕົກລົງວ່າດ້ວຍທຸລະກິດກ່ຽວກັບທີ່ດິນ ເລກທີ 4392/ກຊສ, ລົງ ວັນທີ 22 ສິງຫາ 2022 ເພື່ອນຳໃຊ້ຂັ້ນຕອນການຊອກຮູ້ລູກຄ້າໃຫ້ຫັດກຸມຂຶ້ນ.

ທັງນີ້ທັງນັ້ນອີງໃສ່ຜົນການຈັດຕັ້ງປະຕິບັດຕົວຈິງຂອງບັນດາບໍລິສັດແມ່ນຍັງບໍ່ທັນເຂົ້າສູ່ລະບຽບ ແລະ ຍັງບໍ່ທັນ ໄດ້ຂຶ້ນຈົດທະບຽນອອກໃບອະນຸຍາດທັງຫມົດ, ຈຶ່ງເຮັດໃຫ້ປະສິດຕິພາບໃນການຄຸ້ມຄອງດັ່ງກ່າວຍັງບໍ່ທັນປະຕິບັດໄດ້ດີ ເທົ່າທີ່ຄວນ.

**2) ຄຸນນະພາບຂອງການຄຸ້ມຄອງວຽກງານຕ້ານການຟອກເງິນ**

ຜ່ານການຈັດຕັ້ງປະຕິບັດວຽກງານ ການຕ້ານ ການຟອກເງິນ ແລະ ການບັງຄັບໃຊ້ນິຕິກຳທີ່ກ່ຽວຂ້ອງຍັງຈຳກັດ ເຖິງວ່າຈະມີການກຳນົດ ການນຳໃຊ້ມາດຕະການລົງໂທດຕໍ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີການລະເມີດລະບຽບການ ກ່ຽວຂ້ອງ ແຕ່ການຈັດຕັ້ງປະຕິບັດຕົວຈິງ ຜ່ານການກວດສອບພາຍໃນ ແລະ ຕ່າງປະເທດ ແລະ ການຕິດຕາມກວດກາ ແມ່ນຍັງບໍ່ທັນພຽງພໍ. ດ້ວຍເຫດນັ້ນ, ຄຸນນະພາບຂອງການຄຸ້ມຄອງວຽກງານຕ້ານການຟອກເງິນ ຈັດຢູ່ໃນລະດັບ **<u>ຕ່ຳ.</u>**

**3) ລະດັບການປະຕິບັດຕາມລະບຽບກົດໝາຍຂອງພະນັກງານ**

ຜ່ານການເກັບກຳຂໍ້ມູນການຈັດຕັ້ງປະຕິບັດບັນດາລະບຽບການຕ່າງໆຂອງບໍລິສັດ ແມ່ນບໍ່ທັນເຂົ້າໃຈກ່ຽວກັບ ພັນທະຂອງຕົນ, ບໍ່ມີການສ້າງລະບຽບການພາຍໃນເພື່ອຄຸ້ມຄອງວຽກງານຕ້ານການຟອກເງິນ, ບໍ່ມີການຝຶກອົບຮົມໃຫ້ ກັບພະນັກງານ, ບໍ່ມີການປະເມີນຄວາມສ່ຽງພາຍໃນຂອງຕົນ, ບໍ່ໄດ້ຮັບການກວດສອບພາຍໃນ ແລະ ພາຍນອກ ແລະ ບໍ່ ມີລະບົບທີ່ທັນສະໄໝໃນການກວດກາລາຍຊື່ລູກຄ້າ ສິ່ງຜົນໃຫ້ການປະຕິບັດຕາມລະບຽບບໍ່ພຽງພໍ. ດ້ວຍເຫດນັ້ນ, ລະດັບການປະຕິບັດຕາມລະບຽບກົດໝາຍຂອງພະນັກງານ ຈັດຢູ່ໃນລະດັບ **<u>ຕ່ຳ.</u>**

**4) ຄຳໝາຍໝັ້ນ ແລະ ຄວາມເປັນຜູ້ນຳຂອງຝ່າຍບໍລິຫານ**

ຜູ້ຄຸ້ມຄອງໄດ້ອອກລະບຽບການເພື່ອເປັນເຄື່ອງມືໃນການຄຸ້ມຄອງບໍລິສັດທີ່ດຳເນີນທຸລະກິດກ່ຽວກັບອະສັງຫາລິມາຊັບ ໃນປີ 2023 ແຕ່ໃນການຈັດຕັ້ງປະຕິບັດຕົວຈິງຍັງພົບຄວາມຫຍຸ້ງຍາກ ເບື້ອງບໍລິສັດສ່ວນໃຫ່ຍ ບໍ່ທັນມີຄວາມຕື່ນຕົວໃນການມາຂໍອອກໃບອະນຸຍາດນຳຜູ້ຄຸ້ມຄອງ, ບັນດາບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຍັງບໍ່ທັນມີຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດ. ດ້ວຍເຫດນັ້ນ, ຄຳໝາຍໝັ້ນ ແລະ ຄວາມເປັນຜູ້ນຳຂອງຝ່າຍບໍລິຫານ ຈັດຢູ່ໃນລະດັບ **ຕ່ຳຫຼາຍ.**

**5) ຄຸນນະພາບຂອງນະໂຍບາຍ ແລະ ຂັ້ນຕອນຂອງວຽກງານການຕ້ານການຟອກເງິນ**

ເຖິງວ່າ ຈະມີການສ້າງລະບຽບການຕ່າງໆໄວ້, ແຕ່ເຫັນວ່າການນຳໃຊ້ມາດຕະການລົງໂທດຕໍ່ຫົວໜ່ວຍທີ່ລະເມີດທີ່ບໍ່ປະຕິບັດຕາມລະບຽບ ຍັງໜ້ອຍ, ພ້ອມດຽວກັນນັ້ນ, ອີງໃສ່ສະຖິຕິຕົວຈິງ ແມ່ນຍັງບໍ່ທັນມີການລົງກວດກາ ແລະ ດຳເນີນມາດຕະການລົງໂທດກັບບັນດາບໍລິສັດທີ່ບໍ່ປະຕິບັດລະບຽບ ຕ້ານການຟອກເງິນ ແລະ ຂໍ້ກຳນົດທີ່ເປັນມາດຖານ. ດ້ວຍເຫດນັ້ນ ຄຸນນະພາບຂອງນະໂຍບາຍ ແລະ ຂັ້ນຕອນຂອງວຽກງານການຕ້ານການຟອກເງິນ ຈັດຢູ່ໃນລະດັບ **ຕ່ຳຫຼາຍ.**

**6) ຄຸນນະພາບຂອງການເຄື່ອນໄຫວ**

ຜ່ານການເກັບກຳຂໍ້ມູນເຫັນວ່າການຈັດຕັ້ງປະຕິບັດການຄຸ້ມຄອງບັນດາບໍລິສັດທຸລະກິດຊື້ຂາຍອະສັງຫາລິມາຊັບ ເຖິງວ່າປະຈຸບັນຈະມີການສ້າງລະບຽບການຄຸ້ມຄອງທີ່ຫັດກຸມ, ແຕ່ໃນຂອດການຈັດຕັ້ງປະຕິບັດການຄຸ້ມຄອງຕົວຈິງຍັງບໍ່ທັນມີປະສິດທິພາບເທົ່າຄວນ, ສະແດງອອກຈາກ ລົງເຜີຍແຜ່ເພື່ອປຸກລະດົມໃຫ້ບັນດາບໍລິສັດຫັນເຂົ້າມາສູ່ລະບຽບການຍັງບໍ່ທັນກວ້າງຂວາງ ແລະ ໜັກແໜ້ນ, ບໍ່ທັນມີການລົງກວດກາ ແລະ ນຳໃຊ້ມາດຕະການຕໍ່ບໍລິສັດທີ່ບໍ່ຈັດຕັ້ງປະຕິບັດຕາມລະບຽບ, ການຕື່ນຕົວມາຂໍໃບອະນຸຍາດດຳເນີນທຸລະກິດຂອງບັນດາບໍລິສັດ ເພື່ອເຂົ້າສູ່ລະບຽບການແມ່ນຍັງມີໜ້ອຍ, ນອກນັ້ນບັນດາບໍລິສັດທີ່ຮັບໃບອະນຸຍາດແລ້ວ ກໍ່ຍັງບໍ່ທັນມີຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດລະບຽບການຕ້ານ ການຟອກເງິນ, ບໍ່ມີການສ້າງແຜນງານ ແລະ ລະບຽບພາຍໃນ, ລວມເຖິງການລາຍງານທຸລະກຳທີ່ໜ້າສົງໄສ. ດ້ວຍເຫດນັ້ນ, ຄຸນນະພາບຂອງການເຄື່ອນໄຫວ ຈັດຢູ່ໃນລະດັບ **ຕ່ຳຫຼາຍ.**

**3. ສະຫຼຸບຜົນການປະເມີນ**

ຜ່ານການປະເມີນຈາກຜົນການແກ້ໄຂຄວາມສ່ຽງຕາມແຜນທີ່ກຳນົດໃນບົດຄວາມສ່ຽງແຫ່ງຊາດປີ 2018 ແລະ ຕາມການເກັບກຳຂໍ້ມູນຕົວຈິງໃນປະຈຸບັນຕາມຂັ້ນຕອນການເກັບກຳຂໍ້ມູນທີ່ກຳນົດໃນຂໍ້ 6.3.1, ເຫັນວ່າຂະແໜງການຊື້ຂາຍອະສັງຫາລິມະຊັບມີຄວາມສ່ຽງ **ກາງ-ສູງ.** ເນື່ອງຈາກວ່າການປະຕິບັດພັນທະຕາມ ກົດໝາຍ ແລະ ລະບຽບການທີ່ວາງອອກເປັນຕົ້ນ: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຂໍ້ຕົກລົງວ່າດ້ວຍທຸລະກິດກ່ຽວກັບທີ່ດິນ, ຄູ່ມືແນະນຳວິຊາການກ່ຽວກັບການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແລະ ຄູ່ມືແນະນຳວິຊາການກ່ຽວກັບການກວດກາ ວຽກງານການຕ້ານ ການຟອກເງິນ ສຳລັບທຸລະກິດກ່ຽວກັບທີ່ດິນ ຂອງຂະແໜງການອະສັງຫາລິມະຊັບ ຍັງບໍ່ໄດ້ດີເທົ່າທີ່ຄວນສະແດງອອກຄື: ບັນດາບໍລິສັດຍັງບໍ່ເຂົ້າໃຈພັນທະຂອງຕົນກ່ຽວກັບວຽກງານການຕ້ານ ການຟອກເງິນ, ຍັງບໍ່ມີການສ້າງລະບຽບພາຍໃນ, ຂາດການສ້າງແຜນງານໃນການຈັດຕັ້ງປະຕິບັດວຽກງານ, ຂາດການການກວດສອບການຈັດຕັ້ງປະຕິບັດທັງພາຍໃນ ແລະ ພາຍນອກ, ຍັງບໍ່ມີການຝຶກອົບຮົມໃຫ້ຄວາມຮູ້ກັບພະນັກງານ, ບໍ່ມີການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ, ນອກຈາກນັ້ນ, ຜູ້ຄຸ້ມຄອງຍັງບໍ່ທັນມີການລົງຕິດຕາມກວດກາ ແລະ ນຳໃຊ້ມາດຕະການລົງໂທດຢ່າງຈິງຈັງຕໍ່ຫົວໜ່ວຍທີ່ບໍ່ມີການປະຕິບັດຕາມລະບຽບ, ສະນັ້ນ ເຫັນໄດ້ວ່າ ການຈັດປະຕິບັດວຽກງານ ຕ້ານການຟອກເງິນ ໃນຂະແໜງການອະສັງຫາລິມະຊັບແມ່ນມີຄວາມບອບບາງ ແລະ ບໍລິສັດບໍ່ທັນມີຄວາມເຂົ້າໃຈຕໍ່ວຽກງານດັ່ງກ່າວຊຶ່ງເປັນຊ່ອງຫວ່າງໃຫ້ອາດຊະຍາກອນມາສວຍໃຊ້ໄດ້.

# VII. ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ

## 7.1. ພາບລວມ

ການສ້າງຕັ້ງວິສາຫະກິດເປັນນິຕິບຸກຄົນ ເປັນວຽກງານໜຶ່ງທີ່ສຳຄັນໃນການສ້າງປະຊາກອນທຸລະກິດໃຫ້ເພີ່ມຂຶ້ນ ເພື່ອຊຸກຍູ້ສົ່ງເສີມທຸລະກິດການຜະລິດ, ການຄ້າ ແລະ ການບໍລິການຂອງທຸກພາກສ່ວນເສດຖະກິດ ແນໃສ່ຂະຫຍາຍກຳລັງການຜະລິດ, ການພົວພັນການຜະລິດ, ເຮັດໃຫ້ເສດຖະກິດ-ສັງຄົມຂອງຊາດ ມີຄວາມເຕີບໃຫຍ່ເຂັ້ມແຂງ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ. ສະນັ້ນ, ຂະແໜງທະບຽນວິສາຫະກິດ ຈຶ່ງໄດ້ກຳນົດ ປະກອບເຂົ້າໃນແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 5 ປີ 2021-2025, ຫັນເປັນແຜນວຽກຈຸດສຸມ ແລະ ວຽກບູລິມະສິດໃນແຕ່ລະປີ ຊຶ່ງສ້າງແຜນນະໂຍບາຍການພັດທະນາໃນວຽກງານທະບຽນວິສາຫະກິດ (ໃນໄລຍະປີ 2026 - 2030).

ນິຕິບຸກຄົນໃນ ສປປ ລາວ ໝາຍເຖິງ ວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ລວມທັງ ສະຫະກອນ, ສະມາຄົມ ແລະ ມູນນິທິ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງຂຶ້ນເປັນນິຕິບຸກຄົນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຕາມທີ່ໄດ້ກຳນົດໃນຂໍ້ 6 ມາດຕາ 3 ຂອງປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017. ຊຶ່ງໃນການປະເມີນໃນຄັ້ງນີ້ ແມ່ນຈະປະເມີນ ນິຕິບຸກຄົນຕາມກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ ມີລາຍລະອຽດຄື: 1) ວິສາຫະກິດຮຸ້ນສ່ວນສາມັນ; 2) ວິສາຫະກິດຮຸ້ນສ່ວນຈຳກັດ; 3) ບໍລິສັດ ຈຳກັດ; 4) ບໍລິສັດ ຈຳກັດ ຜູ້ດຽວ ແລະ 5) ບໍລິສັດ ມະຫາຊົນ.

ຈຸດປະສົງຂອງການປະເມີນຄວາມສ່ຽງ ດ້ານນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ເພື່ອກຳໄດ້ສະພາບລວມຂອງນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ ໃນ ສປປ ລາວ ໃນການລະບຸ ໄພຂົ່ມຂູ່, ຄວາມບອບບາງທາງດ້ານນິຕິກຳ ແລະ ກົນໄກ, ປັດໃຈຄວາມສ່ຽງ ສະເພາະຂອງແຕ່ລະປະເພດ ນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຫຼື ຂຶ້ນທະບຽນຢູ່ ໃນ ສປປ ລາວ ທີ່ໄດ້ລະເມີດຕໍ່ລະບຽບກົດໝາຍໃນໄລຍະຜ່ານມາ ເພື່ອກຳນົດມາດຕະການແກ້ໄຂ ແລະ ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ.

## 7.2. ການດຳເນີນການປະເມີນຄວາມສ່ຽງ

ຫຼັກການປະເມີນຕົວຈິງຂອງການປະເມີນຄວາມສ່ຽງແຫ່ງຊາດດ້ານການຟອກເງິນ ທີ່ຕິດພັນກັບ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍແມ່ນອີງຕາມຂັ້ນຕອນ ແລະ ກົນໄກຄູ່ມືການປະເມີນຄວາມສ່ຽງ ຂອງອົງການຕ້ານການຟອກເງິນສາກົນ ໂດຍນຳໃຊ້ເຄື່ອງມືໃນການປະເມີນ ຄວາມສ່ຽງດ້ານການຟອກເງິນທີ່ຕິດພັນກັບ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ທີ່ທະນາຄານໂລກພັດທະນາຂຶ້ນ. ຊຶ່ງໃນການປະເມີນປະກອບມີ: 1) ການເກັບກຳຂໍ້ມູນທົ່ວໄປ: ແມ່ນເກັບກຳຂໍ້ມູນກ່ຽວກັບຈຳນວນສະຖິຕິ, ປະເພດ, ລະບຽບກົດໝາຍທີ່ກ່ຽວຂ້ອງກ່ຽວກັບນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຫຼື ຂຶ້ນທະບຽນຢູ່ ໃນ ສປປ ລາວ ໂດຍອີງໃສ່ຂໍ້ມູນທີ່ມີຢູ່ໃນຖານຂໍ້ມູນວິສາຫະກິດແຫ່ງຊາດທີ່ຂຶ້ນກັບກົມທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຫ້ອງການຄຸ້ມຄອງ ແລະ ສົ່ງເສີມເຂດເສດຖະກິດພິເສດ, ກະຊວງແຜນການ ແລະ ການລົງທຶນ; 2) ໄພຂົ່ມຂູ່ດ້ານການຟອກເງິນ ກ່ຽວກັບນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ: ແມ່ນການເກັບສະຖິຕິກ່ຽວກັບໄພຂົ່ມຂູ່ດ້ານການຟອກເງິນ ລວມທັງການກະທຳຜິດຕົ້ນອື່ນໆ ໂດຍອີງໃສ່ແຫຼ່ງຂໍ້ມູນຈາກເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການ, ສານ, ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ແຫຼ່ງຂໍ້ມູນເປີດທີ່ສາມາດເຊື່ອຖືໄດ້; 3) ການປະເມີນຄວາມສ່ຽງປະເພດຂອງ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ: ເພື່ອກຳນົດ ຫຼື ລະບຸປັດໄຈຄວາມສ່ຽງ ຂອງແຕ່ລະປະເພດນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດໝາຍ ໂດຍນຳໃຊ້ຂໍ້ມູນຈາກ ພາກການເກັບກຳຂໍ້ມູນທົ່ວໄປ ແລະ ພາກໄພຂົ່ມຂູ່ ໃນຂ້າງເທິງ; ແລະ 4) ການປະເມີນຄວາມບອບບາງແຫ່ງຊາດ ຕໍ່ນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ: 1) ເພື່ອປະເມີນຄວາມບອບບາງຂອງປະເທດ ທີ່ຕິດ

ກັບການຟອກເງິນທີ່ລະເມີດໂດຍ ນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ; 2) ທົບທວນມາດຕະການຫຼຸດຜ່ອນຄວາມສ່ຽງ ຕໍ່ການລະເມີດ; 3) ລະບຸຊ່ອງຫວ່າງ ແລະ ຈຸດອ່ອນ ຕໍ່ກັບການເປັນເຈົ້າຂອງຜົນປະໂຫຍດທີ່ແທ້ຈິງ; ແລະ 4) ລະບຸລະດັບຄວາມຈຳເປັນທີ່ຕ້ອງໄດ້ມີມາດຕະການປ້ອງກັນ.

ນອກຈາກການເກັບກຳຂໍ້ມູນທີ່ກ່າວມາຂ້າງເທິງ ຍັງໄດ້ເກັບກຳຂໍ້ມູນເພີ່ມເຕີມຈາກອານຸກຳມະການປະເມີນຄວາມສ່ຽງອື່ນ ເປັນຕົ້ນ: ຄະແນນລະດັບໄພຂົ່ມຂູ່ດ້ານການຟອກເງິນໂດຍລວມ, ຈຳນວນຄະດີ ແລະ ຊັບສິນ ທີ່ຕິດພັນກັບຄະດີຟອກເງິນ ຈາກຄະນະອານຸກຳມະການ ຮັບຜິດຊອບປະເມີນດ້ານໄພຂົ່ມຂູ່ດ້ານການຟອກເງິນ (ໂມດູນ 7). ທັງ ນີ້, ກໍ່ເພື່ອຊ່ວຍປະກອບເຂົ້າໃນເຄື່ອງມືການປະເມີນ ກ່ຽວກັບສະພາບໄພຂົ່ມຂູ່ໂດຍລວມຂອງປະເທດ.

ການເກັບກຳຂໍ້ມູນເພື່ອມາດຳເນີນການປະເມີນຄວາມສ່ຽງແຫ່ງຊາດ ດ້ານການຟອກເງິນ ທີ່ຕິດພັນກັບ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ແມ່ນໄດ້ເກັບກຳໃນໄລຍະ 05 ປີຍ້ອນຫຼັງ (2018-2022), ໂດຍການນຳສົ່ງແບບສອບຖາມໃຫ້ພາກສ່ວນກ່ຽວຂ້ອງກ່ອນລົງເກັບກຳຂໍ້ມູນຕົວຈິງ ແລະ ມີການຈັດກອງປະຊຸມ ເຜີຍແຜ່ ຢູ່ສູນກາງ ແລະ ທ້ອງຖິ່ນ ລວມມີ 03 ແຂວງ ຄື: ເຂດເສດຖະກິດພິເສດແຂວງບໍ່ແກ້ວ, ເຂດເສດຖະກິດພິເສດ ແຂວງ ສະຫວັນນະເຂດ ແລະ ເຂດເສດຖະກິດພິເສດນະຄອນຫຼວງວຽງຈັນ ເນື່ອງຈາກວ່າງົບປະມານມີຄວາມຈຳກັດ, ບັນດາແຂວງດັ່ງກ່າວ ແມ່ນເປັນແຂວງທີ່ມີການລົງທຶນຈາກຕ່າງປະເທດຂະໜາດໃຫຍ່ ແລະ ຊາຍແດນຕິດກັບປະເທດ ເພື່ອນບ້ານ. ຊຶ່ງຂໍ້ມູນທີ່ເກັບກຳລວມມີ: ເກັບກຳຂໍ້ມູນກ່ຽວກັບນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ ທີ່ ໄດ້ຮັບອະນຸຍາດດຳເນີນທຸລະກິດ ຫຼື ຂຶ້ນທະບຽນວິສາຫະກິດ ຢູ່ ໃນ ສປປ ລາວ, ລະບຽບ ຫຼື ນິຕິກຳທີ່ໃຊ້ຄຸ້ມຄອງຂະ ແໜງການດັ່ງກ່າວ; ຈຳນວນກໍລະນີ ຫຼື ຄະດີທີ່ເກີດຂຶ້ນຕົວຈິງຢູ່ ສປປ ລາວ ຕິດພັນກັບ ນິຕິບຸກຄົນ ແລະ ຜູ້ທີ່ຕົກລົງ ກັນທາງດ້ານກົດໝາຍ ເປັນຕົ້ນ ຈຳນວນການລາຍງານທຸລະກຳທີ່ສົງໄສ, ຈຳນວນບົດລາຍງານຂ່າວກອງທີ່ພາກສ່ວນ ກ່ຽວຂ້ອງສົ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ, ຈຳນວນຄະດີທີ່ເປີດການສືບສວນ-ສອບສວນ ແລະ ສົ່ງໃຫ້ອົງການໄອ ຍະການ; ຈຳນວນການສັ່ງຟ້ອງ ແລະ ຕັດສິນຄະດີ ຕໍ່ກັບນິຕິບຸກຄົນ ແລະ ຜູ້ທີ່ຕົກລົງກັນທາງດ້ານກົດໝາຍ ທີ່ຕິດພັນ ກັບການຟອກເງິນ; ການເກັບກຳລາຍຮັບຂອງເຈົ້າໜ້າທີ່ອາກອນ; ຈຳນວນການຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງດ້ານ ອາຍາ, ຈຳນວນການຍຶດ ຫຼື ອາຍັດຊັບສິນ, ຈຳນວນຜູ້ກະທຳຜິດ, ບັນດາຊັບສິນທີ່ໄດ້ຮັບຜົນກະທົບຕິດພັນກັບຄະດີ ດັ່ງກ່າວ ແລະ ອື່ນໆ. ພ້ອມທັງຂໍ້ມູນອື່ນໆທີ່ຕິດພັນກັບຄວາມບອບບາງ ກໍ່ຄືຄວາມອາດສາມາດໃຫ້ການສະກັດກັ້ນ ບັນຫາດັ່ງກ່າວ ເປັນຕົ້ນ: ໄດ້ສັງລວມນິຕິກຳການຟອກເງິນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດບັນດາ ລະບຽບກົດໝາຍ.

## 7.3. ຜົນການປະເມີນຄວາມສ່ຽງ

ຜ່ານການເກັບກຳຂໍ້ມູນ ໂດຍອີງໃສ່ສະພາບການຈັດຕັ້ງປະຕິບັດຕົວຈິງ ຂອງ ສປປ ລາວ ສາມາດສະຫຼຸບຜົນ ຂອງການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດ ໝາຍ ໂດຍແບ່ງອອກເປັນ 3 ພາກ ຄື: 1) ການປະເມີນໄພຂົ່ມຂູ່ທາງດ້ານການຟອກເງິນ ທີ່ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດໝາຍ; 2) ການປະເມີນຄວາມສ່ຽງດ້ານການຟອກເງິນ ຂອງປະເພດວິສາຫະກິດທີ່ມີຖານະ ເປັນນິຕິບຸກຄົນ ແລະ 3) ປະເມີນຄວາມບອບບາງແຫ່ງຊາດທີ່ຕິດພັນກັບ ນະໂຍບາຍດຶງດູດການລົງທຶນຂອງ ຕ່າງປະເທດ.

### 7.3.1. ການປະເມີນໄພຂົ່ມຂູ່ທາງດ້ານການຟອກເງິນ ທີ່ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານ ກົດໝາຍ

ຜົນສະຫຼຸບຂອງການປະເມີນໄພຂົ່ມຂູ່ທາງດ້ານການຟອກເງິນ ຜ່ານນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານ ກົດໝາຍໂດຍອີງໃສ່ຂໍ້ມູນສະຖິຕິຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນສຳນັກງານຂໍ້ມູນຕ້ານການຟອກເງິນ, ເຈົ້າໜ້າທີ່

ສືບສວນ-ສອບສວນ, ໄອຍະການ, ສານ, ແລະ ແຫຼ່ງຂໍ້ມູນເປີດຂອງສາກົນທີ່ສາມາດເຊື່ອຖືໄດ້ ແລະ ການລົງເກັບກຳຂໍ້ມູນຕົວຈິງ ເຫັນໄດ້ວ່າ ຄະດີທີ່ຕິດພັນກັບການຟອກເງິນໂດຍຜ່ານ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດໝາຍ ໃນ ສປປ ລາວ ແມ່ນມີຈຳນວນທີ່ໜ້ອຍ ຈຶ່ງສາມາດສະຫຼຸບໄດ້ວ່າ ໄພຂົ່ມຂູ່ທາງດ້ານການຟອກເງິນ ຕິດພັນກັບ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດໝາຍຂອງ ສປປ ລາວ **ແມ່ນຢູ່ໃນລະດັບຕ່ຳ.**

### 7.3.2. ຜົນການປະເມີນຄວາມສ່ຽງຂອງປະເພດວິສາຫະກິດທີ່ມີຖານະເປັນນິຕິບຸກຄົນ ຂອງ ສປປ ລາວ

**1. ຜົນການປະເມີນຂອງປະເພດວິສາຫະກິດທີ່ມີຖານະເປັນນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວ**

ການເຄື່ອນໄຫວຂອງນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ໃນ ສປປ ລາວ ມີຢູ່ 5 ຮູບແບບວິສາຫະກິດ ຄື:

1) ວິສາຫະກິດຮຸ້ນສ່ວນສາມັນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນທີ່ໜ້ອຍ ແລະ ທຶນຈົດທະບຽນທີ່ໄຫຼວຽນໃນຮູບແບບທຸລະກິດ ກໍ່ບໍ່ສູງ, ການລະເມີດລະບຽບກົດໝາຍໃນໄລຍະຜ່ານມາເຫັນວ່າຢູ່ໃນລະດັບທີ່ຕ່ຳ ເມື່ອທຽບກັບວິສາຫະກິດຂະແໜງອື່ນ ໂດຍລວມແລ້ວຜ່ານການປະເມີນເຫັນວ່າຢູ່ໃນລະດັບ **ຕ່ຳ;**
2) ວິສາຫະກິດຮຸ້ນສ່ວນຈຳກັດ ທີ່ໄດ້ຂຶ້ນທະບຽນນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນທີ່ໜ້ອຍ ແລະ ທຶນຈົດທະບຽນຈົດທະບຽນທີ່ໄຫຼວຽນໃນຮູບແບບທຸລະກິດ ກໍ່ບໍ່ສູງ, ການລະເມີດລະບຽບກົດໝາຍໃນໄລຍະຜ່ານມາເຫັນວ່າຢູ່ໃນລະດັບທີ່ຕ່ຳ ເມື່ອທຽບກັບວິສາຫະກິດຂະແໜງອື່ນ ໂດຍລວມແລ້ວຜ່ານການປະເມີນເຫັນວ່າຢູ່ໃນລະດັບ **ຕ່ຳ;**
3) ບໍລິສັດ ຈຳກັດ ຜູ້ດຽວ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍ ເມື່ອທຽບໃສ່ ຮູບແບບວິສາຫະກິດອື່ນທີ່ມີຖານະເປັນນິຕິບຸກຄົນ, ທຶນຈົດທະບຽນຈຳນວນສູງ, ແຕ່ອີງຕາມການເກັບກຳຂໍ້ມູນເຫັນວ່າຍັງມີການລະເມີດລະບຽບກົດໝາຍຢູ່ບາງຈຳນວນ ຜ່ານການປະເມີນເຫັນວ່າຢູ່ໃນລະດັບ **ກາງ-ຕ່ຳ;**
4) ບໍລິສັດ ຈຳກັດ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍ, ມີທຶນຈົດທະບຽນຈຳນວນສູງ, ແຕ່ອີງຕາມການເກັບກຳຂໍ້ມູນເຫັນວ່າຍັງມີການລະເມີດລະບຽບກົດໝາຍຢູ່ບາງຈຳນວນ ຜ່ານການປະເມີນເຫັນວ່າຢູ່ໃນລະດັບ **ກາງ-ຕ່ຳ;**
5) ບໍລິສັດ ມະຫາຊົນ ທີ່ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຍັງມີຈຳນວນໜ້ອຍ ແຕ່ອີງໃສ່ຫຼັກການ ຂອງການສ້າງຕັ້ງ ບໍລິສັດມະຫາຊົນ ຂອງ ສປປ ລາວ ທີ່ມີຂໍ້ມູນຄວາມໂປ່ງໃສ ທາງດ້ານທຶນ ແລະ ການເຄື່ອນໄຫວ ທີ່ສາມາດເຂົ້າເຖິງໄດ້ ສະນັ້ນ, ຜ່ານການປະເມີນເຫັນວ່າໃນລະດັບ **ຕ່ຳຫຼາຍ;**

ຜ່ານການສັງລວມທັງ 5 ຮູບແບບວິສາຫະກິດຂອງນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວ ເຫັນວ່າມີຄວາມສ່ຽງ **ກາງ-ຕ່ຳ.**

**2. ຜົນການປະເມີນຂອງປະເພດວິສາຫະກິດທີ່ມີຖານະເປັນນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວ ຮ່ວມທຶນກັບຕ່າງປະເທດ**

ການເຄື່ອນໄຫວຂອງນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວ ຮ່ວມທຶນກັບຕ່າງປະເທດ ທີ່ໄດ້ດຳເນີນທຸລະກິດໃນ ສປປ ລາວ ມີຢູ່ 4 ຮູບແບບວິສາຫະກິດ ຄື:

1) ວິສາຫະກິດຮຸ້ນສ່ວນສາມັນ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນທີ່ໜ້ອຍ ແລະ ທຶນຈົດທະບຽນທີ່ໄຫຼວຽນໃນຮູບແບບທຸລະກິດ ກໍ່ບໍ່ສູງ, ການລະເມີດລະບຽບກົດໝາຍໃນໄລຍະຜ່ານມາເຫັນວ່າຢູ່ໃນລະດັບທີ່ຕ່ຳ ເມື່ອທຽບກັບວິສາຫະກິດຂະແໜງອື່ນ ໂດຍລວມແລ້ວຜ່ານການປະເມີນເຫັນວ່າຢູ່ໃນລະດັບ **ຕ່ຳ;**
2) ວິສາຫະກິດຮຸ້ນສ່ວນຈຳກັດ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍ ແລະ ທຶນຈົດທະບຽນຈົດທະບຽນທີ່ໄຫຼວຽນໃນຮູບແບບທຸລະກິດທີ່ສູງ, ການລະເມີດລະບຽບກົດໝາຍ

ໃນໄລຍະຜ່ານມາເຫັນວ່າຢູ່ໃນລະດັບທີ່ຕ່ຳ ເມື່ອທຽບກັບວິສາຫະກິດຂະແໜງອື່ນ ໂດຍລວມແລ້ວຜ່ານການປະເມີນເຫັນວ່າຢູ່ໃນລະດັບ **<u>ກາງ-ຕ່ຳ;</u>**

3) ບໍລິສັດ ຈຳກັດ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍກວ່າຮູບແບບວິສາຫະກິດອື່ນໆ ເນື່ອງຈາກວ່າເປັນການລົງທຶນທີ່ຮ່ວມລະຫວ່າງ ຄົນລາວ ແລະ ຕ່າງປະເທດ ຊຶ່ງເຮັດໃຫ້ມີທຶນຈົດທະບຽນຈຳນວນທີ່ສູງຫຼາຍ, ໂດຍອີງຕາມການເກັບກຳຂໍ້ມູນທີ່ຕິດພັນກັບໄພຂົ່ມຂູ່ເຫັນວ່າຍັງມີການລະເມີດລະບຽບກົດໝາຍຢູ່ບາງຈຳນວນ ໂດຍຜ່ານການປະເມີນເຫັນວ່າຢູ່ໃນລະດັບ **<u>ກາງ-ຕ່ຳ;</u>**
4) ບໍລິສັດ ມະຫາຊົນ ທີ່ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຍັງມີຈຳນວນໜ້ອຍ ແຕ່ອີງໃສ່ຫຼັກການ ຂອງການສ້າງຕັ້ງ ບໍລິສັດມະຫາຊົນ ຂອງ ສປປ ລາວ ທີ່ມີຂໍ້ມູນຄວາມໂປ່ງໃສ ທາງດ້ານທຶນ ແລະ ການເຄື່ອນໄຫວ ທີ່ສາມາດເຂົ້າເຖິງໄດ້ ສະນັ້ນ, ຜ່ານການປະເມີນເຫັນວ່າໃນລະດັບ **<u>ຕ່ຳ</u>**;

ຜ່ານການສັງລວມທັງ 4 ຮູບແບບວິສາຫະກິດຂອງນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວທີ່ຮ່ວມທຶນກັບຕ່າງປະເທດ ເຫັນວ່າມີຄວາມສ່ຽງ **<u>ກາງ-ຕ່ຳ;</u>**

### 3. ຜົນການປະເມີນຂອງປະເພດວິສາຫະກິດທີ່ມີຖານະເປັນນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ

ສປປ ລາວ ເປັນປະເທດທີ່ເປີດກວ້າງການລົງທຶນຈາກຕ່າງປະເທດ, ຊຶ່ງປະເທດທີ່ມາລົງທຶນໃນ ສປປ ລາວມີຫຼາຍກວ່າ 70 ປະເທດ ໃນຫຼາຍຂະແໜງການຄື: ກະສິກຳ, ພະລັງງານ ແລະ ບໍ່ແຮ່, ການບໍລິການ ແລະ ອື່ນໆ. ບັນດາປະເທດທີ່ມີການລົງທຶນຫຼາຍກວ່າໝູ່ຄື: ສ.ປຈີນ, ສສ ຫວຽດນາມ, ໄທ, ຝຣັ່ງ, ອິດສະຕາລີ, ສ. ເກົາຫຼີໃຕ້, ຍີ່ປຸ່ນ, ສ. ອາເມລິກາ, ອິນເດຍ, ມາເລເຊຍ...ໂດຍຜ່ານການສັງລວມຂໍ້ມູນ ສາມາດປະເມີນຄື:

1) ວິສາຫະກິດຮຸ້ນສ່ວນສາມັນ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນທີ່ໜ້ອຍ ແລະ ທຶນຈົດທະບຽນທີ່ໄຫຼວຽນໃນຮູບແບບທຸລະກິດ ກ່ຳບໍ່ສູງ, ການລະເມີດລະບຽບກົດໝາຍໃນໄລຍະຜ່ານມາເຫັນວ່າຢູ່ໃນລະດັບທີ່ຕ່ຳ ເມື່ອທຽບກັບວິສາຫະກິດຂະແໜງອື່ນ ໂດຍລວມແລ້ວຜ່ານການປະເມີນເຫັນວ່າຢູ່ໃນລະດັບ **<u>ຕ່ຳ;</u>**
2) ວິສາຫະກິດຮຸ້ນສ່ວນຈຳກັດ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍ ແລະ ທຶນຈົດທະບຽນຈົດທະບຽນທີ່ໄຫຼວຽນໃນຮູບແບບທຸລະກິດທີ່ສູງ, ການລະເມີດລະບຽບກົດໝາຍໃນໄລຍະຜ່ານມາເຫັນວ່າຢູ່ໃນລະດັບທີ່ຕ່ຳ ເມື່ອທຽບກັບວິສາຫະກິດຂະແໜງອື່ນ ໂດຍລວມແລ້ວຜ່ານການປະເມີນເຫັນວ່າຢູ່ໃນລະດັບ **<u>ກາງ-ຕ່ຳ;</u>**
3) ບໍລິສັດ ຈຳກັດ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍກວ່າຮູບແບບວິສາຫະກິດອື່ນໆ ເນື່ອງຈາກວ່າເປັນການລົງທຶນທີ່ຮ່ວມລະຫວ່າງ ຄົນລາວ ແລະ ຕ່າງປະເທດ ຊຶ່ງເຮັດໃຫ້ມີທຶນຈົດທະບຽນຈຳນວນທີ່ສູງຫຼາຍ, ແຕ່ອີງຕາມການເກັບກຳຂໍ້ມູນເຫັນວ່າຍັງມີການລະເມີດລະບຽບກົດໝາຍຢູ່ບາງຈຳນວນ ຜ່ານການປະເມີນເຫັນວ່າຢູ່ໃນລະດັບ **<u>ກາງ-ຕ່ຳ;</u>**
4) ບໍລິສັດ ຈຳກັດ ຜູ້ດຽວ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດ ເຫັນວ່າມີຈຳນວນຫຼາຍ ເມື່ອທຽບໃສ່ ຮູບແບບວິສາຫະກິດອື່ນທີ່ມີຖານະເປັນນິຕິບຸກຄົນ, ທຶນຈົດທະບຽນຈຳນວນສູງ, ໂດຍອີງຕາມການເກັບກຳຂໍ້ມູນທີ່ຕິດພັນກັບໄພຂົ່ມຂູ່ເຫັນວ່າຍັງມີການລະເມີດລະບຽບກົດໝາຍຢູ່ບາງຈຳນວນ ໂດຍຜ່ານການປະເມີນເຫັນວ່າຢູ່ໃນລະດັບ **<u>ກາງ-ຕ່ຳ;</u>**

ຜ່ານການສັງລວມທັງ 4 ຮູບແບບວິສາຫະກິດຂອງນິຕິບຸກຄົນ ທີ່ມີຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ເປັນຄົນລາວທີ່ຮ່ວມທຶນກັບຕ່າງປະເທດ ເຫັນວ່າມີຄວາມສ່ຽງ **<u>ກາງ-ຕ່ຳ;</u>**

### 7.3.3. ການປະເມີນຄວາມບອບບາງ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງ.

ການປະເມີນຄວາມບອບບາງແຫ່ງຊາດທີ່ຕິດພັນກັບນິຕິບຸກຄົນປະກອບດ້ວຍ 02 ພາກຄື:

### 1. ຄວາມບອບບາງແຫ່ງຊາດທີ່ຕິດພັນກັບ ນະໂຍບາຍດຶງດູດການລົງທຶນຂອງຕ່າງປະເທດ

**1) ຂະໜາດ ແລະ ອິດທິພົນຂອງການສ້າງຕັ້ງບໍລິສັດຕ່າງປະເທດຢູ່ ສປປ ລາວ**

ສປປ ລາວ ເປັນປະເທດທີ່ເປີດກວ້າງການລົງທຶນ, ໄດ້ສ້າງທຸກເງື່ອນໄຂເພື່ອດຶງດູດການລົງທຶນຈາກຕ່າງປະເທດ, ອີງໃສ່ພູມສັນຖານທີ່ມີຊັບພະຍາກອນທຳມະຊາດຈຳນວນຫຼາຍ ແລະ ຄ່າແຮງງານຕ່ຳ ຈຶ່ງເຮັດໃຫ້ໃນໄລຍະຜ່ານມາ ມີນັກລົງທຶນຈາກບັນດາປະເທດຕ່າງໆ ເຂົ້າມາລົງທຶນໃນ ສປປ ລາວ ມີກວ່າ 70 ປະເທດ ແລະ ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ຊຶ່ງເຮັດໃຫ້ລະບົບເສດຖະກິດຂອງ ສປປ ລາວ ມີການຂະຫຍາຍຕົວ ໂດຍພາກລັດໄດ້ອຳນວຍຄວາມສະດວກເປັນຕົ້ນແມ່ນ ມີຂະແໜງຂຶ້ນທະບຽນວິສາຫະກິດມີຄວາມສະດວກ, ມີບໍລິສັດທີ່ອຳນວຍຄວາມສະດວກໃນການໃຫ້ຄຳປຶກສາ ການລົງທຶນຢູ່ ສປປ ລາວ. ໂດຍອີງໃສ່ເງື່ອນໄຂດັ່ງກ່າວນັ້ນເຮັດໃຫ້ຜົນຂອງປັດໄຈຂອງ ຂະໜາດ ແລະ ອິດທິພົນຂອງການສ້າງຕັ້ງບໍລິສັດຕ່າງປະເທດຢູ່ ສປປ ລາວ ຢູ່ໃນລະດັບ **ສູງ.**

**2) ການໂຄສະນາເຜີຍແຜ່ຕໍ່ນັກລົງທຶນຕ່າງປະເທດ**

ສປປ ລາວ ເວົ້າລວມ, ເວົ້າສະເພາະກໍ່ໝາຍເຖິງພາກລັດໄດ້ເຫັນຄວາມສຳຄັນຂອງວຽກງານດຶງດູດການລົງທຶນ ຈຶ່ງໄດ້ອຳນວຍຄວາມສະດວກໃຫ້ບັນດານັກທຸລະກິດ ເປັນຕົ້ນ ແມ່ນໄດ້ອະນຸຍາດໃຫ້ມີການພັດທະນາເປັນເຂດເສດຖະກິດພິເສດ ເພື່ອກະຕຸ້ນການລົງທຶນເພື່ອເຮັດເສດຖະກິດມີການຂະຫຍາຍຕົວ ໂດຍໃຫ້ມີການໂຄສະນາ ຜ່ານສື່ສິ່ງພິມ, ຊ່ອງທາງອອນລາຍ, ຜ່ານຊ່ອງທາງກອງປະຊຸມລະດັບພາກພື້ນ, ມີຄູ່ມືແນະນຳສຳລັບນັກລົງທຶນຕ່າງປະເທດໃນການລົງທຶນ ແລະ ມີລະບົບການໃຫ້ວີຊ່າຕໍ່ນັກລົງທຶນຕ່າງປະເທດ, ແຕ່ອີງໃສ່ຫຼາຍໆເງື່ອນໄຂເຫັນໄດ້ວ່າການໂຄສະນາຍັງບໍ່ຫຼາກຫຼາຍ ຈຶ່ງເຮັດໃຫ້ຜົນການປະເມີນໃນດ້ານການໂຄສະນາເຜີຍແຜ່ຕໍ່ນັກລົງທຶນຕ່າງປະເທດ ຂອງ ສປປ ລາວ ມີຢູ່ໃນລະດັບ **ກາງ.***

**3) ສະຖຽນລະພາບ ທາງດ້ານການເມືອງ ແລະ ເສດຖະກິດ**

ສປປ ລາວ ເປັນປະເທດທີ່ມີສະຖຽນລະພາບທາງດ້ານການເມືອງສູງຈຶ່ງເຮັດໃຫ້ມີຄວາມເຂັ້ມແຂງ ແລະ ຄວາມໝັ້ນຄົງຂອງພາກລັດໃນລະດັບດີ, ບໍ່ມີຄວາມຂັດແຍ່ງທາງດ້ານເຊື້ອຊາດສາສະໜາ ແລະ ບໍ່ມີການຂັດແຍ່ງລະຫວ່າງຊາຍແດນ, ແຕ່ໃນດ້ານເສດຖະກິດແມ່ນອີງໃສ່ການນຳເຂົ້າເປັນສ່ວນໃຫຍ່ ຊຶ່ງສິນຄ້າທີ່ນຳເຂົ້າແມ່ນ ຜະລິດຕະພັນ ອຸປະໂພກ ແລະ ບໍລິໂພກທີ່ມີຄວາມຈຳເປັນຕໍ່ການດຳລົງຊີວິດຂອງປະຊາຊົນ, ດ້ວຍສາເຫດນັ້ນຈຶ່ງເຮັດໃຫ້ ການຄ້າ ແລະ ອັດຕາແລກປ່ຽນ ຂອງ ສປປ ລາວ ຍັງມີຄວາມຜັນຜວນຢ່າງໜັກໜ່ວງໃນໄລຍະ 03 ປີຜ່ານມາ. ດ້ວຍສາເຫດນັ້ນຈຶ່ງເຮັດໃຫ້ການປະເມີນດ້ານສະຖຽນລະພາບ ທາງດ້ານການເມືອງ ແລະ ເສດຖະກິດ ຂອງ ສປປ ລາວ ຢູ່ໃນລະດັບ **ກາງ.**

**4) ຄວາມເຂັ້ມແຂງຂອງການຄຸ້ມຄອງດ້ວຍກົດໝາຍ**

ສປປ ລາວ ເປັນປະເທດປະຊາທິປະໄຕທີ່ຄຸ້ມຄອງລັດດ້ວຍກົດໝາຍ ໃນປັດຈຸບັນມີກົດໝາຍທັງໝົດມີຈຳນວນ 166 ສະບັບ ແລະ ສະເພາະໃນຂົງເຂດເສດຖະກິດມີຫຼາຍຫລາຍກວ່າ 60 ສະບັບ, ລວມທັງກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍອາກອນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍແຜ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນໆ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວທຸລະກິດ ແລະ ການດຳເນີນມາດຕະການຕ່າງໆຕໍ່ບຸກຄົນ ຫຼື ນິຕິບຸກຄົນທີ່ເຄື່ອນໄຫວບໍ່ຖືກຕ້ອງ. ຈາກຜົນການປະເມີນດ້ານຄວາມເຂັ້ມແຂງຂອງການຄຸ້ມຄອງດ້ວຍກົດໝາຍ ມີຢູ່ໃນລະດັບ **ສູງ.**

**5) ກອບການປົກປ້ອງຊັບສິນດ້ວຍກົດໝາຍ**

ເຖິງແມ່ນວ່າ ສປປ ລາວ ເປັນປະເທດທີ່ຄຸ້ມຄອງລັດດ້ວຍກົດໝາຍ ແລະ ໄລຍະຜ່ານມາກໍ່ໄດ້ມີການປັບປຸງ ແລະ ສ້າງກົດໝາຍຂຶ້ນໃໝ່ຫຼາຍສະບັບ ເພື່ອຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ດຳເນີນທຸລະກິດ, ການດຳເນີນມາດຕະການຕ່າງໆໃນກໍລະນີທີ່ນິຕິບຸກຄົນຫາກມີການລະເມີດຕໍ່ລະບຽບກົດໝາຍ ແລະ ການຮິບຊັບມາເປັນຂອງລັດ ເປັນຕົ້ນການປົກປ້ອງສິດຜົນປະໂຫຍດຂອງນິຕິບຸກຄົນ. ແຕ່ດ້ວຍສາເຫດ ທີ່ມີການສວຍໃຊ້ຊ່ອງວ່າງດ້ານຕ່າງໆ ຈຶ່ງເຮັດການປະເມີນດ້ານກອບການປົກປ້ອງຊັບສິນດ້ວຍກົດໝາຍ ມີຢູ່ໃນລະດັບ **ກາງ.**

**6) ລະດັບຄວາມຮັບຮູ້ຂອງການສໍ້ລາດບັງຫຼວງ**

ສປປ ລາວ ເປັນໜຶ່ງໃນປະເທດທີ່ເອົາໃຈໃສ່ໃນລະດັບສູງຕໍ່ກັບການຕ້ານການສໍ້ລາດບັງຫຼວງ ທີ່ເກີດຂຶ້ນຢູ່ໃນພາກສ່ວນຕ່າງໆ ພ້ອມທັງດຳເນີນມາດຕະການຢ່າງເດັດຂາດຕໍ່ພະນັກງານຜູ້ລະເມີດໃນຂົງເຂດລັດ, ເຖິງຢ່າງໃດກໍ່ຕາມ ໃນໄລຍະຜ່ານມາກໍ່ມີຊ່ອງວ່າງຫຼາຍດ້ານທີ່ຖືກສວຍໃຊ້ໃຫ້ມີປະກົດການ ການສໍ້ລາດບັງຫຼວງທີ່ເກີດຂຶ້ນ ໃນແຕ່ລະໄລຍະ, ແຕ່ອີງຕາມເວັບໄຊ້ຂອງສາກົນ (Transparency International's Corruption Perceptions Index (CPI) https://www.transparency.org/en/cpi ) ໃນການຈັດລະດັບການສໍ້ລາດບັງຫຼວງໃຫ້ ສປປ ລາວ ຢູ່ໃນອັນດັບຕົ້ນໆຂອງບັນດາປະເທດໃນໂລກ. ດ້ວຍສາເຫດນັ້ນ ຈຶ່ງເຮັດໃຫ້ຜົນການປະເມີນ ດ້ານລະດັບຄວາມຮັບຮູ້ຂອງການສໍ້ລາດບັງຫຼວງຂອງ ສປປ ລາວ ໃນລະດັບ **ກາງ.**

**7) ລະດັບຄວາມໂປ່ງໃສຂອງ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ**

ໃນດ້ານຫຼັກການ ການສ້າງຕັ້ງວິສາຫະກິດ ໃນ ສປປ ລາວ ແມ່ນມີກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃນເວລາແຈ້ງຂຶ້ນທະບຽນຕ້ອງແຈ້ງຂໍ້ມູນຂອງຂາຮຸ້ນ ຫຼື ຜູ້ຖືຮຸ້ນ ໃຫ້ຈະແຈ້ງ, ໃນດ້ານຂະແໜງຂຶ້ນທະບຽນ ໄດ້ຖືເອົາ ຜູ້ທີ່ຖືກແຈ້ງຂໍ້ມູນໃນເວລາຂຶ້ນທະບຽນ ເປັນຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ, ແຕ່ຂັ້ນຕອນການກວດກາ ແລະ ຢັ້ງຢືນຂໍ້ມູນ ຂອງຜູ້ທີ່ໄດ້ຜົນປະໂຫຍດທີ່ແທ້ຈິງ ໂດຍສະເພາະແມ່ນຍັງບໍ່ມີ ລະບົບທີ່ທັນສະໄໝ ໃນການຄົ້ນຫາຂໍ້ມູນ ແລະ ນິຕິກຳທີ່ຮັບຮອງຍັງບໍ່ທັນມີຫຼາຍ, ມີພຽງແຕ່ບາງກົດໝາຍທີ່ໄດ້ກຳນົດນິຍາມກ່ຽວກັບ ຜູ້ທີ່ໄດ້ຜົນປະໂຫຍດທີ່ແທ້ຈິງ ເຊັ່ນ ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ບາງຜູ້ຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານໄດ້ອອກນິຕິກຳ ກ່ຽວກັບການກວດກາ ຜູ້ທີ່ໄດ້ຜົນປະໂຫຍດທີ່ແທ້ຈິງ. ດ້ວຍສາເຫດດັ່ງກ່າວ ຈຶ່ງເຮັດໃຫ້ການປະເມີນ ລະດັບຄວາມໂປ່ງໃສຂອງ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງ ສປປ ລາວ ແມ່ນຢູ່ໃນລະດັບ **ກາງ.**

**8) ນະໂຍບາຍການດຶງດູດທາງດ້ານອາກອນ**

ສປປ ລາວ ໄດ້ອອກກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບອາກອນ ລວມທັງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ຫຼາຍກວ່າ 10 ສະບັບ ເພື່ອເປັນບ່ອນອີງໃນການປະຕິບັດພັນທະທາງອາກອນ ສຳລັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ໄດ້ມີຫຼາຍເງື່ອນໄຂທີ່ອຳນວຍຄວາມສະດວກ ໃຫ້ກັບນັກລົງທຶນ ຕ່າງປະເທດ ທີ່ມາດຳເນີນທຸລະກິດ ໃນ ສປປ ລາວ ໃນຫຼາຍຂະແໜງການ ເຊັ່ນ ກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ໂຄງການລົງທຶນ ເພື່ອຮັບໃຊ້ ສາທາລະນະປະໂຫຍດ ແລະ ສາທາລະນຸປະໂພກ ລວມທັງວຽກງານພັດທະນາໂຄງລ່າງພື້ນຖານເປັນຕົ້ນ ວຽກງານ ສຶກສາ, ສາທາລະນະສຸກ, ພັດທະນາວັດທະນະທຳ-ສັງຄົມ, ພັດທະນາຊົນນະບົດ ..., ເຂດເສດຖະກິດພິເສດ, ນິຄົມອຸດສາຫະກຳ ແລະ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ. ດ້ວຍສາເຫດນັ້ນ ຈຶ່ງເຮັດຜົນການປະເມີນໃນດ້ານ ນະໂຍບາຍການດຶງດູດທາງດ້ານອາກອນແມ່ນຢູ່ໃນລະດັບ **ກາງ.**

**2. ມາດຕະການຫຼຸດຜ່ອນຄວາມສ່ຽງ**

**1) ຄຸນນະພາບຂອງລະບຽບ ແລະ ການກວດກາກ່ຽວກັບ ບໍລິສັດ ບໍລິຫານຊັບສິນ TCSPs, ບໍລິສັດທີ່ປຶກສາດ້ານກົດໝາຍ, ບໍລິສັດກວດສອບບັນຊີ.**

ອີງຕາມກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄດ້ກຳນົດໃຫ້ ບໍລິສັດ ບໍລິຫານຊັບສິນ TCSPs, ບໍລິສັດທີ່ປຶກສາດ້ານກົດໝາຍ, ບໍລິສັດກວດສອບບັນຊີ ເປັນຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ຕ້ອງໄດ້ປະຕິບັດພັນທະຕໍ່ກັບວຽກງານຕ້ານການຟອກເງິນ ເປັນຕົ້ນ: ການຊອກຮູ້ລູກຄ້າ, ການລາຍງານ ແລະ ເກັບກຳເອກະສານ. ໄລຍະຜ່ານມາ ຫົວໜ່ວຍດັ່ງກ່າວຍັງບໍ່ພົບເຫັນກໍລະນີສິ່ງໄສ. ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນຄຸນນະພາບຂອງລະບຽບການ ແລະ ການກວດກາກ່ຽວກັບ ບໍລິສັດ ບໍລິຫານຊັບສິນ TCSPs, ບໍລິສັດທີ່ປຶກສາດ້ານກົດໝາຍ, ບໍລິສັດກວດສອບບັນຊີ ແມ່ນຢູ່ໃນລະດັບ **ສູງ.**

**2) ປະສິດທິພາບຂອງການປະຕິບັດໂທດ ແລະ ການປັບໃໝ ສຳລັບການເປີດເຜີຍຂໍ້ມູນພື້ນຖານ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ**

ສປປ ລາວ ໄດ້ກຳນົດມາດຕະການຂອງການປະຕິບັດໂທດຕໍ່ນິຕິບຸກຄົນ ທີ່ມີການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີໜັກ ຫຼື ເບົາ ນັບແຕ່ ການປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.ພ້ອມນັ້ນ, ວິສາຫະກິດ ຈະຖືກໂຈະການນຳໃຊ້ໃບທະບຽນວິສາຫະກິດ ຕາມການສະເໜີຂອງຂະແໜງສ່ວຍສາອາກອນ ເນື່ອງຈາກ ບໍ່ປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສ່ວຍສາອາກອນ. ດ້ວຍສາເຫດນັ້ນຈຶ່ງ ເຮັດຜົນການປະເມີນໃນດ້ານ ປະສິດທິພາບຂອງການປະຕິບັດໂທດ/ການປັບໃໝ ແມ່ນຢູ່ໃນລະດັບ **<u>ກາງ.</u>**

**3) ຄຸນນະພາບຂອງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ**

- ຄວາມຄົບຖ້ວນຮອບດ້ານຂອງການຄຸ້ມຄອງ: ການເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ຕ້ອງຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດຂອງຂະແໜງ ການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງປີ 2022. ທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຊຶ່ງເປັນກິດຈະການທີ່ຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ, ກວດກາ ຂອງຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ເພື່ອດຳເນີນທຸລະກິດທົ່ວໄປ ແລະ ເປັນການສ້າງເງື່ອນໄຂສະດວກໃຫ້ປະຊາຊົນລາວບັນດາເຜົ່າຮຽນຮູ້ໃນການປະກອບທຸລະກິດດ້ວຍຕົນເອງຈາກນ້ອຍໄປຫາໃຫ່ຍ, ສ້າງວຽກເຮັດງານທຳ, ສ້າງລາຍໄດ້ທີ່ໝັ້ນຄົງ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ຫັນໄປສູ່ແນວຄິດຄ້າຂາຍ ໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ
- ລະດັບຄວາມຖືກຕ້ອງ ແລະ ການປັບປຸງຂໍ້ມູນ: ການປັບປຸງຂໍ້ມູນ ແລະ ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແມ່ນອີງຕາມການສະເໜີປັບປຸງ ຫຼື ປ່ຽນແປງໂດຍວິສາຫະກິດ. ພ້ອມນັ້ນ, ຂະແໜງສ່ວຍສາອາກອນ, ຂະແໜງການທີ່ອອກອະນຸຍາດດຳເນີນທຸລະກິດ ແລະ ຂະແໜງການທີ່ກ່ຽວຂ້ອງ ໄດ້ຄຸ້ມຄອງ ກວດກາ ການເຄື່ອນໄຫວວິສາຫະກິດ (ຍັງດຳເນີນທຸລະກິດປົກກະຕິ ຫຼື ຢຸດເຊົາແລ້ວ) ເພື່ອແຈ້ງໃຫ້ກັບພາກສ່ວນຈົດທະບຽນວິສາຫະກິດ ທີ່ອອກໃບທະບຽນວິສາຫະກິດ ເພື່ອປັບປຸງຂໍ້ມູນວິສາຫະກິດ ໃຫ້ມີຄວາມຊັດເຈນ ແລະ ໄດ້ຮັບການປັບປຸງສອດຄ່ອງກັບການເຄື່ອນໄຫວຕົວຈິງຂອງວິສາຫະກິດ. ພາກສ່ວນຈົດທະບຽນວິສາຫະກິດ ຈະອອກແຈ້ງການກ່ຽວກັບຍຸບເລີກວິສາຫະກິດໃຫ້ກໍຕໍ່ເມື່ອ ວິສາຫະກິດ ໄດ້ດຳເນີນການຍຸບເລີກຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ ຍົກເວັ້ນ ການຍຸບເລີກຕາມຄຳຕັດສິນຂອງສານ.
- ຄວາມພຽງພໍຂອງຊັບພະຍາກອນ: ສປປ ລາວ ມີຫ້ອງການຂຶ້ນທະບຽນວິສາຫະກິດໄດ້ມີ ອຸປະກອນໄອທີ, ພະນັກງານ, ຊັບພະຍາກອນທາງດ້ານການເງິນ ພຽງພໍສຳລັບການຂຶ້ນທະບຽນວິສາຫະກິດໃຫ້ນິຕິບຸກຄົນ.
- ການແຈ້ງເຕືອນແບບອັດຕະໂນມັດ: ເນື່ອງຈາກ ການປັບປຸງຂໍ້ມູນ ແລະ ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແມ່ນອີງຕາມການສະເໜີປັບປຸງ ຫຼື ປ່ຽນແປງໂດຍວິສາຫະກິດ.
- ການເຂົ້າເຖິງທາງອອນລາຍ: ສາມາດເຂົ້າເບິ່ງຂໍ້ມູນວິສາຫະກິດ (ນິຕິບຸກຄົນ) ຜ່ານທາງເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ ໂດຍບໍ່ເສຍຄ່າ. ໃນກໍລະນີ ຕ້ອງການຂໍ້ມູນລາຍລະອຽດສະເພາະຂອງວິສາຫະກິດໃດໜຶ່ງ ຊຶ່ງຕ້ອງໄດ້ອັດສຳເນົາເປັນໜ້າເຈ້ຍ ແລະ ອັດສຳເນົາເປັນຟາຍຄອມພິວເຕີ ແມ່ນຕ້ອງໄດ້ຈ່າຍຄ່າເອກະສານ.
- ຄຸນນະພາບຂອງຮູບແບບຂໍ້ມູນ ແລະ ທາງເລືອກ ຂອງການຄົ້ນຫາ: ການຄົ້ນຫາຂໍ້ມູນຂອງວິສາຫະກິດ ແມ່ນສາມາດຄົ້ນຫາໄດ້ດ້ວຍຊື່ວິສາຫະກິດ ທັງພາສາລາວ ແລະ ພາສາອັງກິດ; ຊື່ຜູ້ອຳນວຍການ ຫຼື ຜູ້ຈັດການ; ເລກລະຫັດວິສາຫະກິດ, ເລກປະຈຳຕົວຜູ້ເສຍອາກອນ; ການເກັບກຳຂໍ້ມູນຂອງວິສາຫະກິດ ແມ່ນຖືກຈັດເກັບໄວ້ໃນລະບົບທາງເອເລັກໂຕຣນິກ ແລະ ເກັບໄວ້ເປັນແຟ້ມເອກະສານ ທີ່ມີຫ້ອງເກັບມ້ຽນສະເພາະ ໂດຍມີແຜນວາດການຈັດວາງທີ່ໄດ້ມາດຕະຖານ ໂດຍແຕ່ລະແຟ້ມມີການໝາຍເລກລະຫັດວິສາຫະກິດ ແລະ ລະບົບທະບຽນວິສາຫະກິດ ແມ່ນໄດ້ເຊື່ອມເຂົ້າກັບ ລະບົບຄຸ້ມຄອງສ່ວຍສາອາກອນ ແລະ ໄດ້ເປີດໃຫ້ຂະແໜງການກ່ຽວຂ້ອງເຊື່ອມຕໍ່ຈຳນວນໜຶ່ງ.

- ການຂຶ້ນທະບຽນວິສາຫະກິດ ທຸກຮູບແບບ ຢູ່ ສປປ ລາວ, ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງເຄື່ອນໄຫວທຸລະກິດ ຕ້ອງໄດ້ຂຶ້ນທະບຽນ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ກຳນົດອອກ, ພ້ອມດຽວກັນ ທຸກຂໍ້ມູນທີ່ມີການປ່ຽນແປງ ຫຼື ປັບປຸງ ອົງການຄຸ້ມຄອງໄດ້ມີການເກັບຮັກສາຂໍ້ມູນໄວ້ທັງເປັນຮູບແບບເອກະສານ ແລະ ເອເລັກໂຕຣນິກ. ພາກສ່ວນກ່ຽວຂ້ອງສາມາດເຂົ້າຄົ້ນຫາຂໍ້ມູນພື້ນຂອງນິຕິບຸກຄົນໃດໜຶ່ງໄດ້ໂດຍຜ່ານເວັບໄຊ້ຂອງພາກສ່ວນກ່ຽວຂ້ອງ. ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນຄຸນນະພາບຂອງສຳນັກງານຈົດທະບຽນ ແມ່ນຢູ່ໃນລະດັບ **<u>ກາງ-ສູງ.</u>**

**4) ຄຸນນະພາບຂອງຂໍ້ມູນທີ່ໄດ້ຮັບໂດຍຜ່ານຂະບວນການຊອກຮູ້ລູກຄ້າ**

ອີງຕາມກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄດ້ກຳນົດໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນຕົ້ນແມ່ນ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນໝື່ອນຈິງ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດການຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ... ຊຶ່ງຫົວໜ່ວຍເຫຼົ່ານີ້ ແມ່ນມີສິດ ແລະ ພັນທະ ໃນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນໂດຍອີງຕາມມາດຕາ 16 ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ);

ຊຶ່ງອີງຕາມການລົງກວດກາຕົວຈິງ ກ່ຽວກັບ ການຊອກຮູ້ລູກຄ້າ ກໍ່ເຫັນໄດ້ເຖິງການຈັດຕັ້ງປະຕິບັດຂອງບາງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ເຊັ່ນ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ... ທີ່ໄດ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ແຕ່ກໍ່ຍັງບາງຫົວໜ່ວຍທີ່ຍັງບໍ່ທັນໄດ້ປະຕິບັດຢ່າງເຂັ້ມງວດ ເຊັ່ນ ທຸລະກິດ ຊື້-ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້-ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດການຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນຄຸນນະພາບຂອງຂໍ້ມູນທີ່ໄດ້ຮັບໂດຍຜ່ານຂະບວນການຊອກຮູ້ລູກຄ້າ ແມ່ນຢູ່ໃນລະດັບ **<u>ກາງ</u>.**

**5) ຄວາມສາມາດເຂົ້າເຖິງຂໍ້ມູນຂອງເຈົ້າຂອງຜົນປະໂຫຍດທີ່ແທ້ຈິງ**

- ລະດັບການເຂົ້າເຖິງຂໍ້ມູນ ໂດຍເຈົ້າໜ້າທີ່ ທີ່ມີສິດອຳນາດ ທີ່ກ່ຽວຂ້ອງ

  ☑ ເຂົ້າເຖິງງ່າຍຕາມການຮ້ອງຂໍ = ຂໍ້ມູນສາມາດເຂົ້າເຖິງໄດ້ງ່າຍຕາມການຮ້ອງຂໍພາຍໃນ 24-48 ຊົ່ວໂມງ
- ລະດັບການເຂົ້າເຖິງຂໍ້ມູນ ຂອງສະຖາບັນການເງິນ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນໆ ຕາມການກຳນົດພັນທະຂອງການຟອກເງິນ.

  ☑ ເຂົ້າເຖິງງ່າຍຕາມການຮ້ອງຂໍ = ຂໍ້ມູນສາມາດເຂົ້າເຖິງໄດ້ງ່າຍຕາມການຮ້ອງຂໍພາຍໃນ 24-48 ຊົ່ວໂມງ
- ລະດັບການເຂົ້າເຖິງຂອງສາທາລະນະ

  ☑ ເຂົ້າເຖິງງ່າຍຕາມການຮ້ອງຂໍ = ຂໍ້ມູນສາມາດເຂົ້າເຖິງໄດ້ງ່າຍຕາມການຮ້ອງຂໍພາຍໃນ 24-48 ຊົ່ວໂມງ
- ຄຸນນະພາບຂອງຮູບແບບຂໍ້ມູນ & ທາງເລືອກຂອງ ການຄົ້ນຫາ

ຂໍ້ມູນກ່ຽວກັບເຈົ້າຂອງຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນຂໍ້ມູນດຽວກັນກັບ ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຊຶ່ງຂໍ້ມູນດັ່ງກ່າວ ຖືກຈັດເກັບໃນຮູບແບບມາດຕະຖານຄື: ຫ້ອງເກັບມ້ຽນສະເພາະ, ມີແຜນວາດໃນການເກັບມ້ຽນ ເພື່ອໃຫ້ຊອກຫາງ່າຍ ແລະ ຈັດເກັບຂໍ້ມູນແຕ່ລະວິສາຫະກິດໄວ້ໃນແຟ້ມເອກະສານ ໂດຍໝາຍເລກລະຫັດວິສາຫະກິດ.

ການຈັດຂໍ້ມູນຮູບແບບມາດຖານໄດ້ອຳນວຍຄວາມສະດວກໃນການເຊື່ອມຂໍ້ມູນລະຫວ່າງລະບົບທະບຽນວິສາ ຫະກິດ ແລະ ລະບົບເອເລັກໂຕຣນິກອື່ນ ຂອງລັດຖະບານ ເປັນຕົ້ນ: ໄດ້ເຊື່ອມເຂົ້າກັບ ລະບົບຄຸ້ມຄອງສ່ວຍສາອາກອນ ຂອງຂະແໜງສ່ວຍສາອາກອນ (ກະຊວງການເງິນ); ລະບົບຂໍ້ມູນການນຳເຂົ້າ-ສົ່ງອອກ (ກົມການຄ້າຕ່າງປະເທດ ກະຊວງອຸດສາຫະກຳ ແລະ ການຄ້າ); ລະບົບຄຸ້ມຄອງເງິນຕາຕ່າງປະເທດ, ລະບົບຂໍ້ມູນຂ່າວສານສິນເຊື່ອ (ທະນາຄານແຫ່ງ ສປປ ລາວ); ລະບົບຄຸ້ມຄອງການຈັດຫາງານ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ); ລະບົບຄຸ້ມຄອງການລົງທຶນ (ກະຊວງແຜນການ ແລະ ການລົງທຶນ) ແລະ ລະບົບອື່ນ.

ຂໍ້ມູນກ່ຽວກັບເຈົ້າຂອງຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນຂໍ້ມູນດຽວກັນກັບ ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຊຶ່ງຂໍ້ມູນດັ່ງກ່າວ ສາມາດຄົ້ນຫາຂໍ້ມູນຕາມຊື່ວິສາຫະກິດທັງພາສາລາວ ແລະ ພາສາອັງກິດ; ຊື່ ແລະ ນາມສະກຸນ ຂອງຜູ້ອຳນວຍການ ຫຼື ຜູ້ຈັດການ, ຂາຮຸ້ນ, ຜູ້ຖືຮຸ້ນ; ເລກລະຫັດວິສາຫະກິດ, ເລກປະຈຳຕົວຜູ້ເສຍອາກອນ. ພ້ອມນັ້ນ, ຍັງຄົ້ນຫາ ສະຖິຕິຕາມ: ປະເພດວິສາຫະກິດ; ຮູບແບບ, ຮູບການວິສາຫະກິດ; ຂະແໜງການດຳເນີນທຸລະກິດ; ຕາມແຕ່ລະປະເທດ ຫຼື ສັນຊາດຜູ້ລົງທຶນ; ແຍກຕາມເພດຍິງ-ຊາຍ; ແຍກຕາມຂະໜາດທຶນຈົດທະບຽນ. ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນຄວາມສາມາດເຂົ້າເຖິງຂໍ້ມູນຂອງເຈົ້າຂອງຜົນປະໂຫຍດທີ່ແທ້ຈິງ ແມ່ນຢູ່ໃນລະດັບ **<u>ກາງ</u>.**

### 6) ການຄົງຕົວຢູ່ ແລະ ປະສິດທິພາບຂອງກົນໄກການກວດກາຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29ທັນວາ 2022 ແລະ ຫຼັກການໃນການຂຶ້ນທະບຽນວິສາຫະກິດ, ເຈົ້າຂອງຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນຄົນດຽວກັນກັບ ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຜູ້ໄດ້ຖືກແຈ້ງຂໍ້ມູນເວລາຂຶ້ນທະບຽນ, ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ກວດກາຈຳນວນ, ປະເພດເອກະສານ, ຄົບຖ້ວນ ແລະ ຄວາມຖືກຕ້ອງຂອງເນື້ອໃນເອກະສານ ໂດຍສະເພາະ ຊື່ ແລະ ນາມສະກຸນ ຂອງຂາຮຸ້ນ, ຜູ້ຖືຮຸ້ນ ໃຫ້ຖືກຕ້ອງຕາມບັດປະຈຳຕົວ, ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ. ສຳລັບ ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ເປັນນິຕິບຸກຄົນ ທີ່ສ້າງຕັ້ງພາຍໃຕ້ກົດໝາຍຕ່າງປະເທດ ກໍຈະກວດກາຊື່ດັ່ງກ່າວ ໃຫ້ຖືກກັບໃບທະບຽນວິສາຫະກິດ ຫຼື ເອກະສານຢັ້ງຢືນການສ້າງຕັ້ງນິຕິບຸກຄົນ ລວມທັງລາຍຊື່ຜູ້ຈັດການ, ຜູ້ອຳນວຍການ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງນິຕິບຸກຄົນດັ່ງກ່າວ. ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນດ້ານ ການຄົງຕົວຢູ່ ແລະ ປະສິດທິພາບຂອງກົນໄກການກວດກາຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ແມ່ນຢູ່ໃນລະດັບ **<u>ກາງ-ຕ່ຳ</u>.**

### 7) ຄຸນນະພາບຂອງການຄວບຄຸມນິຕິບຸກຄົນທີ່ບໍ່ມີຄວາມໂປ່ງໃສ

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍທີ່ກ່ຽວຂ້ອງທີ່ໄດ້ກຳນົດລະບຽບການທີ່ສາມາດຄຸ້ມຄອງ ນິຕິບຸກຄົນທີ່ສ້າງຕັ້ງຂຶ້ນພາຍໃນ ສປປ ລາວ ເພື່ອບໍ່ໃຫ້ລະເມີດ ຫຼື ສວຍໃຊ້ນິຕິບຸກຄົນໄປໃນທາງທີ່ບໍ່ຖືກຕ້ອງ ຫຼື ຂັດກັບກົດໝາຍເຊັ່ນ: ກົດໝາຍວ່າດ້ວຍວິສາຫະກິດ ບໍ່ອະນຸຍາດໃຫ້ມີການແຕ່ງຕັ້ງຜູ້ອຳນວຍການແທນ, ຜູ້ຖືຮຸ້ນ ຫຼື ຂາຮຸ້ນແທນລວມທັງບໍ່ອະນຸຍາດໃຫ້ມີໃບຮຸ້ນບໍ່ບົ່ງຊື່, ໃນນີ້ ອີງຕາມກົດໝາຍວ່າດ້ວຍການຕ້ານ ການສໍ້ລາດບັງຫຼວງ ແລະ ນິຕິກຳທີ່ກ່ຽວຂ້ອງ ໄດ້ກຳນົດແຈ້ງໃຫ້ພະນັກງານລັດຖະກອນໃນ ສປປລາວ ທຸກຄົນຕ້ອງແຈ້ງຊັບສິນ ແລະ ລາຍຮັບຂອງຕົນເປັນແຕ່ລະໄລຍະຢ່າງເຄັ່ງຄັດ. ແຕ່ເຖິງຢ່າງໃດກໍ່ຕາມ ສຳລັບລະບຽບໃນການ ບັນທຶກ ແລະ ເປີດເຜີຍສະຖານະພາບຂອງ ບຸກຄົນທີ່ມີສະຖານະພາບທາງການເມືອງ ສຳລັບ ເຈົ້າໜ້າທີ່ບໍລິສັດ, ຜູ້ອຳນວຍການ, ຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ອື່ນໆ ໃນເວລາຈົດທະບຽນບໍລິສັດ ກົດໝາຍວ່າດ້ວຍວິສາຫະກິດ ແມ່ນບໍ່ໄດ້ກຳນົດເງື່ອນດັ່ງກ່າວໄວ້, ແຕ່ກົດໝາຍສະບັບອື່ນໄດ້ກຳນົດໄວ້ໃນ ເປັນຕົ້ນ ກົດໝາຍວ່າດ້ວຍພະນັກງານ-ລັດຖະການ, ມາດຕາ 82 ໄດ້ກຳນົດ: ຫ້າມດຳເນີນທຸລະກິດໂດຍການເປັນເຈົ້າຂອງ, ເປັນຄະນະອຳນວຍການ, ເປັນຂາຮຸ້ນ, ເປັນຜູ້ຈັດການຂອງຫ້ວໜ່ວຍທຸລະກິດໃດໜຶ່ງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ. ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນດ້ານ ຄຸນນະພາບຂອງການຄວບຄຸມນິຕິບຸກຄົນທີ່ບໍ່ມີຄວາມໂປ່ງໃສ ແມ່ນຢູ່ໃນລະດັບ **<u>ກາງ</u>.**

**8) ປະສິດທິຜົນຂອງການແລກປ່ຽນຂໍ້ມູນ ລະຫວ່າງ ປະເທດ**

ການແລກປ່ຽນຂໍ້ມູນລະຫວ່າງປະເທດ ກ່ຽວກັບການຟອກເງິນ ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ, ໃນກໍລະນີທີ່ມີການແລກປ່ຽນ ຫຼື ການຮ້ອງຂໍ ມາຍັງສຳນັກງານຂໍ້ມູນຕ້ານການຟອກເງິນ ຈະມີຊ່ອງທາງໃນການແລກປ່ຽນຄື ຜ່ານບົດບັນທຶກຊ່ວຍຈຳ ລະຫວ່າງອົງກອນ, ຜ່ານກຸ່ມໜ່ວຍງານຂ່າວກອງສາກົນ, ຜ່ານຊ່ອງທາງການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງກົດໝາຍ ຈະຜ່ານຊ່ອງທາງການທູດ ແລະ ອື່ນໆ, ສຳລັບຂະ ແໜງອາກອນ ຂອງ ສປປ ລາວ ໃນການແລກປ່ຽນຂໍ້ມູນ ແມ່ນບໍ່ໄດ້ແລກປ່ຽນຂໍ້ມູນແບບອັດຕະໂນມັດ (AEOI) ພາຍໃຕ້ CRS ຫຼື FATCA ແຕ່ເຖິງຢ່າງໃດກໍ່ດີ ໃນການແລກປ່ຽນຂໍ້ມູນດັ່ງກ່າວ ແມ່ນໄດ້ມີການແລກປ່ຽນຂໍ້ມູນກັບບັນດາປະເທດສົນທິສັນຍາຊໍ້າຊ້ອນໃນກໍລະນີທີ່ມີການສະເໜີຈາກປະເທດທີ່ກ່ຽວຂ້ອງ (EOIR) ແລະ ມີການແລກປ່ຽນໂດຍກົງລະຫວ່າງເຈົ້າໜ້າທີ່ສ່ວຍສາອາກອນດ້ວຍກັນກັບປະເທດອື່ນໆ, ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນດ້ານ ປະສິດທິຜົນຂອງການແລກປ່ຽນຂໍ້ມູນ ລະຫວ່າງປະເທດ ແມ່ນຢູ່ໃນລະດັບ **<u>ກາງ-ສູງ .</u>**

**9) ປະສິດທິພາບຂອງການແລກປ່ຽນຂໍ້ມູນ ລະຫວ່າງ ອົງກອນພາຍໃນປະເທດ ກ່ຽວກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງກົດໝາຍ**

ປັດຈຸບັນ ລະບົບຖານຂໍ້ມູນວິສາຫະກິດແຫ່ງຊາດ ໄດ້ເຊື່ອມກັບລະບົບຖານຂໍ້ມູນຂອງຂະແໜງສ່ວຍສາອາກອນ ແລະ ເປີດໃຫ້ຂະແໜງການທີ່ກ່ຽວຂ້ອງນຳໃຊ້ຂໍ້ມູນທະບຽນວິສາຫະກິດ ເປັນຕົ້ນ ຖານຂໍ້ມູນບໍລິສັດ ຂ່າວສານສິນເຊື່ອ ທະນາຄານແຫ່ງ ສປປ ລາວ, ຖານຂໍ້ມູນກົມພັດທະນາສີມືແຮງງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ. ສຳລັບ ສະຖິຕິ ແມ່ນບໍ່ສາມາດຕື່ມຂໍ້ມູນໄດ້ ເນື່ອງຈາກ ເຊື່ອມຕໍ່ກັນດ້ວຍ Application Programming Interface – API ໂດຍເປີດໃຫ້ຂະແໜງການ ສາມາດດຶງຂໍ້ມູນທະບຽນວິສາຫະກິດດ້ວຍຕົນເອງ ຕາມບົດບັນທຶກ ທີ່ໄດ້ຕົກລົງກັນ. ດ້ວຍສາເຫດນັ້ນຈຶ່ງເຮັດຜົນການປະເມີນດ້ານ ປະສິດທິຜົນຂອງການແລກປ່ຽນຂໍ້ມູນ ລະຫວ່າງ ປະເທດ ແມ່ນຢູ່ໃນລະດັບ **<u>ສູງ.</u>**

### 7.3.4. ສະຫຼຸບຜົນຂອງການປະເມີນ

ຜ່ານການປະເມີນຄວາມສ່ຽງດ້ານການຟອກເງິນທີ່ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງກົດໝາຍ ສາມາດສະຫຼຸບໄດ້ດັ່ງນີ້:

1. ຜົນການປະເມີນໄພຂົ່ມຂູ່ ດ້ານການຟອກເງິນ ຕິດພັນກັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດໝາຍຂອງ ສປປ ລາວ ແມ່ນຢູ່ໃນລະດັບ **<u>ຕ່ຳ;</u>**
2. ຜົນການປະເມີນຄວາມສ່ຽງຂອງປະເພດວິສາຫະກິດທີ່ມີຖານະເປັນນິຕິບຸກຄົນ ຂອງ ສປປ ລາວ ແມ່ນຢູ່ໃນລະດັບ **<u>ກາງ-ຕ່ຳ;</u>**
3. ຜົນການປະເມີນຄວາມບອບບາງແຫ່ງຊາດ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງ ສາມາດປະເມີນໄດ້ໃນລະດັບ **<u>ກາງ.</u>**

ສະຫຼຸບຜົນການປະເມີນຄວາມສ່ຽງລະດັບຊາດ ທີ່ຕິດພັນກັບ ນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນດ້ານກົດໝາຍ ໃນ ສປປ ລາວ ສາມາດສັງລວມໄດ້ວ່າ ມີຄວາມສ່ຽງຢູ່ໃນລະດັບ **<u>ກາງ-ຕ່ຳ.</u>**

## VIII. ການບໍລິການຊື້-ຂາຍຊັບສິນເໝືອນຈິງ

### 8.1. ພາບລວມ

ສປປ ລາວ ອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຂະແໜງຊັບສິນເໝືອນຈິງ ແມ່ນມີພຽງແຕ່ 02 ປະເພດ ຄື: ການບໍລິການຊື້-ຂາຍ ເງິນຄຣິບໂຕ ແລະ ການຂຸດຄົ້ນ. ຊຶ່ງໃນນັ້ນ, ໄດ້ກຳນົດ ທຸລະກິດຊື້-ຂາຍເງິນຄຣິບໂຕ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນປີ

2018 ເພື່ອຮອງຮັບການພັດທະນາທາງດ້ານລະບົບເສດຖະກິດ. ສຳລັບ ການຊຸດຄົ້ນ ແມ່ນພາຍໃຕ້ການຄຸ້ມຄອງຂອງ ກົມເຕັກໂນໂລຊີດິຈິຕ່ອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ.

ໃນປີ 2021 ສປປ ລາວ ໄດ້ອະນຸຍາດໃຫ້ທົດລອງດຳເນີນທຸລະກິດຊື້-ຂາຍເງິນຄຣິບໂຕ ມີຈຳນວນ 02 ແຫ່ງ ຄື: ບໍລິສັດ ສູນຊື້-ຂາຍຊັບສິນດິຈິຕອນລາວ ຈຳກັດ ແລະ ບໍລິສັດ ບິດຄິກ ຈຳກັດ ໂດຍໃຫ້ທັງສອງສູນດຳເນີນການພັດທະນາລະບົບ ເພື່ອຮອງຮັບການທົດລອງໃຫ້ບໍລິການຊື້-ຂາຍເງິນຄຣິບໂຕ ຊຶ່ງໄລຍະການທົດລອງແມ່ນ 3 ປີ. ມາ ຮອດເດືອນມີນາ 2024 ບໍລິສັດ ບິດຄິກ ຈຳກັດ ໄດ້ສຳເລັດການພັດທະນາລະບົບ ແລະ ມີຄວາມພ້ອມໃນການດຳເນີນ ການທົດລອງໃຫ້ບໍລິການຊື້-ຂາຍເງິນຄຣິບໂຕ. ທະນາຄານແຫ່ງ ສປປ ລາວ ໄດ້ອອກໃບອະນຸຍາດໃຫ້ ບໍລິສັດ ບິດຄິກ ຈຳກັດ ດຳເນີນທຸລະກິດຊື້-ຂາຍຊັບສິນເໝືອນຈິງ ຕາມໃບອະນຸຍາດດຳເນີນທຸລະກິດສູນຊື້-ຂາຍເງິນຄຣິບໂຕ ສະບັບ ເລກທີ 207/ກຄຊ, ລົງວັນທີ 05 ມີນາ 2024.

ສຳລັບການຊຸດຄົ້ນ, ລັດຖະບານ ສປປ ລາວ ໄດ້ອະນຸຍາດໃຫ້ 6 ບໍລິສັດ ເຮັດທົດລອງກ່ຽວກັບການຊຸດຄົ້ນ, ນຳໃຊ້ ແລະ ຊື້ຂາຍ ເງິນຄຣິບໂຕ ໃນ ສປປ ລາວ ແລະ ຍັງມີອີກ 9 ບໍລິສັດ ແມ່ນຢູ່ໃນຂັ້ນຕອນຄົ້ນຄວ້າພັດທະນາ.

ຈຸດປະສົງຂອງການປະເມີນຄວາມສ່ຽງຂະແໜງການຊັບສິນເໝືອນຈິງ ເພື່ອລະບຸໄດ້ເຖິງໄພຂົ່ມຂູ່ທີ່ອາດຈະ ເກີດຂຶ້ນ, ຄວາມບອບບາງດ້ານນິຕິກຳ, ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຂອງຂະແໜງການຊັບສິນເໝືອນຈິງ, ປັດໃຈຄວາມສ່ຽງ, ຜົນກະທົບຕໍ່ເສດຖະກິດ ແລະ ນະໂຍບາຍເງິນຕາຂອງປະເທດ, ທັງນີ້ ກໍ່ເພື່ອກຳນົດການສ້າງລະບຽບ ນະໂຍບາຍ, ມາດຕະການໃນການປ້ອງກັນ ການສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການ ຮ້າຍ.

### 8.2. ການດຳເນີນການປະເມີນຄວາມສ່ຽງ

ການປະເມີນຄວາມສ່ຽງແຫ່ງຊາດດ້ານການຟອກເງິນ ແລະ ການກໍ່ການຮ້າຍ ທີ່ຕິດພັນກັບ ສຳລັບຂະ ແໜງການຊັບສິນເໝືອນຈິງ ແມ່ນອີງຕາມຄູ່ມື ແລະ ກົນໄກທີ່ທາງທະນາຄານໂລກສະໜອງໃຫ້ ໂດຍການຜິຈາລະນາ ແລະ ວິເຄາະຢ່າງຖີ່ຖ້ວນ ຂອງອະນຸກຳມະການຕໍ່ກັບຂໍ້ມູນທີ່ເກັບກຳໄດ້ຈາກຜູ້ຄຸ້ມຄອງ ແລະ ບໍລິສັດຊື້-ຂາຍຊັບສິນ ເໝືອນຈິງ ເປັນຕົ້ນ: ຂໍ້ມູນທົ່ວໄປ, ຂໍ້ມູນດ້ານໄພຂົ່ມຂູ່, ຂໍ້ມູນດ້ານຄວາມບອບບາງ ແລະ ການຫຼຸດຜ່ອນຄວາມສ່ຽງ.

ການປະເມີນຕົວຈິງຈະປະເມີນພຽງແຕ່ປະເພດດຽວ ຄື ທຸລະກິດຊື້-ຂາຍເງິນຄຣິບໂຕ ເນື່ອງຈາກ ເປັນທຸລະກິດ ທີ່ໃຫ້ບໍລິການລູກຄ້າທັງພາຍໃນ ແລະ ຕ່າງປະເທດ. ສ່ວນບໍລິສັດຊຸດຄົ້ນເງິນຄຣິບໂຕ ແມ່ນບໍ່ໄດ້ປະເມີນ ເນື່ອງຈາກວ່າ ບໍລິສັດຊຸດຄົ້ນ ແມ່ນຍັງຢູ່ໃນຂັ້ນທົດລອງຊຸດຄົ້ນ ແລະ ບໍ່ມີການໃຫ້ບໍລິການລູກຄ້າ ຄືກັນກັບບໍລິສັດຊື້-ຂາຍເງິນຄຣິບ ໂຕ.

ວິທີການເກັບກຳຂໍ້ມູນ ແມ່ນໄດ້ມີການສ້າງແບບສອບຖາມການປະເມີນຄວາມສ່ຽງ ເປັນ 03 ແບບຟອມຄື: 1) ສຳລັບຜູ້ຄຸ້ມຄອງ; 2) ສຳລັບບໍລິສັດຊື້-ຂາຍ ຊັບສິນເໝືອນຈິງ ແລະ 3) ສຳລັບເຈົ້າໜ້າທີ່ສືບສວນ-ສອບສວນ. ການລົງ ເກັບກຳຂໍ້ມູນແມ່ນມີພຽງແຕ່ 01 ແຫ່ງ ທີ່ນອນຢູ່ໃນຂອບເຂດນະຄອນຫຼວງ.

ຜ່ານການເກັບກຳຂໍ້ມູນຈາກບໍລິສັດຊື້-ຂາຍເງິນຄຣິບໂຕ ແມ່ນ ມີຈຳນວນລູກຄ້າທີ່ມາໃຊ້ບໍລິການໃນການຊື້-ຂາຍເງິນຄຣິບໂຕຈົນຮອດປັດຈຸບັນ ແມ່ນມີຈຳນວນທັງໝົດ 7.016 ຜູ້ນຳໃຊ້, ຊຶ່ງໃນນີ້ ມີຜູ້ໃຊ້ບໍລິການທີ່ເປັນຄົນລາວ ຈຳນວນທັງໝົດ 6.077 ຜູ້ນຳໃຊ້ ແລະ ຕ່າງປະເທດ ຈຳນວນ 905 ຜູ້ນຳໃຊ້ ຊຶ່ງສາມາດລວມມູນຄ່າການຊື້ເງິນຄຣິບໂຕ ໄດ້ 302 ທຸລະກຳ ລວມມູນຄ່າໄດ້ທັງໝົດ 17,48 ຕື້ກີບ ແລະ ມູນຄ່າການຂາຍເງິນຄຣິບໂຕ ໄດ້ 255 ທຸລະກຳ ລວມ ມູນຄ່າໄດ້ທັງໝົດ 6,64 ຕື້ກີບ.

### 8.3. ຜົນການປະເມີນ

#### 8.3.1. ດ້ານໄພຂົ່ມຂູ່

1) ລັກສະນະ ແລະ ໂປຣໄຟລ໌ຂອງບໍລິສັດບໍລິການຊື້-ຂາຍຊັບສິນເໝືອນຈິງ ຢູ່ໃນລະດັບ **<u>ກາງ-ສູງ</u>** ເນື່ອງ ຈາກວ່າ ບໍລິສັດບໍລິການຊື້-ຂາຍຊັບສິນເໝືອນຈິງ ຍັງບໍ່ທັນມີການສ້າງລະບຽບພາຍໃນກ່ຽວກັບວຽກງານຕ້ານ ການ

ຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຕ່ບໍລິສັດກໍ່ມີລະບຽບພາຍໃນຕໍ່ກັບການຄຸ້ມຄອງການໃຫ້ ບໍລິການໃນການຕິດຕາມຄວາມສ່ຽງຂອງທຸລະກຳ ດ້ວຍລະບົບ Chainalysis ເພື່ອຄຸ້ມຄອງ ແລະ ຕິດຕາມຄວາມ ສ່ຽງ ຂອງທຸລະກຳ ທີ່ພົວພັນກັບພາຍນອກ ແລະ ບໍ່ສາມາດນຳໃຊ້ບໍຊັບສິນເໝືອນຈິງ ທົດແທນ ເງິນສົດໄດ້ ຫຼື P2P ເນື່ອງ ຈາກ ກົດໝາຍ ສປປ ລາວ ຍັງບໍ່ມີການອະນຸຍາດ, ແຕ່ປັດຈຸບັນ ແມ່ນນຳໃຊ້ຊັບສິນເໝືອນຈິງ ເປັນພຽງສິນຊັບຊະນິດ ໜຶ່ງ ທີ່ອະນຸຍາດໃຫ້ ຊື້-ຂາຍ ກັບບໍລິສັດບິດຄິກເທົ່ານັ້ນ ແລະ ການຊື້-ຂາຍຊັບສິນເໝືອນຈິງ ແມ່ນມີການຊື້-ຂາຍ ແລກປ່ຽນໄດ້ ໂດຍຜ່ານລະບົບທະນາຄານ ແລະ ສາມາດຖອນເງິນຈາກບັນຊີໄດ້ເງິນສະກຸນເງິນກີບເທົ່ານັ້ນ ເຊິ່ງຕ້ອງ ຢັ້ງຢືນຕົວຕົນດ້ວຍລະບົບ Two Factor Authentication ທຸກຄັ້ງ ແລະ ທຸກທຸລະກຳບໍລິການຊື້-ຂາຍຊັບສິນເໝືອນ ຈິງ ໃນລະບົບຂອງ ບໍລິສັດ ບິດຄິກ ຈຳກັດ ແມ່ນເປັນທຸລະກຳ On-chain ເຊິ່ງຖືກບັນທຶກໃນ blockchain ຂອງຊັບ ສິນເໝືອນຈິງນັ້ນໆ ທີ່ມີການນຳໃຊ້ການບໍລິການຂອງ Fireblocks. ນອກຈາກນັ້ນ, ການໃຫ້ບໍລິການຊື້-ຂາຍ ຊັບ ສິນເໝືອນຈິງ ແມ່ນສາມາດກວດສອບຂໍ້ມູນຂອງລູກຄ້າທີ່ໄດ້ລົງທະບຽນໃນຖານຂໍ້ມູນດ້ວຍລະບົບ Chainalysis ເພື່ອສາມາດຮູ້ໄດ້ວ່າໂອນໄປບໍລິສັດບໍລິການຊື້-ຂາຍຊັບສິນເໝືອນຈິງໃດ ແຕ່ຖ້າຫາກບໍ່ມີໃນຖານຂໍ້ມູນ ແມ່ນຈະບໍ່ ສາມາດຮັບຮູ້ໄດ້ ຊຶ່ງຈະນຳໃຊ້ມາດຕະການ ໂດຍອີງຕາມ ລະບຽບກ່ຽວກັບການຊອກຮູ້ລູກຄ້າ ແລະ ການເພີ່ມທະວີ ການ ເອົາໃຈໃສ່ລູກຄ້າ ລະບຸໄວ້ໃນຂໍ້ກຳນົດ ແລະ ນະໂຍບາຍການຊື້-ຂາຍຫຼຽນ ຜ່ານບັນຊີຂອງທະນາຄານ ເຊິ່ງການຊື້-ຂາຍກັບບໍລິສັດແມ່ນຕ້ອງ ເຮັດທຸລະກຳຜ່ານບັນຊີ ທະນາຄານເທົ່ານັ້ນ.

2) ແໜ່ງທຶນຂອງ ຊັບສິນເໝືອນຈິງ ຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກວ່າ ການໂອນເງິນສົດ ແລະ ສິນຄ້າເປັນ ວັດຖຸທີ່ມີມູນຄ່າ ແມ່ນບໍ່ສາມາດເຮັດທຸລະກຳນີ້ໄດ້ ກົມຄຸ້ມຄອງລະບົບການຊຳລະ ທະນາຄານແຫ່ງ ສປປ ລາວ ເຊິ່ງ ເປັນຜູ້ຄຸ້ມຄອງ ບໍ່ອະນຸຍາດໃຫ້ ສາມາດນຳໃຊ້ ເງິນສົດ ແລະ ວັດຖຸມີຄ່າປະເພດຕ່າງໆ ເພື່ອ ຊື້-ຂາຍ ແລະ ແລກປ່ຽນ ເປັນຊັບສິນເໝືອນຈິງ ແລະ ຊັບສິນເໝືອນຈິງສາມາດແລກເອົາເງິນສົດ ໂດຍກົງກັບບໍລິສັດບິດຄິກ, ທຸລະກຳເງິນສົດ ຕ້ອງຜ່ານທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດ ພ້ອມນັ້ນ ການນຳໃຊ້ສະກຸນເງິນຊັບສິນເໝືອນຈິງ ລູກຄ້າສາມາດນຳ ໃຊ້ຊັບສິນເໝືອນຈິງປະເພດຕ່າງໆ ທີ່ມາຈາກແພັດຟອມອື່ນ ການໂອນຊັບສິນເໝືອນຈິງເຂົ້າມາຊື້-ຂາຍໄດ້ ແຕ່ສະເພາະ ຊັບສິນເໝືອນຈິງສະກຸນທີ່ຮອງຮັບໃນຫົວໜ່ວຍທີ່ມີໜ້າທີ່ລາຍງານ ເທົ່ານັ້ນ, ພ້ອມທັງນຳໃຊ້ Chainalysis ຕິດຕາມ ແລະ ປະເມີນ ທີ່ມາຂອງທຸລະກຳຊື້-ຂາຍ ຊັບສິນເໝືອນຈິງທີ່ຖືກຝາກເຂົ້າມາຈາກແພັດຟອມອື່ນ.

3) ຄຸນລັກສະນະການດຳເນີນງານຂອງຊັບສິນເໝືອນຈິງ ຢູ່ໃນລະດັບ **<u>ກາງ-ສູງ</u>** ເນື່ອງຈາກວ່າ ຜູ້ຄຸ້ມຄອງ ແມ່ນມີລະບຽບໃນການຄວບຄຸມ ໂດຍນຳໃຊ້ຂໍ້ຕົກລົງວ່າດ້ວຍການທົດລອງດຳເນີນກິດຈະການຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 777/ທຫລ ລົງວັນທີ 13 ທັນວາ 2021, ຂໍ້ຕົກລົງວ່າດ້ວຍການທົດລອງທຸລະກຳຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 09 ພະຈິກ 2021 ແລະ ແຈ້ງການໃນການອະນຸຍາດທົດລອງດຳເນີນທຸລະກິດ ຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 615/ຫສນຍ, ລົງວັນທີ 05/05/2022 ແລະ ມີລະບົບໃນການຕິດຕາມການຊື້ ຂາຍ ຊັບສິນເໝືອນຈິງ ແລະ ຜູ້ໃຫ້ບໍລິການຊື້ ຂາຍຊັບສິນເໝືອນຈິງ ທີ່ມີການເຄື່ອນໄຫວທີ່ຢູ່ໃນ ສປປ ລາວ. ນອກນັ້ນ ໄດ້ ກຳນົດສິດຂອງລູກຄ້າ ຢ່າງຊັດເຈນ ຕໍ່ກັບຂອບເຂດໃນການຮຽກຮ້ອງຊັບສິນຄືນ, ການຊື້-ຂາຍແລກປ່ຽນຊັບສິນ ເໝືອນຈິງ, ລວມທັງມາດຕະການ ແລະ ລະບຽບການ ແກ້ໄຂກໍລະນີເກີດເຫດສຸກເສີນດ້ານລະບົບ, ຜະລິດຕະພັນ ຫຼື ການໃຫ້ບໍລິການ.

ສຳລັບການຄຸ້ມຄອງກ່ຽວກັບບໍລິສັດບໍລິການ ຊື້ ຂາຍຊັບສິນເໝືອນຈິງ ແມ່ນບໍ່ອະນຸຍາດໃນການເຄື່ອນໄຫວ ທຸລະກຳຂອງ ບໍລິສັດບໍລິການ ຊື້ ຂາຍຊັບສິນເໝືອນຈິງ ກັບ ຂະແໜງການເງິນ ຫຼື ປະເທດ ທີ່ບໍ່ມີການຄຸ້ມຄອງກ່ຽວ ກັບວຽກງານການຕ້ານສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ນອກນັ້ນ, ຜູ້ຄຸ້ມຄອງ ແມ່ນບໍ່ໄດ້ອະນຸຍາດໃຫ້ບໍລິສັດ ທີ່ບໍ່ໄດ້ຈົດທະບຽນ ສາມາດດຳເນີນການເຄື່ອນໄຫວ ໂດຍອີງຕາມ ແຈ້ງການ ຫ້າມສະ ຖາບັນການເງິນໃນຂອບເຂດ ທົ່ວປະເທດ ດຳເນີນທຸລະກຳທີ່ກ່ຽວຂ້ອງກັບ ເງິນຄຣິບໂຕ ສະບັບເລກທີ 382/ທກ, ລົງ ວັນທີ 30 ຕຸລາ 2018 ແລະ ຍັງບໍ່ໄດ້ມີການປະເມີນ ການແລກປ່ຽນ, ຊື້-ຂາຍ ແລະ ການໂອນສະກຸນເງິນຄຣິບໂຕ ຫຼື

ຫຼຽນໝັ້ນຄົງ ຈາກແພັດຝ້ອມແບບແບ່ງຂັ້ນຄຸ້ມຄອງ ເຂົ້າມາປ່ຽນໃຫ້ເປັນບໍລິການ ຊື້ ຂາຍຊັບສິນເໝືອນຈິງແບບລວມສູນ, ຊຶ່ງການແບ່ງຂັ້ນຄຸ້ມຄອງ ທີ່ອາດຈະເປັນສະຖານທີ່ປົກປິດແຫຼ່ງທຶນທີ່ຜິດກົດໝາຍ ແລະ ການປະເມີນການນຳໃຊ້ ຣາດແວແບບແບ່ງຂັ້ນຄຸ້ມຄອງ ຫຼື ບໍ່ມີເຈົ້າຂອງລະບົບຣາດແວ ຫລື ມີການນຳໃຊ້ກະເປົ໋າເງິນເຈ້ຍ ໃນການຂົນສົ່ງຊັບສິນເໝືອນຈິງ ຂ້າມພົມແດນ ແລະ ສຳລັບບໍລິສັດບົດຄົ້ນ ແມ່ນໄດ້ນຳໃຊ້ລະບົບ Chainalysis ປະເມີນທຸລະກຳທີ່ຖືກຝາກເຂົ້າມາກະເປົ໋າ ເງິນຄຣິບໂຕ ເພື່ອກວດສອບ ສະກຸນເງິນຄຣິບໂຕ ຫຼື ຫຼຽນໝັ້ນຄົງ ຈາກແພັດຝ້ອມແບບແບ່ງຂັ້ນຄຸ້ມຄອງ ເຂົ້າມາປ່ຽນໃຫ້ເປັນບໍລິການ ຊື້ ຂາຍຊັບສິນເໝືອນຈິງແບບລວມສູນ ວ່າມີທີ່ມາທີ່ຫນ້າສົງໄສ.

4) ຄວາມງ່າຍຂອງອາຊະຍາກຳ ຢູ່ໃນລະດັບ **<u>ກາງ-ຕ່ຳ</u>** ເນື່ອງຈາກວ່າ ໃນ ສປປ ລາວ ບໍ່ໄດ້ອະນຸຍາດຊື້-ຂາຍ P2P ຜ່ານລະບົບບໍລິການ ຊື້ ຂາຍຊັບສິນເໝືອນຈິງ ອະນຸຍາດໃຫ້ຊື້-ຂາຍ ເກັງກຳໄລພາຍໃນສູນຊື້-ຂາຍແລກປ່ຽນເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ສາມາດຊຳລະຄ່າ ບໍລິການ ແລະ ສິນຄ້າ. ໂດຍອີງໃສ່ ຂໍ້ຕົກລົງ ວ່າດ້ວຍການທົດລອງດຳເນີນກິດຈະກຳຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 777/ທຫລ, ລົງວັນທີ 13 ທັນວາ 2021; ຂໍ້ຕົກລົງວ່າດ້ວຍການເຮັດທົດລອງທຸລະກຳ ຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 09 ພະຈິກ 2021 ນອກນັ້ນ, ສປປ ລາວ ແມ່ນຍັງ ບໍ່ມີກົດໝາຍ, ນິຕິກຳ ຫຼື ຄຳແນະນຳທີ່ເປັນອັນສະເພາະໃນການຕິດຕາມ ແລະ ກວດກາ ຕໍ່ກັບ ບໍລິການ ຊື້ ຂາຍຊັບສິນເໝືອນຈິງ ທີ່ເຄື່ອນໄຫວຜ່ານບັນຊີປອມ (ບັນຊີມ້າ) ທີ່ເຄື່ອນໄຫວຜ່ານບໍລິສັດບໍລິການ ຊື້ ຂາຍຊັບສິນເໝືອນຈິງ ໃດໜຶ່ງ ເພື່ອໂອນໄປຫາ ບໍລິສັດບໍລິການ ຊື້ ຂາຍຊັບສິນເໝືອນຈິງ ອື່ນໃນທ້ອງຖິ່ນ ຫຼື ຕ່າງປະເທດເພື່ອປົກປິດແຫຼ່ງກຳເນີດຂອງເງິນທຶນ. ແຕ່ປັດຈຸບັນ ຜູ້ຄຸ້ມຄອງ ແລະ ເຈົ້າໜ້າທີ່ ແມ່ນໄດ້ມີການລິເລີ່ມການຕິດຕາມກວດກາ ເພື່ອດຳເນີນການຍຶດ, ອາຍັດ ແລະ ຣິບ ຊັບສິນທີ່ກ່ຽວຂ້ອງກັບບໍລິການ ຊື້ ຂາຍຊັບສິນເໝືອນຈິງ ທີ່ຖືກສົງໃສວ່າໄດ້ຮັບເງິນຂອງຜູ້ກະທຳຜິດທາງດ້ານກົດໝາຍ.

5) ຜົນກະທົບທາງເສດຖະກິດ ຢູ່ໃນລະດັບ **<u>ກາງ-ສູງ</u>** ເນື່ອງຈາກວ່າ ສປປ ລາວ ໄດ້ກຳນົດທາງດ້ານນະໂຍບາຍເງິນຕ່າງປະເທດ ແມ່ນບໍ່ອະນຸຍາດໃຫ້ສາມາດນຳໃຊ້ຊັບສິນເໝືອນຈິງ ຊຳລະຄ່າສິນຄ້າ ແລະ ບໍລິການ ຫຼື ເຮັດທຸລະກຳອື່ນໆທຽບເທົ່າສະກຸນເງິນ (Fiat) ຢູ່ ໃນ ສປປ ລາວ ແລະ ຍັງບໍ່ອະນຸຍາດໃຫ້ສະຖາບັນການເງິນເຂົ້າຮ່ວມ ຜັດທະນາລະບົບ ແລະ ສ້າງຜະລິດຕະພັນ, ນອກຈາກສູນຊື້-ຂາຍ ທີ່ໄດ້ຮັບອານຸຍາດເທົ່ານັ້ນ. ສຳລັບຄວາມຮັບຜິດຊອບຂອງຜູ້ໃຫ້ບໍລິການຜະລິດຕະພັນດັ່ງກ່າວ ແມ່ນໄດ້ຮັບການປະເມີນທຸລະກິດ ບໍລິການ ຊື້ ຂາຍຊັບສິນເໝືອນຈິງ ຕໍ່ກັບ ຄວາມຮັບຜິດຊອບ ຫຼື ພັນທະ ໃນການຈັດຕັ້ງປະຕິບັດຕາມມາດຕະການປ້ອງກັນການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມຂໍ້ຕົກລົງວ່າດ້ວຍການທົດລອງດຳເນີນກິດຈະກຳຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 777/ທຫລ, ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014, ຂໍ້ຕົກລົງ ວ່າດ້ວຍມາດຕະການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ສະບັບເລກທີ 10/ຄຕຝງ ລົງວັນທີ 25 ສິງຫາ 2021 (ປັບປຸງໃຫມ່) ແລະ ນິຕິກຳອື່ນໆ ໄດ້ຢ່າງຖືກຕ້ອງ (ເພື່ອຮັບປະກັນຄວາມຮັບຜິດຊອບຂອງທຸລະກິດ ໃນການປະຕິບັດຕາມຜູ້ຄຸ້ມຄ້ອງ ແລະ ເຈົ້າໜ້າທີ່ ໃນການດຳເນີນການບັງຄັບໃຊ້ກົດໝາຍ ເຊັ່ນ: ການລາຍງານ, ການກັກຊັບສິນ, ການຍຶດ ແລະ ອາຍັດ ບໍລິການ ຊື້ ຂາຍຊັບສິນເໝືອນຈິງ ທີ່ຜິດກົດໝາຍ).

### 8.3.2. ດ້ານຄວາມບອບບາງ

1) **ຜະລິດຕະພັນ ແລະ ການບໍລິການທີ່ໃຫ້ ແລະ ປະເພດຂອງ** VA ແມ່ນຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກວ່າ ທາງດ້ານລັກສະນະ, ຂະໜາດ ແລະ ຄວາມສັບສົນຂອງທຸລະກິດ ແມ່ນໄດ້ມີການກຳນົດເພດານສູງສຸດໃນການເຮັດທຸລະກຳຂອງລູກຄ້າແຕ່ລະເພດ; ໄດ້ນຳໃຊ້ Chainalysis ເປັນເຄື່ອງມື ໃນການປະເມີນຄວາມສ່ຽງ ເພື່ອສາມາດລະບຸລູກຄ້າ ທີ່ມີການເຮັດທຸລະກຳທີ່ໜ້າສົງໃສ່ວ່າອາດພົວພັນກັບການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່

ການຮ້າຍ ແລະ  ມີກົນໄກ, ລະບຽບ ແລະ ເຄື່ອງມືໃນການຄຸ້ມຄອງການໂອນຊັບສິນເໝືອນຈິງ ຂ້າມແດນ (ຂ້າມ ປະເທດ) ທີ່ເຄື່ອນໄຫວຢູ່ພາຍໃນປະເທດ ແລະ ທີ່ເກີດຂຶ້ນທົ່ວໂລກ ແມ່ນຍັງບໍ່ພຽງພໍ ຊຶ່ງກວມເອົາທຸກກິດຈະກຳຂອງ ຊັບສິນເໝືອນຈິງ ທີ່ເຄື່ອນໄຫວໃນຕົວຈິງ.

ໃນດ້ານຜະລິດຕະພັນ ຫຼື ການບໍລິການ: ແມ່ນໃຫ້ສາມາດຊື້-ຂາຍ ຫຼື ແລກປ່ຽນເທົ່ານັ້ນ ຄື: ລູກຄ້າສາມາດ ໂອນຊັບສິນເໝືອນຈິງຈາກກະເປົາ WALLET ທີ່ຢູ່ແພັດຟ້ອມອື່ນ ເຂົ້າມາເຮັດການ ຊື້-ຂາຍ ຫຼື ແລກປ່ຽນ ຢູ່ ແພັດຟ້ອມຂອງບໍລິສັດໃຫ້ບໍລິການຊື້-ຂາຍເງິນຊັບສິນເໝືອນຈິງໄດ້ ແຕ່ລູກຄ້າບໍ່ສາມາດຊື້-ຂາຍ P2P ລະຫວ່າງ ລູກ ຄ້າດ້ວຍກັນເອງໄດ້, ສຳລັບການຝາກເງິນສົດເຂົ້າ ຫຼື ຖອນເງິນສົດອອກ ແມ່ນຕ້ອງຜ່ານບັນຊີທະນາຄານ ທີ່ກຳນົດ ສະເພາະເທົ່ານັ້ນ.

ດ້ານລະບຽບການພາຍໃນ: ແມ່ນມີລະບຽບການໃນການຄຸ້ມຄອງການໃຫ້ບໍລິການ ແລະ ຜະລິດຕະພັນແຕ່ລະ ປະເພດ; ມີລະບົບໃນການຕິດຕາມລູກຄ້າທີ່ໃຊ້ບໍລິການ ແລະ ຜະລິດຕະພັນແຕ່ລະປະເພດ; ມີລະບຽບການພາຍໃນກ່ຽວ ກັບການຄຸ້ມຄອງວຽກການເງິນ ແລະ ການບັນຊີ; ມີລະບຽບໃນການກວດກາວຽກການເງິນ ແລະ ການບັນຊີ ຂອງ ບໍລິສັດບໍລິການຊື້-ຂາຍເງິນຊັບສິນເໝືອນຈິງ ຈາກການກວດສອບພາຍໃນ ແລະ ຈາກຜູ້ກວດສອບພາຍນອກ. ນອກ ນັ້ນ, ການດຳເນີນທຸລະກິດບໍລິການຊື້-ຂາຍເງິນຊັບສິນເໝືອນຈິງ ພາຍໃນປະເທດ ແມ່ນບໍ່ໄດ້ສ້າງສາຍພົວພັນກັບ ບໍລິສັດທີ່ໃຫ້ບໍລິການກ່ຽວກັບ ບໍລິການຊື້-ຂາຍເງິນຊັບສິນເໝືອນຈິງ ຢູ່ໃນຂົງເຂດ ຫຼື ປະເທດທີ່ບໍ່ມີລະບຽບຄຸ້ມຄອງ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ປະເທດທີ່ມີຄວາມສ່ຽງການຟອກເງິນ ແລະ ສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ດ້ານສະຖານທີ່ຕັ້ງພູມສາດ: ບໍລິສັດໃຫ້ບໍລິການຊື້-ຂາຍເງິນຊັບສິນເໝືອນຈິງ ແມ່ນຢູ່ໃນຂົງເຂດນະຄອນຫຼວງ ຊຶ່ງບໍ່ນອນຢູ່ພື້ນທີ່ມີອາຊະຍາກຳເກີດຂຶ້ນສູງ ຫຼື ຖືກອົງການຈັດຕັ້ງສາກົນ ລະບຸເປັນພື້ນທີ່ຕ້ອງຫ້າມ.

ດ້ານຄວາມສ່ຽງ ແມ່ນຍັງບໍ່ທັນມີການຈັດປະເພດກຸ່ມລູກຄ້າທີ່ມີຄວາມສ່ຽງສູງ ເຊັ່ນ: ມີຖານະທາງດ້ານ ການເມືອງ, ລູກຄ້າທີ່ເປັນຄົນຕ່າງປະເທດ, ລູກຄ້າທີ່ເຮັດທຸລະກຳທີ່ບໍ່ລະບຸຕົວຕົນ ຫຼື ໃຊ້ນາມແຝງ ແລະ ໄດ້ມີມາດ ຕະການງ່າຍດາຍ ຕາມຜົນການປະເມີນຄວາມສ່ຽງລະດັບຊາດ ພ້ອມນັ້ນ ຍັງມີມາດຕະການ ສຳລັບຄູ່ຮ່ວມມືທີ່ບໍ່ມີໃບ ອະນຸຍາດ ແລະ ປິດບັງຊື່ ຫຼື  ການໄຫຼວຽນຂອງເງິນທຶນທີ່ມີຄວາມ ຊັບຊ້ອນ ແລະ ຄູ່ຮ່ວມມື ແມ່ນໄດ້ມີການຢັ້ງຢືນຕົວ ຕົນຂອງລູກຄ້າຕໍ່ກັບການໂອນຊື້-ຂາຍເງິນຊັບສິນເໝືອນຈິງ; ມາດຕະການແກ້ໄຂ ຄວາມສ່ຽງ ຂອງລູກຄ້າທີ່ເຮັດ ທຸລະ ກຳດ້ວຍນາມແຝງ ຫຼື ການປິດບັງຊື່ເພື່ອໃຫ້ສາມາດກຳນົດຕົວຕົນຂອງລູກຄ້າ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຢ່າງພຽງພໍ ແລະ ບໍລິສັດ ໄດ້ມີການປະເມີນການເຄື່ອນໄຫວທາງດ້ານການເງິນ ຂອງລູກຄ້າ ທີ່ມາເຮັດທຸລະກຳກ່ຽວກັບ ຊັບສິນສະເໝືອນຈິງ.

### 8.3.3. ດ້ານການຫຼຸດຜ່ອນຄວາມສ່ຽງ

1) ມາດຕະການຂອງລັດຖະບານ: ແມ່ນຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກວ່າ ຄວາມສົມບູນຂອງກອບກົດ ໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນຍັງບໍ່ທັນຮັດກຸມ ແລະ ພຽງພໍ ໂດຍສະເພາະ ແມ່ນເຄື່ອງມືໃນການຕິດຕາມ ແລະ ກວດກາ, ຊຶ່ງຜູ້ຄຸ້ມຄອງແມ່ນໄດ້ມີແຜນທີ່ຈະສ້າງ ແລະ ປັບປຸງນິຕິ ກຳໃນການຄຸ້ມຄອງໃຫ້ສຳເລັດໃນທ້າຍປີ 2024 ກ່ຽວກັບການປັບປຸງ ຂໍ້ຕົກລົງວ່າດ້ວຍການ ທົດລອງດຳເນີນ ກິດຈະການຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 777/ທຫລ, ລົງວັນທີ 13 ທັນວາ 2021, ສ້າງຄູ່ມືກວດກາໃນ ການເຄື່ອນໄຫວການຊື້-ຂາຍເງິນຄຣິບໂຕ ແລະ ອື່ນໆ ເພື່ອໃຫ້ສາມາດຄຸ້ມຄອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ສອດຄ່ອງກັບການດຳເນີນທຸລະກິດຕົວຈິງ. ນອກນັ້ນ ຜູ້ຄຸ້ມຄອງ ແມ່ນມີຂັ້ນຕອນໃນການ ອອກອະນຸຍາດໃນການ ດຳເນີນທຸລະກິດຊື້-ຂາຍເງິນຊັບສິນເໝືອນຈິງ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າ ດ້ວຍການທົດລອງດຳເນີນກິດຈະການ ຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 777/ທຫລ, ລົງວັນທີ 13 ທັນວາ 2021 ແລະ ຍັງບໍ່ມີກົນໄກການຮ່ວມມືກັບ

ຕ່າງປະເທດ ຫຼື ການເກັບກຳຂໍ້ມູນ ແລະ ຮ້ອງຂໍຂໍ້ມູນລູກຄ້າ ເຊັ່ນ: ຂໍ້ມູນກ່ຽວກັບກະເປົາເງິນເໝືອນຈິງ, ຂໍ້ມູນກ່ຽວກັບ ການເຮັດທຸລະກຳ Blockchain ແລະ ຂໍ້ມູນທີ່ກ່ຽວຂ້ອງກັບຊັບສິນເໝືອນຈິງ ຈາກຕ່າງປະເທດ.

ໃນໄລຍະຜ່ານມາ ກົມຄຸ້ມຄອງລະບົບຊຳລະ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ແມ່ນໄດ້ຮ່ວມກັນ ໃນ ການລົງເຜີຍແຜ່, ສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານ ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ ແກ່ການ ກໍ່ການຮ້າຍ ໃຫ້ແກ່ບໍລິສັດຊື້ຂາຍຄຣິບໂຕ.

2) ມາດຕະການຂອງບໍລິສັດຊື້-ຂາຍຊັບສິນເໝືອນຈິງ ແມ່ນຢູ່ໃນລະດັບ **<u>ກາງ-ຕ່ຳ</u>** ເນື່ອງຈາກວ່າ ບໍລິສັດຊື້-ຂາຍຊັບສິນເໝືອນຈິງ ແມ່ນໄດ້ກຳນົດໂຄງຮ່າງການຈັດຕັ້ງ, ສິດໜ້າທີ່ ແລະ ພາລະບົດບາດ ຂອງແຕ່ລະຕຳ ແໜ່ງຢ່າງລະອຽດ ພ້ອມທັງສັດສ່ວນຂອງຜູ້ໄດ້ຮັບຜົນປະໂຫຍດ ແລະ ສະພາຜູ້ບໍລິຫານ; ມີລະບຽບການ ແລະ ມາດ ຕະການຫລຸດຜ່ອນຄວາມສ່ຽງທາງດ້ານການດຳເນີນທຸລະກຳ ຕາມຂໍ້ຕົກລົງວ່າດ້ວຍການທົດລອງດຳເນີນກິດຈະການຊື້ ຂາຍເງິນ ຄຣິບໂຕ ສະບັບເລກທີ 777/ທຫລ, ລົງວັນທີ 13 ທັນວາ 2021, ຂໍ້ຕົກລົງວ່າດ້ວຍມາດຕະການຕ້ານ ສະກັດ ກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ ສະບັບເລກທີ 10/ຄຕຝງ ລົງວັນທີ 25 ສິງຫາ 2021 (ປັບປຸງໃຫມ່) ແລະ ນຳໃຊ້ລະບົບ Chainalysis ທີ່ເປັນລະບົບຕິດຕາມຂໍ້ມູນ ທຸລະກຳ ທີ່ມີຖານຂໍ້ມູນທີ່ສາມາດຮັບປະກັນການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຊຶ່ງ ບໍລິສັດຊື້-ຂາຍຊັບສິນເໝືອນຈິງ ແມ່ນປະສົດທິພາບໃນການປະຕິບັດໜ້າທີ່ ແລະ ມີກົນໄກການຄວບຄຸມພາຍໃນ ໂດຍ ມີການນຳໃຊ້ລະບົບ Chainalysis ທີ່ເປັນລະບົບຕິດຕາມຂໍ້ມູນທຸລະກຳທີ່ມີຖານຂໍ້ມູນ ດ້ານການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເປັນກົນໄກການຄວບຄຸມຄວາມສ່ຽງດ້ານລະບົບ ແລະ ມາດຕະການ ປ້ອງກັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ນອກຈາກນັ້ນ, ພາຍຫຼັງໄດ້ຮັບອະນຸຍາດເປີດໃຫ້ບໍລິການ ຖ້າມີການລະເມີດ ຫຼື ບໍ່ໄດ້ຈັດຕັ້ງປະຕິບັດທາງດ້ານ ການຄວບຄຸມທີ່ກ່ຽວຂ້ອງກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈະສົ່ງຜົນ ສະທ້ອນຕໍ່ການນຳໃຊ້ມາດຕະການທາງບໍລິຫານຕາມລະບຽບ, ກົດໝາຍ ແລະ ພ້ອມດຽວກັນນີ້, ບໍລິສັດຕ້ອງໄດ້ມີການ ລິເລີ່ມສ້າງແຜນຝຶກອົບຮົມຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ ໃຫ້ກັບພະນັກງານພາຍໃນບໍລິສັດ ເພື່ອຮັບປະກັນວ່າ ພະນັກງານຂອງບໍລິສັດຊື້-ຂາຍຊັບສິນເໝືອນຈິງ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບ ກົດໝາຍ ວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ນະໂຍບາຍ ແລະ ຂັ້ນຕອນ, ຄວາມສ່ຽງ ແລະ ການຫຼຸດຜ່ອນຄວາມສ່ຽງໃຫ້ມີຄວາມເໝາະສົມ ແລະ ທັນສະພາບ.

3) ມາດຕະການຂອງສະຖາບັນການເງິນ ແລະ ຫົວໜ່ວຍທີ່ບໍ່ນອນຢູ່ໃນຂະແໜງການເງິນ ແມ່ນຢູ່ໃນ ລະດັບ **<u>ກາງ-ຕ່ຳ</u>** ເນື່ອງຈາກວ່າ ການປະເມີນຄວາມສ່ຽງ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງໂດຍສະຖາບັນການເງິນ ແລະ ຫົວໜ່ວຍທີ່ບໍ່ນອນຢູ່ໃນຂະແໜງການເງິນ ແມ່ນຍັງບໍ່ໄດ້ມີການປະເມີນຄວາມສ່ຽງໃນການ ຊື້-ຂາຍ ຫຼື ການໃຫ້ ບໍລິການແລກປ່ຽນເງິນຄຣິບໂຕ ທີ່ອາດຖືກສວຍໃຊ້ເຂົ້າໃນການຟອກເງິນ ແລະ ກວດສອບຂໍ້ມູນຂອງລູກຄ້າບຸກຄົນ ຫຼື ນິຕິບຸກຄົນ ກ່ອນການຊື້-ຂາຍແລກປ່ຽນ ແລະ ໃນດ້ານປະສິດທິຜົນຂອງການປະຕິບັດໜ້າທີ່ການປະຕິບັດຕາມ ແລະ ກົນໄກການຄວບຄຸມພາຍໃນຂອງບໍລິສັດຊື້-ຂາຍຊັບສິນເໝືອນຈິງ ແມ່ນມີກົນໄກການຄວບຄຸມພາຍໃນທີ່ມີປະ ສິດທິຜົນ ແລະ ການປະຕິບັດຕາມເພື່ອຫຼຸດຜ່ອນຄວາມສ່ຽງການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ ກ່ຽວຂ້ອງກັບການບໍລິການ ແລະ ຜະລິດຕະພັນຊັບສິນເໝືອນຈິງ ແລະ ບໍລິການຊື້-ຂາຍຊັບສິນເໝືອນຈິງ. ນອກນັ້ນ, ບໍລິສັດຊື້-ຂາຍຊັບສິນເໝືອນຈິງ ແມ່ນມີຊັບພະຍາກອນ ແລະ ຄວາມຊຳນິຊຳນານທາງດ້ານເຕັກໂນໂລຊີ ຢ່າງພຽງພໍ ເພື່ອປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

### 8.3.4. ສະຫຼຸບຜົນການປະເມີນ

ຜ່ານການປະເມີນ ແລະ ວິເຄາະຂໍ້ມູນທັງສາມດ້ານທີ່ໄດ້ກ່າວມາຂ້າງເທິງ ເຫັນວ່າ ຜົນການປະເມີນຄວາມສ່ຽງ ຂອງຂະແໜງການຊື້-ຂາຍຊັບສິນເໝືອນຈິງ ແມ່ນຢູ່ໃນລະດັບ **<u>ກາງ</u>** ເນື່ອງຈາກເຫັນວ່າ ສປປ ລາວ ມີນິຕິກຳຈຳນວນ

ໜຶ່ງ, ແຕ່ຍັງບໍ່ໄດ້ກຳນົດໃນກົດໝາຍ ແລະ ນິຕິກຳຈຳນວນໜຶ່ງໃນການຄຸ້ມຄອງ ໃນການຈັດຕັ້ງປະຕິບັດ ເຮັດໃຫ້ຍັງບໍ່ຮັດກຸມເທົ່າທີ່ຄວນ ຊຶ່ງຕ້ອງໄດ້ສ້າງ ແລະ ປັບປຸງນິຕິກຳໃຫ້ສອດຄ່ອງກັບມາດຕະຖານສາກົນ. ສ່ວນກົນໄກການຊອກຮູ້ລູກຄ້າ ແມ່ນດຳເນີນສອງຂັ້ນ ໂດຍຜ່ານການຊອກຮູ້ລູກຄ້າຈາກທະນາຄານທຸລະກິດ ແລະ ສູນຊື້-ຂາຍເງິນຄຣິບໂຕ, ດ້ານເຄື່ອງມືໃນການຄຸ້ມຄອງການໂອນຊັບສິນເໝືອນຈິງ ສູນຊື້-ຂາຍເງິນຄຣິບໂຕ ໄດ້ນຳໃຊ້ລະບົບ Chainalysis ເພື່ອວິເຄາະ, ຕິດຕາມ ແລະ ປ້ອງກັນຄວາມສ່ຽງ, ໃນການຈັດຕັ້ງປະຕິບັດ ສິດ ແລະ ພັນທະຂອງສູນຊື້-ຂາຍຊັບສິນເໝືອນຈິງ ຕາມການກຳນົດຂອງຜູ້ຄຸ້ມຄອງ ແມ່ນເຮັດໄດ້ດີສົມຄວນ ດ້ານມາດຕະການຫຼຸດຜ່ອນຄວາມສ່ຽງ ແລະ ກົນໄກການດຳເນີນງານ, ສ່ວນການຕິດຕາມ ແລະ ກວດກາກ່ຽວກັບວຽກງານ ການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການດຳເນີນການປະເມີນຕາມຫຼັກການບໍລິຫານຄວາມສ່ຽງ ແມ່ນຍັງບໍ່ເຂັ້ມແຂງເທົ່າທີ່ຄວນ, ຊຶ່ງຕ້ອງມີການເຮັດວຽກຮ່ວມກັນໃນການປັບປຸງກົນໄກການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ.

# IX. ອົງການທີ່ບໍ່ຫວັງຜົນກຳໄລ

## 9.1. ພາບລວມ

ສປປ ລາວ ໄດ້ກຳນົດອົງການບໍ່ຫວັງຜົນກຳໄລ ເປັນ 02 ອົງການຄື: ອົງການຈັດຕັ້ງສັງຄົມລາວ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ຊຶ່ງອົງການຈັດຕັ້ງສັງຄົມລາວ ປະກອບມີ: 1) **ສະມາຄົມ**: ແມ່ນອົງການຈັດຕັ້ງສັງຄົມ ຊຶ່ງສະມາຊິກສະມາຄົມ ແມ່ນຜູ້ທີ່ມີຄວາມສະໝັກໃຈ, ມີນຳໃຈມະນຸດສະທຳ ແລະ ເສຍສະຫຼະສູງສົ່ງ ໃນການປະກອບສ່ວນ ທຶນ, ວັດຖຸ, ສະຕິປັນຍາ, ເຫື່ອແຮງ ເພື່ອຊ່ວຍເຫຼືອ ແລະ ພັດທະນາສັງຄົມ, ຊຸມຊົນ, ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຜູ້ພິການ, ຜູ້ສູງອາຍຸ, ຜູ້ຖືກເຄາະຮ້າຍຈາກໄພທຳມະຊາດ ຫຼື ສົງຄາມ ໂດຍບໍ່ຫວັງຜົນຕອບແທນ ແລະ 2) **ມູນນິທິ**: ແມ່ນການຈັດຕັ້ງສັງຄົມ ທີ່ມີຖານະນິຕິບຸກຄົນ, ມີທຶນ, ຊັບສິນສະເພາະ ເພື່ອສາທາລະນະປະໂຫຍດ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາກາຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ແລະ ອື່ນໆ ໂດຍບໍ່ຫວັງຜົນກຳໄລ. ສຳລັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແມ່ນອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ ທີ່ມີຖານະເປັນນິຕິບຸກຄົນ ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍຂອງປະເທດທີ່ອົງການດັ່ງກ່າວໄດ້ຮັບການສ້າງຕັ້ງຂຶ້ນ, ມີເອກະສານຄົບຖ້ວນຕາມທີ່ໄດ້ລະບຸໄວ້ໃນມາດຕາ 06 ຂອງດຳລັດເລກທີ 013/ນຍ, ລົງວັນທີ 08/01/2010, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແມ່ນມີຈຸດປະສົງຊ່ວຍເຫຼືອດ້ານພັດທະນາ ແລະ ດ້ານມະນຸດສະທຳ ທີ່ສອດຄ່ອງກັບນະໂຍບາຍຂອງລັດຖະບານ, ລະບຽບກົດໝາຍແຫ່ງ ສປປ ລາວ ແລະ ສອດຄ່ອງກັບຮີດຄອງປະເພນີອັນດີງາມຂອງປະຊາຊົນລາວ.

ຈຸດປະສົງຂອງການປະເມີນຄວາມສ່ຽງຂອງຂະແໜງການອົງການບໍ່ຫວັງຜົນກຳໄລ ແມ່ນເພື່ອລະບຸລັກສະນະ ແລະ ປະເພດການເຄື່ອນໄຫວຂອງອົງການບໍ່ຫວັງຜົນກຳໄລ ທີ່ອາດຈະມີຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍການກຳນົດຈາກໄພຂົ່ມຂູ່ ແລະ ຄວາມບອບບາງທີ່ມີຕໍ່ຂະແໜງການດັ່ງກ່າວ, ເພື່ອໃຫ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດບັນດາລະບຽບການ, ການບັງຄັບໃຊ້ກົດໝາຍ ແລະ ມາດຕະການອື່ນໆ ໃນການຫຼຸດຜ່ອນຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຈະຊ່ວຍໃນການຈັດສັນແຫຼ່ງຂໍ້ມູນໄດ້ຢ່າງມີປະສິດທິພາບໃຫ້ກັບເຈົ້າໜ້າທີ່ຜູ້ມີສິດອຳນາດ. ຜົນຂອງການປະເມີນຄວາມສ່ຽງແຫ່ງຊາດ ແມ່ນສາມາດນຳໃຊ້ເປັນຂໍ້ມູນໃນການປະເມີນຄວາມສ່ຽງ ເພື່ອກຳນົດຄວາມສ່ຽງຂອງແຕ່ລະປະເພດການເຄື່ອນໄຫວຂອງອົງການບໍ່ຫວັງຜົນກຳໄລ ເພື່ອສາມາດຈັດບູລິມະສິດໃນການປັບປຸງ ແລະ ສ້າງເປັນແຜນການຈັດຕັ້ງປະຕິບັດໃຫ້ເໝາະສົມໃນຕໍ່ໜ້າ.

## 9.2. ການດຳເນີນການປະເມີນຄວາມສ່ຽງ

ການປະເມີນຄວາມສ່ຽງຂອງອົງການບໍ່ຫວັງຜົນກຳໄລ ທີ່ມີຄວາມສ່ຽງຕໍ່ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນອີງຕາມຂັ້ນຕອນ ແລະ ກົນໄກຄູ່ມືແນະນຳຂອງທະນາຄານໂລກ ໂດຍການຜິຈາລະນາ ແລະ ວິເຄາະຢ່າງຖີ່ຖ້ວນຂອງຄະນະອະນຸກຳມະການຕ່ຳກັບຂໍ້ມູນທີ່ສາມາດເກັບກຳໄດ້ຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນ: ຈຳນວນທຸລະກຳທີ່ສົງໄສວ່າເປັນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຈຳນວນກໍລະນີ ຫຼື ຄະດີ ທີ່ອົງການບໍ່ຫວັງຜົນກຳໄລ ຖືກ

ສອຍໃຊ້ ຕິດພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເກີດຂຶ້ນຕົວຈິງຢູ່ ສປປ ລາວ ແລະ ຢູ່ປະເທດອ້ອມຂ້າງ, ຂໍ້ມູນພື້ນຖານຂອງອົງການບໍ່ຫວັງຜົນກຳໄລ ຈາກຜູ້ຄຸ້ມຄອງ (ກະຊວງພາຍໃນ, ກະຊວງການຕ່າງປະເທດ) ແລະ ຂໍ້ມູນຈາກບັນດາອົງການບໍ່ຫວັງຜົນກຳໄລ. ນອກຈາກນີ້, ຍັງພິຈາລະນາປັດໄຈທ່າອ່ຽງ ແລະ ອົງປະກອບອື່ນໆ ເປັນຕົ້ນ: ພູມສັນຖານ, ປະຊາກອນ, ສາສະໜາ, ຄວາມຂັດແຍ້ງພາຍໃນ ແລະ ອື່ນໆ.

ການເກັບກຳຂໍ້ມູນໄດ້ເກັບກຳໃນໄລຍະ 05 ປີຍ້ອນຫຼັງ, ໂດຍການນຳເອົາແບບສອບຖາມໃຫ້ພາກສ່ວນກ່ຽວຂ້ອງເພື່ອເກັບກຳຂໍ້ມູນຕົວຈິງ ທັງໃນສູນກາງ ແລະ ທ້ອງຖິ່ນ ລວມມີ 05 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງຈຳປາສັກ, ແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງວຽງຈັນ ຊຶ່ງມີການເຜີຍແຜ່ ໃຫ້ກັບອົງການບໍ່ຫວັງຜົນກຳໄລ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກັບວຽກງານດັ່ງກ່າວ ເພື່ອໃຫ້ໄດ້ຂໍ້ມູນທີ່ຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ.

ຈຳນວນຂໍ້ມູນທີ່ຖືກເກັບກຳ ລວມມີ: ຂໍ້ມູນທີ່ກ່ຽວຂ້ອງກັບອົງການກໍ່ການຮ້າຍ, ມາດຕະການປ້ອງກັນ, ຂະໜາດ, ຂະໜາດ ແລະ ປະເພດການເຄື່ອນໄຫວຂອງອົງການບໍ່ຫວັງຜົນກຳໄລ, ທີ່ຕັ້ງ ແລະ ອື່ນໆ ຂອງອົງການບໍ່ຫວັງຜົນກຳໄລ, ຂໍ້ມູນຈາກເຈົ້າໜ້າທີ່ຄຸ້ມຄອງ ເຊັ່ນ: ຂໍ້ມູນພື້ນຖານ, ການຕິດຕາມ ແລະ ກວດກາ, ບົດລາຍງານປະຈຳປີ, ມາດຕະການຂອງລັດຖະບານໃນການຄຸ້ມຄອງ ແລະ ມາດຕະການຕ່າງໆທີ່ນຳໃຊ້ຕໍ່ກັບ ອົງການບໍ່ຫວັງຜົນກຳໄລ. ນອກຈາກນີ້, ມີການເກັບກຳຂໍ້ມູນ ບົດລາຍງານທຸລະກຳທີ່ໜ້າສົງໄສ (STR), ເຫດການທີ່ເກີດຂຶ້ນຈິງ ແລະ ຈຳນວນຄະດີ ທີ່ເກີດຂຶ້ນໃນ ສປປ ລາວ, ຈຳນວນການສັ່ງຝ້ອງ ແລະ ຕັດສິນຄະດີການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຈຳນວນການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນທາງດ້ານກົດໝາຍ ຈາກເຈົ້າໜ້າທີ່ສືບສວນ-ສອບສວນ, ແລະ ຂໍ້ມູນທີ່ຕິດພັນກັບ ນິຕິກຳ ແລະ ກົນໄກໃນການຈັດຕັ້ງປະຕິບັດບັນດາລະບຽບກົດໝາຍດ້ານການຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

❖ **ເປົ້າໝາຍທີ່ເກັບກຳຂໍ້ມູນ:**

ປັດຈຸບັນ ໃນ ສປປ ລາວ ມີອົງການບໍ່ຫວັງຜົນກຳໄລ ທັງໝົດ 487 ແຫ່ງ (ອົງການຈັດຕັ້ງສັງຄົມລາວ ຈຳນວນ 342 ແຫ່ງ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຈຳນວນ 145 ແຫ່ງ). ໃນນັ້ນ ອົງການບໍ່ຫວັງຜົນກຳໄລ ທີ່ຖືກກັບຄຳນິຍາມຂອງມາດຕະຖານສາກົນ ແລະ ໄດ້ຮັບການປະເມີນຄວາມສ່ຽງ ທັງໝົດຈຳນວນ 201 ແຫ່ງ ຊຶ່ງໄດ້ແຍກເປັນ 2 ພາກສ່ວນຄື: ອົງການຈັດຕັ້ງສັງຄົມລາວ ຈຳນວນ 73 ແຫ່ງ ທີ່ຂຶ້ນທະບຽນກັບກະຊວງພາຍໃນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຈຳນວນ 128 ແຫ່ງ ທີ່ຂຶ້ນທະບຽນກັບກະຊວງການຕ່າງປະເທດ.

**ຕາຕະລາງທີ 9.1:ອົງການບໍ່ຫວັງຜົນກຳໄລ ທີ່ໄດ້ຮັບການປະເມີນຄວາມສ່ຽງ**

| ລດ | ພາກສ່ວນຜູ້ຄຸ້ມຄອງ | ພາກສ່ວນເກັບກຳຂໍ້ມູນ | ຂັ້ນສູນກາງ | ຂັ້ນທ້ອງຖິ່ນ | ລວມ |
|---|---|---|---|---|---|
| 1 | ກະຊວງພາຍໃນ | ບັນດາສະມາຄົມ | 38 ແຫ່ງ | 14 ແຫ່ງ | 52 ແຫ່ງ |
| | | ບັນດາມູນນິທິ | 20 ແຫ່ງ | 1 ແຫ່ງ | 21 ແຫ່ງ |
| 2 | ກະຊວງການຕ່າງປະເທດ | ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ | 111 ແຫ່ງ | 17 ແຫ່ງ | 128 ແຫ່ງ |
| **ລວມທັງໝົດ** | | | | | **201 ແຫ່ງ** |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

### 9.3. ຜົນການປະເມີນ

ຜ່ານການເກັບກຳຂໍ້ມູນຕົວຈິງໃນຄັ້ງນີ້ ເຫັນວ່າ ອົງການບໍ່ຫວັງຜົນກຳໄລ ທີ່ເຄື່ອນໄຫວພາຍໃນລາວ ແມ່ນບໍ່ມີຫຼັກຖານ ຫຼື ເຫດສົງໃສວ່າຜູ້ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພະຍາຍາມຈະສວຍໃຊ້ອົງການບໍ່ຫວັງຜົນກຳໄລ ເພື່ອຈຸດປະສົງສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມຜົນການປະເມີນແຕ່ລະປະເພດການເຄື່ອນໄຫວຂອງອົງການບໍ່ຫວັງຜົນກຳໄລ ທີ່ສະແດງອອກດັ່ງລຸ່ມນີ້:

**ຕາຕະລາງທີ 9.2: ຜົນການປະເມີນຂອງອົງການບໍ່ຫວັງຜົນກຳໄລ**

| ປະເພດຂອງ ອົງການບໍ່ຫວັງຜົນກຳໄລ | ຜົນການປະເມີນ | | |
|---|---|---|---|
| | ໄພຂົ່ມຂູ່ | ຄວາມຫລຽບງ່າຍ | ຄວາມສ່ຽງທີ່ຈະເກີດຂຶ້ນ |
| **ອົງການຈັດຕັ້ງສັງຄົມລາວ ມີ 6 ປະເພດ** | | | |
| **ປະເພດ 1** ດ້ານການສຶກສາ | 0,00 | 0,02 | ຕ່ຳ |
| **ປະເພດ 2** ດ້ານສິ່ງແວດລ້ອມ (ກະສິກຳ ແລະ ປ່າໄມ້) | 0,00 | 0,02 | ຕ່ຳ |
| **ປະເພດ 3** ດ້ານສັງຄົມສົງເຄາະ (ແຮງງານ ແລະ ສະຫວັດດີການສັງຄົມ) | 0,00 | 0,02 | ຕ່ຳ |
| **ປະເພດ 4** ດ້ານສາທາລະນະສຸກ | 0,00 | 0,02 | ຕ່ຳ |
| **ປະເພດ 5** ດ້ານວັດທະນະທຳ | 0,00 | 0,02 | ຕ່ຳ |
| **ປະເພດ 6** ດ້ານການກຸສົນ | 0,00 | 0,06 | ຕ່ຳ |
| **ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີ 5** ປະເພດ | | | |
| **ປະເພດ 1** ດ້ານສາທາລະນະສຸກ | 0,00 | 0,00 | ຕ່ຳ |
| **ປະເພດ 2** ດ້ານການສຶກສາ | 0,00 | 0,00 | ຕ່ຳ |
| **ປະເພດ 3** ດ້ານສິ່ງແວດລ້ອມ (ກະສິກຳ ແລະ ປ່າໄມ້) | 0,00 | 0,00 | ຕ່ຳ |
| **ປະເພດ 4** ດ້ານສັງຄົມສົງເຄາະ (ແຮງງານ ແລະ ສະຫວັດດີການສັງຄົມ) | 0,00 | 0,00 | ຕ່ຳ |
| **ປະເພດ 5** ດ້ານຖະແຫຼງຂ່າວ, ວັດທະນະ ທຳ ແລະ ທ່ອງທ່ຽວ | 0,00 | 0,00 | ຕ່ຳ |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

**ແຜນວາດທີ 9.1: ຜົນການປະເມີນຄວາມສ່ຽງ ອົງການຈັດຕັ້ງສັງຄົມລາວ**




ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

**ແຜນວາດທີ 9.2: ຜົນການປະເມີນຄວາມສ່ຽງ ອົງການຈັດຕັ້ງສາທົນທີ່ບໍ່ສັງກັດລັດຖະບານ**




ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

**ສະຫຼຸບການປະເມີນ**

ຜ່ານການປະເມີນຄວາມສ່ຽງ ຂອງອົງການບໍ່ຫວັງຜົນກຳໄລ ເຫັນວ່າ ສປປ ລາວ ເປັນປະເທດທີ່ມີຄວາມສະຫງົບ ບໍ່ມີການເຄື່ອນໄຫວຂອງກຸ່ມກໍ່ການຮ້າຍ, ບໍ່ມີການເຄື່ອນໄຫວຂອງກຸ່ມຫົວຮຸນແຮງ ແລະ ກໍ່ໃຫ້ເກີດມີຄວາມຂັດແຍ່ງກັນລະຫວ່າງຊົນເຜົ່າ ຫຼື ສາດສະໜາ ທີ່ອາດຈະເປັນສາເຫດສ້າງຄວາມເສຍຫາຍອັນໃຫຍ່ຫຼວງໃຫ້ແກ່ຊີວິດ ແລະ ຊັບສິນຂອງປະຊາຊົນ. ພ້ອມດຽວກັນນັ້ນ ການເຄື່ອນໄຫວຂອງອົງການບໍ່ຫວັງຜົນກຳໄລ ກໍມີລະບຽບ, ມາດຕະການ ຂອງລັດຖະບານໃນການຄຸ້ມຄອງທີ່ຂ້ອນຂ້າງຮັດກຸມ ລວມທັງ ມາດຕະການພາຍໃນຂອງອົງການບໍ່ຫວັງຜົນກຳໄລເອງ ເພື່ອໃຫ້ມີຂອບເຂດການເຄື່ອນໄຫວຖືກຕ້ອງຕາມລະບຽບການ, ຕາມຈຸດປະສົງ ແລະ ເປົ້າໝາຍ (ສະແດງອອກຕາມແຜນວາດ).

ຄຽງຄູ່ກັນນັ້ນ, ໂດຍອີງຕາມຜົນຂອງການປະເມີນດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ໄດ້ປະເມີນດ້ານ ໄພຂົ່ມຂູ່ ແລະ ຄວາມບອບບາງ ແມ່ນຢູ່ໃນລະດັບ **ຕ່ຳ.** ດ້ວຍເຫດນັ້ນ, ຈຶ່ງສະແດງໃຫ້ເຫັນວ່າ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນ ສປປ ລາວ ແມ່ນບໍ່ມີ ແລະ ສອດຄ່ອງກັບຜົນການປະເມີນຄວາມສ່ຽງລະດັບຊາດຂອງອົງການບໍ່ຫວັງຜົນກຳໄລ ກ່ຽວກັບສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນຢູ່ໃນລະດັບ **ຕ່ຳ.**

## X. ການປະເມີນ ຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ອາດເກີດຂຶ້ນ

### 10.1. ພາບລວມ

ສປປ ລາວ ເປັນປະເທດທີ່ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ຍັງບໍ່ທັນມີການເຄື່ອນໄຫວກໍ່ການຮ້າຍ, ການເຄື່ອນໄຫວຂອງກຸ່ມຫົວຮຸນແຮງ, ບໍ່ທັນມີຂໍ້ຂັດແຍ່ງ ເຊິ່ງກັນ ແລະ ກັນລະຫວ່າງ

ຊົນເຜົ່າ ຫຼື ສາສະໜາ ທີ່ອາດຈະເປັນສາເຫດພາໃຫ້ເກີດການກໍ່ການຮ້າຍ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຈະສ້າງຜົນເສຍຫາຍອັນໃຫຍ່ຫຼວງໃຫ້ແກ່ຊີວິດ, ໃຫ້ແກ່ສຸຂະພາບ, ຊັບສິນຂອງພົນລະເມືອງ ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ ກຳລັງຕຳຫຼວດ ແມ່ນໄດ້ຮັບການຊີ້ນຳ-ນຳພາຢ່າງເດັດດ່ຽວ ເດັດຂາດ, ໂດຍກົງ ແລະ ຮອບດ້ານ, ທັງເປັນໜ້າທີ່ ແລະ ຄວາມຮັບຜິດຊອບຕາມລະບຽບກົດໝາຍ, ຍາມໃດກໍ່ໄດ້ເອົາໃຈໃສ່ໃນວຽກງານປ້ອງກັນ, ສະກັດກັ້ນ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອແກ້ໄຂໃນເວລາມີກໍລະນີການກໍ່ການຮ້າຍທີ່ອາດເກີດຂຶ້ນ. ພ້ອມດຽວກັນນັ້ນ, ເຈົ້າໜ້າທີ່ຕຳຫຼວດລາວ ໄດ້ຄົ້ນຄ້ວາ, ກ່າວປະນາມທຸກຮູບແບບຂອງການກໍ່ການຮ້າຍທີ່ສ້າງຜົນເສຍຫາຍແກ່ຊີວິດ, ຮ່າງກາຍ ແລະ ຊັບສິນຂອງພົນລະເມືອງ ບໍ່ວ່າຈະເກີດຂຶ້ນໃນຮູບແບບໃດ, ເວລາໃດ, ສະຖານທີ່ໃດກໍ່ຕາມ. ນອກຈາກນີ້, ເຈົ້າໜ້າທີ່ຕຳຫຼວດລາວ ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນຂອບເຂດທົ່ວປະເທດ ພ້ອມທັງໄດ້ມີການປະສານສົມທົບ ກັບ ພາກພື້ນ ແລະ ສາກົນ ສະກັດກັ້ນ ແລະ ຕ້ານບັນຫາການກໍ່ການຮ້າຍ, ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ບົນພື້ນຖານການຮ່ວມມືປະຕິບັດຕາມກະຕິກາສາກົນຄື: ເຄົາລົບອຳນາດທິປະໄຕ, ຜົນປະໂຫຍດເດັ່ນອັນຄົບຖ້ວນ ແລະ ບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງກັນ ແລະ ກັນ.

ກະຊວງປ້ອງກັນຄວາມສະຫງົບ ໄດ້ຊີ້ນຳບັນດາກົມວິຊາສະເພາະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໄດ້ສືບຕໍ່ເອົາໃຈໃສ່ເຄື່ອນໄຫວວຽກງານປ້ອງກັນສະກັດກັ້ນຕໍ່ເຫດການທີ່ອາດຈະເກີດຂຶ້ນ. ໃນນັ້ນ, ໄດ້ມີການຕິດຕາມກວດກາການເຄື່ອນໄຫວຂອງກຸ່ມຄົນບໍ່ດີ ແລະ ໄດ້ແກ້ໄຂປະກົດການທີ່ໜ້າສົງໃສກ່ອນຈະມີເຫດການເກີດຂຶ້ນ, ໄດ້ເພີ່ມມາດຕະການກວດກາການເຂົ້າ-ອອກເມືອງຢູ່ຕາມສະໜາມບິນ, ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີຕ່າງໆຢ່າງເຂັ້ມງວດ, ເອົາໃຈໃສ່ປ້ອງກັນເວນຍາມສະຖານທີ່ສຳຄັນ, ສະຖານທູດ ອົງການຈັດຕັ້ງສາກົນຕ່າງໆ, ເພີ່ມມາດຕະການກວດກາທາງໄປສະນີ ແລະ ສືບຕໍ່ປັບປຸງຂີດຄວາມສາມາດ ໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ, ຮັກສາ ແລະ ນຳໃຊ້ກົນໄກຮ່ວມມືປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານກັບບັນດາປະເທດສະມາຊິກຕຳຫຼວດອາຊຽນ ແລະ ສາກົນ ໂດຍສະເພາະກັບປະເທດທີ່ມີຊາຍແດນຕິດຈອດກັນ ເພື່ອກຳໄດ້ສະພາບການເຄື່ອນໄຫວຂອງ ກຸ່ມຄົນບໍ່ດີ ແລະ ປ້ອງກັນບໍ່ໃຫ້ພວກກໍ່ອາຊະຍາກຳ ເຂົ້າມາລີ້ຊ່ອນໃນດິນແດນຂອງ ສປປ ລາວ.

ຈຸດປະສົງການປະເມີນຄວາມສ່ຽງທາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກໍ່ແມ່ນເພື່ອ:

1) <u>ໄພຂົ່ມຂູ່ ດ້ານການກໍ່ການຮ້າຍ</u>: ແນໃສ່ກຳນົດລະດັບຂອງໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍອີງໃສ່ແຫຼ່ງທີ່ມາຂອງໄພຂົ່ມຂູ່ຈາກຜູ້ກໍ່ການຮ້າຍ ຊຶ່ງກຳນົດຜ່ານຂໍ້ມູນການບັງຄັບໃຊ້ກົດໝາຍ, ຂໍ້ມູນສືບຂ່າວຈາກໜ່ວຍງານທີ່ຮັບຜິດຊອບການຕ້ານການກໍ່ການຮ້າຍ ກໍ່ຄືຂໍ້ມູນທາງດ້ານການເງິນທີ່ກ່ຽວຂ້ອງ;
2) <u>ໄພຂົ່ມຂູ່ທາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ:</u> ແນໃສ່ກຳນົດເສັ້ນທາງ, ແຫຼ່ງທີ່ມາຂອງທຶນທີ່ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຊ່ອງທາງທີ່ໃຊ້ໃນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຊຶ່ງສາມາດກຳນົດໂດຍການນຳໃຊ້ຂໍ້ມູນການບັງຄັບໃຊ້ກົດໝາຍ ແລະ ປະເພດຂໍ້ມູນຂ່າວສານເປັນຕົວຊີ້ວັດ;
3) <u>ຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ</u>: ແນໃສ່ກຳນົດຄວາມເຂັ້ມແຂງໃນການຄວບຄຸມການສະໜອງທຶນໃຫ້ແກ່ການກໍ່ການຮ້າຍພາຍໃນສະພາບເງື່ອນໄຂຂອງປະເທດ ເປັນຕົ້ນ: ຊ່ອງຫວ່າງທາງດ້ານນິຕິກຳ ແລະ ກົນໄກໃນການສະກັດກັ້ນບັນຫາດັ່ງກ່າວຂອງ ສປປ ລາວ.

### 10.2. ການດຳເນີນການປະເມີນຄວາມສ່ຽງ

ຫຼັກການປະເມີນດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນອີງຕາມຂັ້ນຕອນ ແລະ ກົນໄກຄູ່ມືການປະເມີນຄວາມສ່ຽງ ຂອງທະນາຄານໂລກ ໂດຍການພິຈາລະນາ ແລະ ວິເຄາະຢ່າງຖີ່ຖ້ວນຂອງອະນຸກຳມະການຕໍ່ກັບຂໍ້

ມູນທີ່ສາມາດເກັບກຳໄດ້ຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນ: ກໍລະນີ, ຄະດີ ຫຼື ພຶດຕິກຳທີ່ເກີດຂຶ້ນຕົວຈິງ ແລ້ວນຳມາສຶມທຽບໃສ່ຄວາມອາດສາມາດໃນການສະກັດກັ້ນບັນຫາດັ່ງກ່າວກໍ່ຄືບັນດານິຕິກຳ ແລະ ກົນໄກການປ້ອງກັນ, ກົນໄກການຮັບມືຕໍ່ເຫດການທີ່ອາດເກີດຂຶ້ນ. ນອກຈາກນີ້, ຍັງໄດ້ພິຈາລະນາກ່ຽວກັບທ່າອ່ຽງ ແລະ ອົງປະກອບອື່ນໆ ເປັນຕົ້ນ: ພູມສັນຖານ, ປະຊາກອນ, ສາດສະໜາ, ສະພາບການຂັດແຍ່ງກັນພາຍປະເທດ ແລະ ອື່ນໆ.

ເຄື່ອງມືໃນການປະເມີນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນນຳໃຊ້ເຄື່ອງມືທີ່ ທະນາຄານໂລກ ພັດທະນາຂຶ້ນ ແຕ່ໄດ້ມີການດັດແກ້ໃຫ້ເຂົ້າກັບສະພາບຂອງ ສປປ ລາວ, ເນື່ອງຈາກວ່າ ຕົວຈິງໃນ ສປປ ລາວ ແມ່ນບໍ່ມີສະຖິຕິຕິດພັນກັບ ການກໍ່ການຮ້າຍ, ຂໍ້ມູນບຸກຄົນ ຫຼື ກຸ່ມກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

## 10.3. ຜົນການປະເມີນ

### 10.3.1. ສະພາບການກໍ່ການຮ້າຍ

ສະພາບການກໍ່ການຮ້າຍ ຍັງເປັນວາລະທີ່ສຳຄັນຕໍ່ການປຶກສາຫາລືຮ່ວມກັນ ໃນລະດັບທີ່ແຕກຕ່າງກັນຢູ່ພາກພື້ນ ແລະ ໃນໂລກ ເນື່ອງຈາກວ່າການກໍ່ການຮ້າຍເປັນໄພຄຸກຄາມຕໍ່ຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ ຊຶ່ງໄດ້ເກີດຂຶ້ນຢູ່ບັນດາຂົງເຂດທີ່ມີຂໍ້ຂັດແຍ່ງທາງດ້ານການເມືອງ, ເສດຖະກິດ, ສາສະໜາ, ຊົນເຜົ່າ ແລະ ອື່ນໆ. ຈາກຂໍ້ຂັດແຍ່ງທີ່ເປັນໝໍ່ແໜງຂອງການກໍ່ການຮ້າຍ ຍັງສືບຕໍ່ແຜ່ລາມເປັນວົງກວ້າງ ດ້ວຍວິທີການທີ່ແຕກຕ່າງກັນ ຊຶ່ງກາຍເປັນຄວາມຫຍຸ້ງຍາກ ແລະ ທ້າທາຍອັນໃຫຍ່ຫຼວງໃຫ້ແກ່ເຈົ້າໜ້າທີ່ ໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນໂລກ. ດ້ວຍເຫດຜົນດັ່ງກ່າວ ໄດ້ຮຽກຮ້ອງໃຫ້ທຸກປະເທດຕ້ອງໄດ້ຮ່ວມມືກັນສະກັດກັ້ນ ແລະ ຕ້ານການກໍ່ການຮ້າຍໃຫ້ທັນເວລາ.

ໃນໄລຍະຜ່ານມາເຈົ້າໜ້າທີ່ຂອງ ສປປ ລາວ ໄດ້ປະສານສຶມທຶບກັບພາກສ່ວນທີ່ກ່ຽວຂ້ອງເປັນເຈົ້າການເອົາໃຈໃສ່ເຄື່ອນໄຫວວຽກງານປ້ອງກັນ ແລະ ສະກັດກັ້ນ ຕໍ່ເຫດການທີ່ອາດຈະເກີດຂຶ້ນ ໃນນັ້ນ ໄດ້ມີການຕິດຕາມ, ກວດກາການເຄື່ອນໄຫວຂອງກຸ່ມຄົນບໍ່ດີ ແລະ ໄດ້ແກ້ໄຂປະກົດການທີ່ໜ້າສົງໄສ ກ່ອນຈະມີເຫດການເກີດຂຶ້ນ, ໄດ້ເພີ່ມມາດຕະການກວດກາການເຂົ້າ-ອອກເມືອງຢູ່ຕາມດ່ານຊາຍແດນ, ສະໜາມບິນ, ດ່ານສາກົນ, ດ່ານປະເພນີ ແລະ ດ່ານທ້ອງຖິ່ນຕ່າງໆຢ່າງເຂັ້ມງວດ, ເປັນເຈົ້າການ ເອົາໃຈໃສ່ປ້ອງກັນເວນຍາມສະຖານທີ່ສຳຄັນ, ສະຖານທູດ ແລະ ອົງການຈັດຕັ້ງສາກົນຕ່າງໆ, ເພີ່ມມາດຕະການກວດກາເຄື່ອງຝາກທາງໄປສະນີ ເປັນຕົ້ນແມ່ນ: ຫີບ, ຫໍ່ ແລະ ກ່ອງ ຂອງຝາກທາງໄປສະນີ; ສືບຕໍ່ປັບປຸງຂີດຄວາມສາມາດ ໃຫ້ແກ່ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ, ຮັກສາ ແລະ ນຳໃຊ້ກົນໄກຮ່ວມມືປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍກັບບັນດາປະເທດສະມາຊິກຕຳຫຼວດອາຊຽນ ແລະ ຕຳຫຼວດສາກົນ ໂດຍສະເພາະກັບປະເທດທີ່ມີຊາຍແດນຕິດຈອດກັນ ເພື່ອກຳໄດ້ສະພາບການເຄື່ອນໄຫວຂອງກຸ່ມຄົນບໍ່ດີ ແລະ ປ້ອງກັນບໍ່ໃຫ້ພວກເຂົາລັກລອບເຂົ້າມາລີ້ຊ່ອນ ແລະ ເຄື່ອນໄຫວຢູ່ໃນດິນແດນຂອງ ສປປ ລາວ. ຜ່ານການເຄື່ອນໄຫວປ້ອງກັນ ສະກັດກັ້ນ ແລະ ແກ້ໄຂບັນຫາຕ່າງໆ, ກຳລັງຕຳຫຼວດ, ເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນຂອງ ສປປ ລາວ ສາມາດປ້ອງກັນສະກັດກັ້ນ ແລະ ຮັບປະກັນໄດ້ສະຖຽນລະພາບ, ຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຂອງປະເທດໄດ້ເປັນຢ່າງດີ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ບັນດາຫົວໜ່ວຍການຜະລິດເສດຖະກິດໄດ້ດຳເນີນການຜະລິດຢ່າງຕໍ່ເນື່ອງ ແລະ ມີຄວາມປອດໄພ.

### 10.3.2. ສະພາບການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ຜ່ານປະສານສຶມທຶບກັບພາກສ່ວນທີ່ກ່ຽວຂ້ອງຂອງເຈົ້າໜ້າທີ່ສືບສວນ-ສອບສວນ ໃນການຕິດຕາມ, ກວດກາ, ຮ່ວມມື, ແລກປ່ຽນຂໍ້ມູນຂ່າວສານ ແລະ ປະເມີນຜົນໃນດ້ານຕ່າງໆ ທັງພາກລັດ ແລະ ເອກະຊົນໃນໄລຍະຜ່ານມາ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນ ສປປ ລາວ ແມ່ນຍັງບໍ່ທັນພົບກໍລະນີໃດໆທີ່ເກີດຂຶ້ນໃນ ສປປ

ລາວ. ໃນນັ້ນໄດ້ມີກໍລະນີນັກທຸລະກິດຈຳນວນໜຶ່ງ ໄດ້ນຳເງິນເຂົ້າມາຈາກປະເທດເພື່ອນບ້ານ ຊຶ່ງບາງກໍລະນີແມ່ນຖືກເຈົ້າໜ້າທີ່ເພື່ອນບ້ານ ຍຶດໄດ້ ແລະ ບາງກໍລະນີຖືກເຈົ້າໜ້າທີ່ຂອງ ສປປ ລາວ ຍຶດໄດ້, ແຕ່ເງິນຈຳນວນດັ່ງກ່າວນັ້ນ ຜ່ານການສືບສວນ-ສອບສວນ ບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການເຄື່ອນຍ້າຍເງິນແມ່ນນຳມາເພື່ອດຳເນີນທຸລະກິດສ່ວນຕົວໂດຍບໍ່ມີສ່ວນກ່ຽວຂ້ອງໃນການສະໜອງທຶນໃຫ້ແກ່ ບຸກຄົນ, ກຸ່ມຄົນ ຫຼື ພາກສ່ວນໃດໜຶ່ງແຕ່ຢ່າງໃດ. ນອກນີ້, ຜ່ານການກວດກາທາງດ້ານການເງິນຜ່ານລະບົບທະນາຄານ ແມ່ນບໍ່ມີການໂອນເງິນຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ຢູ່ຕ່າງປະເທດແຕ່ຢ່າງໃດ ທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

### 10.3.3. ດ້ານໄພຂົ່ມຂູ່ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ

ຜ່ານການປະເມີນໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໂດຍອີງຕາມປະກົດການ ແລະ ສະຖິຕິທີ່ເກີດຂຶ້ນໃນ ສປປ ລາວ ລວມທັງການປະເມີນປະເທດຮ່ວມຊາຍແດນ (ສສ. ຫວຽດນາມ, ລາຊະອານາຈັກ ກຳປູເຈຍ, ຣາຊະອານາຈັກໄທ, ມຽນມາ, ສປ. ຈີນ), ມາເລເຊຍ, ອິນໂດເນເຊຍ ແລະ ອິດສະຕາລີ ສາມາດປະເມີນໄພຂົ່ມຂູ່ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຄື:

- ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເກີດຈາກໄພຂົ່ມຂູ່ການກໍ່ການຮ້າຍພາຍໃນປະເທດ ຢູ່ໃນລະດັບ **<u>ຕ່ຳຫຼາຍ</u>** ເນື່ອງຈາກວ່າ ສປປ ລາວ ບໍ່ມີປະກົດການ ແລະ ກໍລະນີຕິດພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ສະຖິຕິປະກົດການ ຫຼື ກໍລະນີເຫດການ ທີ່ເຮັດໃຫ້ຜົນລະເມືອງເສຍຊີວິດ ຫຼື ບາດເຈັບ ຫຼື ບາດເຈັດສາຫັດ, ການນາບຂູ່ ຫຼື ການບັງຄັບໃຫ້ກໍ່ເຫດກໍ່ການຮ້າຍ ລວມທັງການເຄື່ອນໄຫວການລະດົມທຶນເພື່ອການກໍ່ການຮ້າຍພາຍໃນ ສປປ ລາວ ແມ່ນບໍ່ມີ.
- ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເກີດຈາກອົງກອນ ຫຼື ບຸກຄົນ ກໍ່ການຮ້າຍພາຍໃນປະເທດ ຢູ່ໃນລະດັບ **<u>ຕ່ຳຫຼາຍ</u>** ເນື່ອງຈາກ ສປປ ລາວ ບໍ່ມີອົງກອນ ຫຼື ບຸກຄົນກໍ່ການຮ້າຍພາຍໃນປະເທດ ລວມທັງຕາມຂອບເຂດຊາຍແດນ ອີງຕາມໄພຂົ່ມຂູ່ການກໍ່ການຮ້າຍພາຍໃນປະເທດທີ່ໄດ້ກ່າວຂ້າງເທິງ, ສະຖິຕິ ເຫດການ ແລະ ຄະດີທີ່ຕິດພັນກັບການກໍ່ການຮ້າຍ ລວມທັງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນບໍ່ມີ.
- ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເກີດຈາກບຸກຄົນທີ່ສະໜັບສະໜູນອົງກອນ, ບຸກຄົນ ຫຼື ແນວຄວາມຄິດການກໍ່ການຮ້າຍ (ຜູ້ພໍໃຈເຂົ້າຮ່ວມອຸດົມການກໍ່ການຮ້າຍ) ຢູ່ໃນລະດັບ **<u>ຕ່ຳຫຼາຍ</u>** ເນື່ອງຈາກ ສປປ ລາວ ເປັນປະເທດທີ່ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ຍັງບໍ່ທັນມີການເຄື່ອນໄຫວກໍ່ການຮ້າຍ, ການເຄື່ອນໄຫວຂອງກຸ່ມຫົວຮຸນແຮງ, ບໍ່ທັນມີຂໍ້ຂັດແຍ່ງ ຊຶ່ງກັນ ແລະ ກັນ ລະຫວ່າງຊົນເຜົ່າ ຫຼື ສາສະໜາ ທີ່ອາດຈະເປັນສາເຫດພາໃຫ້ເກີດການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຈະສ້າງຜົນເສຍຫາຍອັນໃຫຍ່ຫຼວງໃຫ້ແກ່ຊີວິດ, ໃຫ້ແກ່ສຸຂະພາບ, ຊັບສິນຂອງພົນລະເມືອງ ແລະ ອື່ນໆ. ນອກນີ້, ພົນລະເມືອງ ສ່ວນໃຫຍ່ ແມ່ນຖືສາສະໜາພຸດ ຊຶ່ງບໍ່ມີປະກົດການ ການເຄື່ອນໄຫວ ຫຼື ແນວຄິດທີ່ຈະສະໜັບສະໜູນ ຫຼື ເຂົ້າຮ່ວມອຸດົມການ ການກໍ່ການຮ້າຍ ລວມທັງບໍ່ມີການລະດົມທຶນເພື່ອສະໜອງທຶນໃຫ້ແກ່ການກໍ່ການຮ້າຍແຕ່ຢ່າງໃດ.
- ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເກີດຈາກການເຄື່ອນໄຫວກໍ່ການຮ້າຍຂອງປະເທດເພື່ອນບ້ານ ຢູ່ໃນລະດັບ **<u>ຕ່ຳຫຼາຍ</u>** ເນື່ອງຈາກ ເຖິງແມ່ນວ່າ ສປປ ລາວ ຈະມີຊາຍແດນຕິດຈອດກັບ 5 ປະເທດ ແຕ່ອີງໃສ່ກໍລະນີ ການກໍ່ການຮ້າຍ ລວມທັງການລະດົມທຶນຢູ່ໃນປະເທດຕ່າງໆທີ່ຕິດພັນກັບການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ ສປປ ລາວ ກໍ່ຄື ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນ, ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາເຂົ້າ, ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາອອກ ແລະ ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ ສປປ ລາວ ເປັນທາງຜ່ານ ແມ່ນບໍ່ມີ. ນອກນີ້, ສປປ ລາວ ຍັງໄດ້ສົ່ງແບບສອບຖາມ ແລະ ໄດ້ຄົ້ນຄວ້າບົດການປະເມີນຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງປະເທດເພື່ອນບ້ານ ກໍ່ຄື ສສ. ຫວຽດນາມ, ລາຊະອານາຈັກ ກຳປູເຈຍ, ຣາຊະອານາຈັກໄທ, ມຽນມາ, ສປ. ຈີນ, ມາເລເຊຍ, ອິນໂດເນເຊຍ ແລະ ອິດສະຕາລີ

ເຫັນວ່າ ສປປ ລາວ ແມ່ນເປັນປະເທດທີ່ມີຄວາມສ່ຽງຕ່ຳ ທັງຕິດພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຕໍ່ບັນດາປະເທດດັ່ງກ່າວ.

- ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເກີດຈາກການເປັນສູນກາງການເງິນ ຫຼື ການຄ້າ ຢູ່ໃນລະດັບ **<u>ຕ່ຳຫຼາຍ</u>** ເນື່ອງຈາກ ສປປ ລາວ ເປັນປະເທດທີ່ບໍ່ມີການກໍ່ການຮ້າຍ ຫຼື ກໍລະນີໄພຂົ່ມຂູ່ທີ່ຕິດພັນກັບການກໍ່ການຮ້າຍ ລວມທັງການສະໜອງທຶນໃຫ້ແກ່ກໍ່ການຮ້າຍ, ບໍ່ມີອົງກອນ, ກຸ່ມຄົນ ຫຼື ບຸກຄົນກໍ່ການຮ້າຍທີ່ເຄື່ອນໄຫວຢູ່ໃນປະເທດ. ດັ່ງນັ້ນ, ຈຶ່ງເຮັດໃຫ້ບໍ່ມີກະແສການເງິນ ທັງພາຍໃນ ແລະ ລະຫວ່າງປະເທດທີ່ຕິດພັນກັບທຸລະກຳການເງິນທີ່ຕິດພັນກັບບັນຫາດັ່ງກ່າວ.
- ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເກີດຈາກການສະໜອງສິນຄ້າ ແລະ ການບໍລິການຍຸດທະສາດ ຢູ່ໃນລະດັບ **<u>ຕ່ຳຫຼາຍ</u>** ເນື່ອງຈາກ ການຊ່ວຍເຫຼືອທາງດ້ານການເງິນ, ອຸປະກອນການທະຫານ, ສິນຄ້າຍຸດທະສາດ ແລະ ຊັບພະຍາກອນທາງເສດຖະກິດອື່ນໆ ໃຫ້ກັບເຂດທີ່ມີໄພຂົ່ມຂູ່ຂອງການກໍ່ການຮ້າຍ ລວມທັງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນບໍ່ມີໃນ ສປປ ລາວ. ການສະໜອງບັນດາສິນຄ້າ ແລະ ການບໍລິການທີ່ອາດເຮັດໃຫ້ເກີດໄພຂົ່ມຂູ່ ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຊັ່ນ: ອາວຸດທຸກປະເພດ, ອຸປະກອນການທະຫານປະເພດອື່ນໆ, ລະເບີດ ແລະ ວັດຖຸດິບທີ່ກ່ຽວຂ້ອງ ແລະ ສານເຄມີ, ເຄື່ອງຈັກທີ່ສາມາດນຳໃຊ້ໃນການຜະລິດອາວຸດ, ຝຸ່ນປຸ໋ຍບາງຊະນິດ, ອຸປະກອນເຝົ້າລະວັງ, ໂດຣນ, ອຸປະກອນຄວບຄຸມໄລຍະໄກ, ຢາປົວພະຍາດ ແລະ ອຸປະກອນຮັກສາສຸຂະພາບ ແລະ ອື່ນໆ ແມ່ນບໍ່ມີເຊັ່ນດຽວກັນ.

**ຕາຕະລາງທີ 10.1: ຜົນການປະເມີນໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

| **ຜົນການປະເມີນ ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** | | |
|---|---|---|
| **ໄພຂົ່ມຂູ່** | **ຄະແນນ** | **ຜົນການປະເມີນ** |
| ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນ | 0.1 | ຕ່ຳຫຼາຍ |
| ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາເຂົ້າ | 0.1 | ຕ່ຳຫຼາຍ |
| ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາອອກ | 0.1 | ຕ່ຳຫຼາຍ |
| ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ ສປປ ລາວ ເປັນທາງຜ່ານ | 0.1 | ຕ່ຳຫຼາຍ |
| | | |
| ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນປະເທດ | 0.1 | ຕ່ຳຫຼາຍ |
| ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈາກຕ່າງປະເທດ | 0.1 | ຕ່ຳຫຼາຍ |
| **ໄພຂົ່ມຂູ່ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລວມ** | **0.1** | ຕ່ຳຫຼາຍ |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

ຈາກຜົນການປະເມີນແຕ່ລະຕົວປ່ຽນຂ້າງເທິງ ສະແດງໃຫ້ເຫັນວ່າ ຜົນການປະເມີນໄພຂົ່ມຂູ່ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແຫ່ງຊາດຂອງ ສປປ ລາວ ແມ່ນຢູ່ໃນລະດັບ **<u>ຕ່ຳຫຼາຍ.</u>**

### 10.3.4. ດ້ານຄວາມບອບບາງ

ສປປ ລາວ ໄດ້ກຳນົດນະໂຍບາຍ ແລະ ຍຸດທະສາດໃນການປ້ອງກັນ, ສະກັດກັ້ນ ແລະ ຕ້ານ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍໄດ້ສ້າງນິຕິກຳ ທີ່ຮັດກຸມ ແລະ ສອດຄ່ອງກັບມາດຕະຖານສາກົນ,

ພ້ອມທັງ ສ້າງກົນໄກ ແລະ ມາດຕະການ ປ້ອງກັນ, ສະກັດກັ້ນ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອບໍ່ໃຫ້ເກີດຂຶ້ນໃນ ສປປ ລາວ.

**1) ນະໂຍບາຍ ແລະ ຍຸດທະສາດ**

ລັດຖະບານຂອງ ສປປ ລາວ ໄດ້ກຳນົດບັນຫາ ການສະກັດກັ້ນ ແລະ ການຕ້ານ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຂົ້າໃນ ຍຸດທະສາດການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໄລຍະ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035, ຊຶ່ງກວມເອົາ ການຈັດຕັ້ງປະຕິບັດກົນໄກການຮ່ວມມື ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ສ້າງຄວາມສາມາດກ່ຽວກັບວຽກງານການດຳເນີນຄະດີ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ນອກຈາກນີ້, ໄດ້ມອບໝາຍໃຫ້ເຈົ້າໜ້າທີ່ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການ ໃນການສ້າງ ແລະ ປັບປຸງນິຕິກຳພາຍໃນແຕ່ລະຂົງເຂດ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງເຂັ້ມງວດ.

ໂດຍປະຕິບັດຕາມແຜນຍຸດທະສາດແຫ່ງຊາດໃນການສ້າງສາພັດທະນາປະເທດຊາດ ໃນໄລຍະ 05 ປີຕໍ່ໜ້າ ແລະ ແຜນງານໂຄງການຂອງກະຊວງປ້ອງກັນຄວາມສະຫງົບ, ກໍ່ຄືການຈັດຕັ້ງປະຕິບັດ 04 ແຜນງານ ແລະ 9 ໂຄງການຂອງກົມໃຫຍ່ຕຳຫຼວດ ໃນການສະກັດກັ້ນ ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ໃນສັງຄົມ, ເຈົ້າໜ້າທີ່ຕຳຫຼວດ ໄດ້ເປັນເຈົ້າການເອົາໃຈໃສ່ ເພື່ອຄາດຄະເນເຫດການທີ່ຈະເກີດຂຶ້ນ ແລະ ກຳນົດໃຫ້ໄດ້ບັນດາພື້ນທີ່ຫຼໍ່ແຫຼມ ກໍ່ໃຫ້ເກີດມີອາຊະຍາກຳປະເພດຕ່າງໆ ລວມທັງການກໍ່ອາຊະຍາກຳທີ່ມີລັກສະນະເປັນອັນຕະລາຍຮ້າຍແຮງ ກ້າວໄປເຖິງເປັນການກໍ່ການຮ້າຍຂອງສັດຕູຜູ້ບໍ່ຫວັງດີ. ໃນນີ້ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ແລະ ກະກຽມກຳລັງ, ພາຫະນະ, ອຸປະກອນເຕັກນິກທີ່ທັນສະໄໝ, ພ້ອມທັງສ້າງແຜນການສະກັດກັ້ນປ້ອງກັນຢ່າງຮອບດ້ານບັນດາສະຖານທີ່ບໍລິການມວນຊົນ ເປັນຕົ້ນແມ່ນ: ສະຖານີລົດຂົນສົ່ງໂດຍສານ, ສະຖານີລົດໄຟ, ສະໜາມບິນ, ຮ້ານຊຸບເປີມາເກັດ, ຕະຫຼາດສົດ, ຮ້ານຊັບພະສິນຄ້າ, ຕະຫຼາດ, ຕະຫຼາດກາງຄືນ, ສູນອອກກຳລັງກາຍ, ສະຖານທີ່ອອກກຳລັງກາຍ, ສະໜາມກ໋ອບ ແລະ ສວນສາທາລະນະ ບ່ອນທີ່ມີມວນຊົນອັ່ງອໍ ແລະ ອື່ນໆ.

**2) ອົງການຈັດຕັ້ງຮັບຜິດຊອບ ໃນການສືບສວນ-ສອບສວນ ແລະ ແກ້ໄຂເຫດການສຸກເສີນ**

ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງກົນໄກປະສານງານໃນການຕ້ານການກໍ່ການຮ້າຍຂຶ້ນ ໃນນັ້ນ ລວມມີບັນດາກະຊວງທີ່ກ່ຽວຂ້ອງຕ່າງໆເຂົ້າຮ່ວມ ເປັນຕົ້ນ: ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການເງິນ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ອື່ນໆ. ກົນໄກປະສານງານດັ່ງກ່າວມີໜ້າທີ່ຄົ້ນຄວ້າ ປຶກສາຫາລື ວາງນະໂຍບາຍ, ແຜນຍຸດທະສາດທີ່ກ່ຽວຂ້ອງກັບບັນຫາການຕ້ານການກໍ່ການຮ້າຍ, ຮັບປະກັນການປະສານງານ ແລກປ່ຽນຂໍ້ມູນຂ່າວສານ ຊຶ່ງກັນ ແລະ ກັນ ແລະ ຈັດຕັ້ງປະຕິບັດໜ້າທີ່ວິຊາສະເພາະຂອງຕົນຕາມທີ່ລັດຖະບານໄດ້ມອບໝາຍໃຫ້.

ໃນບັນດາກະຊວງທີ່ນອນໃນກົນໄກປະສານງານດັ່ງກ່າວ ລັດຖະບານໄດ້ມອບໃຫ້ ກະຊວງປ້ອງກັນຄວາມສະຫງົບ ເປັນໃຈກາງໃນການເຄື່ອນໄຫວວຽກງານຕົວຈິງ ແລະ ຈັດຕັ້ງປະຕິບັດບັນດາສົນທິສັນຍາສາກົນ ກ່ຽວກັບການຕ້ານອາຊະຍາກຳຂ້າມຊາດ ການກໍ່ການຮ້າຍ, ຊຶ່ງໄດ້ມີການແຕ່ງຕັ້ງກົມວິຊາສະເພາະທີ່ຮັບຜິດຊອບໂດຍກົງ ເປັນຕົ້ນ: ກົມຕຳຫຼວດສືບສວນ-ສອບສວນ, ກົມຕຳຫຼວດສືບຂ່າວ, ກົມຕຳຫຼວດເສດຖະກິດ ແລະ ອື່ນໆ ທີ່ຂຶ້ນກັບກົມໃຫຍ່ຕຳຫຼວດ ເປັນຜູ້ເຄື່ອນໄຫວດຳເນີນຄະດີ, ຕິດຕາມກວດກາ, ຂຶ້ນບັນຊີເປົ້າໝາຍ, ສືບຂ່າວ, ສືບສວນ-ສອບສວນ ແລະ ປະສານງານກັບພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອປ້ອງກັນ ແລະ ແກ້ໄຂບັນຫາການກໍ່ການຮ້າຍ. ນອກຈາກນີ້, ໄດ້ມີການແຕ່ງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ປະກອບດ້ວຍພະນັກງານຂັ້ນນຳ ຈາກພາກສ່ວນຕ່າງໆກ່ຽວຂ້ອງ ເພື່ອຄຸ້ມຄອງມະຫາພາກ ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍມີສຳນັກງານຂໍ້ມູນຕ້ານການຟອກເງິນ ເຮັດໜ້າທີ່ກອງເລຂາ.

ນອກຈາກນັ້ນດາກະຊວງທີ່ຖືກແຕ່ຕັ້ງຕາມການຕົກລົງຂອງລັດຖະບານແລ້ວ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບເຫດສຸກເສີນ ສະເພາະປະກອບ ມີ:

- ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ;
- ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ;
- ກົມເຄມີ ກະຊວງປ້ອງກັນປະເທດ;
- ກອງພັນປ້ອງກັນເຄມີ ແລະ ສູນເຄມີຂອງກອງທັບ;
- ເຈົ້າໜ້າທີ່ຕຳຫຼວດປາບຈະລາຈົນ ແລະ ຕຳຫຼວດຈະລາຈອນ;
- ເຈົ້າໜ້າທີ່ຕຳຫຼວດດັບເພີງ;
- ຄະນະສະເພາະກິດປ້ອງກັນໄພພິບັດ ຂອງ ກະຊວງປ້ອງກັນປະເທດ;
- ຄະນະສະເພາະກິດປ້ອງກັນເຫດສຸກເສີນ 3ຂອງ ກະຊວງປ້ອງກັນຄວາມສະຫງົບ;
- ທີມແພດຂອງ ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ແລະ ຂອງໂຮງໝໍຢູ່ໃນບັນດາ ແຂວງ ແລະ ເມືອງ.

### 3) ການຄວບຄຸມການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງເຈົ້າໜ້າທີ່ປະຈຳດ່ານຊາຍແດນ

ສປປ ລາວ ມີດ່ານສາກົນ 29 ດ່ານ, ດ່ານທ້ອງຖິ່ນ 19 ດ່ານ ແລະ ດ່ານປະເພນີ 52 ດ່ານ ຊຶ່ງເປັນບ່ອນອຳນວຍຄວາມສະດວກໃຫ້ແກ່ພົນລະເມືອງລາວ ແລະ ຊາວຕ່າງປະເທດ ໃນການເດີນທາງ ເຂົ້າ-ອອກ ສປປ ລາວ ທັງເປັນບັນຫາທີ່ທ້າທາຍຕໍ່ເຈົ້າໜ້າທີ່ຕຳຫຼວດ ໃນການເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນ, ຕິດຕາມ, ກວດກາ ແລະ ສະກັດກັ້ນຕ້ານການລັກລອບເຂົ້າເມືອງຜິດກົດໝາຍ ແລະ ເຄື່ອນໄຫວກໍ່ອາຊະຍາກຳປະເພດຕ່າງໆ ລວມທັງບັນຫາການກໍ່ການຮ້າຍ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ແລ້ວໜີຂ້າມແດນ. ນອກຈາກນັ້ນ, ຍັງໄດ້ສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງອື່ນໆປະຈຳດ່ານ ໃນການປະຕິບັດໜ້າທີ່ ເປັນຕົ້ນແມ່ນ: ການກວດກາຕົວບຸກຄົນ, ພາຫະນະ ແລະ ເຄື່ອງຂອງຕິດຕົວປະເພດຕ່າງໆ ດ້ວຍກຳລັງຂອງເຈົ້າໜ້າທີ່ ແລະ ນຳໃຊ້ລະບົບເຄື່ອງມືເອເລັກໂຕຼນິກ (ເຄື່ອງສະແກນ) ເພື່ອຊອກຫາສິ່ງທີ່ຜິດກົດໝາຍ ແລະ ປ້ອງກັນການກໍ່ອາຊະຍາກຳຂ້າມແດນ.

**ຕາຕະລາງທີ 10.2: ຜົນການປະເມີນຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

| ຄວາມບອບບາງ | ຄະແນນ | ລະດັບຄວາມສ່ຽງ |
|---|---|---|
| ຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນ | 0.33 | **ຕ່ຳ** |
| ຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາເຂົ້າ | 0.33 | **ຕ່ຳ** |
| ຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາອອກ | 0.33 | **ຕ່ຳ** |
| ຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ ສປປ ລາວເປັນທາງຜ່ານ | 0.33 | **ຕ່ຳ** |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

ຈາກຜົນການປະເມີນແຕ່ລະຕົວປ່ຽນຂ້າງເທິງ ສະແດງໃຫ້ເຫັນວ່າ ຜົນການປະເມີນຄວາມບອບບາງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແຫ່ງຊາດຂອງ ສປປ ລາວ ແມ່ນຢູ່ໃນລະດັບ **ຕ່ຳ.**

### 10.3.5. ສະຫຼຸບຜົນການປະເມີນ

ແຜນວາດທີ 10.1: ລະດັບຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ




ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.

ຜ່ານການປະເມີນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍການປະເມີນໄພຂົ່ມຂູ່, ຄວາມບອບບາງ ລວມທັງ ການປະເມີນໃສ່ຂໍ້ມູນການປະເມີນຄວາມສ່ຽງຂອງບັນດາປະເທດທີ່ມີຊາຍແດນຕິດຈອດ ສາມາດປະເມີນໄດ້ ລະດັບຄວາມສ່ຽງດ້ານ%%ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ຄື ຄວາມສ່ຽງ TF ພາຍໃນ ແມ່ນຢູ່ໃນລະດັບ **ຕ່ຳ**, ຄວາມສ່ຽງດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາເຂົ້າ ແມ່ນຢູ່ໃນລະດັບ **ຕ່ຳ**, ຄວາມ ສ່ຽງ ດ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂາອອກ ແມ່ນຢູ່ໃນລະດັບ **ຕ່ຳ** ແລະ ຄວາມສ່ຽງດ້ານການສະໜ ອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເປັນທາງຜ່ານ ແມ່ນຢູ່ໃນລະດັບ **ຕ່ຳ.**

## XI. ແຜນການຈັດຕັ້ງປະຕິບັດ

ຈາກຜົນການທົບທວນ ແລະ ປະເມີນຄືນຄວາມສ່ຽງລະດັບຊາດ, ສປປ ລາວ ໄດ້ສ້າງແຜນປະຕິບັດງານ ເພື່ອແກ້ໄຂ ແລະ ຫຼຸດຜ່ອນຄວາມສ່ຽງ ໂດຍການກຳນົດບັນຫາທີ່ຕ້ອງແກ້ໄຂ, ພາກສ່ວນຮັບຜິດຊອບ ແລະ ກອບເວລາ ຈັດຕັ້ງປະຕິບັດໃນລະຫວ່າງປີ 2024-2026, ຊຶ່ງການຈັດຕັ້ງປະຕິບັດການແກ້ໄຂຄວາມສ່ຽງ ດ້ານການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈະມີການທົບທວນຄືນເປັນແຕ່ລະໄລຍະ.

**ຕາຕະລາງທີ 11.1: ແຜນການຈັດຕັ້ງປະຕິບັດ**

| ລ/ດ | ບຸລິມະສິດທີ່ຈະຕ້ອງໄດ້ຮັບການແກ້ໄຂໃນຕໍ່ໜ້າ | ແຜນວຽກ | | ພາກສ່ວນຮັບຜິດຊອບ | ງົບປະມານ | ກຳນົດເວລາ | |
|---|---|---|---|---|---|---|---|
| | | | | | | 2025 | 2026 |
| I. | **ນະໂຍບາຍກ່ຽວກັບການປະເມີນຄວາມສ່ຽງດ້ານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** | **1.** | **ແຜນການແກ້ໄຂຄວາມສ່ຽງໃນແຕ່ລະໄລຍະ** | | | | |
| | | **1.1.** | ສ້າງ ແລະ ຮັບຮອງແຜນປະຕິບັດງານ ເພື່ອຫຼຸດຜ່ອນຄວາມສ່ຽງກ່ຽວກັບວຽກງານ ດ້ານການຕ້ານ ການຟອກເງິນ ແລະ ສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍ | - ກະຊວງປ້ອງກັນຄວາມສະຫງົບ<br>- ກະຊວງກະສິກຳ ແລະ ປ່າໄມ້<br>- ກະຊວງການເງິນ (ຜູ້ຄຸ້ມຄອງຂະແໜງການກາຊີໂນ, ວຽງງານພາສີ ແລະ ວຽງງານສ່ວຍສາອາກອນ)<br>- ທະນາຄານ ແຫ່ງ ສປປ ລາວ (ຜູ້ຄຸ້ມຄອງຂະແໜ ງການທະນາຄານ)<br>- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຜູ້ຄຸ້ມຄອງຂະແໜ ງການ ຊື້-ຂາຍ ອະສັງຫາລິມະຊັບ)<br>- ກະຊວງອຸດສາຫະກຳ ແລະ ການຄ້າ (ຜູ້ຄຸ້ມຄອງການຂຶ້ນ | ກະຊວງກ່ຽວຂ້ອງ | | |
| | | **1..2.** | ຊຸກຍູ້ການຈັດຕັ້ງປະຕິບັດ ແຜນຫຼຸດຜ່ອນຄວາມສ່ຽງໃຫ້ມີຄວາມຄືບຫນ້າແຕ່ລະໄລຍະ. | | ສຕຝ ປະສານຂໍການຊ່ວຍເຫຼືອກັບສາກົນ | | |
| | | **2.** | **ການທົບທວນຄືນ** | | | | |
| | | **2.1.** | ປະເມີນຄືນການຈັດຕັ້ງປະຕິບັດຕາມແຜນຫຼຸດຜ່ອນຄວາມສ່ຽງຂອງຕົນເປັນປະຈຳທຸກປີ ສຳລັບ **ຂົງເຂດທີ່ມີຄວາມສ່ຽງສູງ ແລະ ກາງ-ສູງ** ຫຼື ຕາມສະພາບການຕົວຈິງຂອງແຕ່ລະໄລຍະ, ເພື່ອປ້ອງກັນການເກີດຄວາມສ່ຽງໃໝ່ ແລະ ປະຕິບັດໄດ້ການຫຼຸດຜ່ອນຈາກຄວາມສ່ຽງ ສູງ ແລະ ກາງ-ສູງ | | ກະຊວງກ່ຽວຂ້ອງ | | |
| | | **2.2.** | ປະເມີນຄືນການຈັດຕັ້ງປະຕິບັດຕາມແຜນຫຼຸດຜ່ອນຄວາມສ່ຽງຂອງຕົນເປັນປະຈຳທຸກ 02 ປີ ສຳລັບ **ຂົງເຂດທີ່ມີຄວາມສ່ຽງ ກາງ-ຕ່ຳ ແລະ ຕ່ຳ** ຫຼື ຕາມສະພາບການຕົວຈິງແຕ່ລະໄລຍະ ເພື່ອປ້ອງກັນໃຫ້ບໍ່ເກີດມີຄວາມສ່ຽງທີ່ເພີ່ມສູງຂຶ້ນໃນຂົງເຂດຂອງຕົນ | | ກະຊວງກ່ຽວຂ້ອງ | | |

| | | | | | | | |
|---|---|---|---|---|---|---|---|
| | | | | ທະບຽນ ນິຕິບຸກຄົນ ແລະ ບຸກຄົນທີ່ມີການຕົກລົງກັນທາງດ້ານກົດໝາຍ)<br>- ກະຊວງພາຍໃນ (ຜູ້ຄຸ້ມຄອງ ອົງການຈັດຕັ້ງສັງຄົມລາວ (ມູນນິທິ ແລະ ສະມາຄົມ))<br>- ກະຊວງການຕ່າງປະເທດ (ຜູ້ຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ) | | | |
| **II.** | **ການເພີ່ມປະສິດທິພາບໃຫ້ແກ່ວຽກງານດຳເນີນຄະດີ** | **1.** | **ການສ້າງ ແລະ ປັບປຸງນິຕິກຳ** | | | | |
| | | 1.1. | ການສ້າງຄູ່ມືສະເພາະຂອງການສືບສວນ-ສອບສວນທາງດ້ານການເງິນ ຄຽງຄູ່ກັບການກະທຳຜິດຕົ້ນ | - ປ້ອງກັນຄວາມສະຫງົບ<br>- ເຈົ້າໜ້າທີ່ພາສີ<br>- ເຈົ້າໜ້າທີ່ປ່າໄມ້<br>- ເຈົ້າໜ້າທີ່ອົງການກວດກາແຫ່ງລັດ<br>- ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ<br>- ໄອຍະການ<br>- ສານ | ກະຊວງກ່ຽວຂ້ອງ | | |
| | | **2.** | **ຍົກລະດັບຄວາມອາດສາມາດໃນການດຳເນີນຄະດີ ການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** | | | | |
| | | 2.1. | ເຜີຍແຜ່ ຫຼື ຈັດຝຶກອົບຮົມໃຫ້ຄວາມຮູ້ໃນດ້ານການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບເຕັກນິກການສືບສວນ-ສອບສວນທາງດ້ານການເງິນ ແລະ ການນຳໃຊ້ຂໍ້ມູນຂ່າວກອງທາງການເງິນເຂົ້າໃນການພິຈາລະນາໃນການດຳເນີນຄະດີ ໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຢູ່ສູນ | ສຳນັກງານຂໍ້ມູນຕ້ານການຟອກເງິນ ສືມທິບ ອົງການດຳເນີນຄະດີ | ສຳນັກງານຂໍ້ມູນຕ້ານການຟອກເງິນ ປະສານຂໍການຊ່ວຍເຫຼືອຈາກອົງການສາກົນ | | |

| | | | | | | | |
|---|---|---|---|---|---|---|---|
| | | | ກາງ ແລະ ທ້ອງຖິ່ນ ລວມທັງຢູ່ຕາມຊາຍແດນເຂົ້າ-ອອກ ລະຫວ່າງ ປະເທດ. | | | | |
| | | 2.2. | ເພີ່ມທະວີການຮ່ວມມື ແລະ ປະສານງານ ລະຫວ່າງອົງການ ສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການໄວການດຳເນີນຄະດີ ຄວາມຜິດຕົ້ນ (ການເພີ່ມຂໍ້ກ່າວຫາໃນການດຳເນີນການສືບສວນ-ສອບສວນ, ສັ່ງຟ້ອງ ແລະ ຕັດສິນ) ຄຽງຄູ່ກັບ ຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍສະເພາະເນັ້ນໃສ່ໄພ ຂົ່ມຂູ່ບຸລິມະສິດ ຂອງ ສປປ ລາວ. | - ປ້ອງກັນຄວາມສະຫງົບ<br>- ເຈົ້າໜ້າທີ່ພາສີ<br>- ເຈົ້າໜ້າທີ່ປ່າໄມ້<br>- ເຈົ້າໜ້າທີ່ອົງການກວດກາ ແຫ່ງລັດ<br>- ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ | ສຳນັກງານຂໍ້ມູນຕ້ານ ການຟອກເງິນ | | |
| | | 2.3. | ແຕ່ງຕັ້ງຄະນະເຮັດວຽກ ແລະ ມີການຈັດກອງປະຊຸມປຶກສາຫາລື ລະຫວ່າງອົງການດຳເນີນຄະດີກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອ ແລກປ່ຽນສະພາບການ ແລະ ປຶກສາຫາລືກ່ຽວກັບວຽກງານຕ້ານ ການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ບັນຫາ ອື່ນໆ ໃຫ້ທັນສະພາບການ. | - ໄອຍະການ<br>- ສານ<br>- ສຳນັກງານຂໍ້ມູນຕ້ານການ ຟອກເງິນ | ສຳນັກງານຂໍ້ມູນຕ້ານ ການຟອກເງິນ | | |
| | | 2.4. | ພັດທະນາລະບົບພື້ນຖານການເກັບກຳ ຫຼື ສັງລວມຂໍ້ມູນຂອງ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ໂດຍເລີ່ມຈາກຂັ້ນສູນກາງ ເພື່ອຮັບປະກັນ ປະສິດທິພາບການເກັບກຳບັນດາສະຖິຕິຕ່າງໆ ປະກອບເຂົ້າໃນບົດ ລາຍງານຂອງສາກົນແຕ່ລະໄລຍະ | | ກະຊວງກ່ຽວຂ້ອງ | | |
| | | 2.5. | ເພີ່ມກຳລັງເຈົ້າໜ້າທີ່ ແລະ ອົງການທີ່ກ່ຽວຂ້ອງທີ່ເຮັດໜ້າທີ່ໃນ ການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ ການຮ້າຍ ໂດຍສະເພາະຂັ້ນທ້ອງຖິ່ນ. | | ກະຊວງກ່ຽວຂ້ອງ | | |
| | | 2.6. | ເຜີຍແຜ່ກ່ຽວກັບ ກົນໄກການຮ້ອງຂໍກ່ຽວກັບກໍລະນີ ການຮ້ອງຂໍຂໍ້ ມູນຈາກສາກົນ ໂດຍຜ່ານຊ່ອງທາງກົນໄກການຮ່ວມມືແບບເປັນ ທາງການ ແລະ ບໍ່ເປັນທາງການ ທີ່ຕິດພັນກັບຄວາມຜິດຖານຄວາມ ຜິດຕົ້ນທີ່ກ້າວໄປສູ່ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ | | ກະຊວງກ່ຽວຂ້ອງ | | |

| | | | | | | | |
|---|---|---|---|---|---|---|---|
| | | 2.7. | ສືບຕໍ່ປັບປຸງລະບົບພື້ນຖານໂຄງລ່າງໃນການຢັ້ງຢືນຕົວຕົນຂອງບຸກຄົນເພື່ອໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານສາມາດເຂົ້າເຖິງແຫຼ່ງຂໍ້ມູນໄດ້. | ກະຊວງ ປ້ອງກັນຄວາມສະຫງົບ | ກະຊວງ ປ້ອງກັນຄວາມສະຫງົບ | | |
| **III.** | **ເພີ່ມປະສິດທິຜົນຂອງການກວດກາ ກ່ຽວກັບເງິນສິດ ແລະ ເຄື່ອງມືທີ່ຄ້າຍຄືກັນ** | 1. | **ສ້າງ ແລະ ປັບປຸງນິຕິກຳ** | | | | |
| | | 1.1. | ສ້າງຄູ່ມືສະເພາະໃນການດຳເນີນການຄຸ້ມຄອງຊາຍແດນ | ກະຊວງການເງິນ | ກະຊວງກ່ຽວຂ້ອງ | | |
| | | 2. | **ຍົກລະດັບຄວາມອາດສາມາດໃຫ້ແກ່ການຄຸ້ມຄອງ, ກວດກາ ຊາຍແດນ, ເງິນສິດ ແລະ ເຄື່ອງມືທີ່ຄ້າຍຄືກັນ** | | | | |
| | | 2.1. | ສ້າງຄວາມອາດສາມາດ ດ້ວຍການ ຝຶກອົບຮົມເປັນຕົ້ນ ການກວດຈັບ ການລັກລອບຂົນ ວັດຖຸມີຄ່າ, ຮູບພາບທີ່ມີມູນຄ່າສູງ, ເງິນສິດຂ້າມແດນ, ສິ້ນສ່ວນສັດປ່າ ແລະ ອື່ນໆທີ່ຜິດກົດໝາຍ ທີ່ອາດຈະມີການສ້າງຊັ້ນປົກປິດ ແລະ ເຊື່ອມໂຍງກັບການຟອກເງິນ ແລະ ອົງການຈັດຕັ້ງຂອງກຸ່ມກໍ່ການຮ້າຍ; | ກະຊວງການເງິນ | ກະຊວງກ່ຽວຂ້ອງ | | |
| | | 2.2. | ນຳໃຊ້ອຸປະກອນກວດຈັບ ທີ່ທັນສະໄໝ ເພື່ອນຳມາຮັບໃຊ້ໃນວຽກງານ ພາສີ ປະຈຳດ່ານຊາຍແດນໃນແຕ່ລະຈຸດ | ກະຊວງການເງິນ | ກະຊວງການເງິນ ປະສານຂໍການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ | | |
| | | 2.3. | ເພີ່ມທະວີການຮ່ວມມື ແລະ ປະສານງານລະຫວ່າງ ເຈົ້າໜ້າທີ່ພາສີ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງການຂົນເງິນສິດຂ້າມແດນ ແລະ ປ້ອງກັນອາຊະຍາກຳຂ້າມຊາດ. | - ກະຊວງການເງິນ<br>- ອົງການສືບສວນ-ສອບສວນ<br>- ຄູ່ຮ່ວມງານຕ່າງປະເທດ<br>- ສຳນັກງານຂໍ້ມູນຕ້ານການຟອກເງິນ | ກະຊວງກ່ຽວຂ້ອງ | | |
| **IV.** | **ປັບປຸງຄຸນນະພາບຂອງວຽກງານວິ ເຄາະຂ່າວກອງ** | **1.** | **ການສ້າງຄວາມອາດສາມາດໃຫ້ແກ່ນັກວິເຄາະຂ່າວກອງທາງດ້ານການເງິນ** | | | | |
| | | 1.1. | ເຂົ້າຮ່ວມ/ຈັດ ຝຶກອົບຮົມກ່ຽວກັບ ເຕັກນິກການວິເຄາະຂ່າວກອງທາງດ້ານການເງິນ ໃຫ້ແກ່ນັກວິເຄາະ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |

| | | | | | | | |
|---|---|---|---|---|---|---|---|
| | | 1.2. | ເຂົ້າຮ່ວມ/ຈັດ ຝຶກອົບຮົມກ່ຽວກັບ ການນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ທີ່ຊ່ວຍໃນການວິເຄາະຂ່າວກອງທາງດ້ານການເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| | | 1.3. | ຈັດຝຶກອົບຮົມໃຫ້ແກ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອພັດທະນາບົດລາຍງານທຸລະກຳທີ່ໜ້າສົງໄສໃຫ້ມີຄຸນະພາບ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຕຟງ | | |
| | | 1.4. | ຈັດຝຶກອົບຮົມໃຫ້ແກ່ການນຳໃຊ້ລະບົບໃນການແລກປ່ຽນຂໍ້ມູນໃຫ້ແກ່ເຈົ້າໜ້າທີ່ອົງການດຳເນີນຄະດີ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| | | **2.** | **ປັບປຸງຄຸນະພາບຂອງບົດລາຍງານຂ່າວກອງທາງດ້ານການເງິນ** | | | | |
| | | 2.1. | ຄົ້ນຄວ້າປັບປຸງຮູບແບບ ແລະ ວິທີການວິເຄາະດ້ວຍຮູບແບບທີ່ທັນສະໄໝໃຫ້ແທດເໝາະກັບສະພາບຕົວຈິງໃນແຕ່ລະໄລຍະ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| | | 2.2. | ປະສານສົມທົບກັບເຈົ້າໜ້າທີ່ສຶບສວນ-ສອບສວນເປັນແຕ່ລະໄລຍະ, ເພື່ອປຶກສາຫາລືຕໍ່ກັບຄຸນນະພາບ ແລະ ຄວາມຕ້ອງການຂໍ້ມູນຈາກບົດລາຍງານຂ່າວກອງຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອປັບປຸງມີຄຸນນະພາບຫຼາຍຂຶ້ນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| | | 2.3. | ເກັບກຳ, ຕິດຕາມ ແລະ ກວດກາຢ່າງເຄັ່ງຄັດຕໍ່ກັບການປະຕິບັດການລາຍງານ ແລະ ການສະໜອງຂໍ້ມູນຂອງບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ຄົ້ນຄວ້າປະຕິບັດລະບຽບດ້ານບໍລິຫານຕໍ່ຫົວໜ່ວຍທີ່ບໍ່ປະຕິບັດຕາມ ຫຼື ບໍ່ເອົາໃຈໃສ່ການຈັດຕັ້ງປະຕິບັດຕາມລະບຽບການ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| | | 2.4. | ປັບປຸງລະບົບຖານຂໍ້ມູນຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ໃນແຕ່ລະໄລຍະໃຫ້ແທດເໝາະກັບຄວາມຕ້ອງການໃນການນຳໃຊ້ຂໍ້ມູນ ແລະ ຄຽງຄູ່ກັບການຮັບປະກັນໄດ້ດ້ານຄວາມລັບຂອງຂໍ້ມູນຕາມມາດຕະຖານສາກົນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| **V.** | **ປະສິດທິພາບການຕິດຕາມກວດກາ, ການຊອກຮູ້ລູກຄ້າ ແລະ ການເຂົ້າເຖິງແຫຼ່ງຂໍ້ມູນ ຂອງຫົວໜ່** | **1.** | **ສ້າງກົນໄກ ແລະ ວິທີການໃຫ້ຜູ້ຄຸ້ມຄອງວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທັງໝົດ** | | | | |
| | | 1.1. | ສ້າງ ແລະ ຮັບຮອງ ດຳລັດວ່າດ້ວຍ ສິດ ແລະ ໜ້າທີ່ ຂອງ ກະຊວງ , ອົງການຈັດຕັ້ງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນ | ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | ກະຊວງກ່ຽວຂ້ອງ | | |

| | | | | | | | |
|---|---|---|---|---|---|---|---|
| | **ວຍທີ່ມີໜ້າທີ່ລາຍງານ** | | ໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) | | | | |
| | | 1.2. | ສ້າງ ແລະ ປັບປຸງນິຕິກຳ ຕິດພັນກັບການຄຸ້ມຄອງວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງແຕ່ລະຂະແໜງການ ເພື່ອໃຫ້ແຕ່ລະຫົວໜ່ວຍມີຄວາມເຂົ້າໃຈໃນການປະຕິບັດ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ | - ກະຊວງການເງິນ<br>- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ກະຊວງພາຍໃນ<br>- ກະຊວງການຕ່າງປະເທດ | ກະຊວງກ່ຽວຂ້ອງ | | |
| | | **2.** | **ສ້າງຄວາມອາດສາມາດດ້ານວິຊາສະເພາະຂອງວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ແກ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ** | | | | |
| | | 2.1. | ຈັດຝຶກອົບຮົມໃຫ້ບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານງານລວມທັງອົງການບໍ່ວັງຜົນກຳໄລ ກ່ຽວກັບວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ທົ່ວເຖິງທຸກພາກສ່ວນ | ສຳນັກງານຂໍ້ມູນຕ້ານການຟອກເງິນ ສືມທົບ ຜູ້ຄຸ້ມຄອງ (ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງພາຍໃນ, ກະຊວງການຕ່າງປະເທດ) | ສຳນັກງານຂໍ້ມູນຕ້ານການຟອກເງິນ ປະສານຂໍການຊ່ວຍເຫຼືອຈາກອົງການສາກົນ | | |
| | | 2.2. | ສ້າງແຜນການຕິດຕາມ ແລະ ກວດກາ ແລະ ປະເມີນຜົນການ ຈັດຕັ້ງປະຕິບັດຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນຈັດຕັ້ງປະຕິບັດພັນທະຂອງຕົນພາຍໃຕ້ວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ກະຊວງກ່ຽວຂ້ອງ | | |
| | | 2.3. | ສ້າງແຜນດຳເນີນການຫຼຸດຜ່ອນຄວາມສ່ຽງຕາມຫຼັກການບໍລິຫານຄວາມສ່ຽງ ໃຫ້ແກ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ | | ສຳນັກງານຂໍ້ມູນຕ້ານການຟອກເງິນປະສານຂໍການຊ່ວຍເຫຼືອຈາກອົງການສາກົນ | | |
| | | 2.4. | ສ້າງກົນໄກເພື່ອໃຫ້ອົງການສືບສວນ-ສອບສວນ ສາມາດເຂົ້າເຖິງບັນດາຂໍ້ມູນພື້ນຖານຂອງຫົວໜ່ວຍມີໜ້າທີ່ລາຍງານ | ສຳນັກງານຂໍ້ມູນຕ້ານການຟອກເງິນ ສືມທົບ ອົງການສືບສວນ-ສອບສວນ | ສຳນັກງານຂໍ້ມູນຕ້ານການຟອກເງິນ | | |
| | | 2.5. | ກຳນົດການຂຶ້ນທະບຽນຂອງຫົວໜ່ວຍວິສະຫະກິດທີ່ມາລົງທະບຽນກັບພາກສ່ວນກ່ຽວຂ້ອງ ແມ່ນຕ້ອງໄດ້ມີການຊອກຮູ້ຂາຫຸ້ນທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງເກັບກຳຜ່າລະບົບທີ່ທັນສະໄໝ | ກະຊວງອຸດສາຫະກຳ ແລະ ການຄ້າ | ກະຊວງອຸດສາຫະກຳ ແລະ ການຄ້າ | | |

| | | | | | | | |
|---|---|---|---|---|---|---|---|
| **VI.** | **ການປະສານງານພາຍໃນ ແລະ ຕ່າງປະເທດ** | **1.** | **ຂະຫຍາຍກອບການຮ່ວມມືພາຍໃນ ແລະ ຕ່າງປະເທດໂດຍສະເພາະເນັ້ນໃສ່ການແລກປ່ຽນຂໍ້ມູນສອງຝ່າຍ.** | | | | |
| | | 1.1. | ຂະຫຍາຍການຮ່ວມມື ດ້ວຍວິທີການເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ວິທີການອື່ນ ກັບບັນດາປະເທດຄູ່ຮ່ວມງານ | ທຸກພາກສ່ວນກ່ຽວຂ້ອງ | ກະຊວງກ່ຽວຂ້ອງ | | |
| | | 1.2. | ຂະຫຍາຍການຮ່ວມມື ດ້ວຍວິທີການ ເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ວິທີການອື່ນ ລະຫວ່າງພາສ່ວນກ່ຽວຂ້ອງ ພາຍໃນ ຕິດພັນກັບການແລກປ່ຽນຂ່າວກອງ ແລະ ຂໍ້ມູນ ຊຶ່ງກັນ ແລະ ກັນ | ທຸກພາກສ່ວນກ່ຽວຂ້ອງ | ກະຊວງກ່ຽວຂ້ອງ | | |
| | | **2.** | **ການຮ່ວມມືສາກົນ** | | | | |
| | | 2.1. | ຜັດທະນາ ແລະ ຮັບການຊ່ວຍເຫຼືອ ດ້ານການນຳໃຊ້ເຕັກໂນໂລຊີ ແບບ ຫຼື ລະບົບ ທີ່ທັນສະໄໝໄດ້ມາດຕະຖານສາກົນມາເປັນເຄື່ອງມືຮອງຮັບ ແລະ ຈັດຕັ້ງປະຕິບັດບັນດາເນື້ອໃນການຮ່ວມມືສາກົນ ໂດຍສະເພາະການແລກປ່ຽນຂໍ້ມູນລະຫວ່າງປະເທດ | ທຸກພາກສ່ວນກ່ຽວຂ້ອງ | ກະຊວງກ່ຽວຂ້ອງ | | |
| | | 2.2. | ເພີ່ມທະວີຂອບການຮ່ວມມືສາກົນ ແລະ ການຍາດແຍ່ງການຊ່ວຍເຫຼືອ ຮອບດ້ານກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ໃນດ້ານທຶນຮອນ ແລະ ຄວາມຮູ້ດ້ານເຕັກນິກວິຊາການສະເພາະດ້ານ ໃຫ້ແກ່ບຸກຄະລາກອນຂອງບັນດາກະຊວງອົງການຈັດຕັ້ງທີ່ຄັບເຄື່ອນກົນການໄກຂອງວຽກງານ ການຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ | ທຸກພາກສ່ວນກ່ຽວຂ້ອງ | ກະຊວງກ່ຽວຂ້ອງ | | |

ແຫຼ່ງຂໍ້ມູນ: ຜົນການປະເມີນ NRA 2024.